UNDP

*Empowered lives.*
*Resilient nations.*

# ເອກະສານ ໂຄງການຮ່ວມມື
# "ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ ສຳລັບປີ 2013-2015"

ນະຄອນຫຼວງວຽງຈັນ, ກັນຍາ 2013

# ເອກະສານໂຄງການ ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## 2013-2015

ຊື່ໂຄງການ:
ສະໜັບສະໜູນການສ້າງຄວາມເຂັ້ມແຂງ ໃຫ້ແກ່ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ສຳລັບປີ 2013-2015.

ເປົ້າໝາຍ/ບູລິມະສິດແຫ່ງຊາດ:
ແກ້ໄຂບັນຫາລະເບີດ ທີ່ບໍ່ທັນແຕກ (ເປົ້າໝາຍພັດທະນາສະຫັດສະວັດ ທີ 9).

ຜົນໄດ້ຮັບລະດັບຊາດໃນເບື້ອງຕົ້ນຂອງແຜນງານຊ່ວຍເຫຼືອຂອງອົງການ ສປຊ ເພື່ອການພັດທະນາ ແລະ ອຸນດາຟ໌:
ໃນປີ 2015 ລັດຖະບານ ລວມທັງສູນກາງ, ທ້ອງຖິ່ນ ແລະ ຊຸມຊົນຕ່າງໆ ໄດ້ຫຼຸດຜ່ອນຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ທີ່ມີຕໍ່ປະຊາຊົນ ຢູ່ໃນ ສປປ ລາວ ໄດ້ຕາມຄາດໝາຍ.

ເປົ້າໝາຍ/ບູລິມະສິດແຫ່ງຊາດທີ່ກ່ຽວຂ້ອງ:
ເພື່ອປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7, ຮັບປະກັນການເຕີບໂຕທີ່ຍືນຍົງ ແລະ ບັນລຸເປົ້າໝາຍພັດທະນາສະຫັດສະວັດ ອັນເປັນພື້ນຖານໃນການນຳເອົາປະເທດຊາດຫຼຸດພົ້ນອອກຈາກຖານະປະເທດດ້ອຍພັດທະນາພາຍໃນປີ 2020.

**ຜົນໄດ້ຮັບທີ່ສຳຄັນ ຈາກແຜນຍຸດທະສາດຂອງ ສປຊ ເພື່ອການພັດທະນາ:**
ການປ້ອງກັນວິກິດການ ແລະ ການຟື້ນຟູ ແລະ ຫຼຸດຜ່ອນຄວາມທຸກຍາກ.

**ຜົນໄດ້ຮັບທີ່ຄາດຫວັງ:**
**ຜົນໄດ້ຮັບທີ 1:**
ຄຊກລ ສາມາດສະໜອງທິດທາງນະໂຍບາຍ, ປະສານງານ, ອອກລະບຽບຂະແໜງການ ລບຕ ເພື່ອສະໜັບສະໜູນເປົ້າໝາຍການພັດທະນາແຫ່ງຊາດ, ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ "ເສັ້ນທາງກ້າວສູ່ຄວາມປອດໄພ II" ແລະ ບັນລຸພັນທະສົນທິສັນຍາສາກົນທີ່ກ່ຽວຂ້ອງຕ່າງໆຢ່າງມີປະສິດທິຜົນ.

**ຄຊກລ ໄດ້ປັບປຸງຄວາມສາມາດຂອງຕົນ ເພື່ອ:**

(i). ສະໜອງທິດທາງນະໂຍບາຍ, ປະສານງານ ແລະ ອອກກົດລະບຽບການດຳເນີນກິດຈະກຳທັງໝົດ ຢູ່ໃນຂະແໜງການ;
(ii). ວາງແຜນ ແລະ ຈັດບູລິມະສິດທີ່ເໝາະສົມ ສຳລັບການກວດກູ້ ແລະ ກິດຈະກຳອື່ນໆ ໃຫ້ສອດຄ່ອງກັບທິດຊີ້ນຳຂອງລັດຖະບານ, ໂດຍສະເພາະ, ທາງດ້ານມະນຸດສະທຳ ແລະ ການພັດທະນາ;
(iii). ປະເມີນ ແລະ ຮັບຮອງ ອົງການປະຕິບັດງານຕ່າງໆ;
(iv). ຕິດຕາມ ແລະ ປະເມີນຜົນກິດຈະກຳຕ່າງໆ ແລະ ຮັບປະກັນວ່າ ບັນດາກິດຈະກຳທີ່ດຳເນີນໂດຍອົງການປະຕິບັດງານຕ່າງໆນັ້ນ ສອດຄ່ອງກັບມາດຕະຖານແຫ່ງຊາດ;

(v). ສົ່ງບົດລາຍງານທີ່ສົມບູນແບບໃຫ້ແກ່ລັດຖະບານ ແລະ ຜູ້ໃຫ້ທຶນ ທັນຕາມເວລາ;
(vi). ຮັກສາຄວາມໂປ່ງໃສ ແລະ ເປີດເຜີຍ ໃນການບັນທຶກດ້ານການເງິນ ແລະ ດ້ານອື່ນໆ ພ້ອມທັງຮັບຜິດຊອບໂດຍກົງຕໍ່ທຶນທັງໝົດທີ່ໄດ້ຮັບ;
(vii). ມີສ່ວນຮ່ວມ ແລະ ຮ່ວມມື ກັບຜູ້ປະຕິບັດງານທີ່ກ່ຽວຂ້ອງ ຢູ່ໃນຂະແໜງການອື່ນໆ; ແລະ
(viii). ຮັກສາການສື່ສານທີ່ເປີດເຜີຍ ແລະ ມີປະສິດທິຜົນ ກັບຜູ້ທີ່ມີສ່ວນຮ່ວມທັງໝົດ.

**ຜົນໄດ້ຮັບທີ 2:**

ຄກລ ສາມາດຄຸ້ມຄອງແຜນງານເກັບກູ້ລະເບີດ ແລະ ແຜນງານໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ອັນເປັນຄວາມຈໍາເປັນຂອງຊຸມຊົນທີ່ມີຄວາມສ່ຽງຈາກ ລບຕ ໃຫ້ໄດ້ດີກວ່າເກົ່າ.

ຄກລ ໄດ້ຮັບການປັບປຸງຄວາມສາມາດຂອງຕົນ ເພື່ອ:

(i). ດໍາເນີນແຜນງານ ການເກັບກູ້, ໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ຢູ່ບ່ອນທີ່ມີຄວາມສ່ຽງໃນປະເທດຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
(ii). ຂະແໜງການ ດໍາເນີນກິດຈະກໍາ ສອດຄ່ອງກັບບູລິມະສິດແຫ່ງຊາດຕາມທີ່ກໍານົດໄວ້;
(iii). ຮັບປະກັນກິດຈະກໍາຂອງແຜນງານທັງໝົດ ບັນລຸໄດ້ຕາມມາດຕະຖານແຫ່ງຊາດ;
(iv). ປະສານງານກັບບັນດາອົງການປະຕິບັດງານອື່ນໆ ທີ່ດໍາເນີນວຽກງານ ແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ;
(v). ລາຍງານຄວາມຄືບໜ້າ ແລະ ຮັກສາຄວາມໂປ່ງໃສ ແລະ ຮັບຜິດຊອບຢ່າງເຕັມສ່ວນ ຕໍ່ຊັບພະຍາກອນດ້ານການເງິນ ແລະ ວິຊາການ;
(vi). ມີການສື່ສານ ທີ່ເປີດກວ້າງ ແລະ ມີປະສິດທິຜົນກັບພາກສ່ວນທີ່ມີສ່ວນຮ່ວມອື່ນໆ.

**ຕົວຊີ້ວັດຕົ້ນຕໍຂອງຜົນໄດ້ຮັບ:**

- ເນື້ອທີ່ດິນບູລິມະສິດທີ່ມີ ລບຕ ຕົກຄ້າງ ໄດ້ຮັບການເກັບກູ້ ແລະ ໄດຮັບການປົດປ່ອຍ (ປະມານ 18,000 ຫາ 30,000 ເຮັກຕາ, ຂຶ້ນກັບຊັບພະຍາກອນທີ່ມີ).
- ທໍາລາຍ ລບຕ ໄດ້ (ໂດຍປະມານ 200,000 ໜ່ວຍ).
- ມີຜູ້ໄດ້ຮັບຜົນປະໂຫຍດ (ໂດຍປະມານ 800,000 ຄົນ).
- ແຜນເກັບກູ້ ແລະ ສໍາຫຼວດຂັ້ນເມືອງ ສໍາເລັດ (ປະມານ 23 ເມືອງ).
- ບັນດາອົງການປະຕິບັດງານໄດ້ຮັບການຕິດຕາມ ແລະ ຢັ້ງຢືນຮັບຮອງ (ຕາມຄາດໝາຍ 100%).
- ອົງການປະຕິບັດງານ ລາຍງານຂໍ້ມູນຕ່າງໆໃຫ້ ຄຊກລ ຢ່າງປົກກະຕິ (ປະມານ 80%).
- ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຕິດຕາມ ແລະ ໄດ້ຮັບການສະໜັບສະໜູນ (ຜູ້ລອດຊີວິດທີ່ມີຂໍ້ມູນການແລ້ວ).
- ແຜນການໄລຍະຍາວ ຂອງຂະແໜງ ລບຕ ຮອດປີ 2020, ອີງໃສ່ຍຸດທະສາດແຫ່ງຊາດ "ເສັ້ນທາງກ້າວສູ່ຄວາມປອດໄພ II" ແລະ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ເຊື່ອມໂຍງຢ່າງແຂງແຮງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມີການອະນຸມັດ, ການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ.
- ພັນທະຂອງສົນທິສັນຍາ ພາຍໃຕ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານໄດ້ຮັບການປະຕິບັດໃຫ້ສໍາເລັດ.
- ມີຄວາມຄືບໜ້າ ກ່ຽວກັບການປະກອບສ່ວນດ້ານການເງິນ ຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ແກ່ຂະແໜງ ລບຕ ເພີ່ມຂຶ້ນ.

**ຄູ່ຮ່ວມຈັດຕັ້ງປະຕິບັດ:**

- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)
- ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

**ພາກສ່ວນທີ່ຮັບຜິດຊອບ: ກະຊວງການຕ່າງປະເທດ**

**ທີ່ຕັ້ງໂຄງການ:**

ການປະຕິບັດງານ ດ້ານ ລບຕ ໃນທົ່ວປະເທດ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບລວມຂອງ ຄຊກລ, ສ່ວນ ຄກລ ແມ່ນຮັບຜິດຊອບຢູ່ແຂວງຕ່າງໆ ຄື: ຫຼວງພະບາງ, ຫົວພັນ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື ແລະ ນະຄອນຫຼວງວຽງຈັນ. (ໝາຍເຫດ: ສຳລັບກິດຈະກຳຂອງ ຄກລ ຈະຖືກວາງແຜນເປັນແຕ່ລະກ້າວ ຕະຫຼອດໄລຍະເວລາຂອງໂຄງການ).

## ສັງລວມຫຍໍ້

ສປປ ລາວ ຖືໄດ້ວ່າເປັນປະເທດທີ່ມີ ລບຕ ຕົກຄ້າງຫຼາຍທີ່ສຸດໃນໂລກ, ລບຕ ດັ່ງກ່າວ ແມ່ນສິ່ງເສດເຫຼືອຈາກສົງຄາມປະໄວ້ ໃນສົງຄາມອິນດູຈີນ ໄລຍະແຕ່ປີ 1964-1973. ລບຕ ເປັນໄພຂົ່ມຂູ່ຕໍ່ມະນຸດສະທຳ ແລະ ເປັນອຸປະສັກກີດຂວາງການພັດທະນາ. ເຖິງວ່າ, ໃນຊຸມປີທີ່ຜ່ານມາ ຈຳນວນຜູ້ເສຍຊີວິດໂດຍກົງ ຈະຫຼຸດລົງ ເຫຼືອນ້ອຍກວ່າ 100 ຄົນຕໍ່ປີກໍ່ຕາມ ແຕ່ປະຊາຊົນລາວຈຳນວນຫຼວງ ຫຼາຍ ຍັງຈະໄດ້ຮັບຄວາມທຸກທໍລະມານຈາກ ລບຕ ແລະ ກໍ່ຈະມີຜົນກະທົບຕໍ່ການພັດທະນາປະເທດໃນຫຼາຍທົດສະວັດຕໍ່ໜ້າ. ສະ ນັ້ນ, ວຽກງານຫຼັກໆ ໃນຂະແໜງການ ລບຕ ມີຄື: ການສຳຫຼວດ ແລະ ການເກັບກູ້ ລບຕ ໃນພື້ນທີ່ທີ່ມີ ລບຕ ຕົກຄ້າງ, ການໂຄສະ ນາໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງຈາກ ລບຕ ໃຫ້ແກ່ປະຊາຊົນທີ່ມີຄວາມສ່ຽງ ເພື່ອສາມາດຫຼີກລຽງຈາກອັນຕະລາຍ ຈົນກວ່າ ລບຕ ໄດ້ຖືກກວດກູ້ອອກ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍ ຈາກ ລບຕ.

ຈຸດປະສົງລວມຂອງແຜນງານ ການຮ່ວມມື 3 ປີ ລະຫວ່າງ ອົງການ ສປຊ ເພື່ອການພັດທະນາ ແລະ ລັດຖະບານ ສປປ ລາວ ສະບັບນີ້ ແມ່ນເພື່ອສະໜັບສະໜູນ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່: (i). ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະ ເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ); ແລະ (ii). ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ຊຶ່ງເປັນອົງການປະຕິບັດງານແກ້ໄຂບັນຫາ ລບຕ ແຫ່ງຊາດຂອງ ສປປ ລາວ.

**ຄຊກລ** ມີໜ້າທີ່ຮັບຜິດຊອບໃນການສ້າງລະບຽບການ, ການປະສານງານ ແລະ ຊີ້ນຳດູແລວຽກງານທັງໝົດໃນຂະແໜງ ລບຕ, ແລະ ຮັບປະກັນໃຫ້ ສປປ ລາວ ບັນລຸພັນທະຂອງຕົນ ໃນຖານະເປັນລັດພາຄີຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ. **ຄກລ** ເປັນອົງການປະຕິບັດງານແຫ່ງຊາດພຽງອົງການດຽວ ຢູ່ໃນ ສປປ ລາວ. ໃນປະຈຸບັນ ແມ່ນໄດ້ດຳເນີນການສຳຫຼວດ, ເກັບກູ້, ແລະ ໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ທັງໝົດ ເກີນກວ່າເຄິ່ງໜຶ່ງຢູ່ໃນທົ່ວປະເທດ.

**ສອດຄ່ອງກັບໄລຍະຂອງແຜນງານການຮ່ວມມື ຂອງ ສປຊ ເພື່ອການພັດທະນາ/ອຸນດາຟ ສຳລັບປີ 2012-2015.**

**ຊື່ໂຄງການ: ສະໜັບສະໜູນ ການສ້າງຄວາມເຂັ້ມແຂງໃຫ້ແກ່ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ.**

**ໄລຍະໂຄງການ: ເມສາ 2013-31 ທັນວາ 2015**

**ທຶນທັງໝົດທີ່ຕ້ອງການ: 26,686,787 ດອນລາອາເມລິກາ**

| | |
|---|---|
| ຂົງເຂດຜົນໄດ້ຮັບຕົ້ນຕໍ (ແຜນຍຸດທະສາດ): ປ້ອງກັນວິກິດ, ຟື້ນຟູ, ແລະ ຫຼຸດຜ່ອນຄວາມທຸກຍາກ.<br><br>ATLAS Award ID: ____________<br><br>ວັນທີ ເລີ່ມໂຄງການ: ເມສາ 2013<br>ວັນທີ ສິ້ນສຸດໂຄງການ: 31 ທັນວາ 2015<br>ວັນທີ ກອງປະຊຸມ PAC: 12 ກຸມພາ 2013<br>ການຈັດແຈງດ້ານການຄຸ້ມຄອງ: NIM | ງົບປະມານໂຄງການ ປີ 2013-2015: **26,686,787** ດອນລາ (ນັບແຕ່ເດືອນ ມັງກອນ 2013)<br><br>ລວມງົບປະມານທີ່ຈັດສັນໃຫ້ແລ້ວ: **10,788,558** ດອນລາ<br><br>• ງົບປົກກະຕິ: 1,190,000 ດອນລາ<br>• ອື່ນໆ:<br>o ອົດສະຕຣາລີ 2,040,445 ດອນລາ<br>o ເບລຢ້ຽມ 143,000 ດອນລາ<br>o ຢູເອັນ/ດີພີດ 126,000 ດອນລາ<br>o ອີຢູ 1,595,110 ດອນລາ<br>o ລຸກຊຳບວກ 546,045 ດອນລາ<br>o ນິວຊີແລນ 1,439,305 ດອນລາ<br>o ເອັສດີຊີ 1,096,250 ດອນລາ<br>o ເກົາຫລີໃຕ້ 15,000 ດອນລາ<br><br>**ງົບປະມານທີ່ຍັງຂາດ: 15,898,229** ດອນລາ |

ເຫັນດີໂດຍ:

05 SEP 2013

ທ່ານ ບຸນເຮືອງ ດວງພະຈັນ, ປະທານ ຄຊກລ ວັນທີ:

ເຫັນດີໂດຍ:

Aug 28, '13

ທ່ານ ມິນ ຟາມ, ຜູ້ຕາງໜ້າປະຈຳອົງການສະຫະປະຊາຊາດເພື່ອການພັດທະນາ ວັນທີ:

## ສາລະບານ


| | | ໜ້າທີ |
|---|---|---|
| ຄຳສັບຫຍໍ້ | | 5 |
| **ພາກ I** | **ເນື້ອໃນ ແລະ ປະຫວັດຄວາມເປັນມາ** | 7 |
| 1.1 | ການວິເຄາະສະພາບການ | 7 |
| 1.2 | ການຈັດຕຽມການປະສານງານ ແລະ ສະຖາບັນ ຂອງລັດຖະບານແຫ່ງ ສປປ ລາວ ສຳລັບຂະແໜງການແກ້ໄຂບັນຫາ ລບຕ | 7 |
| 1.3 | ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) | 8<br>8 |
| 1.4 | ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) | 8 |
| 1.5 | ກອງປະຊຸມວິຊາການ ແລະ ກອງປະຊຸມຂະແໜງການ | 10 |
| 1.6 | ຜົນໄດ້ຮັບ | 10 |
| 1.7 | ລັດຖະບານ ສປປ ລາວ: ທິດທາງຍຸດທະສາດ ສຳລັບຂະແໜງການແກ້ໄຂບັນຫາ ລບຕ ແຕ່ນີ້ ເຖິງປີ 2020 | 10 |
| 1.8 | ເປົ້າໝາຍຍຸດທະສາດ ສຳລັບຍຸດທະສາດຂອງຂະແໜງການແກ້ໄຂບັນຫາ ລບຕ: ເສັ້ນທາງກ້າວສູ່ຄວາມປອດໄພ II. | 11 |
| 1.9 | ຄວາມຕ້ອງການທຶນສຳລັບຂະແໜງການ | 11 |
| 1.10 | ກິດຈະກຳ ແລະ ບູລິມະສິດຂອງຂະແໜງການ | 11 |
| **ພາກທີ II** | **ຍຸດທະສາດຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ** | 14 |
| 2.1 | ການສະໜັບສະໜູນຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທີ່ຜ່ານມາ | 14 |
| 2.2 | ທິດທາງຍຸດທະນາດ ແລະ ເປົ້າໝາຍຫຼັກ ສຳລັບປີ 2013-2015 | 15 |
| 2.3 | ສະໜັບສະໜູນ ຄຊກລ | 16 |
| 2.3.1 | ໂຄງປະກອບດ້ານຊັບພະກອນ ແລະ ຜົນໄດ້ຮັບຂອງ ຄຊກລ: ນັບແຕ່ ມີນາ 2013 - ທັນວາ 2015. | 22 |
| 2.4 | ສະໜັບສະໜູນ ຄກລ | 29 |
| 2.4.1 | ໂຄງປະກອບທາງດ້ານຊັບພະຍາກອນ ແລະ ຜົນໄດ້ຮັບ ຂອງ ຄກລ: ນັບແຕ່ ມີນາ2013- ທັນວາ 2015. | 34 |
| **ພາກທີ III** | **ການຈັດແຈງການປະສານງານ ແລະ ການຄຸ້ມຄອງ** | 38 |
| ພາກທີ IV | ໂຄງປະກອບດ້ານການກິດຕາມກອດກາ ແລະ ປະເມີນຜົນ | 42 |
| ພາກທີ V | ສະພາບເງື່ອນໄຂທາງດ້ານກົດໝາຍ | 43 |
| ພາກທີ VI | ຄວາມສ່ຽງ ແລະ ຍຸດທະສາດຕ່າງໆເພື່ອຫຼຸດຜ່ອນ | 44 |
| ພາກທີ VII | ເອກະສານແນບທ້າຍ | 46 |
| | ເອກະສານແນບທ້າຍ 1: ປຶ້ມບັນທຶກຕິດຕາມກ່ຽວກັບຄວາມສ່ຽງ | 47 |
| | ເອກະສານແນບທ້າຍ 2: ການຄຸ້ມຄອງຄຸນນະພາບ ສຳລັບຜົນໄດ້ຮັບຂອງກິດຈະກຳຂອງ ໂຄງການ | 49 |

ເອກະສານແນບທ້າຍ 5: ສະມາຊິກຄະນະຊີ້ນຳ ຄຊກລ 56
ເອກະສານແນບທ້າຍ 6: ເປົ້າໝາຍຍຸດທະສາດຂອງລັດຖະບານ ແຫ່ງ ສປປ ລາວ ແລະ ຄວາມສາມາດໃນການປະຕິບັດ ທີ່ໄດ້ກຳນົດໄວ້ ຢູ່ຍຸດທະສາດຂອງຂະແໜງການ: ເສັ້ນທາງກ້າວສູ່ຄວາມປອດໄພ II 57
ເອກະສານແນບທ້າຍ 7: ການປະເມີນຜົນຂອງອົງການ ສປຊ ເພື່ອການພັດທະນາ ຕໍ່ຂະແໜງແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ສຳລັບປີ: 2013-2015: ຂໍ້ແນະນຳ ແລະ ຂໍ້ສັງເກດທີ່ສຳຄັນ. 59
ເອກະສານແນບທ້າຍ 8: ພາລະບົດບາດຂອງຫົວໜ້າຫ້ອງການ ຄຊກລ 62
ເອກະສານແນບທ້າຍ 9: ພາລະບົດບາດຂອງ ຫົວໜ້າໂຄງການ ຄກລ 63

ຄຳສັບຫຍໍ້:

| | |
|---|---|
| 1MSP | First Meeting of States Parties to the Convention on Cluster Munitions<br>ກອງປະຊຸມລັດພາຄີຄັ້ງທຳອິດຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ |
| APR | Annual Programme Report - ບົດລາຍງານປະຈຳປີຂອງໂຄງການ |
| ATP | Attapeu Province - ແຂວງອັດຕະປື |
| AusAID | The Australian Agency for International Development<br>ອົງການພັດທະນາສາກົນຂອງອົດສະຕຣາລີ |
| AWP | Annual Work Plan - ແຜນການປະຈຳປີ |
| BLX | Bolikhamxay Province - ແຂວງບໍລິຄຳໄຊ |
| CA | Community Awareness - ການໂຄສະນາສຶກສາຊຸມຊົນ |
| CCM | Convention on Cluster Munitions<br>ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ |
| CCW | Convention on Certain Conventional Weapons<br>ສົນທິສັນວ່າດ້ວຍການເກືອດຫ້າມອາວຸດທຳມະດາບາງປະເພດ |
| CD | Capacity Development - ການພັດທະນາຄວາມອາດສາມາດ |
| CDR | Combined Delivery Report - ບົດລາຍງານການຈັດຕັ້ງປະຕິບັດຮ່ວມກັນ |
| CP | Country Programme - ແຜນງານລະດັບຊາດ |
| CPAP | Country Programme Action Plan - ແຜນປະຕິບັດງານລະດັບຊາດ |
| CPR | Crisis Prevention and Recovery - ການປ້ອງກັນ ແລະ ຟື້ນຟູວິກິດການ |
| CPS | Champasack Province - ແຂວງຈຳປາສັກ |
| CRPD | Convention on the Rights of Persons with Disabilities<br>ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ |
| CTA | Chief Technical Advisor - ຫົວໜ້າຊ່ຽວຊານ |
| DFA | District Focused Approaches<br>ແນວທາງການສຳຫຼວດຂັ້ນເມືອງ |
| DFID | The Department For International Development (UK)<br>ກະຊວງພັດທະນາສາກົນ (ອັງກິດ) |
| EOD | Explosive Ordnance Disposal<br>ການທຳລາຍ ລບຕ |
| ERW | Explosive Remnants of War<br>ລບຕ ເສດເຫຼືອປາງສົງຄາມ |
| EU | European Union<br>ສະຫະພາບເອີຣົບ |
| FACE | Fund Authorisation and Certificate of Expenditures<br>ການອະນຸມັດທຶນ ແລະ ການຢັ້ງຢືນລາຍຈ່າຍ |

| | |
|---|---|
| GDP | Gross Domestic Product - ລວມຍອດຜະລິດຕະພັນພາຍໃນ |
| GGP | Japan's Grant Assistance for Grassroots Human Security Project<br>ການຊ່ວຍເຫຼືອລ້າຂອງຍີ່ປຸ່ນ ສໍາລັບໂຄງການຄວາມປອດໄພຂອງມະນຸດຢູ່ໃນລະດັບຮາກຖານ |
| GICHD | The Geneva International Centre for Humanitarian Demining<br>ສູນສາກົນ ເຈນີວາ ສໍາລັບການເກັບກູ້ລະເບີດເພື່ອມະນຸດສະທໍາ |
| GMS | General Management Support - ການສະໜັບສະໜູນດ້ານການຄຸ້ມຄອງທົ່ວໄປ |
| GPAR | Governance and Public Administration Reform - ການປັບປຸງບູລະນະການປົກຄອງ |
| GPS | Global Positioning System - ລະບົບການຈັບທີ່ຕັ້ງຂອງໂລກ |
| HACT | Harmonised Cash Transfer - ການໂອນເງິນສົດແບບເອກະພາບກັນ |
| HDI | UNDP Human Development Index - ດັດສະນີການພັດທະນາມະນຸດຂອງ ສປຊ |
| IMSMA | Information Management System for Mine Action<br>ລະບົບການຄຸ້ມຄອງຂໍ້ມູນ ສໍາລັບວຽກງານການເກັບກູ້ລະເບີດ |
| ISS | Implement Support Services - ການບໍລິການສະໜັບສະໜູນການຈັດຕັ້ງປະຕິບັດ |
| ITSU | International Treaties Support Unit –<br>ໜ່ວຍງານສະໜັບສະໜູນການປະຕິບັດສົນທິສັນຍາສາກົນ |
| JMAS | Japan Mine Action Service - ການບໍລິການເກັບກູ້ລະເບີດຂອງຍີ່ປຸ່ນ |
| KHM | Khammoune Province - ແຂວງຄໍາມ່ວນ |
| Lao PDR | The Lao People's Democratic Republic |
| ສປປ ລາວ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LAU | Legal Advisory Unit - ໜ່ວຍງານໃຫ້ຄໍາປຶກສາດ້ານກົດໝາຍ |
| LDCs | Least Developed Countries - ບັນດາປະເທດດ້ອຍພັດທະນາ |
| LLDC | Landlocked and Least Developed Countries<br>ບັນດາປະເທດດ້ອຍພັດທະນາ ແລະ ບໍ່ມີທາງອອກສູ່ທະເລ |
| LOA | Letter of Agreement - ໜັງສືສັນຍາ |
| LPB | Luang Prabang Province -ແຂວງຫຼວງພະບາງ |
| M&E | Monitoring and Evaluation - ການຕິດຕາມກວດກາ ແລະ ປະເມີນຜົນ |
| MAG | Mines Advisory Group - ອົງການເກັບກູ້ລະເບີດແມັກ |
| MBT | Mine Ban Treaty - ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດຝັງດິນ |
| MDGs | Millennium Development Goals - ເປົ້າໝາຍສະຫັດສະວັດ |
| MfDR | Managing for Development Results - ການຄຸ້ມຄອງເພື່ອຜົນໄດ້ຮັບດ້ານການພັດທະນາ |
| MoFA | Ministry of Foreign Affairs - ກະຊວງການຕ່າງປະເທດ |
| MRE | Mine Risk Education - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ |
| NEX | National Execution - ການຈັດຕັ້ງປະຕິບັດລະດັບຊາດ |
| NGOs | Non-Governmental Organisations - ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NIM | National Implementation - ການຈັດຕັ້ງປະຕິບັດລະດັບຊາດ |
| NPA | Norwegian People's Aid - ອົງການຊ່ວຍເຫຼືອຂອງປະຊາຊົນນ໊ອກແວ໌ |

| | |
|---|---|
| NPA | Non-Profit Association - ສະມາຄົມບໍ່ຫວັງຜົນກໍາໄລ |
| NRA | National Regulatory Authority for the UXO/Mine Action Sector in Lao PDR<br>ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) |
| NSC | National Steering Committee - ຄະນະຊີ້ນໍາລະດັບຊາດ |
| NSEDP | National Socio-Economic Development Plan - ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| PM | Project Manager - ຜູ້ຈັດການໂຄງການ |
| PPR | Project Progress Report - ບົດລາຍງານຄວາມຄືບໜ້າຂອງໂຄງການ |
| PSD | Phonsackda UXO Clearance Co,Ltd - ບໍລິສັດເກັບກູ້ລະເບີດ ພົນສັກດາ ຈໍາກັດ |
| QA/QC | Quality Assurance/Quality Control - ການຮັບປະກັນຄຸນນະພາບ/ການຄວບຄຸມຄຸນນະພາບ |
| QM | Quality Management - ການຄຸ້ມຄອງຄຸນນະພາບ |
| QPR | Quarterly Project Review - ການທົບທວນໂຄງການປະຈໍາໄຕມາດ |
| RBM | Results-based Management - ການຄຸ້ມຄອງໂຄງການທີ່ເນັ້ນໃສ່ຜົນໄດ້ຮັບ |
| RE | UXO Risk Education - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ |
| SBAA | Standard Basic Assistance Agreement - ສັນຍາຊ່ວຍເຫຼືອຂັ້ນພື້ນຖານທີ່ເປັນມາດຖານ |
| SBH | SBH UXO Clearance Co.,Ltd - ບໍລິສັດເກັບກູ້ລະເບີດ ເອັດບີເອັສ ຈໍາກັດ |
| SDC | Swiss Agency for Development and Cooperation - ອົງການເພື່ອການພັດທະນາ ແລະ ຮ່ວມມືຂອງສະວິສເຊີແລນ |
| SK | Sekong Province - ແຂວງເຊກອງ |
| SV | Salavane Province - ແຂວງສາລະວັນ |
| SODI | Solidarity Service International - ອົງການຮ່ວມໃຈບໍລິການສາກົນ |
| SPF II | The Safe Path Forward II - ເສັ້ນທາງກ້າວສູ່ຄວາມປອດໄພ II |
| SVK | Savannakhet Province - ແຂວງສະຫວັນນະເຂດ |
| TA | Technical Assistance/Technical Advisor - ການຊ່ວຍເຫຼືອດ້ານວິຊາການ/ທີ່ປຶກສາດ້ານວິຊາການ |
| TF | Trust Fund - ກອງທຶນພິເສດ |
| TWG | Technical Working Group - ກຸ່ມຄົ້ນຄວ້າດ້ານວິຊາການ |
| UNDAF | United Nations Development Assistance Framework - ໂຄງປະກອບການຊ່ວຍເຫຼືອ ດ້ານການພັດທະນາຂອງສະຫະປະຊາຊາດ |
| UNDP | United Nations Development Programme - ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNICEF | United Nations Fund for Children - ກອງທຶນສະຫະປະຊາຊາດເພື່ອເດັກນ້ອຍ |
| UNIDO | United Nations Industrial Development Organization - ອົງການພັດທະນາອຸດ |

| | |
|---|---|
| | ສາທະກຳ ຂອງສະຫະປະຊາຊາດ |
| UXO- ລບຕ | Unexploded Ordnance - ລະເບີດບໍ່ທັນແຕກ |
| UXO Lao | Lao National Unexploded Ordnance Programme - ໂຄງການເກັບກູ້ລະເບີດແຫ່ງຊາດ |
| UXO Trust Fund | Trust Fund for Support to the Full Implementation of the Convention on Cluster Munitions - ກອງທຶນພິເສດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ |
| UXO/MA | UXO/ Mine Action - ການເກັບກູ້ລະເບີດບໍ່ແຕກ/ລະເບີດຝັງດິນ |
| VA | Victim Assistance - ການຊ່ວຍເຫຼືອຜູ້ເຄາະຮ້າຍ |
| WWM | World Without Mines - ໂລກທີ່ປາສະຈາກລະເບີດຝັງດິນ |

## ພາກທີ I. ສະພາບການ ແລະ ປະຫວັດຄວາມເປັນມາ.

### 1.1. ວິເຄາະສະພາບການ.

ສະເລ່ຍໃສ່ຫົວຄົນ, ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດໃສ່ໜັກໜ່ວງທີ່ສຸດໃນໂລກ. ຕະຫຼອດໄລຍະເວລາຂອງສົງຄາມອິນດູຈີນ ແຕ່ປີ 1964 ເຖິງປີ 1973, ສປປ ລາວ ໄດ້ກາຍເປັນສະໜາມລະພູມສູ້ຮົບທາງພາກພື້ນດິນ ແລະ ທາງອາກາດຢ່າງຮ້າຍແຮງທີ່ສຸດ. ຕາມສະຖິຕິທີ່ໄດ້ບັນທຶກໄວ້ ໄດ້ມີການຖິ້ມລະເບີດຫຼາຍກວ່າສອງລ້ານໂຕນ, ໃນນັ້ນ ມີລະເບີດລູກຫວ່ານຫຼາຍກວ່າ 270 ລ້ານໜ່ວຍ, ຊຶ່ງຄົນສ່ວນຫຼາຍເອີ້ນວ່າ “ບົມບີ້”.

ຍ້ອນອັດຕາການບໍ່ແຕກມີສູງ ແລະ ມີຜົນກະທົບໃນບໍລິເວນກວ້າງ, ພົນລະເຮືອນ ກໍຄືປະເທດຊາດ ໂດຍລວມ ແມ່ນໄດ້ຮັບການທຳລາຍລ້າງ ຍ້ອນຜົນກະທົບຂອງລະເບີດລູກຫວ່ານ. ມີການປະເມີນວ່າ ປະມານ 30% ຂອງລະເບີດດັ່ງກ່າວ ແມ່ນຍັງບໍ່ທັນແຕກ ແລະ ຈະສືບຕໍ່ສົ່ງຜົນກະທົບຕໍ່ໄປພາຍຫຼັງສົງຄາມສິ້ນສຸດ. ຄາດຄະເນວ່າ ມີຜູ້ເສຍຊີວິດຍ້ອນ ລບຕ ເຖິງ 20,000 ຄົນ ນັບແຕ່ສົງຄາມໄດ້ສິ້ນສຸດລົງ.

ລະເບີດລູກຫວ່ານ ແລະ ລະເບີດບໍ່ທັນແຕກອື່ນໆທີ່ຕົກຄ້າງ ຍັງສືບຕໍ່ເປັນໄພຂົ່ມຂູ່ໂດຍກົງຕໍ່ປະຊາຊົນລາວບັນດາເຜົ່າ ທີ່ດຳລົງຊີວິດຢູ່ໃນພື້ນທີ່ ທີ່ມີ ລບຕ ຕົກຄ້າງ ໃນຂອບເຂດທົ່ວປະເທດ. ລບຕ ຍັງເປັນຂໍ້ຈຳກັດທີ່ຮ້າຍແຮງ ຕໍ່ການເຂົ້າເຖິງເນື້ອທີ່ດິນທີ່ສາມາດນຳໃຊ້ເພື່ອການຜະລິດກະສິກຳ ແລະ ເພື່ອຈຸດປະສົງທາງດ້ານການພັດທະນາອື່ນໆຂອງຊາດ. ເກືອບທັງໝົດຂອງບັນດາແຂວງ ແລະ ເມືອງຕ່າງໆ ທີ່ມີລະເບີດບໍ່ທັນແຕກຕົກຄ້າງຢູ່ໃນລະດັບສູງນັ້ນ ລ້ວນແຕ່ເປັນເຂດທີ່ທຸກຍາກທີ່ສຸດຂອງປະເທດ.

ສະຫຼຸບແລ້ວ, ລະເບີດບໍ່ທັນແຕກ ໂດຍສະເພາະລະເບີດລູກຫວ່ານ ຍັງເປັນໄພຂົ່ມຂູ່ທີ່ຮ້າຍແຮງຕໍ່ມະນຸດສະທຳ ແລະ ເປັນອຸປະສັກທີ່ໃຫຍ່ຫຼວງໃນການບັນລຸເປົ້າໝາຍພັດທະນາສະຫັດສະວັດຂອງລັດຖະບານ ສປປ ລາວ. ຍິ່ງໄປກວ່ານັ້ນ, ການມີລະເບີດບໍ່ທັນແຕກປົ່ງປາຍຢູ່ຢ່າງຫຼວງຫຼາຍນັ້ນ ເປັນການຢັບຢັ້ງການຫຼຸດຜ່ອນຄວາມທຸກຍາກ, ຢັບຢັ້ງຂະບວນການພັດທະນາຊົນນະບົດ ແລະ ຍັງເປັນການກີດຂວາງຕໍ່ຄວາມມຸ້ງຫວັງອັນແຮງກ້າຂອງ ລັດຖະບານ ແລະ ປະຊາຊົນລາວ ທີ່ຈະນຳເອົາປະເທດຊາດ ຫຼຸດພົ້ນອອກຈາກບັນຊີປະເທດດ້ອຍພັດທະນາໃນປີ 2020.

ຄວາມພະຍາຍາມຂອງລັດຖະບານໃນການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງໄດ້ເລີ້ມຂຶ້ນ, ພາຍຫຼັງສົງຄາມໄດ້ສິ້ນສຸດລົງ ໃນຊ່ວງຕົ້ນຂອງຊຸມປີ 1970, ໂດຍໄດ້ຮັບການຊ່ວຍເຫຼືອຈາກບັນດາປະເທດເພື່ອນມິດຈຳນວນໜຶ່ງ ລວມທັງອະດີດສະຫະພາບໂຊວຽດ. ມາຮອດຊຸມປີ 1990 ແມ່ນໄດ້ຮັບການຊ່ວຍເຫຼືອຈາກສາກົນກວ້າງຂວາງຂຶ້ນເປັນຄັ້ງທຳອິດ, ໂດຍລິເລີ່ມຈາກຊ່ຽວຊານຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ, ຈາກນັ້ນກໍ່ມີປະເທດອື່ນໆ ແລະ ອົງການສະຫະປະຊາຊາດ ໄດ້ໃຫ້ການສະໜັບສະໜູນ. ໃນປີ 1996 ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ສປຊ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, ລັດຖະບານ ສປປ ລາວ ໄດ້ສ້າງຕັ້ງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ຂຶ້ນ, ຊຶ່ງເປັນ "ອົງການປະຕິບັດງານແຫ່ງຊາດ" ເພື່ອເກັບກູ້ ລບຕ ອອກຈາກພື້ນທີ່ມີລະເບີດຕົກຄ້າງ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ຕໍ່ມາຈຶ່ງມີອົງການປະຕິບັດງານ ແລະ ບໍລິສັດເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ ເຂົ້າມາມີສ່ວນຮ່ວມໃນຂະແໜງການນີ້ຫຼາຍຂຶ້ນ.

ໃນລະຫວ່າງຕົ້ນຊຸມປີ 2000 ແຜນຍຸດທະສາດແຫ່ງຊາດ ເອີ້ນວ່າ: “ເສັ້ນທາງກ້າວສູ່ຄວາມປອດໄພ” ຕັ້ງແຕ່ປີ 2003 ຫາ 2013 ໄດ້ຖືກຮັບຮອງ, ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ໄດ້ສ້າງຕັ້ງຂຶ້ນ ເພື່ອອອກກົດລະບຽບ ແລະ ປະສານງານກິດຈະກຳຕ່າງໆຂອງຂະແໜງການ ກັບບັນດາອົງການປະຕິບັດງານດ້ານແກ້ໄຂບັນຫາ ລບຕ ໃນຂອບເຂດທົ່ວປະເທດ. ຄຊກລ ໄດ້ກາຍເປັນຜູ້ຊີ້ນຳ ວຽກງານດ້ານແກ້ໄຂບັນຫາ ລບຕ ໃນລະຫວ່າງຕົ້ນປີ 2006.

ໃນປີ 2007-2008, ສປປ ລາວ ໄດ້ເຂົ້າຮ່ວມຢ່າງຫ້າວຫັນໃນຂະບວນການເຈລະຈາສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM) ແລະ ເປັນປະເທດທີສອງທີ່ໄດ້ກາຍເປັນລັດພາຄີຂອງສົນທິສັນຍາດັ່ງກ່າວໃນເດືອນ ທັນວາ 2008. ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ມີຜົນບັງຄັບໃຊ້ໃນວັນທີ 1 ສິງຫາ 2010 ພາຍຫຼັງທີ່ 30 ປະເທດໄດ້ໃຫ້ສັດຕະຍາບັນ ແລະ ສປປ ລາວ ກໍ່ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມຄັ້ງທຳອິດ ລັດພາຄີສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂຶ້ນ ໃນເດືອນ ພະຈິກ 2010.

**1.2. ລັດຖະບານ ສປປ ລາວ ກັບການປະສານງານ ວຽກງານປະຕິບັດການແກ້ໄຂບັນຫາ ລບຕ[1].**

ໃນປະຈຸບັນ, ຄຊກລ ແມ່ນຢູ່ພາຍໃຕ້ການຊີ້ນຳດູແລ ຂອງທ່ານລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ຕາມດຳລັດນາຍົກລັດຖະມົນຕີ ເລກທີ 406/ນຍ, ລົງວັນທີ 8 ກັນຍາ 2011. ຄະນະຊີ້ນຳ ຄຊກລ, ເປັນປະທານ ໂດຍລັດຖະມົນຕີ ຜູ້ຮັບຜິດຊອບ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ), ລາຍງານໂດຍກົງໃຫ້ແກ່ຫ້ອງວ່າການລັດຖະບານ, ຊຶ່ງເປັນສະຖາບັນສູງສຸດ ທີ່ຊີ້ນຳດູແລຂະແໜງ ລບຕ. ຄະນະຊີ້ນຳ ຄຊກລ ປະກອບດ້ວຍສະມາຊິກ 17 ທ່ານ ທີ່ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ພາຍໃຕ້ດຳລັດເລກທີ 406/ນຍ (ສະບັບດັດແກ້), ລົງວັນທີ 8 ພະຈິກ 2011. (ເບິ່ງເອກະສານແນບທ້າຍ 5 ລາຍຊື່ຂອງສະມາຊິກຄະນະຊີ້ນຳ ຄຊກລ).

**1.3. ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).**

ຄຊກລ ມີຄວາມຮັບຜິດຊອບລວມໃນການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດຂອງຂະແໜງການ ເຊັ່ນ: ເປັນຜູ້ນຳໃນການກຳນົດນະໂຍບາຍ, ກຳນົດບູລິມະສິດ, ຕິດຕາມຄວາມຄືບໜ້າ ແລະ ການປະສານງານ. ຄວາມຮັບຜິດຊອບສະເພາະຂອງ ຄຊກລ ມີດັ່ງລຸ່ມນີ້:

- ທົບທວນ ແລະ ຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດຂອງຂະແໜງການໃນແຕ່ລະໄລຍະ.
- ໃຫ້ນິຍາມ ແລະ ກຳນົດທິດທາງນະໂຍບາຍ;
- ການຮັບຮອງ, ການອອກໃບອະນຸຍາດ ແລະ ຊີ້ນຳດູແລ ຂະແໜງປະຕິບັດງານດ້ານ ແກ້ໄຂບັນຫາ ລບຕ ທັງໝົດ.
- ການຄຸ້ມຄອງຖານຂໍ້ມູນ.
- ການຈັດບູລິມະສິດ ແລະ ການຊີ້ນຳດູແລ ຂະແໜງປະຕິບັດງານດ້ານແກ້ໄຂບັນຫາ ລບຕ ທັງໝົດ.
- ປະສານງານດ້ານກິດຈະກຳທັງໝົດ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ.
- ການຮັບປະກັນຄຸນນະພາບຈາກພາຍນອກ ແລະ ຄວບຄຸມຄຸນນະພາບ ກິດຈະກຳຂອງຂະແໜງປະຕິບັດງານດ້ານແກ້ໄຂບັນຫາ ລບຕ.
- ດຳເນີນການປະເມີນຜົນ ແລະ ທົບທວນຜົນກະທົບພາຍຫຼັງການເກັບກູ້.
- ລາຍງານການປະຕິບັດກິດຈະກຳແກ້ໄຂບັນຫາ ລບຕ ໃຫ້ແກ່ລັດຖະບານ ແລະ ຜູ້ມີສ່ວນຮ່ວມອື່ນໆ; ແລະ,
- ປະສານສົມທົບກັບຂະແໜງການກ່ຽວຂ້ອງ ແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ກັບສາກົນ.

ຫ້ອງການ ຄຊກລ ເປັນກົງຈັກຊ່ວຍວຽກ ແລະ ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ ຄະນະຊີ້ນຳ ຄຊກລ ໃນທຸກບັນຫາທີ່ກ່ຽວຂ້ອງກັບໜ້າທີ່ໃນການຊີ້ນຳດູແລຂອງຕົນ. ເຮັດວຽກປະສານງານຢ່າງໃກ້ຊິດກັບກະຊວງການຕ່າງປະເທດ, ຄຊກລ ຍັງເປັນຈຸດປະສານງານສຳລັບທຸກວຽກງານທີ່ກ່ຽວຂ້ອງກັບສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ຂະ

---

[1] ຄັດຈາກແຜນຍຸດທະສາດແຫ່ງຊາດຂອງລັດຖະບານ ວ່າດ້ວຍການແກ້ໄຂບັນຫາ ລບຕ ຮອດປີ 2020 “ເສັ້ນທາງກ້າວສູ່ຄວາມປອດໄພ II”

ແໜງປະຕິບັດງານແກ້ໄຂບັນຫາ ລບຕ ທັງໝົດ ເວົ້າລວມ. ຫ້ອງການ ຄຊກລ ມີຄວາມຮັບຜິດຊອບໃນການກະກຽມ ແລະ ຍື່ນບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດແຫ່ງຊາດ ໃຫ້ແກ່ຄະນະຊີ້ນຳ ຄຊກລ ແລະ ກຸ່ມວິຊາການຂອງຂະແໜງປະຕິບັດງານດ້ານແກ້ໄຂບັນຫາ ລບຕ. ຫ້ອງການ ຄຊກລ ເປັນຕົວແທນຂອງລັດຖະບານ ສປປ ລາວ, ເປັນອົງກອນທີ່ໄດ້ມາດຕະຖານ ແລະ ມີສິດອຳນາດທາງທາງກົດໝາຍ ໃນການຊີ້ນຳດູແລອົງການຈັດຕັ້ງຕ່າງໆ ທີ່ດຳເນີນວຽກງານແກ້ໄຂບັນຫາ ລບຕ ຢູ່ພາຍໃນປະເທດ.

ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 406/ນຍ, ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ທັງໝົດ, ທັງພາຍໃນ ແລະ ຈາກຕ່າງປະເທດ ແມ່ນດຳເນີນວຽກງານພາຍໃຕ້ການຊີ້ນຳ, ປະສານງານ ແລະ ກຳກັບດູແລ ຂອງ ຄຊກລ. ທຸກອົງການປະຕິບັດງານ, ລວມທັງອົງກອນອິສະລະ ຈະຕ້ອງຮັບຜິດຊອບຢ່າງເຕັມສ່ວນຕໍ່ ຜູ້ສະໜັບສະໜູນ ຂອງຕົນ ແລະ ຕໍ່ ຄຊກລ. ອົງການປະຕິບັດງານທັງໝົດ ດຳເນີນວຽກງານສອດຄ່ອງກັບມາດຕະຖານແຫ່ງຊາດ ທີ່ໄດ້ປະກາດໃຊ້ໂດຍ ຄຊກລ. ອົງການປະຕິບັດງານ, ແມ່ນລວມທັງ ພາຍໃນ ແລະ ຕ່າງປະທດ.

- ອົງການປະຕິບັດງານດ້ານການສຶກສາຄວາມສ່ຽງຈາກ ລບຕ.
- ອົງການປະຕິບັດງານດ້ານການສຳຫຼວດ ແລະ ກວດກູ້, ບໍ່ວ່າຈະເປັນອົງການປະຕິບັດງານດ້ານມະນຸດສະທຳ, ທຸລະກິດ ແລະ ກອງທັບ.
- ອົງການປະຕິບັດງານທີ່ດຳເນີນວຽກງານຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ .

1

**1.4. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ).**

ຄກລ ມີຫ້ອງການໃຫ່ຍຢູ່ນະຄອນຫຼວງວຽງຈັນ ແລະ ໃນປະຈຸບັນປະຕິບັດງານຢູ່ໃນ 9 ແຂວງ ທີ່ໄດ້ຮັບຜົນກະທົບຈາກ ລບຕ ໃນທົ່ວປະເທດ (ຫຼວງພະບາງ, ຫົວພັນ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື). ປະຈຸບັນ ຄກລ ມີພະນັກງານຫຼາຍກວ່າ 1,100 ຄົນ ຢູ່ໃນ 9 ແຂວງ, ມີເຄື່ອງກວດລະເບີດຈຳນວນເກືອບ 1,000 ເຄື່ອງ ແລະ ມີຈຳນວນພາຫະນະຫຼາຍກວ່າ 200 ຄັນ (ລວມມີ ລົດເບົາ, ລົດບັນທຸກ, ລົດຈັກ ແລະ ເຮືອ).

**ການປະຕິບັດງານ ຂອງ ຄກລ.**

ການປະຕິບັດງານຂອງ ຄກລ ແມ່ນສະທ້ອນໃຫ້ເຫັນຫຼັກການທົ່ວໄປໃນການເກັບກູ້ລະເບີດເພື່ອມະນຸດສະທຳ. ມີອົງປະກອບຫຼາຍຢ່າງ ທີ່ກຳນົດຂຶ້ນເພື່ອດຳເນີນການເກັບກູ້ລະເບີດ ຢູ່ໃນ ສປປ ລາວ, ຄື: ທີມງານທຳລາຍເຄື່ອນທີ່ ເຮັດວຽກກ່ຽວກັບການເຄື່ອນຍ້າຍ ຫຼື ທຳລາຍ ລບຕ ທີ່ໄດ້ຮັບການລາຍງານຈາກໄທບ້ານ ທີ່ພົບເຫັນ ລບຕ ຢູ່ເທິງໜ້າດິນ ແລະ ທີມງານກວດກູ້ ຮັບຜິດຊອບໃນການກວດກູ້ ແລະ ທຳລາຍ ລບຕ ຢູ່ເທິງ ແລະ ຢູ່ພື້ນດິນ. ທີມງານສຳຫຼວດ ແມ່ນເຮັດໜ້າທີ່ ສະໜັບສະໜູນ ການວາງແຜນກິດຈະກຳໂດຍລະອຽດ ດ້ວຍການວິເຄາະພື້ນທີ່ສະໜາມ ເພື່ອເບິ່ງວ່າມີຄວາມເໝາະສົມສຳລັບການກວດກູ້ຫຼືບໍ່, ຈາກນັ້ນ ກໍ່ແຕ້ມແຜນທີ່ລະອຽດ ແລະ ສົ່ງຂໍ້ມູນໃຫ້ແກ່ຖານຂໍ້ມູນ ເພື່ອຊ່ວຍຈັດບູລິມະສິດ ແລະ ຕິດຕາມຄວາມຄືບໜ້າ.

ນອກນັ້ນ, ຄກລ ຍັງໄດ້ເຄື່ອນໄຫວວຽກງານ ໂຄສະນາໃຫ້ການສຶກສາຄວາມສ່ຽງຈາກ ລບຕ ເພື່ອຍົກສູງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງຊຸມຊົນ ຢູ່ຊົນນະບົດ ກ່ຽວກັບຄວາມອັນຕະລາຍຢ່າງຕໍ່ເນື່ອງ ຂອງ ລບຕ, ແລະ ໃຫ້ຄວາມຮູ້ແກ່ຊາວບ້ານກ່ຽວກັບ ວິທີທາງໃນການເຮັດໃຫ້ຄວາມສ່ຽງຈາກ ລບຕ ມີໜ້ອຍທີ່ສຸດ ໂດຍຜ່ານການປ່ຽນແປງພຶດຕິກຳຂອງພວກເຂົາເຈົ້າ. ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຊຸມຊົນ ຍັງເຮັດໜ້າທີ່ສະໜັບສະໜູນໜ່ວຍງານສຳຫຼວດ ດ້ວຍການແຈ້ງຈຸດທີ່ພົບເຫັນ ລບຕ ທີ່ໄທບ້ານໄດ້ລາຍງານ ໃນເວລາເຄື່ອນໄຫວກິດຈະກຳໂຄສະນາສຶກສາຊຸມຊົນແຕ່ລະຄັ້ງ. ທີມງານສຳຫຼວດ ແຕ້ມແຜນວາດ ລບຕ ທີ່ພົບເຫັນ ພ້ອມທັງກຳນົດໜ້າວຽກດັ່ງກ່າວວ່າ ເປັນໜ້າວຽກທຳລາຍເຄື່ອນທີ່ ຫຼື ໜ້າວຽກເກັບກູ້.

ການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດ ແມ່ນສິ່ງສຳຄັນຂອງແຜນງານ. ຊຶ່ງປະກອບມີ (ການຝຶກອົບຮົມຢູ່ສູນຝຶກຂອງ ຄກລ) ແລະ ການຝຶກອົບຮົມວຽກງານຕົວຈິງຢູ່ພາກສະໜາມ ໂດຍຄູຝຶກຄົນລາວ ແລະ ຕ່າງປະເທດ.

**ວຽກງານຄຸ້ມຄອງຄຸນນະພາບ ຂອງ ຄກລ.**

ເປົ້າໝາຍລວມຂອງການຄຸ້ມຄອງຄຸນນະພາບ ຂອງ ຄກລ ແມ່ນເພື່ອຮັບປະກັນ ປະສິດທິພາບ, ປະສິດທິຜົນ ແລະ ຄວາມປອດໄພໃນການປະຕິບັດງານ. ການດຳເນີນວຽກງານ ຕ້ອງເປັນໄປຕາມມາດຕະຖານໃນການປະຕິບັດງານ, ສອດຄ່ອງກັບມາດຕະຖານແຫ່ງຊາດ ແລະ ຄວາມຮຽກຮ້ອງຕ້ອງການຂອງຜູ້ໃຫ້ທຶນ, ເຄື່ອງມືໃນການດຳເນີນການຄວບຄຸມຄຸນນະພາບພາຍໃນທີ່ມີປະສິດທິຜົນ ຕ້ອງນຳມາໃຊ້ຢູ່ໃນລະດັບຕ່າງໆໃນສາຍການຈັດຕັ້ງ (ລະດັບທີມງານ, ແຂວງ ແລະ ລະດັບຊາດ). ນອກນັ້ນ, ຍັງຮຽກຮ້ອງໃຫ້ມີລະບົບການຕິດຕາມທີ່ດີ ເພື່ອຮັບປະກັນວ່າຂໍ້ຂາດຕົກບົກຜ່ອງຕ່າງໆນັ້ນໄດ້ຖືກນຳມາແກ້ໄຂໄດ້ຢ່າງພຽງພໍ.

ຕະຫຼອດເວລາຫຼາຍປີທີ່ຜ່ານມາ, ໜ່ວຍງານຄຸ້ມຄອງຄຸນນະພາບ ຂອງຫ້ອງການໃຫຍ່ ຄກລ ໄດ້ສ້າງຄວາມສາມາດໄດ້ເປັນຢ່າງດີ ເພື່ອປັບປຸງກົດລະບຽບການປະຕິບັດງານ ແລະ ປະຕິບັດການກວດກາຄຸນນະພາບໃນທຸກຂົງເຂດວຽກງານ ທີ່ປະຕິບັດຢູ່ໃນໂຄງການ ຄກລ. ການເພີ່ມຂຶ້ນຢ່າງແຂງແຮງ ທາງດ້ານຄວາມສາມາດໃນການຄຸ້ມຄອງຄຸນນະພາບໃນລະດັບຫ້ອງການໃຫຍ່ຂອງ ຄກລ ແມ່ນໄປພ້ອມໆກັບການຫຼຸດຜ່ອນການຊ່ວຍເຫຼືອທາງດ້ານວິຊາການທຳລາຍລະເບີດຂອງຕ່າງປະເທດຢູ່ພາກສະໜາມລົງເປັນກ້າວໆ.

ການດຳເນີນວຽກງານຄຸ້ມຄອງຄຸນນະພາບ ກວມເອົາ 2 ຂົງເຂດວຽກງານທີ່ສຳຄັນຄື: ການປະຕິບັດງານຂອງ ຄກລ ຢູ່ພາກສະໜາມ ໄດ້ຖືກກວດກາໂດຍໜ່ວຍງານກວດກາຄຸນນະພາບເຄື່ອນທີ່, ຊຶ່ງວ່າໃນທຸກໆໜ່ວຍງານກວດກາຄຸນນະພາບເຄື່ອນທີ່ນີ້ກວມເອົາ 3 ແຂວງ. ການບໍລິການສະໜັບສະໜູນການປະຕິບັດງານເພີ້ມເຕີມ ແມ່ນຖືກກວດກາໂດຍ ທີມງານກວດກາຄຸນນະພາບພາຍໃນ ຈຳນວນ 10 ທີມ, ຊຶ່ງຢູ່ໃນແຕ່ລະຫ້ອງການ ຄກລ ປະຈຳແຂວງ ປະກອບມີໜຶ່ງທີມ ແລະ ອີກໜຶ່ງທີມແມ່ນປະຈຳຢູ່ຫ້ອງການໃຫຍ່ທີ່ວຽງຈັນ. ການຕິດຕາມກວດກາ ໄດ້ຮັບການສະໜັບສະໜູນ ຈາກເຄືອຂ່າຍຜູ້ຕາງໜ້າດ້ານຄຸນນະພາບຂັ້ນແຂວງ 18 ທ່ານ, ຊຶ່ງໃນແຕ່ລະແຂວງມີຕາງໜ້າດ້ານຄຸນນະພາບຂອງແຂວງ 1 ຄົນ ແລະ ອີກ 1 ຄົນ ແມ່ນຮັບໜ້າທີ່ສະໜັບສະໜູນການປະຕິບັດງານ.

ແຕ່ລະແຂວງແມ່ນໄດ້ຮັບການກວດກາຄຸນນະພາບຢູ່ພາກສະໜາມ ຢ່າງໜ້ອຍ 4 ຄັ້ງຕໍ່ປີ, ຊຶ່ງໃນການລົງແຕ່ລະຄັ້ງໃຊ້ເວລາ 10 ຫາ 15 ວັນ. ນີ້ ໝາຍຄວາມວ່າການປະເມີນຜົນ ຢັ້ງຢືນ/ຄວບຄຸມຄຸນນະພາບ ແມ່ນເກີດຂຶ້ນ 400 ວັນຕໍ່ປີ. ການກວດກາການທຳໜ້າທີ່ສະໜັບສະໜູນການປະຕິບັດງານ ໄດ້ຖືກດຳເນີນໄປໂດຍການຊ່ວຍເຫຼືອຂອງພະນັກງານບໍລິຫານຫ້ອງການ ຄກລ ແຂວງ ທີ່ມີໃນປະຈຸບັນທີ່ເຮັດໜ້າທີ່ພິເສດ ເປັນຜູ້ກວດກາພາຍໃນ. ໃນແຕ່ລະປີຈະມີການກວດສອບຈາກພາຍໃນ 2 ເຖິງ 4 ຄັ້ງ ຢູ່ໃນແຕ່ລະຫ້ອງການຂອງ ຄກລ ຊຶ່ງກວມເອົາວຽກງານຕ່າງໆ ຄື: ການເງິນ, ການຈັດຊື້, ຊັບພະຍາກອນມະນຸດ, ການບໍລິຫານທົ່ວໄປ, ການຄຸ້ມຄອງສາງ ແລະ ຊັບສິນ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆ.

**1. 5. ກຸ່ມຂະແໜງການ (SWG) ແລະ ກຸ່ມວິຊາການ (TWG).**

ພາຍໃຕ້ກອບຂອງຂະບວນການໂຕະມົນ, ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງກຸ່ມຂະແໜງການ ລບຕ ຂຶ້ນ ຊຶ່ງເປັນປະທານໂດຍ ປະທານຄະນະຊີ້ນຳ ຄຊກລ ແລະ ເປັນປະທານຮ່ວມໂດຍ ຕາງໜ້າ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ແລະ ເອກອັກຄະລັດຖະທູດສະຫະລັດອາເມລິກາ ປະຈຳລາວ ທີ່ເຕົ້າໂຮມເອົາຄູ່ຮ່ວມພັດທະນາ ທັງພາກລັດ ແລະ ສາກົນຈຳນວນຫຼາຍເຂົ້າມາຮ່ວມດ້ວຍ ໂດຍສອດຄ່ອງກັບຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ. ນອກຈາກນີ້, ກຸ່ມຂະແໜງການແກ້ໄຂບັນຫາ ລບຕ ຍັງຊີ້ນຳດູແລ 3 ໜ້າວຽກຂອງກຸ່ມວິຊາການ ໄດ້ແກ່: ການຊ່ວຍເຫຼືອຜູ້ເຄາະຮ້າຍ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ການກວດກູ້ ລບຕ. ກຸ່ມຂະແໜງການແກ້ໄຂບັນຫາ ລບຕ ແລະ ກຸ່ມວິຊາການ

ລບຕ ໄດ້ຍົກສູງການປະສານງານ ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອຮັບປະກັນວ່າ ວຽກງານໃນແຕ່ລະຂົງເຂດຍ່ອຍໄດ້ຖືກປະຕິບັດຢ່າງມີປະສິດທິຜົນເທົ່າທີ່ເປັນໄປໄດ້ ແລະ ປະຕິບັດຕາມມາດຕະຖານແຫ່ງຊາດຢ່າງເຂັ້ມງວດ.

### 1.6. ຜົນໄດ້ຮັບ.

ໂດຍການສະໜັບສະໜູນຂອງອົງການ ສະຫະປະຊາຊາດເພື່ອການພັດທະນາ ແລະ ຄູ່ຮ່ວມງານອື່ນໆ, ນັບແຕ່ປີ 1996 ຮອດເດືອນກໍລະກົດ ປີ 2012, ລບຕ ຕ່າງໆໄດ້ຖືກທຳລາຍທັງໝົດ 1,378,629 ໜ່ວຍ ໃນນີ້ ມີ:

- ບົມໃຫຍ່: 6,485 ໜ່ວຍ
- ລະເບີດລູກຫວ່ານ: 571,929 ໜ່ວຍ
- ລະເບີດຝັງດິນ: 6,878 ໜ່ວຍ
- ລະເບີດຊະນິດອື່ນໆ: 793,337 ໜ່ວຍ

ຮອດປະຈຸບັນ ເນື້ອທີ່ 31,702 ເຮັກຕາ ໄດ້ຮັບການກວດກູ້. ໃນນີ້, ເນື້ອທີ່ 22,816 ເຮັກຕາ ໄດ້ຖືກນຳໃຊ້ເພື່ອການກະສິກຳ ແລະ 8,885 ເຮັກຕາ ຖືກນຳໃຊ້ເພື່ອຈຸດປະສົງທາງການພັດທະນາ. ໃນໄລຍະເວລາດຽວກັນນີ້, ຍັງໄດ້ລົງຢ້ຽມຢາມບ້ານຕ່າງໆ (ຢ້ຽມຢາມຄືນ) ເພື່ອໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ 14,808 ບ້ານ, ມີຜູ້ເຂົ້າຮ່ວມຮັບຟັງ ທີ່ເປັນເດັກຈຳນວນ 1,328,170 ຄົນ ແລະ ຜູ້ໃຫຍ່ 1,384,117 ຄົນ. ຜົນໄດ້ຮັບທີ່ສຳຄັນທີ່ສຸດກໍ່ຄື ຈຳນວນຜູ້ເສຍຊີວິດ ຈາກ 300 ຄົນໃນປີ 2008 ຫຼຸດລົງເຫຼືອ 99 ຄົນ ໃນປີ 2011 ແລະ 56 ຄົນ ໃນປີ 2012.

### 1.7 ລັດຖະບານ ສປປ ລາວ: ທິດທາງຍຸດທະສາດ ສຳລັບຂະແໜງ ລບຕ ແຕ່ນີ້ ເຖິງປີ 2020.

ເປັນທີ່ຈະແຈ້ງວ່າ, ສິ່ງທ້າທາຍທີ່ໃຫຍ່ຫຼວງທີ່ສຸດ ກໍ່ຄືການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງ ທີ່ມີຢູ່ຢ່າງກວ້າງຂວາງ ຢູ່ໃນ ສປປ ລາວ. ເພາະສະນັ້ນ, ມັນຈຶ່ງເປັນຄວາມມຸ້ງຫວັງຂອງລັດຖະບານ ສປປ ລາວ ທີ່ຈະຂະຫຍາຍ ແລະ ເລັ່ງລັດກິດຈະກຳການເກັບກູ້ ລບຕ ຢ່າງຈິງຈັງ ໃນລະຫວ່າງ ປີ 2013 ຫາປີ 2020, ທັງນີ້ ກໍ່ເພື່ອຫຼຸດຜ່ອນຜົນກະທົບຂອງ ລບຕ ຕໍ່ມະນຸດສະທຳ ແລະ ການພັດທະນາ ແລະ ເພື່ອຊ່ວຍໃຫ້ ສປປ ລາວ ບັນລຸເປົ້າໝາຍການຫຼຸດພົ້ນອອກຈາກຖານະປະເທດດ້ອຍພັດທະນາໃນປີ 2020.

ສິ່ງທ້າທາຍທີ່ສຳຄັນອີກອັນໜຶ່ງກໍ່ຄື ເຮັດແນວໃດຈະຮັບປະກັນໃຫ້ຜູ້ເຄາະຮ້າຍຈາກ ລບຕ ທັງໝົດ ໄດ້ຮັບການບໍລິການທີ່ຈຳເປັນຢ່າງເຕັມສ່ວນ ເພື່ອຊ່ວຍໃຫ້ເຂົາເຈົ້າມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈດີຂຶ້ນ ແລະ ສາມາດກັບມາໃຊ້ຊີວິດຢູ່ໃນຊຸມຊົນຂອງເຂົາເຈົ້າ ແລະ ເປັນສະມາຊິກຂອງຊຸມຊົນ ອັນເປັນທີ່ຍອມຮັບ ແລະ ສາມາດທຳການຜະລິດໄດ້. ຂໍ້ສັງເກດ; ຕາມຄຳນິຍາມຂອງຜູ້ເຄາະຮ້າຍ ທີ່ລະບຸໄວ້ໃນສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແມ່ນລວມທັງຜູ້ທີ່ປະສົບເຄາະຮ້າຍໂດຍກົງ, ສະມາຊິກໃນຄອບຄົວ ແລະ ຊຸມຊົນຂອງພວກເຂົາເຈົ້າ.

ໃນເດືອນ ມິຖຸນາ 2012, ລັດຖະບານ ສປປ ລາວ ໄດ້ຮັບຮອງເອົາ ຍຸດທະສາດຂອງຂະແໜງການແກ້ໄຂບັນຫາ ລບຕ ເອີ້ນວ່າ: **ເສັ້ນທາງກ້າວສູ່ຄວາມປອດໄພ II**, ຊຶ່ງຍຸດທະສາດດັ່ງກ່າວ ເປັນທິດຊີ້ນຳວຽກງານຂອງຂະແໜງການແກ້ໄຂບັນຫາ ລບຕ ທັງໝົດ ແຕ່ນີ້ຮອດປີ 2020. ເສັ້ນທາງກ້າວສູ່ຄວາມປອດໄພ II ແມ່ນສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ໃນປະຈຸບັນ ແລະ ຈະນຳເອົາບັນດາບູລິມະສິດຕ່າງໆທາງດ້ານມະນຸດສະທຳ ແລະ ດ້ານການພັດທະນາຂອງຊາດ ເຂົ້າມາໃນຂະແໜງແກ້ໄຂບັນຫາ ລບຕ ໃຫ້ຂະຫຍາຍກວ້າງຂວາງຫຼາຍກວ່າທີ່ຜ່ານໆມາ. ລັດຖະບານ ພະຍາຍາມທີ່ຈະເຮັດໃຫ້ບັນລຸເປົ້າໝາຍສຸດທ້າຍ ທີ່ວ່າ: "ປະຊາຊົນຢູ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ ທີ່ຮ້າຍແຮງທີ່ສຸດນັ້ນ ໄດ້ດຳລົງຊີວິດຢູ່ຢ່າງປາສະຈາກຜົນກະທົບຈາກ ລບຕ ".

ເພື່ອໃຫ້ມີປະສິດທິພາບສູງສຸດ, ການດຳເນີນການກວດກູ້ ຈະສືບຕໍ່ຮອບຮອມເອົາບັນດາກິດຈະກຳຕ່າງໆ ທີ່ໄດ້ວາງແຜນຢ່າງເປັນລະບົບໄວ້ກ່ອນແລ້ວນັ້ນ ເຂົ້າກັບການດຳເນີນການເກັບກູ້ແບບເຄື່ອນທີ່ ທີ່ສາມາດແກ້ໄຂສະພາບການທີ່ມີຄວາມສ່ຽງສູງດ້ວຍການຕອບສະໜອງໄວ, ບໍ່ວ່າຈະຢູ່ບ່ອນໃດ ຫຼື ໃນເວລາໃດກໍ່ຕາມ.

**1.8. ຈຸດປະສົງທາງດ້ານຍຸດທະສາດໄດ້ຖືກກຳນົດໄວ້ຢູ່ໃນຍຸດທະສາດແຫ່ງຊາດ ຂອງຂະແໜງການແກ້ໄຂບັນຫາ ລບຕ: ເສັ້ນທາງກ້າວສູ່ຄວາມປອດໄພ II.**

<u>ຈຸດປະສົງທີ</u> 1: ຫຼຸດຜ່ອນຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຍ້ອນ ລບຕ ຈາກ 300 ຄົນ ໃນຊຸມປີທີ່ຜ່ານມາ ໃຫ້ເຫຼືອນ້ອຍກວ່າ 75 ຄົນຕໍ່ປີ; (ກະລຸນາສັງເກດວ່າ ຕົວເລກນີ້ ແມ່ນໃນເວລາທີ່ຍຸດທະສາດແຫ່ງຊາດ "ເສັ້ນທາງກ້າວສູ່ຄວາມປອດໄພ II" ກຳລັງຖືກຂຽນຂຶ້ນ, ມີປະມານ 300 ຄົນຕໍ່ປີ. ຕົວເລກນີ້ ໄດ້ຫຼຸດລົງນ້ອຍກວ່າ 60 ຄົນ ໃນປີ 2012);

<u>ຈຸດປະສົງທີ</u> 2: ຮັບປະກັນໃຫ້ຄວາມຕ້ອງການໃນການປິ່ນປົວ ແລະ ດ້ານການຟື້ນຟູສຸຂະພາບຂອງຜູ້ລອດຊີວິດຈາກອຸປະເຫດ ລບຕ ທັງໝົດ ແລະ ຜູ້ເຄາະຮ້າຍອື່ນໆ ໄດ້ຮັບການຕອບສະໜອງຕາມພັນທະຂອງສົນທິສັນຍາ;

<u>ຈຸດປະສົງທີ</u> 3: ປົດປ່ອຍເນື້ອທີ່ດິນບູລິມະສິດ ແລະ ກວດກູ້ ລບຕ ໃຫ້ສອດກັບມາດຕະຖານແຫ່ງຊາດ;

<u>ຈຸດປະສົງທີ</u> 4: ຮັບປະກັນການນຳພາ, ການປະສານງານ ແລະ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ຢ່າງມີປະສິດທິຜົນ;

<u>ຈຸດປະສົງທີ</u> 5: ສ້າງຄວາມສາມາດໃຫ້ແກ່ພະນັກງານພາຍໃນຢ່າງຍືນຍົງ ແລະ ປະສົມປະສານເຂົ້າໃນງົບປະມານ ແລະ ສະຖາປັດຕະຍະກຳຂອງລັດຖະບານຢ່າງເຕັມສ່ວນ; ແລະ

<u>ຈຸດປະສົງທີ</u> 6: ປະຕິບັດໄດ້ພັນທະຂອງສົນທິສັນຍາສາກົນ.

ເບິ່ງເອກະສານແນບທ້າຍ 6 ສຳລັບລາຍການເຄື່ອນໄຫວທີ່ສຳຄັນ ເພື່ອຕອບສະໜອງໃນແຕ່ລະຈຸດປະສົງ.

**1.9. ຄວາມຕ້ອງການທຶນ ສຳລັບໂຄງການ.**

ຄວາມອາດສາມາດຂອງການປະຕິບັດງານແກ້ໄຂບັນຫາ ລບຕ ໃນ ສປປ ລາວ ແມ່ນເຊື່ອມໂຍງໂດຍກົງກັບຊັບພະຍາກອນທາງດ້ານການວິຊາການ ແລະ ດ້ານການເງິນທີ່ມີ. ລາຍຈ່າຍໃນຂະແໜງການນີ້ ໃນປີ 2011-12 ແມ່ນ 31 ລ້ານໂດລາສະຫະລັດ, ໃນນີ້ ປະມານ 10 ລ້ານໂດລາສະຫະລັດ ແມ່ນມາຈາກພາກເອກະຊົນ. ເພື່ອບັນລຸຄາດໝາຍທີ່ລັດຖະບານວາງອອກຈຳເປັນຕ້ອງມີຊັບພະຍາກອນດ້ານການເງິນເພີ່ມຂຶ້ນອີກຈຳນວນຫຼາຍ ເພື່ອຈັດສັນໃຫ້ແກ່ຂະແໜງການ ແລະ ຊັບພະຍາກອນເຫຼົ່ານັ້ນ ຕ້ອງນຳໃຊ້ໃຫ້ມີປະສິດທິຜົນທີ່ສຸດ. ລັດຖະບານ ສປປ ລາວ ພະຍາຍາມທີ່ຈະລະດົມທຶນໃຫ້ໄດ້ 50 ລ້ານໂດລາສະຫະລັດຕໍ່ປີ ເພື່ອສະໜັບສະໜູນແຜນການເລັ່ງລັດການກວດກູ້ ແລະ ພ້ອມທັງເພີ່ມກິດຈະກຳການໂຄສະນາໃຫ້ການສຶກສາກ່ຽວກັບຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ.

**1.10. ບູລິມະສິດໃນການປະຕິບັດ ແລະ ກິດຈະກຳຕ່າງໆ ຂອງຂະແໜງການ.**

**ການສຳຫຼວດ ແລະ ການກວດກູ້.**

ຈຳນວນຜູ້ເຄາະຮ້າຍໂດຍກົງໄດ້ຫຼຸດລົງຢ່າງໜ້າຊື່ນຊົມໃນຕະຫຼອດໄລຍະເວລາ ກວ່າ 3 ປີຜ່ານມາ ແລະ ສະພາບທີ່ມີຄວາມສ່ຽງສູງໄດ້ຮັບການແກ້ໄຂ ບົນພື້ນຖານການຕອບສະໜອງໄວ ຈາກທີມງານທີ່ດຳເນີນການກວດກູ້ຕາມແຜນທີ່ກຳລັງດຳເນີນຢູ່ ຫຼື ໂດຍທີມງານທຳລາຍເຄື່ອນທີ່.

ໃນນີ້, ການດຳເນີນການສຳຫຼວດ ແລະ ການກວດກູ້ທີ່ວາງແຜນໄວ້ນັ້ນ ແມ່ນຈະມຸ້ງເນັ້ນໃສ່ເຮັດໃຫ້ພື້ນທີ່ ການສຳຫຼວດ ແລະ ກວດກູ້ ທີ່ຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ກຳນົດວ່າເປັນບູລິມະສິດໃນການພັດທະນາຢູ່ໃນບັນດາເມືອງຕ່າງໆນັ້ນເພີ່ມຂຶ້ນ, ໂດຍສະເພາະແມ່ນບັນດາພື້ນທີ່ ທີ່ໄດ້ຮັບການຈັດສັນທຶນແລ້ວ.

ປະຈຸບັນ, ມີໂຄງການພັດທະນາທີ່ເປັນບູລິມະສິດ ທີ່ໄດ້ຖືກອະນຸມັດແລ້ວ ຈຳນວນ 88 ໂຄງການ ຢູ່ໃນ 145 ເມືອງ ຂອງ ສປປ ລາວ. ຄາດຄະເນວ່າ 341 ໂຄງການ ແມ່ນຢູ່ໃນ 65 ເມືອງ ທີ່ມີ ລບຕ ຕົກຄ້າງ ແລະ ຜູກພັນກັບທຶນຮອນທີ່ໄດ້ຈັດສັນແລ້ວ (ຍັງບໍ່ໄດ້ຮັບແຈ້ງ), ເພາະສະນັ້ນ, ຈຶ່ງຈະຖືກກຳນົດເປັນບູລິມະສິດສູງສຸດສຳລັບການສຳຫຼວດ ແລະ ຖ້າຈຳເປັນ, ກໍຈະດຳເນີນການກວດກູ້ໄປພ້ອມ ໃນຕະຫຼອດໄລຍະເວລາຂອງແຜນງານ ແຕ່ປີ (2013-2015).

ບັນດາອົງການຈັດຕັ້ງ ທີ່ຈະດຳເນີນວຽກງານສຳຫຼວດ ແລະ/ຫຼື ກວດກູ້ ໃນແຕ່ລະເຂດນັ້ນ ແມ່ນຈະໄດ້ຖືກກຳນົດໂດຍ ຄຊກລ ບົນພື້ນຖານ ການວິເຄາະຄວາມສາມາດທາງດ້ານວິຊາການ ໂດຍມີການປຽບທຽບກັບຕົ້ນທຶນ ແລະ ຄວາມມີປະສິດທິຜົນຂອງແຜນງານ, ພັນທະຂອງສັນຍາ ແລະ ພັນທະອື່ນໆທີ່ມີໃນປະຈຸບັນ, ກິດຈະກຳ ແລະ ທີ່ຕັ້ງ, ກຳນົດເວລາ ແລະ ຕົ້ນທຶນຂອງການເຄື່ອນຍ້າຍຊັບສິນທີ່ໄດ້ຄາດການໄວ້, ຖ້າຈຳເປັນ.

<u>ບົດບາດຂອງກອງເກັບກູ້ ລບຕ ເພື່ອມະນຸດສະທຳ ຂອງກອງທັບ</u>:

ເພື່ອສືບຕໍ່ພັດທະນາຄວາມສາມາດພາຍໃນໃຫ້ຍືນຍົງ ສຳລັບວຽກງານສຳຫຼວດ ແລະ ກວດກູ້ ລບຕ ທີ່ກຳລັງຈະດຳເນີນຕໍ່ໄປນັ້ນ, ລັດຖະບານ ສປປ ລາວ ໄດ້ມີທິດທາງໃຫ້ກອງກວດກູ້ ລບຕ ເພື່ອມະນຸດສະທຳຂອງກອງທັບ ເປັນຜູ້ປະຕິບັດກິດຈະກຳເຫຼົ່ານີ້ ຫຼັງຈາກທີ່ໄດ້ຮັບການຝຶກອົບຮົມ, ໄດ້ຮັບການຢັ້ງຢືນຮັບຮອງ ແລະ ໄດ້ປະກອບອຸປະກອນທີ່ຈຳເປັນໃຫ້ແກ່ໜ່ວຍງານເກັບກູ້ ແລະ ສຳຫຼວດຂອງກອງທັບແລ້ວ. ໜ່ວຍງານນີ້ກໍຈະດຳເນີນໄປ ພາຍໃຕ້ການຕິດຕາມກວດກາຂອງ ຄຊກລ ແລະ ເປັນໄປຕາມມາດຕະຖານແຫ່ງຊາດ. ໜ່ວຍງານຂອງກອງທັບ ຈະສຸມຄວາມພະຍາຍາມຂອງຕົນໃສ່ໃນຂົງເຂດທີ່ເປັນບູລິມະສິດໃນການພັດທະນາ.

### 1.11. ເຂດທີ່ເປັນບູລິມະສິດ ສຳລັບການສຳຫຼວດ ແລະ ການກວດກູ້.

ບັນດາໂຄງການພັດທະນາທີ່ເປັນບູລິມະສິດ, ຊຶ່ງມີການຈັດສັນທຶນໃຫ້ແລ້ວ ແມ່ນຢູ່ໃນບັນດາແຂວງ ແລະ ເມືອງທີ່ມີ ລບຕ ຕົກຄ້າງ ດັ່ງລຸ່ມນີ້:

ແຂວງຜົ້ງສາລີ: ເມືອງໃໝ່ ແລະ ສຳພັນ

ແຂວງອຸດົມໄຊ: ເມືອງຫຼາ, ຮຸນ, ງາ, ແບງ ແລະ ໄຊ

ແຂວງບໍ່ແກ້ວ: ເມືອງຜາອຸດົມ ແລະ ປາກທາ

ແຂວງຫລວງພະບາງ: ເມືອງງອຍ, ນ້ຳບາກ, ປາກແຊງ, ຈອມເພັດ, ວຽງຄຳ, ໂພນໄຊ, ພູຄູນ, ຫຼວງພະບາງ

ແຂວງຫົວພັນ: ເມືອງຊຳໃຕ້, ວຽງໄຊ, ສົບເບົາ, ຊຽງຄໍ້, ແອດ, ຊຳເໜືອ, ຫົວເມືອງ ແລະ ວຽງທອງ

ແຂວງໄຊຍະບູລີ: ເມືອງຄອບ, ຊຽງຮ່ອນ, ເງິນ ແລະ ຫົງສາ

ແຂວງຊຽງຂວາງ: ເມືອງຄູນ, ທ່າໂທມ, ພູກູດ, ໜອງແຮດ ແລະ ເມືອງຄຳ

ແຂວງວຽງຈັນ: ເມືອງວັງວຽງ, ຮົ່ມ ແລະ ກາສີ

ແຂວງບໍລິຄຳໄຊ: ເມືອງວຽງທອງ, ຄຳເກີດ ແລະ ບໍລິຄັນ

ແຂວງຄຳມ່ວນ: ເມືອງຫີນບູນ, ບົວລະພາ, ມະຫາໄຊ ແລະ ຍົມມະລາດ,ໄຊບົວທອງ.

ແຂວງສະຫວັນນະເຂດ: ເມືອງເຊໂປນ, ນອງ, ຊົນບູລີ, ອາດສະພັງທອງ, ທ່າປາງທອງ, ວິລະບູລີ, ອາດສະພອນ,
ພະລານໄຊ ແລະ ສອງຄອນ

ແຂວງສາລະວັນ: ເມືອງຊະມ້ອຍ, ຕະໂອ້ຍ ແລະ ເລົ່າງາມ

ແຂວງຈຳປາສັກ: ເມືອງປະທຸມພອນ, ຊະນະສົມບູນ ແລະ ໂຂງ

ແຂວງເຊກອງ: ເມືອງລະມາມ, ກະລຶມ ແລະ ດາກຈຶງ

ແຂວງອັດຕະປື: ເມືອງພູວົງ, ຊານໄຊ ແລະ ສະໜາມໄຊ

ປັດໄຈທີ່ສຳຄັນອື່ນໆ ເຊັ່ນ: ລະດັບຄວາມທຸກຍາກ, ປະລິມານ ລບຕ ທີ່ຕົກຄ້າງ, ຄວາມສ່ຽງດ້ານມະນຸດສະທຳ ແລະ ບູລິມະສິດຂອງອົງການປະຕິບັດງານ ເປັນປັດໄຈທີ່ນຳເຂົ້າໃນຂະບວນການຈັດລຽງບູລິມະສິດເຊັ່ນດຽວກັນ. ການພິຈາລະນາຢ່າງລະມັດລະວັງ ຈະໄດ້ເອົາໃຈໃສ່ເຖິງການຈັດລຳດັບກິດຈະກຳ ທີ່ສະທ້ອນໃຫ້ເຫັນເຖິງບັນດາບູລິມະສິດຕ່າງທີ່ວາງໄວ້ ບົນພື້ນຖານຂອງປັດໄຈທີ່ກ່ຽວຂ້ອງທັງໝົດ.

## ພາກ II. ຍຸດທະສາດຂອງ ອົງການ ສປຊ ເພື່ອການພັດທະນາ

### 2.1. ການສະໜັບສະໜູນຂອງອົງການ ສປຊ ເພື່ອການພັດທະນາ ທີ່ຜ່ານມາ.

ສປຊ ເປັນຄູ່ຮ່ວມພັດທະນາຂອງລັດຖະບານ ສປປ ລາວ ໃນຂະແໜງ ລບຕ ແລະ ໃນດ້ານການພັດທະນາ ມາເປັນເວລາຍາວນານ. ນອກຈາກເປັນປະທານຮ່ວມຂອງກຸ່ມຂະແໜງການ ແລະ ໃຫ້ການສະໜັບສະໜູນໃຫ້ແກ່ສະຖາບັນ ຄຊກລ ແລະ ຄກລ ແລ້ວ ສປຊ ຍັງໄດ້ຊ່ວຍພັດທະນາຄວາມອາດສາມາດຂອງລັດຖະບານລາວ ໃນການກວດກູ້ພື້ນທີ່ໆມີ ລບຕ ຕົກຄ້າງ, ສະໜອງການໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງ ຈາກ ລບຕ ທີ່ມີປະສິດທິຜົນ ແລະ ຊ່ວຍຜູ້ລອດຊີວິດຈາກອຸປະເຫດ ລບຕ ພ້ອມສະມາຊິກໃນຄອບຄົວ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ.

ສປຊ ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານ ສປປ ລາວ, ໂດຍສະເພາະແມ່ນ ການສະໜອງການຝຶກອົບຮົມ ແລະ ນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ເພື່ອເລັ່ງລັດ ແລະ ຫຼຸດຜ່ອນຕົ້ນທຶນຂອງການກວດກູ້. ສປຊ ຍັງສະໜັບສະໜູນກິດຈະກຳການຫຼຸດຜ່ອນຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ, ເວົ້າລວມ ແມ່ນຄວາມພະຍາຍາມໃນການຊ່ວຍເຫຼືອເປັນວົງກວ້າງໃນການພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ.

ສປຊ ເພື່ອການພັດທະນາ ໄດ້ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານລາວ, ໂດຍສະເພາະ ແມ່ນໄດ້ສະໜອງການຝຶກອົບຮົມ ແລະ ເທັກໂນໂລຢີທີ່ເໝາະສົມ ເພື່ອເພີ່ມຈັງຫວະ ແລະ ຫຼຸດຜ່ອນຕົ້ນທຶນຂອງການກວດກູ້. ສປຊ ເພື່ອການພັດທະນາ ຍັງໄດ້ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານລາວ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ, ພາຍໃນຂອບເຂດຄວາມພະຍາຍາມທີ່ກວ້າງຂວາງກວ່າເກົ່າ ໃນຂົງເຂດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

ສປຊ ເພື່ອການພັດທະນາ ໄດ້ສະໜັບສະໜູນ ລັດຖະບານ ສປປ ລາວ ໃນການກະກຽມກອງປະຊຸມໂລກ ຄັ້ງປະຫວັດສາດຄັ້ງທຳອິດ ລັດພາຄີຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ໄດ້ຈັດຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນ ໃນປີ 2010, ມີຜູ້ແທນຈາກບັນດາປະເທດທີ່ເຊັນຮັບຮອງ ແລະ ລັດພາຄີເຂົ້າຮ່ວມທັງໝົດ 110 ກວ່າປະເທດ. ນອກນີ້, ຍັງມີບັນດາປະເທດຜູ້ສັງເກດການ ແລະ ມີຜູ້ຕາງໜ້າຂອງບັນດາອົງການຈັດຕັ້ງສາກົນ ພ້ອມດ້ວຍອົງການຈັດຕັ້ງທາງສັງຄົມຕ່າງໆຈາກທົ່ວໂລກເຂົ້າຮ່ວມ. ກອງປະຊຸມດັ່ງກ່າວ ຍັງໄດ້ສ້າງໂອກາດໃຫ້ແກ່ຜູ້ລອດຊີວິດຈາກລະເບີດບົມບີ້ ໄດ້ຖືກຮັບຮູ້ ແລະ ຖືກຮັບຟັງການລາຍງານ ໂດຍຊຸມຊົນສາກົນອີກດ້ວຍ. ຄວາມມຸ້ງຫວັງ ແລະ ຄວາມຕັ້ງໃຈຂອງຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໄດ້ຖືກບັນທຶກລົງໃນຖະແຫຼງການວຽງຈັນ ແລະ ໃນມາດຕະການຂອງການປະຕິບັດວຽກງານສະເພາະ ຂອງບັນດາລັດ

ພາຄີສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ໄດ້ຖືກກຳນົດໄວ້ໃນແຜນປະຕິບັດງານວຽງຈັນ. ສປຊ ໄດ້ຊ່ວຍລັດຖະບານ ສປປ ລາວ ຕະຫຼອດໄລຍະເວລາຂອງການເປັນປະທານ ຂອງລັດພາຄີສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ປີ (2010-2011) ແລະ ຍັງຈະສືບຕໍ່ໃຫ້ການສະໜັບສະໜູນຕໍ່ໄປ.

ເພື່ອຊ່ວຍປຸກລະດົມ ແລະ ຄຸ້ມຄອງການຊ່ວຍເຫຼືອຈາກສາກົນ, ກອງທຶນພິເສດເພື່ອການແກ້ໄຂບັນຫາ ລບຕ ໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ ສປປ ລາວ ໃນປີ 2010, ຊຶ່ງຄຸ້ມຄອງໂດຍອົງການ ສປຊ ເພື່ອການພັດທະນາ, ທີ່ຜ່ານມາ ກອງທຶນດັ່ງກ່າວ ໄດ້ຕັ້ງຂຶ້ນໃນປີ 1995. ກອງທຶນພິເສດນີ້ ດຳເນີນການພາຍໃຕ້ກອບຂອງແຜນຍຸດທະສາດແຫ່ງຊາດ ແລະ ນະໂຍບາຍຕ່າງໆທີ່ໄດ້ອະນຸມັດໂດຍຄະນະຊີ້ນຳ ຄຊກລ. ກອງທຶນດັ່ງກ່າວ ດຳເນີນການພາຍໃຕ້ສິດອຳນາດຂອງຄະນະຊີ້ນຳ ທີ່ເປັນປະທານໂດຍລັດຖະບານລາວ (ກະຊວງການຕ່າງປະເທດ) ແລະ ເປັນປະທານຮ່ວມໂດຍອົງການ ສປຊ ເພື່ອການພັດທະນາ, ໂດຍມີການປຶກສາຫາລືຢ່າງໃກ້ຊິດກັບກຸ່ມຂະແໜງການ ລບຕ. ຊັບພະຍາກອນທາງການເງິນທີ່ໄດ້ປະກອບສ່ວນຜ່ານກອງທຶນພິເສດເປັນແນວທາງ ເພື່ອໃຫ້ການຊ່ວຍເຫຼືອຂະແໜງການ ລບຕ ກວ້າງຂວາງຂຶ້ນກວ່າເກົ່າ ແລະ ເພີ່ມທະວີຄວາມເປັນເຈົ້າການຂອງລັດຖະບານ, ໃນການຊີ້ນຳ ແລະ ການພິຈາລະນາ ແຫຼ່ງຊັບພະຍາກອນທີ່ມີຢູ່ຢ່າງຈຳກັດໃນຂະແໜງ ລບຕ. ກອງທຶນພິເສດ ຍັງສົ່ງເສີມທາງເລືອກຂອງການປະກອບທຶນຈາກຜູ້ໃຫ້ທຶນອື່ນໆ, ລວມທັງການສະໜັບສະໜູນແບບສອງຝ່າຍ ແລະ ການໃຫ້ທຶນໂດຍກົງແກ່ອົງການປະຕິບັດງານແກ້ໄຂບັນຫາ ລບຕ.

**ການປະເມີນຜົນຂະແໜງການແກ້ໄຂ ລບຕ (2003-2013).**

ໃນກາງປີ 2012, ອົງການ ສປຊ ເພື່ອການພັດທະນາ ໄດ້ດຳເນີນການປະເມີນຜົນໂຄງການ ທີ່ໄດ້ຮັບການສະໜັບສະໜູນໂດຍ ອົງການ ສປຊ ເພື່ອການພັດທະນາ, ໂດຍສະເພາະ ຄຊກລ ແລະ ຄກລ ໃນໄລຍະເວລາ ແຕ່ປີ 2003-2011. ຈຸດປະສົງຫຼັກຂອງການປະເມີນຜົນ ກໍເພື່ອສະໜອງຂໍ້ມູນໃຫ້ແກ່ລັດຖະບານ ສປປ ລາວ ແລະ ອົງການ ສປຊ ເພື່ອການພັດທະນາກ່ຽວກັບຖານະຂອງຜົນໄດ້ຮັບຈາກການດຳເນີນໂຄງການທີ່ຜ່ານມາ ພ້ອມທັງໃຫ້ການແນະນຳ ແລະ ການສັງເກດການຕ່າງໆຕາມທີ່ປະກົດອອກມາຕາມເປົ້າໝາຍຕ່າງໆຂອງການທົບທວນ ເພື່ອຊ່ວຍຊີ້ທິດ ແລະ ແນວທາງປະຕິບັດໂຄງການຂອງອົງການ ສປຊ ເພື່ອການພັດທະນາ ໃນເວລດຳເນີນໂຄງການຄັ້ງຕໍ່ໄປ (2012-2015).

**ຂໍ້ແນະນຳ ແລະ ຂໍ້ສັງເກດທີ່ສຳຄັນ ທີ່ໄດ້ຮັບຈາກການປະເມີນຜົນໂຄງການໃນຄັ້ງນີ້ ມີ:**

(i). ຍັງຂາດຂໍ້ມູນພື້ນຖານທີ່ໜ້າເຊື່ອຖືໄດ້ ກ່ຽວກັບລະດັບ ແລະ ເນື້ອທີ່ ທີ່ມີ ລບຕ ຕົກຄ້າງ ຢູ່ໃນປະເທດ ອັນເປັນຜົນສືບເນື່ອງມາຈາກບໍ່ມີການສຳຫຼວດພຽງພໍ ທັງທາງດ້ານວິຊາການ ແລະ ບໍ່ແມ່ນວິຊາການ;

(ii). ມີການຈັດບູລິມະສິດ ແລະ ວາງແຜນຫຼາຍປີ ແລະ ແຜນປະຈຳປີ ດີກວ່າເກົ່າ;

(iii). ຂາດການສື່ສານຢ່າງພຽງພໍກັບຜູ້ມີສ່ວນຮ່ວມຕ່າງໆ;

(IV). ມີຄວາມຈຳເປັນທີ່ຈະຕ້ອງວາງແຜນຂະແໜງການ ລບຕ ປະສົມປະສານກັບແຜນພັດທະນາແຫ່ງຊາດ ແລະ ຂະບວນການທາງດ້ານງົບປະມານທີ່ກວ້າງຂວາງກວ່າເກົ່າ;

(V). ລັດຖະບານ ສປປ ລາວ ຈຳເປັນຕ້ອງລົງທຶນດ້ານການເງິນ ເຂົ້າໃສ່ຂະແໜງ ລບຕ ຫຼາຍຂຶ້ນ;

(VI). ຄຊກລ ຈະຕ້ອງປັບປຸງຄວາມສາມາດຂອງຕົນ ເພື່ອປະສານງານ ແລະ ອອກກົດລະບຽບ ກິດຈະກຳຕ່າງໆ ໃນຂະແໜງການ ແລະ ພ້ອມທັງດຳເນີນການຄຸ້ມຄອງຄຸນນະພາບ;

(VII).ມີຄວາມຈຳເປັນ ສຳລັບ ຄກລ ທີ່ຈະຕ້ອງບັນທຶກ, ວິເຄາະ ບົດຮຽນທີ່ຖອດຖອນໄດ້ ດ້ວຍຄວາມຫ້າວຫັນຂຶ້ນຕື່ມພ້ອມກັບຄວາມສາມາດໃນການຕິດຕາມກວດກາ, ປະເມີນຜົນ ຕົນເອງ ແລະ ການຮັບຮອງຄຸນນະພາບ.

ສິ່ງທີ່ພົບເຫັນໃນການດຳເນີນການປະເມີນຜົນຄັ້ງນີ້ ໄດ້ເປັນພື້ນຖານອັນໜຶ່ງ ເພື່ອສ້າງກິດຈະກຳ ແລະ ຍຸດທະສາດອັນໃໝ່ໃຫ້ແກ່ໂຄງການ ຊຶ່ງຈະໄດ້ອະທິບາຍເພີ່ມເຕີມຢູ່ໃນພາກຕໍ່ໄປ (ເບິ່ງເອກະສານແນບທ້າຍ 7 ສຳລັບການສະຫຼຸບລາຍລະອຽດເພີ່ມເຕີມ ກ່ຽວກັບຂໍ້ສັງເກດ ແລະ ຂໍ້ແນະນຳທີ່ສຳຄັນຈາກທີມງານປະເມີນຜົນ).

**2.2. ທິດທາງຍຸດທະສາດ ແລະ ຈຸດປະສົງທີ່ສຳຄັນ ສຳລັບປີ 2013-2015.**

ຈຸດປະສົງລວມຂອງສັນຍາຮ່ວມມື ລະຫວ່າງ ອົງການ ສປຊ ເພື່ອການພັດທະນາ ແລະ ລັດຖະບານແຫ່ງ ສປປ ລາວ ສຳລັບໄລຍະເວລາ 3 ປີ ສະບັບນີ້ ກໍ່ເພື່ອສືບຕໍ່ສະໜັບສະໜູນ ແລະ ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງສະຖາບັນ ຄຊກລ ແລະ ຄກລ ເພື່ອ:

(i). ບັນລຸຕາມເປົ້າໝາຍແຫ່ງຊາດ ຂອງຂະແໜງການ ລບຕ ຕາມທີ່ລະບຸໄວ້ຢູ່ໃນ ເສັ້ນທາງກ້າວສູ່ຄວາມປອດໄພ II,

(ii). ບັນລຸຂໍ້ຜູກພັນທັງໝົດ ພາຍໃຕ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງອື່ນໆ,

(iii). ເພື່ອປະກອບສ່ວນ ໃຫ້ແກ່ຄວາມສຳເລັດ ເປົ້າໝາຍພັດທະນາສະຫັດສະວັດ, ໂດຍສະເພາະແມ່ນ ເປົ້າໝາຍພັດທະນາ ສະຫັດສະວັດອັນດັບ 9 ທີ່ກຳນົດໂດຍລັດຖະບານ ສປປ ລາວ ສຳລັບຂະແໜງການ ລບຕ ໂດຍສະເພາະ. ການບັນລຸເປົ້າໝາຍພັດທະນາສະຫັດສະວັດ ອັນດັບ 9 ເປັນສິ່ງສຳຄັນຫຼາຍ, ເພາະວ່າມັນຕອບສະໜອງຕໍ່ການເຂົ້າເຖິງຊັບສິນ ແລະ ການບໍລິການຕ່າງໆເພີ່ມຂຶ້ນ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກ ລບຕ.

ອົງການ ສປຊ ເພື່ອການພັດທະນາ ຈະສືບຕໍ່ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານລາວ ໂດຍຜ່ານການສົ່ງເສີມກອງທຶນພິເສດ ຂອງຂະແໜງ ລບຕ. ກອງທຶນພິເສດ ເພື່ອສະໜັບສະໜູນ ຂະແໜງການແກ້ໄຂ ບັນຫາ ລບຕ ໄດ້ສ້າງຕັ້ງຂຶ້ນໃນເດືອນ ມີນາ ປີ 2010 ຢູ່ພາຍໃນກອບຂອງຖະແຫຼງການວຽງຈັນ ວ່າດ້ວຍຄວາມມີປະສິດທິຜົນຂອງການຊ່ວຍເຫຼືອ. ການຈັດໃຫ້ມີການສະໜັບສະໜູນຂອງຜູ້ໃຫ້ທຶນຕໍ່ສອງສະຖາບັນຂອງຊາດຜ່ານກອງທຶນພິເສດນີ້ ຄາດວ່າຈະເປັນການປະກອບສ່ວນໃນການສ້າງຄວາມອາດສາມາດໃຫ້ແກ່ສະຖາບັນຂອງຊາດ ສຳລັບການວາງແຜນເປັນໄລຍະເວລາຫຼາຍປີ, ການປະສານງານ, ການຈັດສັນຊັບພະຍາກອນ, ຄວາມມີປະສິດທິພາບ ແລະ ປະສິດທິຜົນ ຂອງຂະແໜງການແກ້ໄຂບັນຫາ ລບຕ ໂດຍລວມ, ດ້ວຍການຍົກສູງຄວາມເປັນເຈົ້າການຂອງສະຖາບັນຂອງຊາດ ແລະ ເຊື່ອມໂຍງເຂົ້າກັນຢ່າງເຂັ້ມແຂງລະຫວ່າງຄະນະຊີ້ນຳກອງທຶນພິເສດ ທີ່ສາມາດຮັບປະກັນດ້ານຍຸດທະສາດໃນການວາງແຜນ ແລະ ການຈັດສັນການລົງທຶນ ແລະ ຮັບປະກັນກ່ຽວກັບກົນໄກການວາງແຜນຢູ່ຂັ້ນສູນກາງ/ທ້ອງຖິ່ນ ທີ່ນຳໂດຍກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຊຶ່ງກຳນົດໂດຍຫ້ອງວ່າການລັດຖະບານ.

ໃນຊຸມປີທີ່ຈະມາເຖິງນີ້, ກອງທຶນພິເສດສຳລັບຂະແໜງການ ລບຕ ຈະສືບຕໍ່ປະກອບສ່ວນສະໜັບສະໜູນການປະຕິບັດງານຂອງ ຄຊກລ ແລະ ຄກລ ພ້ອມທັງວາງເປົ້າໝາຍເພື່ອຂະຫຍາຍຂອບເຂດວຽກງານຂອງຕົນໄປຍັງຊຸມຊົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານອື່ນໆ ໂດຍອົງໃສ່ ອົງການຈັດຕັ້ງທີ່ປະຕິບັດງານຢູ່ໃນຂະແໜງການ. ພາລະບົດບາດຂອງກອງທຶນພິເສດ ທີ່ໄດ້ເຊັນກັບລັດຖະບານ ຍັງໄດ້ເປີດທາງຮັບເອົາແຫຼ່ງຊັບພະຍາກອນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຕ່າງໆເຂົ້າມາມີສ່ວນຮ່ວມໃຫ້ການສະໜັບສະໜູນອີກດ້ວຍ. ດ້ວຍການເພີ້ມຂຶ້ນຂອງຈຳນວນສະມາຄົມທີ່ບໍ່ຫວັງຜົນກຳໄລ ຢູ່ພາຍໃນປະເທດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ກອງທຶນພິເສດຈຶ່ງມີພາລະບົດບາດສຳຄັນ. ຄວາມສາມາດ ແລະ ຂັ້ນຕອນທີ່ຈຳເປັນ ຄວນຈະໄດ້ຮັບນຳເຂົ້າມາໃຊ້ ເພື່ອຮັບປະກັນ ການກຳນົດ ແລະ ການຈັດສັນທີ່ເໝາະສົມ ທີ່ຈະເປັນຜົນປະໂຫຍດແກ່ຂະແໜງການໂດຍລວມ, ແຕ່ສິ່ງດັ່ງກ່າວນີ້ ກໍຄວນຈະເປັນທີ່ໜ້າເຊື່ອຖືໄດ້ວ່າ ມັນມີຄວາມສາມາດພໍທີ່ຈະສະໜອງຄຸນຄ່າເພີ້ມເຕີມໄດ້, ໂດຍສະເພາະ, ຄວາມພະຍາຍາມຕ່າງໆຢູ່ພາຍໃນຂະແໜງຄົ້ນພົບ ແລະ ແນວຄິດລິເລີ່ມໃນການຊ່ວຍເຫຼືອຜູ້ເຄາະຮ້າຍ ພ້ອມທັງກິດຈະກຳໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງຈາກ ລບຕ. ອົງການ ສປຊ ເພື່ອການພັດ

ທະນາ ຈະຮັບປະກັນການຄຸ້ມຄອງກອງທຶນພິເສດຢ່າງເໝາະສົມ ແລະ ມີປະສິດທິຜົນ, ໂດຍຜ່ານຜູ້ຈັດການ ທີ່ຮັບຜິດຊອບວຽກງານ ລບຕ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ.

ກ່ຽວກັບການລະດົມຊັບພະຍາກອນໃຫ້ແກ່ຂະແໜງ ລບຕ, ອົງການ ສປຊ ເພື່ອການພັດທະນາ ຈະສະໜັບສະໜູນລັດຖະບານລາວ ໃນການພັດທະນາຍຸດທະສາດການລະດົມຊັບພະຍາກອນໃນໄລຍະຍາວ ເພື່ອສະໜັບສະໜູນຍຸດທະສາດການຂ້າມຜ່ານທີ່ໄດ້ສັງລວມໄວ້ຢູ່ໃນແຜນຫຼຸດຜ່ອນຕົ້ນທຶນ ໃນການໃຊ້ຈ່າຍທາງດ້ານບໍລິຫານ, ຄວາມສາມາດບົ່ມຊ້ອນສໍາລັບການເຂົ້າເຖິງ ແລະ ການສະໜັບສະໜູນທຶນຮອນຈາກພາຍນອກ ໃຫ້ແກ່ງົບປະມານແຫ່ງຊາດ ໃນວຽກງານການກວດກູ້, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ, ການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ອື່ນໆ, ການຕິດຕາມກວດກາ ກ່ຽວກັບໂອກາດໃນການລະດົມທຶນ, ການຮ່ວມມືຈາກພາກເອກະຊົນ, ແລະ ຄູ່ຮ່ວມງານທີ່ເປັນບໍລິສັດ ທີ່ຮັບຜິດຊອບຕໍ່ວຽກງານສັງຄົມຕ່າງໆ. ດັ່ງທີ່ໄດ້ແນະນໍາ ຢູ່ໃນການປະເມີນຜົນໂຄງການ, ມີຄວາມຈໍາເປັນສໍາລັບລັດຖະບານ ສປປ ລາວ ທີ່ຈະຕ້ອງລົງທຶນດ້ານການເງິນເຂົ້າໃນຂະແໜງ ລບຕ ໃຫ້ຫຼາຍຂຶ້ນ. ຍຸດທະສາດການລະດົມຊັບພະຍາກອນນີ້ ມີເປົ້າໝາຍເພື່ອຕອບສະໜອງຕໍ່ຂໍ້ແນະນໍາຕ່າງໆທີ່ກ່າວມາຂ້າງເທິງນັ້ນ.

ອົງການ ສປຊ ເພື່ອການພັດທະນາ, ໃນຖານະທີ່ເປັນປະທານຮ່ວມກຸ່ມຂະແໜງການ ຈະສືບຕໍ່ມີບົດບາດສໍາຄັນ ເພື່ອອໍານວຍຄວາມສະດວກໃນການຮ່ວມມືລະຫວ່າງ ລັດຖະບານ ສປປ ລາວ ແລະ ຄູ່ຮ່ວມພັດທະນາອື່ນໆ, ເພື່ອສືບຕໍ່ປະກອບສ່ວນ ແລະ ຮັບປະກັນວ່າ ວຽກງານຂອງຂະແໜງການບັນລຸຕາມຈຸດປະສົງທາງດ້ານການພັດທະນາ ແລະ ມະນຸດສະທໍາ, ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມເປັນເຈົ້າຕົນເອງຂອງສະຖາບັນ ແລະ ເພື່ອສົ່ງເສີມການຮ່ວມມືທີ່ດີກວ່າເກົ່າ ຢູ່ພາຍໃນຂະແໜງ ລບຕ ແລະ ຂະແໜງການພັດທະນາອື່ນໆ. ການປະເມີນຜົນໂຄງການ ໄດ້ຊີ້ໃຫ້ເຫັນວ່າ ມີຄວາມຈໍາເປັນທີ່ຈະຕ້ອງໄດ້ປັບປຸງການສື່ສານກັບຜູ້ມີສ່ວນຮ່ວມຕ່າງໆໃຫ້ເຂັ້ມແຂງຂຶ້ນອີກ.

ຕອບສະໜອງຕໍ່ການແນະນໍາຈາກການປະເມີນຜົນໂຄງການ, ອົງການ ສປຊ ເພື່ອການພັດທະນາ ມີແຜນທີ່ຈະຮຽກປະຊຸມເວທີນະໂຍບາຍ ແລະ ເຫດການຕ່າງໆຂຶ້ນ ເພື່ອໃຫ້ໂອກາດແກ່ຜູ້ໃຫ້ທຶນ, ອົງການປະຕິບັດງານ, ພາກເອກະຊົນ ໄດ້ນໍາສະເໜີເຫດການຕ່າງໆທີ່ກ່ຽວຂ້ອງກັບຂະແໜງການຕໍ່ທີ່ປະຊຸມ. ບັນດາຫົວຂໍ້ກອງປະຊຸມເວທີນະໂຍບາຍທີ່ໄດ້ຂຶ້ນແຜນໄວ້ ລວມມີ:

1). ບູລິມະສິດ ແລະ ນະໂຍບາຍຂອງຂະແໜງການ ທີ່ພົວພັນເຖິງແຜນວຽກ, ການສໍາຫຼວດ ແລະ ການກວດກູ້,
2). ການລະດົມແຫຼ່ງຊັບພະຍາກອນ,
3). ການກວດກູ້ລະເບີດ ຮັບໃຊ້ໃຫ້ແກ່ໂຄງການພັດທະນາ ເສດຖະກິດ-ສັງຄົມ ຢູ່ໃນ ສປປ ລາວ, ແລະ
4). ນະວັດຕະກໍາໃໝ່ທາງດ້ານເທັກໂນໂລຢີຂອງການກວດກູ້, ການຄົ້ນຄວ້າ ແລະ ພັດທະນາ.

ສຸດທ້າຍ, ແລະ ທັງໃນຖານະທີ່ເປັນອົງປະກອບທີ່ກວ້າງໃຫຍ່ທີ່ສຸດອົງການໜຶ່ງ, ອົງການ ສປຊ ເພື່ອການພັດທະນາ ຈະສືບຕໍ່ສະໜັບສະໜູນສອງສະຖາບັນຂອງຊາດ, ຄຊກລ ແລະ ຄກລ ໃນການພັດທະນາຂີດຄວາມສາມາດຂອງພະນັກງານ ເພື່ອແກ້ໄຂສິ່ງທ້າທາຍທີ່ເກີດຈາກການຂົ່ມຂູ່ຂອງ ລບຕ ຕໍ່ການພັດທະນາ ແລະ ມະນຸດສະທໍາ ໃນໄລຍະຍາວ ໂດຍຜ່ານການຈັດສະໜອງທີ່ປຶກສາດ້ານວິຊາການສະໜັບສະໜູນໃຫ້ແກ່ໂຄງການໃນທຸກໆດ້ານ, ເຊັ່ນ: ດ້ານການວາງແຜນ, ການຈັດຕັ້ງປະຕິບັດ, ການຮັບປະກັນຄຸນນະພາບ ແລະ ການຄຸ້ມຄອງດ້ານການເງິນ ເປັນຕົ້ນ. ໃນຮອບຕໍ່ດັ່ງກ່າວນີ້, ອົງການ ສປຊ ເພື່ອການພັດທະນາ ຈະຕອບສະໜອງຊ່ຽວຊານດ້ານການພັດທະນາຄວາມສາມາດຈາກພາຍນອກໃຫ້ແກ່ສະຖາບັນ ເພື່ອດໍາເນີນການປະເມີນຜົນທາງດ້ານການພັດທະນາຄວາມສາມາດ ເພື່ອຕີລາຄາພື້ນຖານຄວາມສາມາດ ຂອງ ຄຊກລ ແລະ ຄກລ ທີ່ມີໃນປະຈຸບັນ ເພື່ອອອກຍຸດທະສາດກ່ຽວກັບການພັດທະນາຄວາມສາມາດໄລຍະເວລາ 3 ປີ ຂອງທັງສອງສະຖາບັນ. ຍຸດທະສາດດັ່ງກ່າວ, ຈະຖືກພັດທະນາຂຶ້ນຮ່ວມກັບ ຄຊກລ ແລະ ຄກລ ເພື່ອເປັນການຢືນຢັນເຖິງຄວາມເປັນຄູ່ຮ່ວມງານທີ່ມີຄວາມເຂັ້ມແຂງ.

ອົງການ ສປຊ ເພື່ອການພັດທະນາ ມີຄວາມຕັ້ງໃຈ ທີ່ຈະສືບຕໍ່ສ້າງຄວາມເຂັ້ມແຂງ ໃນດ້ານຄວາມສາມາດໃຫ້ແກ່ຂະແໜງການ ລບຕ ເພື່ອຄຸ້ມຄອງ ແລະ ປະສານງານ, ພ້ອມທັງເຊື່ອມໂຍງເຂົ້າຫາກັນຫຼາຍຂຶ້ນ ລະຫວ່າງຂະແໜງ ແກ້ໄຂບັນຫາ ລບຕ ກັບຂະແໜງການອື່ນໆ ເພື່ອສົ່ງເສີມ ແລະ ຕອບສະໜອງຕໍ່ແຜນການຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ ແລະ ການພັດທະນາຊັບພະຍາກອນມະນຸດໃນໄລຍະຍາວ ຕາມທີ່ໄດ້ກຳນົດໄວ້, ດ້ວຍການສ້າງຄວາມເຂັ້ມແຂງໃຫ້ເຊື່ອມໂຍງກັນທັງສາຍຕັ້ງ ແລະ ສາຍຂວາງ. ໃນບັນດາກິດຈະກຳທັງໝົດຂອງຕົນ, ອົງການ ສປຊ ເພື່ອການພັດທະນາ ຈະຮັບປະກັນ ແລະ ຈະສຸມໃສ່ການພັດທະນາຄວາມສາມາດຂອງພະນັກງານ ໃນການປະຕິບັດວຽກງານທຸກໆດ້ານ, ເຊັ່ນ: ການວາງແຜນ, ການຈັດຕັ້ງປະຕິບັດ, ການຄ້ຳປະກັນຄຸນນະພາບ ແລະ ການຄຸ້ມຄອງທາງດ້ານການເງິນ ເພື່ອແກ້ໄຂສິ່ງທ້າທາຍຕໍ່ການພັດທະນາ ແລະ ມະນຸດສະທຳໃນໄລຍະຍາວ ທີ່ສືບເນື່ອງມາຈາກການມີ ລບຕ ຕົກຄ້າງ.

**2.3. ການສະໜັບສະໜູນ ຄຊກລ.**

ຄຊກລ, ໃນຖານະເປັນຜູ້ປະສານງານ ແລະ ເປັນຜູ້ອອກລະບຽບຂະແໜງການ ໄດ້ຖືກມອບໝາຍໜ້າທີ່ ເພື່ອຮັບປະກັນວ່າກິດຈະກຳຂອງຂະແໜງການແກ້ໄຂບັນຫາ ລບຕ ຈະຕ້ອງດຳເນີນໄປໂດຍສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ ຂອງຂະແໜງການ, (ເສັ້ນທາງກ້າວສູ່ຄວາມປອດໄພ II, 2010 – 2020). ດັ່ງທີ່ໄດ້ສັງລວມໄວ້ຢູ່ໃນແຜນຍຸດທະສາດແຫ່ງຊາດ " ເສັ້ນທາງກ້າວສູ່ຄວາມປອດໄພ II", ເປົ້າໝາຍຍຸດທະສາດຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ຕະຫຼອດໄລຍະແຕ່ປີ 2010 – 2020 ແມ່ນເພື່ອຫຼຸດຜ່ອນໄພຂົ່ມຂູ່ຈາກ ລບຕ ຕໍ່ການພັດທະນາເສດຖະກິດ-ສັງຄົມ ເພື່ອຊີ້ໃຫ້ເຫັນວ່າ ບ່ອນໃດທີ່ມີ ລບຕ ຕົກຄ້າງ ແລະ ມີຄວາມທ້າທາຍນັ້ນ ຈະຕ້ອງໄດ້ຖືກແກ້ໄຂຢ່າງພຽງພໍ ດ້ວຍຄວາມສາມາດທີ່ຍືນຍົງຂອງພະນັກງານພາຍໃນ ປະສານເຂົ້າກັບສະຖາບັນກ່ຽວຂ້ອງຂອງລັດຖະບານຢ່າງເຕັມຄວາມສາມາດ.

ການສ້າງເອກະສານໂຄງການນີ້ຂຶ້ນ ແມ່ນເປັນການຕອບສະໜອງກາລະໂອກາດອັນໜຶ່ງ ເພື່ອສະທ້ອນໃຫ້ເຫັນເຖິງບັນດາກິດຈະກຳ ການພັດທະນາຕ່າງໆທີ່ເກີດຂຶ້ນຢູ່ພາຍໃນຂະແໜງແກ້ໄຂບັນຫາ ລບຕ ຢູ່ໃນກອບຂອງການສະໜັບສະໜູນຂອງອົງການ ສປຊ ເພື່ອການພັດທະນາ ຕໍ່ ຄຊກລ. ການທົບທວນໂຄງການຂອງ ອົງການ ສປຊ ເພື່ອການພັດທະນາ ເມື່ອບໍ່ດົນຜ່ານມານີ້ ແມ່ນກວມເອົາໄລຍະເວລາ ເຖິງ 8 ປີ (2003-2011), ຮັບຮູ້ວ່າມີຫຼັກຖານ ທີ່ສະແດງເຖິງຜົນສຳເລັດທີ່ສຳຄັນຫຼາຍຢ່າງກ່ຽວກັບຄວາມອາດສາມາດທີ່ໄດ້ເພີ້ມທະວີຂຶ້ນຂອງ ຄຊກລ ໃນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍ ນັບແຕ່ໄດ້ສ້າງຕັ້ງຂຶ້ນໃນປີ 2006. ການທົບທວນແຜນງານ ຍັງໄດ້ໃຫ້ຂໍ້ແນະນຳຈຳນວນໜຶ່ງຕໍ່ຂົງເຂດທີ່ ຄຊກລ ຄວນຈະຕ້ອງສຸມໃສ່ເພື່ອປັບປຸງຕື່ມ. ການທົບທວນແຜນງານ ຍັງໄດ້ຊີ້ບອກເຖິງບາງຂົງເຂດວຽກງານ ທີ່ອົງການ ສປຊ ເພື່ອການພັດທະນາ ສາມາດປັບປຸງແນວທາງຂອງຕົນ ເພື່ອໃຫ້ການສະໜັບສະໜູນ ຄຊກລ ໂດຍຜ່ານການຊ່ວຍເຫຼືອໂຄງການ.

ສະຫຼຸບແລ້ວ, ສິ່ງຕ່າງໆດັ່ງຕໍ່ໄປນີ້ ສະທ້ອນໃຫ້ເຫັນເຖິງການສືບຕໍ່ສະໜັບສະໜູນກິດຈະກຳທີ່ເປັນແກນຫຼັກໃຫ້ແກ່ ຄຊກລ ໃນແຕ່ລະວັນ, ແຕ່ໃນເວລາດຽວກັນ ກໍເປັນການແນະນຳໃຫ້ຮູ້ຈັກກັບບັນດາກິດຈະກຳຕ່າງໆທີ່ໄດ້ນຳສະເໜີ ເພື່ອສະໜັບສະໜູນໃຫ້ແກ່ ຄຊກລ ໃນການນຳພາຂະແໜງການເພື່ອຈັດຕັ້ງປະຕິບັດຍຸດທະສາດ ແລະ ການປັບປຸງລະດັບນະໂຍບາຍຕາມທີ່ໄດ້ຊີ້ແຈງໄວ້ຢູ່ໃນບົດລາຍງານການປະເມີນຜົນ.

**ຜົນໄດ້ຮັບ ທີ 1:**

**ຄຊກລ ສາມາດພັດທະນາ ແລະ ສະໜອງທິດທາງນະໂຍບາຍ , ປະສານງານ ແລະ ອອກລະບຽບໃຫ້ແກ່ຂະແໜງການ ລບຕ ຢ່າງມີປະສິທິຜົນ ເພື່ອສະໜັບສະໜູນບັນດາເປົ້າໝາຍການພັດທະນາແຫ່ງຊາດ, ການຈັດຕັ້ງປະຕິບັດຍຸດທະສາດຂອງຂະແໜງການ "ເສັ້ນທາງກ້າວສູ່ຄວາມປອດໄພ II", ແລະ ເພື່ອຮັບປະກັນ ໃນການບັນລຸພັນທະຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງຕ່າງໆ.**

**ຄຊກລ ພະຍາຍາມປັບປຸງຄວາມອາດສາມາດຂອງຕົນ ເພື່ອ:**

(i). ສະໜອງທິດທາງນະໂຍບາຍ, ປະສານງານ ແລະ ວາງລະບຽບຄຸ້ມຄອງກິດຈະກຳທັງໝົດໃນຂະແໜງ ລບຕ;
(ii). ວາງແຜນ ແລະ ສ້າງບຸລິມະສິດທີ່ເໝາະສົມ ສຳລັບການກວດກູ້ ແລະ ກິດຈະກຳອື່ນໆທີ່ສອດຄ່ອງກັບທິດທາງຂອງລັດຖະບານ, ໂດຍພິຈາລະນາເຖິງການພັດທະນາ ແລະ ມະນຸດສະທຳ;
(iii). ປະເມີນ ແລະ ອອກໜັງສືຮັບຮອງໃຫ້ແກ່ອົງການປະຕິບັດງານ;
(iv). ຕິດຕາມ ແລະ ປະເມີນຜົນ ກິດຈະກຳຕ່າງໆ ແລະ ຮັບປະກັນວ່າ ບັນດາກິດຈະກຳຕ່າງໆທີ່ປະຕິບັດໂດຍອົງການປະຕິບັດງານທັງໝົດ ເປັນໄປຕາມມາດຕະຖານແຫ່ງຊາດ;
(v). ສົ່ງບົດລາຍງານຄົບຖ້ວນ ໃຫ້ແກ່ລັດຖະບານ ແລະ ຜູ້ໃຫ້ທຶນ ທັນຕາມກຳນົດເວລາ;
(vi). ຮັກສາການຄຸ້ມຄອງທາງດ້ານການເງິນ ແລະ ດ້ານອື່ນໆ ຢ່າງເປີດເຜີຍ ແລະ ໂປ່ງໃສ ເພື່ອຮັກສາໄວ້ຊຶ່ງຄວາມຮັບຜິດຊອບຢ່າງເຕັມສ່ວນຕໍ່ບັນດາທຶນທັງໝົດທີ່ໄດ້ຮັບ;
(vii). ເຂົ້າຮ່ວມ ແລະ ຮ່ວມມືກັບຜູ້ປະຕິບັດງານທີ່ກ່ຽວຂ້ອງ ໃນຂະແໜງການອື່ນໆ; ແລະ
(viii). ຮັກສາການສື່ສານກັບຜູ້ທີ່ມີສ່ວນຮ່ວມທັງໝົດ ຢ່າງເປີດເຜີຍ ແລະ ມີປະສິດທິຜົນ.

**ການສຳຫຼວດ ແລະ ການກວດກູ້.**

ໜ່ວຍງານສຳຫຼວດ ແລະ ກວດກູ້ ຂອງ ຄຊກລ, ໂດຍການຮ່ວມມືຢ່າງໃກ້ຊິດກັບອົງການປະຕິບັດງານ ທີ່ດຳເນີນວຽກງານກວດກູ້ ລບຕ, ຈະສືບຕໍ່ຕິດຕາມ ບັນດາເປົ້າໝາຍຕ່າງໆ ດັ່ງຕໍ່ໄປນີ້:

**ເປົ້າໝາຍທີ I.** ຍຸດທະສາດ ການກວດກູ້ ລບຕ ທີ່ໄດ້ວາງເປົ້າໝາຍໄວ້ກໍຄື ສຸມໃສ່ພື້ນທີ່ບູລິມະສິດໃນການພັດທະນາ, ກຸ່ມຜູ້ທຸກຍາກ ແລະ ກຸ່ມທີ່ມີຄວາມສ່ຽງ.

**ກິດຈະກຳຕົ້ນຕໍ:**

(i). ກຳນົດເຂດບຸລິມະສິດໃນການພັດທະນາ ແລະ ຊຸມຊົນທີ່ທຸກຍາກ ແລະ/ຫຼື ຊຸມຊົນທີ່ມີຄວາມສ່ຽງ;
(ii). ສະໜອງກົນໄກການລາຍງານ ເພື່ອຕອບສະໜອງ ຕໍ່ການສະເໜີຂອງຊຸມຊົນ ເພື່ອດຳເນີນການກວດກູ້;
(iii). ສະໜອງລະບົບການຈັດລຽງບຸລິມະສິດ ເພື່ອວາງແຜນຕອບຮັບຕໍ່ການສະເໜີຕ່າງໆເຫຼົ່ານີ້ (ແລະ ສອດຄ່ອງກັບບຸລິມະສິດຂອງການພັດທະນາແຫ່ງຊາດທີ່ໄດ້ກຳນົດໄວ້);
(iv). ຮັບປະກັນຕອບສະໜອງທ່ວງທັນເວລາ ຕໍ່ການສະເໜີຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອສະເໜີຂໍກວດກູ້ ລບຕ;
(v). ສ້າງສິ່ງອຳນວຍຕໍ່ການພິຈາລະນາ ບົດບາດ ຍິງ-ຊາຍ ເຂົ້າໃນບັນດາກິດຈະກຳຂອງການກວດກູ້ ລບຕ.

**ເປົ້າໝາຍທີ II. ຕອບສະໜອງການແກ້ໄຂບັນຫາ ລບຕ ແລະ ແຜນງານ ກວດກູ້ ລບຕ ແບບຍືນຍົງ.**

**ກິດຈະກຳຕົ້ນຕໍ:**

(i). ເຊື່ອມໂຍງການກວດກູ້ ລບຕ ເຂົ້າໃນ ບັນດາບູລິມະສິດ, ແຜນການ, ຍຸດທະສາດ ແລະ ງົບປະມານ ຂອງລັດຖະບານ;
(ii). ເຊື່ອມໂຍງການກວດກູ້ ລບຕ ເຂົ້າໃນກິດຈະກຳ ແລະ ແຜນພັດທະນາຕ່າງໆ;
(iii). ກຳນົດແຫຼ່ງຂໍ້ມູນທາງເລືອກ ຂອງການສະໜອງທຶນໃຫ້ແກ່ການກວດກູ້ ລບຕ;
(iv). ຊ່ວຍສ້າງຄວາມສາມາດໃຫ້ແກ່ຊຸມຊົນ ເພື່ອຮັບມືກັບໄພຂົ່ມຂູ່ຈາກ ລບຕ ແລະ ຄວາມສ່ຽງຕ່າງໆທີ່ກ່ຽວຂ້ອງ;
(v). ຮັບປະກັນ ການສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງລັດຖະບານລາວ ກ່ຽວກັບກົດໝາຍພາຍໃນ ແລະ ສາກົນ ແລະ ສົນທິສັນຍາຕ່າງໆ.

**ເປົ້າໝາຍທີ III.** ການຄຸ້ມຄອງ ແລະ ການປະສານງານທີ່ມີປະສິດທິຜົນ ໃນການຕອບສະໜອງ ຕໍ່ການແກ້ໄຂ ບັນຫາ ລບຕ ແລະ ແຜນງານການກວດກູ້.

**ກິດຈະກຳຕົ້ນຕໍ:**

(i). ພັດທະນາຂີດຄວາມສາມາດ ຂອງ ຄຊກລ ເພື່ອປະສານງານ ແລະ ວາງລະບຽບແຜນງານການກວດກູ້ ແລະ ການສຳຫຼວດ ລບຕ ແຫ່ງຊາດ.

(ii). ພັດທະນາຂີດຄວາມສາມາດຂອງອຳນາດການປົກຄອງທ້ອງຖິ່ນ ເພື່ອປະສານກິດຈະກຳການກວດກູ້, ສະໜັບສະໜູນການພັດທະນາ ແລະ ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ; ແລະ

(iii). ປະກອບສ່ວນເຂົ້າໃນການເກັບກຳ, ການນຳເຂົ້າ ແລະ ການປັບປຸງຖານຂໍ້ມູນ ກ່ຽວກັບຜູ້ທີ່ໄດ້ຮັບອຸບັດເຫດຈາກ ລບຕ ແລະ ຮັບປະກັນການນຳໃຊ້ ແລະ ວິເຄາະຂໍ້ມູນ ເພື່ອຕິດຕາມກວດກາ ແລະ ວາງແຜນໂຄງການ.

**ເປົ້າໝາຍທີ IV.** ຕິດຕາມການຕອບສະໜອງການແກ້ໄຂບັນຫາ ລບຕ ທີ່ມີປະສິດທິຜົນ ແລະ ແຜນງານການກວດກູ້.

**ກິດຈະກຳຕົ້ນຕໍ:**

(i). ສືບຕໍ່ພັດທະນາ ແລະ ຄຸ້ມຄອງລະບົບລາຍງານ ແບບລວມສູນ ສຳລັບກິດຈະກຳກວດກູ້ ລບຕ; ແລະ

(ii). ສືບຕໍ່ພັດທະນາລະບົບການຕິດຕາມ ແລະ ຮັບປະກັນໃຫ້ໂຄງການກວດກູ້ ດຳເນີນໄປຕາມມາດຕະຖານແຫ່ງຊາດ.

**ແນວທາງການສຳຫຼວດຂັ້ນເມືອງ (ດີເອຟເອ).**

ເປົ້າໝາຍຍຸດທະສາດຂອງ ຄຊກລ ໄດ້ເນັ້ນໜັກຄວາມຈຳເປັນ ໃສ່ແນວທາງແຫ່ງຊາດ ເພື່ອສຳຫຼວດເບິ່ງວ່າ ສາມາດທີ່ຈະເລັ່ງລັດການປະເມີນປະລິມານລະເບີດທີ່ຕົກຄ້າງທີ່ຍັງເຫຼືອ ແລະ ການກວດກູ້ພື້ນທີ່ ທີ່ມີລະເບີດຕົກຄ້າງດັ່ງກ່າວ. ຄຊກລ ໂດຍການຮ່ວມມືກັບ 'ອົງການປະຕິບັດງານ' 3 ອົງການ ທົດລອງນຳໃຊ້ 'ແນວທາງການສຳຫຼວດຂັ້ນເມືອງ ເພື່ອຮັບມືກັບ ໄພຂົ່ມຂູ່ຈາກ ລບຕ'.

**ການສຳຫຼວດຂັ້ນເມືອງມີ 3 ຈຸດປະສົງຕົ້ນຕໍ ຄື:**

(I). ເພື່ອກຳນົດ ແລະ ຢືນຢັນຂອບເຂດພື້ນທີ່ ທີ່ຍັງເປັນອັນຕະລາຍ ຢູ່ໃນເມືອງເປົ້າໝາຍ;

(II). ເພື່ອຈັດບຸລິມະສິດບັນດາບ້ານ ແລະ ພື້ນທີ່ ເພື່ອກວດກູ້ ລບຕ ບົນພື້ນຖານປະລິມານ ລບຕ ທີ່ຕົກຄ້າງ, ຄວາມຕ້ອງການນຳໃຊ້ທີ່ດິນ ແລະ ຄວາມຈຳເປັນຂອງການພັດທະນາຕ່າງໆ, ຊຶ່ງຈະສົ່ງຜົນໃຫ້ມີແຜນກວດກູ້ ລບຕ ຂັ້ນເມືອງ ບົນຄວາມຈຳເປັນຂອງຊຸມຊົນ, ການພັດທະນາໂຄງລ່າງພື້ນຖານ ແລະ ການພັດທະນາເສດຖະກິດ-ສັງຄົມ; ແລະ

(III). ເພື່ອສະໜອງຂໍ້ມູນພື້ນຖານສຳລັບ ຄຊກລ ແລະ ອົງການປະຕິບັດງານຕ່າງໆ ເພື່ອວາງແຜນການກວດກູ້ ຫຼາຍປີ, ເພື່ອບັນລຸຄາດໝາຍແຫ່ງຊາດ ແລະ ພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

ກິດຈະກຳການສຳຫຼວດ ຂັ້ນເມືອງ ຢູ່ພາກສະໜາມໄດ້ດຳເນີນການຢູ່ 3 ເມືອງ ຂອງ ສປປ ລາວ ຄື: ເມືອງບົວລະພາ, ເມືອງນອງ ແລະ ເມືອງຕະໂອ້ຍ, ຊຶ່ງ ຄຊກລ ຮ່ວມມືກັບອົງການເກັບກູ້ລະເບີດແມັກ, ອົງການສາກົນເພື່ອຄົນພິການ ແລະ ອົງການຊ່ວຍເຫຼືອຂອງປະຊາຊົນນ໋ອກແວ.

ພາຍຫຼັງການທົດລອງຢູ່ແຕ່ລະເມືອງສຳເລັດ, ຄຊກລ ໂດຍການປຶກສາຫາລືກັບ ອົງການປະຕິບັດງານທີ່ກ່ຽວຂ້ອງ ຈະວິເຄາະ ແລະ ປະເມີນຜົນແນວທາງຕ່າງໆ ທີ່ໄດ້ປະຕິບັດ ເພື່ອກຳນົດວ່າ ອົງປະກອບໃດໃນການທົດລອງຢູ່ 3 ເມືອງນັ້ນ ໄດ້ສ້າງຂໍ້ມູນທີ່ສອດຄ່ອງ ແລະ ມີປະສິດທິພາບ ແລະ ປະສິດທິຜົນທີ່ສຸດ. ສິ່ງນີ້, ຈະສົ່ງຜົນໃຫ້ມີການພັດທະນາຮູບແບບ ຫຼື ວິທີການສຳ

ຫຼວດທີ່ເປັນມາດຕະຖານ ໃນການສຳຫຼວດຂັ້ນເມືອງ ທີ່ໄດ້ລວມເອົາບົດຮຽນຕ່າງໆທີ່ຖອດຖອນໄດ້ ຈາກຂະບວນການທົດລອງການສຳຫຼວດຂັ້ນເມືອງ ເຂົ້າໃສ່ການດຳເນີນການສຳຫຼວດໃນອານາຄົດ, ຜົນກະທົບ, ແລະ ຜົນຮັບຂອງວິທີການສຳຫຼວດທີ່ໄດ້ກຳນົດໄວ້ ເພື່ອບັນໃຫ້ລຸຕາມຄວາມຕ້ອງການ ຂອງ ສປປ ລາວ.

**ການຊ່ວຍເຫຼືອຜູ້ເຄາະຮ້າຍ.**

ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຂອງ ຄຊກລ ຈະສືບຕໍ່ເກັບກຳຂໍ້ມູນທີ່ໜ້າເຊື່ອຖື ແລະ ປະສານການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍຈາກ ລບຕ ທີ່ມີຢູ່ປະມານ 12,000 ຄົນ ໃນປະຈຸບັນ ແລະ ຜູ້ເຄາະຮ້າຍໃໝ່ ທີ່ພົວພັນເຖິງ 6 ເສົາຄ້ຳຂອງການຊ່ວຍເຫຼືອຜູ້ເຄາະຮ້າຍ ຄື:

**<u>ການເກັບກຳຂໍ້ມູນ</u>**: ເກັບກຳຂໍ້ມູນທີ່ເຊື່ອຖືໄດ້, ຂໍ້ມູນທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ ແລະ ລບຕ ອື່ນໆ.

**ກິດຈະກຳຕົ້ນຕໍ:**

(i). ເກັບກຳຂໍ້ມູນທີ່ຊັດເຈນ ກ່ຽວກັບຜູ້ເຄາະຮ້າຍ ແລະ ອຸບັດເຫດທີ່ເກີດຂຶ້ນທັງໝົດ;

(ii). ສະໜັບສະໜູນການສ້າງຕັ້ງຂະບວນການເກັບກຳຂໍ້ມູນ, ການຕິດຕາມຜູ້ບາດເຈັບ ແລະ ຜູ້ພິການ ແຫ່ງຊາດ;

(iii). ວິເຄາະ, ນຳໃຊ້ຂໍ້ມູນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ;

(iv). ຮັບປະກັນການສະໜອງຂໍ້ມູນໃຫ້ແກ່ລັດຖະບານ ສປປ ລາວ, ກຸ່ມວິຊາການ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ ແລະ ພາກສ່ວນທີ່ມີສ່ວນຮ່ວມ ທີ່ພ້ອມທີ່ຈະເຂົ້າເຖິງໄດ້; ແລະ

(v). ຕິດຕາມຜູ້ລອດຊີວິດຈາກ ລບຕ ຜ່ານຂະບວນການຟື້ນຟູສຸຂະພາບ.

**<u>ການປິ່ນປົວ</u>**:

ຜູ້ເຄາະຮ້າຍຈາກ ລບຕ ສາມາດເຂົ້າເຖິງການປິ່ນປົວເພີ່ມຂຶ້ນ ແລະ ຫຼຸດຜ່ອນຄວາມບໍ່ສະເໝີພາບ ທາງດ້ານສຸຂະພາບຂອງພວກເຂົາເຈົ້າ.

**ກິດຈະກຳຕົ້ນຕໍ:**

(i). ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສາຍພົວພັນໃນການເຮັດວຽກຢ່າງໃກ້ຊິດກັບກະຊວງສາທາລະນະສຸກ ແນໃສ່ເພື່ອເຮັດໃຫ້ຄວາມຕ້ອງການຂອງຜູ້ເຄາະຮ້າຍ ແລະ ຜູ້ພິການ ໄດ້ຮັບການພິຈາລະນາ ຢູ່ໃນລະດັບທີ່ເປັນໄປໄດ້ສູງທີ່ສຸດ ແລະ ລວມທັງ ແຜນ, ຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ;

(ii). ເພີ່ມທະວີການເຂົ້າເຖິງການປິ່ນປົວທາງການແພດໃຫ້ແກ່ຜູ້ເຄາະຮ້າຍ ຢູ່ກັບສະຖານທີ່ຂອງພວກເຂົາເຈົ້າ;

(iii). ສົ່ງເສີມການຈັດຫາຊັບພະຍາກອນເພີ່ມຂຶ້ນ ແລະ ຍົກສູງຄວາມສາມາດຂອງພະນັກງານສາທາລະນະສຸກ (ຜູ້ປະຖົມພະຍາບານ, ຊ່ຽວຊານດ້ານປິ່ນປົວການບາດເຈັບ ແລະ ແພດຜ່າຕັດ, ທ່ານໝໍ ແລະ ພະຍາບານ);

(iv). ສະໜັບສະໜູນ ແລະ ປະສານງານ ເພື່ອຕອບ-ຮັບ ການປິ່ນປົວຜູ້ເຄາະຮ້າຍຈາກ ລບຕ ຢູ່ຊຸມຊົນໃຫ້ດີຂຶ້ນ;

(v). ສະໜັບສະໜູນ ເພື່ອສ້າງລະບົບການຂົນສົ່ງທີ່ຄົບຊຸດ ສຳລັບຜູ້ຖືກເຄາະຮ້າຍທີ່ຕ້ອງການ ການປິ່ນປົວ ແລະ ຟື້ນຟູສຸຂະພາບ;

(vi). ຂົນຂວາຍໃຫ້ມີແຜນລະບົບປ້ອງກັນສຸຂະພາບທາງສັງຄົມ ເພື່ອຮັບປະກັນໃນຍາມສຸກເສີນ ແລະ ສືບຕໍ່ການປິ່ນປົວທາງແພດ ທີ່ສາມາດເຂົ້າເຖິງໄດ້ໂດຍບໍ່ຕ້ອງເສຍຄ່າ ສຳລັບຜູ້ເຄາະຮ້າຍ ແລະ ຜູ້ພິການອື່ນໆ.

**<u>ການຟື້ນຟູສຸຂະພາບທາງດ້ານຮ່າງກາຍ</u>**:

ເພີ່ມທະວີການເຂົ້າເຖິງໂດຍພື້ນຖານ ແລະ ຕໍ່ເນື່ອງໃນການບໍລິການຟື້ນຟູສຸຂະພາບ ດ້ວຍການບໍລິການໃຫ້ການຟື້ນຟູທາງດ້ານຮ່າງກາຍທີ່ດີ.

**ກິດຈະກຳຕົ້ນຕໍ:**

(i). ເອົາການຟື້ນຟູສຸຂະພາບທາງດ້ານຮ່າງກາຍ ເຂົ້າໃນຍຸດທະສາດ ແລະ ນະໂຍບາຍ ຂອງກະຊວງສາທາລະນະສຸກ;

(ii). ປັບປຸງການປະສານງານກັບບັນດາກະຊວງ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ກ່ຽວກັບ ການຟື້ນຟູທາງດ້ານຮ່າງກາຍ.

(iii). ເພີ່ມທະວີການສະໜອງການບໍລິການໃຫ້ແກ່ບັນດາແຂວງ ແລະ ເມືອງ;

(iv). ສົ່ງເສີມຊັບພະຍາກອນ ແລະ ຄວາມສາມາດຂອງພະນັກງານຟື້ນຟູສຸຂະພາບ ໃຫ້ເພີ່ມຂຶ້ນ;

(v). ສົ່ງເສີມນະໂຍບາຍການຍົກເວັ້ນຄ່າບໍລິການຟື້ນຟູສຸຂະພາບຂອງຜູ້ລອດຊີວິດ ໂດຍບໍ່ເສຍຄ່າ;

(vi). ເພີ່ມທະວີຄວາມເຂົ້າໃຈ ຂອງກົມໂຍທາທິການ ກ່ຽວກັບການບໍລິການຟື້ນຟູສຸຂະພາບ ທາງດ້ານຮ່າງກາຍໃຫ້ແກ່ຜູ້ເຄາະຮ້າຍຈາກ ລບຕ;

(vii). ສົ່ງເສີມ ແລະ ພັດທະນາລະບົບການຂົນສົ່ງທີ່ສົມບູນແບບ ໃຫ້ແກ່ຜູ້ເຄາະຮ້າຍຈາກ ລບຕ ໃນການປິ່ນປົວ ແລະ ຟື້ນຟູສຸຂະພາບ;

**<u>ການຟື້ນຟູສຸຂະພາບຈິດໃຈ ຢູ່ໃນສັງຄົມ</u>:**

ເພີ່ມທະວີການຮັບຮູ້, ແລະ ການສະໜັບສະໜູນ, ເພື່ອບັນລຸຄວາມຕ້ອງການ ສຳລັບການຟື້ນຟູທາງດ້ານຈິດໃຈຂອງຜູ້ເຄາະຮ້າຍ.

**ມາດຕະການດຳເນີນງານຕົ້ນຕໍ:**

(i). ພັດທະນາສາຍພົວພັນໃນການເຮັດວຽກ ລະຫວ່າງ ຄຊກລ ກັບອົງການສຸຂະພາບຈິດ ຂອງພາກລັດທີ່ກ່ຽວຂ້ອງ, ອົງການສາກົນທີ່ບໍ່ສັງກັດລັດ ແລະ ອົງການເຄືອຂ່າຍຂອງ ສປຊ ອື່ນໆ ເພື່ອຮັບປະກັນ ໃຫ້ຄວາມຕ້ອງການຂອງຜູ້ເຄາະຮ້າຍຈາກ ລບຕ ໄດ້ຮັບການພິຈາລະນາເຂົ້າໃນນະໂຍບາຍ, ຍຸດທະສາດ ແລະ ແຜນງານລະດັບຊາດ;

(ii). ເພີ່ມລະດັບການສະໜັບສະໜູນທາງດ້ານຈິດໃຈຢ່າງຕໍ່ເນື່ອງໃຫ້ແກ່ຜູ້ເຄາະຮ້າຍຈາກ ລບຕ (ແລະ ຜູ້ເຄາະຮ້າຍທີ່ໄດ້ຮັບບາດເຈັບທີ່ມີບາດແຜ);

(iii). ສົ່ງເສີມໃຫ້ຈຳນວນຊ່ຽວຊານດ້ານສຸຂະພາບຈິດ ໃນ ສປປ ລາວ ເພີ່ມຂຶ້ນ;

(iv). ຂົນຂວາຍໃຫ້ມີການປະສົມປະສານການບໍລິການ ດ້ານການຮັກສາສຸຂະພາບຈິດກັບການບໍລິການປິ່ນປົວທົ່ວໄປ;

(v). ຂົນຂວາຍໃຫ້ມີການເພີ່ມຄວາມຮັບຮູ້ຂອງຊຸມຊົນກ່ຽວກັບສຸຂະພາບຈິດ ແລະ ການປິ່ນປົວ.

**<u>ການຟື້ນຟູດ້ານເສດຖະກິດ ແລະ ການຝຶກອົບຮົມວິຊາຊີບ</u>:**

ເພີ່ມໂອກາດໃຫ້ຜູ້ເຄາະຮ້າຍຈາກ ລບຕ ໄດ້ເຂົ້າເຖິງການສຶກສາ ແລະ ການມີວຽກເຮັດງານທຳ.

**ກິດຈະກຳຕົ້ນຕໍ:**

(i). ສະໜັບສະໜູນຄະນະກຳມະການແຫ່ງຊາດເພື່ອຄົນພິການ ຮ່ວມກັບກະຊວງທີ່ກ່ຽວຂ້ອງຕ່າງໆ ເພື່ອພັດທະນາ ທິດທາງ, ນະໂຍບາຍ, ລະບຽບການ ແລະ ກົດໝາຍ ທີ່ກ່ຽວຂ້ອງກັບສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ, ໂດຍສະເພາະມາດຕາ 2 ທີ່ຮຽກຮ້ອງໃຫ້ມີການສຶກສາ ແບບຮຽນຮ່ວມສຳລັບຄົນພິການ ແລະ ມາດຕາ 24 ຮຽກຮ້ອງໃຫ້ຄົນພິການໄດ້ຮັບການສຶກສາ ແລະ ມາດຕາ 27 ຊຶ່ງຮຽກຮ້ອງໃຫ້ ຄົນພິການມີສິດເທົ່າທຽມກັນ ໃນການເຮັດວຽກ;

(ii). ເສີມສ້າງສາຍພົວພັນເຮັດວຽກກັບກະຊວງສຶກສາ ເພື່ອວ່າ ຄວາມຕ້ອງການຂອງຜູ້ເຄາະຮ້າຍຈາກ ລບຕ ໄດ້ຖືກພິຈາລະນາເຂົ້າໃນແຜນ, ຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ;

(iii). ສະໜັບສະໜູນການຝຶກອົບຮົມຄວາມອາດສາມາດ ກ່ຽວກັບການສ້າງລາຍຮັບ ຕາມທີ່ໄດ້ລະບຸໄວ້ໃນແຜນແມ່ບົດຂອງ ກະຊວງສຶກສາ (2008-2015);

(iv). ສົ່ງເສີມການຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ເຄາະຮ້າຍຈາກ ລບຕ ແລະ ຄົນພິການອື່ນໆ ໃຫ້ຫຼາຍຂຶ້ນ;

(v). ສົ່ງເສີມ ໂອກາດເທົ່າທຽມກັນໃນການມີວຽກເຮັດງານທຳ ຂອງຜູ້ເຄາະຮ້າຍຈາກ ລບຕ ແລະ ຜູ້ພິການອື່ນໆ;

(vi). ສົ່ງເສີມ ການໃຫ້ບໍລິການດ້ານການເງິນຂະໜາດນ້ອຍ ແລະ ສະຖາບັນການເງິນຈຸລະພາກອື່ນໆ ເພື່ອໃຫ້ຜູ້ເຄາະຮ້າຍຈາກ ລບຕ ແລະ ຜູ້ພິການອື່ນໆ ສາມາດເຂົ້າເຖິງແຫຼ່ງທຶນໄດ້.

<u>ລະບຽບກົດໝາຍ ແລະ ນະໂຍບາຍ</u>:

ປະກອບສ່ວນ ແລະ ຮັບປະກັນວ່າ ລະບຽບກົດໝາຍ ແລະ ນະໂຍບາຍຂອງ ສປປ ລາວ ໄດ້ລະບຸເຖິງສິດທິຂອງຜູ້ເຄາະຮ້າຍຈາກ ລບຕ ແລະ ຂະຫຍາຍໄປເຖິງຊຸມຊົນ ຄົນພິການອື່ນໆ.

**ກິດຈະກຳຕົ້ນຕໍ:**

(i). ສົ່ງເສີມດຳລັດວ່າດ້ວຍສິດທິຂອງຄົນພິການ ເພື່ອຜ່ານເຂົ້າເປັນກົດໝາຍໃຫ້ໄວເທົ່າທີ່ຈະເປັນໄດ້;

(ii). ຍົກລະດັບການສະໜັບສະໜູນ ໃຫ້ແກ່ຄະນະກຳມະການ ແຫ່ງຊາດເພື່ອຄົນພິການ ເພື່ອໃຫ້ເຂົາເຈົ້າມີຄວາມສາມາດຄື:

- ຮັບປະກັນໃຫ້ມີການປະຕິບັດ ພັນທະຂອງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ.
- ປະສານງານກັບຂະແໜງຄົນພິການ.
- ສະໜັບສະໜູນ ແລະ ປຶກສາຫາລື ເປັນປະຈຳກັບຜູ້ໃຫ້ບໍລິການ ແລະ ອົງການຈັດຕັ້ງກ່ຽວກັບຄົນພິການ, ລວມທັງຜູ້ລອດຊີວິດຈາກ ລບຕ.
- ສົ່ງເສີມ, ໃນນາມຂອງຜູ້ໃຫ້ບໍລິການ ແລະ ອົງການຈັດຕັ້ງເພື່ອຄົນພິການ ລວມທັງຜູ້ລອດຊີວິດຈາກ ລບຕ.

(iii). ເພີ່ມທະວີ ການພິຈາລະນາຄວາມຕ້ອງການຂອງຜູ້ເຄາະຮ້າຍຈາກ ລບຕ ທັງລະດັບສູນກາງ ແລະ ທ້ອງຖິ່ນ ເຂົ້າໃນແຜນຍຸດທະສາດ ແລະ ບັນດາແຜນງານ ຂອງບັນດາກະຊວງທີ່ກ່ຽວຂ້ອງ ໃນ ສປປ ລາວ;

(iv). ຊຸກຍູ້ຜູ້ລອດຊີວິດ ຈາກ ລບຕ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າ ເຂົ້າໃນແຜນງານ ແລະ ແຜນຍຸດທະສາດຂອງລັດຖະບານ.

(v). ຊຸກຍູ້ແບບແຜນວິທີເຮັດວຽກຂອງຄົນພິການ ໃນພາກປະຕິບັດຕົວຈິງ ເຊັ່ນ: ການພັດທະນາທີ່ເນັ້ນໃສ່ຊຸມຊົນໂດຍພື້ນຖານ.

<u>ການປະສານງານ</u>:

ປັບປຸງການປະສານງານ ກ່ຽວກັບການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ຂະແໜງຄົນພິການໃຫ້ກວ້າງຂວາງຂຶ້ນ.

**ກິດຈະກຳຕົ້ນຕໍ:**

(i). ຊ່ວຍກະຊວງສາທາ, ກະຊວງສຶກສາ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຮັບປະກັນວ່າ ການປະຕິບັດງານຂອງພວກເຂົາເຈົ້າ ບັນລຸພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ;

(ii). ຊ່ວຍຕົວແທນສັງຄົມພົນລະເຮືອນ ເພື່ອໃຫ້ພວກເຂົາເຈົ້າເຮັດບັນລຸພັນທະຂອງຕົນ ຕໍ່ພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ;

(iii). ເຮັດໃຫ້ຍຸດທະສາດການຊ່ວຍເຫຼືອຜູ້ເຄາະຮ້າຍ ສອດແຊກເຂົ້າໃນກອບຂອງແຜນຍຸດທະສາດແຫ່ງຊາດໃຫ້ກວ້າງຂວາງຂຶ້ນ;

(iv). ປະສານງານກັບທຸກອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອລະດົມຊັບພະຍາກອນ.

**ການສຶກສາກ່ຽວກັບຄວາມສ່ຽງຈາກ ລບຕ.**

ອຸປະເຫດຈາກ ລບຕ ມັກເກີດຂຶ້ນໃນຂະນະທີ່ປະຊາຊົນທຳການຜະລິດກະສິກຳໃນເນື້ອທີ່ດິນຂອງພວກເຂົາເຈົ້າ ຫຼື ໃນຂະນະທີ່ກຳລັງພະຍາຍາມຊອກຫາລາຍຮັບ ແລະ ການສະໜອງທາງດ້ານສະບຽງອາຫານເພີ່ມ ໂດຍການອອກໄປຊອກເກັບເຄື່ອງປ່າຂອງດົງ ຫຼື ເຫຼັກເສດ. ການຄົ້ນຄວ້າໄດ້ຊີ້ໃຫ້ເຫັນວ່າ ຜູ້ທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດຍ້ອນ ລບຕ ຈຳນວນຫຼາຍ ຮັບຮູ້ເຖິງຄວາມສ່ຽງຕໍ່ອັນຕະລາຍຈາກ ລບຕ, ແຕ່ວ່າ ຍ້ອນຄວາມທຸກຍາກ, ຈຶ່ງເຮັດໃຫ້ພວກເຂົາເຈົ້າຮູ້ສຶກວ່າ ຕົນເອງບໍ່ມີທາງເລືອກນອກຈາກ ການເຮັດກິດຈະກຳທີ່ມີຄວາມສ່ຽງສູງຄືດັ່ງກ່າວນີ້. ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ໝາຍເຖິງກິດຈະກຳຕ່າງໆ ທີ່ພະຍາຍາມຈະຫຼຸດຜ່ອນຄວາມສ່ຽງຕໍ່ການບາດເຈັບ ຫຼື ເສຍຊີວິດຈາກ ລບຕ ດ້ວຍການປູກຈິດສຳນຶກ ແລະ ສົ່ງເສີມການປ່ຽນແປງພຶດຕິກຳຂອງບັນດາກຸ່ມທີ່ມີຄວາມສ່ຽງສູງ. ໃນປີ 2007, ໜ່ວຍງານໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງຂອງ ຄຊກລ ໄດ້ຮັບການສ້າງຕັ້ງຂຶ້ນ. ໜ່ວຍງານດັ່ງກ່າວ ຮັບຜິດຊອບໃນການດູແລ ແລະ ປະສານງານ ບັນດາກິດຈະກຳຂອງອົງການປະຕິບັດງານທີ່ຈັດຕັ້ງປະຕິບັດກິດຈະກຳໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ກິດຈະກຳປູກຈິດສຳນຶກຂອງຊຸມຊົນໃນທົ່ວປະເທດ ຂອງ ສປປ ລາວ.

**ເປົ້າໝາຍຕົ້ນຕໍຂອງໜ່ວຍງານ ໃຫ້ການສຶກສາກ່ຽວກັບຄວາມສ່ຽງ ມີຄື:**

1. ເພື່ອຊີ້ນຳ ແລະ ປະສານງານ ໃນການປະຕິບັດກິດຈະກຳການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ, ສຸມໃສ່ເພື່ອປ່ຽນແປງພຶດຕິກຳຂອງກຸ່ມສ່ຽງ; ເພີ່ມການປູກຈິດສຳນຶກກ່ຽວກັບການຮັບມືກັບອຸບັດເຫດຈາກ ລບຕ ແລະ ໃຫ້ການສຶກສາ ຂັ້ນພື້ນຖານແກ່ເດັກນັກຮຽນຢູ່ໃນຫ້ອງຮຽນ ຢູ່ເຂດພື້ນທີ່ໆມີລະເບີດຕົກຄ້າງ;
2. ເພື່ອຊີ້ນຳ ແລະ ປະສານງານ ໃນການໃຫ້ການສະໜັບສະໜູນທີ່ເໝາະສົມ ແກ່ອາສາສະໝັກບ້ານ ຜູ້ທີ່ໃຫ້ຄວາມຮູ້ຕໍ່ກຸ່ມສ່ຽງ;
3. ເພື່ອສົ່ງເສີມແຜນກິດຈະກຳການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ເພື່ອປ້ອງກັນອຸບັດເຫດ;

ກິດຈະກຳການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງທີ່ຫຼາກຫຼາຍ ເຊັ່ນ: ການອະທິບາຍກ່ຽວກັບຄວາມປອດໄພຢູ່ຂັ້ນບ້ານ, ການລົງຢ້ຽມຢາມແຕ່ລະຄົວເຮືອນ, ການຝຶກອົບຮົມວິທີການເບິ່ງແຍງລູກ, ການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງແບບເຄື່ອນທີ່ ແລະ ກິດຈະກຳ 'ສະໂມສອນເດັກ' ກຳລັງໄດ້ຖືກປະຕິບັດໂດຍ ອົງການປະຕິບັດງານທີ່ດຳເນີນການ ໃຫ້ຄວາມຮູ້ກ່ຽວກັບການຫຼຸດຜ່ອນຄວາມສ່ຽງຈາກ ລບຕ. ການໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ຍັງໄດ້ນຳເຂົ້າຮຽນຢູ່ໃນຫຼັກສູດການຮຽນການສອນ ຊັ້ນປະຖົມ ຢູ່ໃນບັນດາເມືອງທີ່ມີ ລບຕ ຕົກຄ້າງ ໃນທົ່ວ ສປປ ລາວ, ລວມທັງນຳເຂົ້າໃນຫຼັກສູດຂອງການຝຶກອົບຮົມຄູອີກດ້ວຍ. ບັນດາອົງການປະຕິບັດງານ ໃຫ້ການສຶກສາຄວາມສ່ຽງ ທີ່ສຳຄັນ ຢູ່ໃນ ສປປ ລາວ ມີຄື: ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ອົງການສາກົນເພື່ອຄົນພິການ (ເຫັດໄອ), ອົງການຮ່ວມໃຈບໍລິການ (ໂຊດີ), ອົງການສຶກສາໂລກ (ເວີອິດູເຄເຊິ້ນ), ທີມງານພະລັງໃຈຂອງນັກເຕະບານ (ເອັດສໄອເອັດສ໌, ໂດຍເປັນຄູ່ຮ່ວມງານກັບກະຊວງສຶກສາ ແລະ ກິລາ), ອົງການຊ່ວຍເຫຼືອບັນເທົາທຸກກາໂຕລິກ (ຊີອາຣ໌ເອັດສ໌) ແລະ ກະຊວງກະສິກຳ ແລະ ປ່າໄມ້.

**ການພັດທະນາຄວາມສາມາດຂອງສະຖາບັນ.**

**ຄຊກລ** ມີຄວາມມຸ້ງໝັ້ນທີ່ຈະດຳເນີນການປະເມີນຜົນຕົນເອງ ຢ່າງສົມບູນແບບ ກ່ຽວກັບຄວາມສາມາດຂອງສະຖາບັນໂດຍລວມ ແລະ ປະເມີນແຕ່ລະໜ່ວຍງານທີ່ຂຶ້ນກັບຕົນ ໂດຍສະເພາະ ເພື່ອກຳນົດຂົງເຂດທີ່ຈຳເປັນ ທີ່ຈະຕ້ອງໄດ້ຮັບການເສີມສ້າງຄວາມອາດສາມາດໃຫ້ເຂັ້ມແຂງຂຶ້ນຕື່ມ ເພື່ອໃຫ້ບັນລຸພາລະກິດທີ່ໄດ້ຮັບມອບໝາຍ ໃນເວລາຍາວນານ. ສປຊ ເພື່ອການພັດທະນາ ຈະສະໜອງຊ່ຽວຊານໃນການສ້າງຄວາມສາມາດໃຫ້ແກ່ອົງການຈັດຕັ້ງຈາກພາຍນອກ ເພື່ອຊ່ວຍໃນການປະເມີນຜົນ, ຊຶ່ງຈະຂຶ້ນແຜນໃສ່ໃນປີທຳອິດຂອງແຜນງານຮ່ວມມືສະບັບໃໝ່ນີ້.

**<u>ການຮັບປະກັນຄຸນນະພາບ/ການຄວບຄຸມຄຸນນະພາບ</u>**: ຄຊກລ ຮັບຮູ້ວ່າ ມີຄວາມຈໍາເປັນຕ້ອງປັບປຸງ ແລະ ຂະຫຍາຍຄວາມອາດສາມາດພາຍໃນຂອງຕົນ ສໍາລັບວຽກງານການຮັບປະກັນ ແລະ ການຄວບຄຸມຄຸນນະພາບ, ແລະ ຖ້າວ່າມີບຸກຄະລາກອນ ແລະ ການເງິນພຽງພໍ ກໍ່ຈະພະຍາຍາມສ້າງທີມງານຮັບປະກັນ/ກວດກາຄຸນນະພາບທີມທີສອງຂຶ້ນອີກ ຢູ່ ຄຊກລ.

**<u>ການສື່ສານ</u>**: ຄຊກລ ຈະເອົາໃຈໃສ່ຕໍ່ການເສີມສ້າງຄວາມອາດສາມາດ ໃນວຽກງານການສື່ສານໃຫ້ເຂັ້ມແຂງ, ເລີ່ມຕົ້ນດ້ວຍການພັດທະນາຍຸດທະສາດການສື່ສານທີ່ສົມບູນແບບ ເພື່ອປັບປຸງການສື່ສານກັບຄູ່ຮ່ວມງານທີ່ສໍາຄັນຂອງໂຄງການ, ແລະ ກັບສາທາລະນະ. ສິ່ງດັ່ງກ່າວນີ້, ຍັງຈະທໍາໜ້າທີ່ໃຫ້ບໍລິການຂໍ້ມູນລ່ວງໜ້າ ແລະ ຄວາມພະຍາຍາມຕ່າງໆ ທັງຈາກພາຍໃນ ແລະ ຈາກສາກົນ.

### 2.3.1 ຜົນໄດ້ຮັບຂອງ ຄຊກລ ແລະ ໂຄງສ້າງທາງດ້ານຊັບພະຍາກອນ: ມິນາ 2013 - ທັນວາ 2015

| ຜົນໄດ້ຮັບຂອງ ຄຊກລ ແລະ ໂຄງສ້າງຊັບພະຍາກອນ: ມິນາ 2013 - ທັນວາ 2015<br>ຊື່ໂຄງການ: ສະໜັບສະໜູນ ຄຊກລ<br>ລະຫັດສັນຍາ: | | | |
|---|---|---|---|
| ຜົນໄດ້ຮັບຂອງກິດຈະກຳທີ່ຄາດຫວັງ | ຄາດໝາຍຜົນໄດ້ຮັບ (ສຳລັບປີ) | ຕົວຊີ້ວັດກິດຈະກຳ | ການນຳເຂົ້າ |
| | | **ຜົນໄດ້ຮັບ ກິດຈະກຳ 1:** ວິທີການໂຄສະນາໃຫ້ການສຶກສາຄວາມສ່ຽງ ຈາກ ລບຕ ໄດ້ຮັບການປັບປຸງ, ເສີມສ້າງ ແລະ ມີການເຜີຍແຜ່ດີຂຶ້ນກວ່າເກົ່າ. | |
| **ຜົນຮັບທີ 1:**<br>ຄຊກລ ສາມາດສະໜອງທິດທາງນະໂຍບາຍ ຢ່າງມີປະສິດທິຜົນ ເພື່ອປະສານ, ອອກລະບຽບ ແລະ ຊີ້ນຳ ຂະແໜງ ລບຕ ໃນການສະໜັບສະໜູນ ເປົ້າໝາຍການພັດທະນາແຫ່ງຊາດ, ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ຂອງຂະແໜງການ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ II" ແລະ ບັນລຸພັນທະຕ່າງໆຂອງສົນທິສັນຍາສາກົນ.<br><br>ຕົວຊີ້ວັດຕ່າງໆ (ຂໍ້ມູນພື້ນຖານ, ຄາດໝາຍ, ແຫຼ່ງພິສູດ):<br>• ຈຳນວນຜູ້ລອດຊີວິດຈາກ ລບຕ, ຈຳເປັນຕ້ອງໄດ້ຮັບການຕິດຕາມຄວາມ | **ຄາດໝາຍ (ປີທີ 1, 2013):**<br>- ສຳເລັດຮ່າງບົດລາຍງານການຄົ້ນຄວ້າ ກ່ຽວກັບການຄ້າຂາຍເຫຼັກເສດ.<br>- ຈຳນວນຜູ້ລອດຊີວິດ ຈາກ ລບຕ, ຈຳເປັນຕ້ອງ ໄດ້ຮັບການຕິດຕາມ 5,000 ຄົນ ໃນປີ 2013.<br>- ສຳເລັດຍຸດທະສາດການຊ່ວຍເຫຼືອຜູ້ເຄາະຮ້າຍ.<br>- ຈຳນວນເມືອງ ພ້ອມແຜນກວດກູ້ຂັ້ນເມືອງ, ອີງໃສ່ການສຳຫຼວດຂັ້ນເມືອງມີ: 3.[7]<br>- ເປີເຊັນຂອງອີງການປະຕິບັດງານ ໄດ້ຮັບການຮັບຮອງ: 65%<br>- ເປີເຊັນຂອງອີງການປະຕິບັດງານ ສົ່ງບົດລາຍງານສະບັບເອເລັກໂທຣນິກໃຫ້ແກ່ ຄຊກລ: 40%<br>- ສປປ ລາວ ປະຕິບັດໄດ້ຕາມ ມາດຕາ 1, 3, 4, 5, 6, 7, 9 ແລະ 11 ຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.[8] | **ກິດຈະກຳ:**<br>- ຕິດຕາມ ກິດຈະກຳກ່ຽວກັບການໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ຢູ່ ສປປ ລາວ ໄປພ້ອມກັບ ການເອົາໃຈໃສ່ດ້ານບົດບາດ ຍິງ-ຊາຍ.<br>- ຮັບປະກັນ ຝຶກອົບຮົມ ແລະ ສະໜັບສະໜູນ ອີງການປະຕິບັດງານ ທີ່ດຳເນີນວຽກງານໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ.<br>- ຈັດກອງປະຊຸມກຸ່ມວິຊາການ ໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງກ່ຽວກັບ ລບຕ.<br>- ຄົ້ນຄວ້າ (2012-2013) ກ່ຽວກັບສະພາບການຄ້າຂາຍເຫຼັກເສດ, ຄວາມຈຳເປັນໃນການວິເຄາະ, ແລະ ການແນະນຳ ກ່ຽວກັບການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄ້າຂາຍເສດເຫຼັກ. | ປີ 1: 53,193 ດອນລາ<br>ປີ 2: 55,853 ດອນລາ<br>ປີ 3: 58,645 ດອນລາ |

| | | | |
|---|---|---|---|
| ຕ້ອງການ (2010: 0, 2015: 10,000[2], ແຫຼ່ງພິສູດ: ຖານຂໍ້ມູນ ຂອງ ຄຊກລ).<br>• ຈຳນວນເມືອງ ທີ່ມີ ແຜນກອດກູ້ຕາມແນວທາງການສຳຫຼວດ ຂັ້ນເມືອງ (2010: 0, 2015: 20, ແຫຼ່ງພິສູດ: ແຜນກອດກູ້ຂອງເມືອງ).<br>• ອີງການປະຕິບັດງານ ໄດ້ຮັບການ ຮັບຮອງ (2010: 33%, 2015: 100%, ແຫຼ່ງພິສູດ: ບົດລາຍງານປະຈຳປີຂອງ ຄຊກລ).<br>• ເປີເຊັນ ຂອງອີງການປະຕິບັດງານ ທີ່ສົ່ງລາຍງານ ສະບັບເອເລັກໂທຣນິກ ໃຫ້ ຄຊກລ (2010: 13%[3], 2015: 80%, ແຫຼ່ງພິສູດ: ຖານຂໍ້ມູນ ຂອງ ຄຊກລ)<br>• ຍຸດທະສາດຂອງຂະແໜງຊ່ວຍເຫຼືອຜູ້ເຄາະຮ້າຍ ໄດ້ຖືກຮ່າງຂຶ້ນ (2010: ບໍ່ມີ, 2015: ມີ, ແຫຼ່ງພິສູດ: ບົດລາຍງານປະຈຳປີ ຂອງ ຄຊກລ.<br>• ບົດລາຍງານຂອງ ຄຊກລ ເພື່ອພິຈາລະນາ ຄວາມຈຳ ເປັນ ໃນການສ້າງນະໂຍບາຍແຫ່ງຊາດ ວ່າດ້ວຍການຄ້າຂາຍເສດເຫຼັກໄດ້ຖືກຮ່າງຂຶ້ນ (2010: 0, | - ສປປ ລາວ ສົ່ງເສີມ ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ໃນເອທີສາກົນ ແລະ ສອດຄ່ອງກັບ ມາດຕາ 21.[5]<br>**ຄາດໝາຍ :(ປີທີ 2: 2014)**<br>- ຖ້າຈຳເປັນ, ຮ່າງນະໂຍບາຍແຫ່ງຊາດ ກ່ຽວກັບການຄ້າຂາຍເສດເຫຼັກ ຈະໄດ້ນຳສະເໜີ ໃຫ້ແກ່ລັດຖະບານ ເພື່ອຮັບຮອງ ແລະ ຈັດຕັ້ງປະຕິບັດ.<br>- ຈຳນວນຜູ້ລອດຊີວິດ ທີ່ໄດ້ຮັບການຕິດຕາມຄວາມຕ້ອງການ: 6,000 ຄົນ[6]<br>- ຍຸດທະສາດການຊ່ວຍເຫຼືອ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຢູ່ໃນລະດັບສາກົນ ແລະ ປະຕິບັດຕາມ ມາດຕາ 21.[9]<br>**ເປົ້າໝາຍ ( ປີທີ 2: 2014)**<br>- ເພື່ອສືບຕໍ່ ຕິດຕາມສະພາບ ການຄ້າຂາຍ ເຫຼັກເສດ ແລະ ຖ້າຈຳເປັນ, ສະເໜີມາດຕະການຕ່າງໆ ໃຫ້ແກ່ລັດຖະບານ ເພື່ອອອກຂໍ້ບັນຍັດກ່ຽວກັບບັນຫາດັ່ງກ່າວ.<br>- ຈຳນວນຜູ້ລອດຊີວິດ ຈາກ ລບຕ, ຈຳເປັນຕ້ອງໄດ້ຖືກຕິດຕາມ 6,000 ຄົນ.<br>- ຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | - ສຶກສາຄົ້ນຄວ້າ (2014-2015) ກ່ຽວກັບການວິເຄາະ ທັດສະນະຄະຕິ ກ່ຽວຂ້ອງກັບການໃຫ້ຄວາມຮູ້ ກ່ຽວກັບຄວາມສ່ຽງ ຈາກ ລບຕ.<br>- ຮ່ວມກັບ ກະຊວງ ສຶກສາ ແລະ ກິລາ (ໃນການຝຶກອົບຮົມຄູ), ກະຊວງ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ (ໃນການນຳໃຊ້ ວິທະຍຸ ແລະ ໂທລະໂຄ່ງ) ເປັນຕົວຊ່ວຍເພີ່ມເຕີມ ເຂົ້າໃນວຽກງານໂຄສະນາ ສຶກສາຄວາມສ່ຽງ ຈາກ ລບຕ.<br>- ຮັບປະກັນ ການມີສ່ວນຮ່ວມ ຂອງແມ່ຍິງ ແລະ ເດັກນ້ອຍ ຢູ່ທ້ອງຖິ່ນ ໄດ້ເຂົ້າຮ່ວມກິດຈະກຳ ໃຫ້ການສຶກສາຄວາມສ່ຽງຈາກ ລບຕ ຫຼາຍຂຶ້ນ ແລະ ສົ່ງເສີມໃຫ້ພວກເຂົາເຈົ້າສືບຕໍ່ມີບົດບາດສຳຄັນໃນກິດຈະກຳດັ່ງກ່າວ.<br>- ຮັບປະກັນວ່າ ກິດຈະກຳໃຫ້ການສຶກສາ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ມີຄວາມຍືນຍົງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນໃນໄລຍະຍາວ, ໂດຍຜ່ານການເສີມຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ໂຄງການອາສາສະໝັກບ້ານ. | |

[2] ຈຳນວນນີ້ ຈະໄດ້ທົບທວນອີກ ເມື່ອລະບົບການຕິດຕາມຜູ້ລອດຊີວິດ ຖືກສ້າງຕັ້ງຂຶ້ນສົມບູນແລ້ວ.

[3] 2 ອົງການປະຕິບັດງານ ໃນຈຳນວນ 15 ອົງການໃນປີ 2011

[5] ແຫຼ່ງພິສູດ: ພາບລວມຂອງປະເທດ ສປປ ລາວ ດ້ານການຕິດຕາມລະເບີດລູກຫວ່ານ: www.the-monitor.org

[6] ຈຳນວນນີ້ ແທນໃຫ້ rs in the NRA's 2008 survey. An unknown number of them have died since their accident.

| | | | |
|---|---|---|---|
| 2015: ມີ, ແຫຼ່ງພິສູດ: ບົດລາຍງານ ຂອງ ຄຊກລ.<br><br>• ເປີເຊັນ ຂອງພົນລະເມືອງ ໃນ ເຂດທີ່ໄດ້ຮັບຜົນກະ ທົບຈາກ ລບຕ ມີ ຄວາມຮູ້ເພີ່ມຂຶ້ນ, ມີທັດສະນະຄະຕິ ແລະ ມີການປ່ຽນແປງພຶດຕິກຳ ທີ່ພົວພັນເຖິງ ການຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ໄດ້ດີ ຂຶ້ນ (2010: 0,2015:TBD[4], ແຫຼ່ງພິສູດ: ການສຶກສາ KAP).<br><br>• ລາຍງານການປະເມີນຜົນກະ ທົບ ຫຼັງການກວດກູ້ໃຫ້ແກ່ລັດຖະບານ (2010: ມີ, 2015: ມີ, ແຫຼ່ງພິສູດ: ບົດ ລາຍງານ).<br><br>• ສິ່ງການປະກອບຄຳເຫັນທີ່ມີ ຄຸນ ນະພາບຂອງກຸ່ມວິຊາການ ລບຕ ໃຫ້ກອງ ປະຊຸມໂຕະມົນທັນເວລາ (2010: ມີ, 2013-2015: ມີ, ແຫຼ່ງພິສູດ: ໄດ້ຮັບໂດຍ IC/MPI.<br><br>• ແຜນວຽກ ໄລຍະ ຫຼາຍປີ ແຕ່ນີ້ ຮອດປີ 2020 ຂອງຂະ ແໜງແກ້ໄຂບັນຫາ ລບຕ ອີງໃສ່ຍຸດທະ | ໄດ້ຖືກອະນຸມັດ ແລະ ເລີ່ມຈັດຕັ້ງປະຕິບັດຍຸດທະສາດ ດັ່ງກ່າວ.<br>- ຈຳນວນເມືອງ ພ້ອມດ້ວຍແຜນການເກັບກູ້ຂັ້ນເມືອງ: TBC11<br>- ເປີເຊັນຂອງອົງການປະຕິບັດງານ ໄດ້ຮັບການຮັບຮອງ: 100% ຂອງອົງການປະຕິບັດງານ ສົ່ງລາຍງານສະບັບເອ ເລັກໂທຣນິກໃຫ້ແກ່ ຄຊກລ ໄດ້ 60%. ສປປ ລາວ ປະຕິບັດໄດ້ຕາມ ມາດຕາ 1, 3, 4, 5, 6, 7, 9 ແລະ 11 ຂອງ ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດ ລູກຫວ່ານ (CCM).<br>- ສປປ ລາວ ສົ່ງເສີມ ສົນທິສັນຍາວ່າດ້ວຍການເກືອດ ຫ້າມລະເບີດລູກຫວ່ານໃນເອທີສາ ກົມ ແລະ ປະຕິບັດ ຕາມມາດຕາ 21.<br>- ບົດລາຍງານສະບັບທີສອງ ກ່ຽວກັບການປະເມີນຜົນ ກະທົບຫຼັງຈາກການເກັບກູ້ ໄດ້ຖືກຮ່າງຂຶ້ນ, ລວມມີທັງ ການໃຫ້ທັດສະນະກ່ຽວກັບບົດບາດ ຍິງ-ຊາຍ.<br><br>**ຄາດໝາຍ (ປີທີ 3: 2015)**<br>ຈຳນວນຜູ້ລອດຊີວິດ ຈຳນວນໃໝ່ ຈຳເປັນຕ້ອງໄດ້ຮັບ ການຕິດຕາມ: (ຄາດຄະເນ 100[7] ຄົນ ໃນປີ 2015).<br><br>ຈຳນວນເມືອງພ້ອມດ້ວຍແຜນກວດກູ້ຂອງເມືອງມີ: 20[15]<br><br>ເປີເຊັນຂອງອົງການປະຕິບັດງານທີ່ໄດ້ຮັບການຮັບຮອງ | **ຜົນໄດ້ຮັບຂອງກິດຈະກຳ 2:**<br>ຄຸ້ມຄອງຂໍ້ມູນ ແລະ ດຳເນີນການກວດກາ ຄວາມຄືບໜ້າໃນການຊ່ວຍເຫຼືອຜູ້ລອດຊີວິດ ຈາກ ລບຕ; ຍຸດທະສາດ ເພື່ອຊ່ວຍເຫຼືອຜູ້ເຄາະຮ້າຍ ຈາກ ລບຕ ໄດ້ຮັບການອອກບັນຍັດ. | |
| | | **ກິດຈະກຳ:**<br>- ສ້າງ ແລະ ປັບປຸງ ລະບົບຕິດຕາມຜູ້ລອດຊີວິດ ຈາກ ອຸບັດເຫດ ລບຕ ໃນທົ່ວປະເທດ.<br>- ວິເຄາະ ການເກັບກຳຂໍ້ມູນ ດ້ວຍລະບົບຂອງການ ຕິດຕາມຜູ້ລອດຊີວິດ ແລະ ພ້ອມທັງໃຫ້ການແນະນຳ ຕໍ່ບັນດາອົງການປະຕິບັດງານ ທີ່ດຳເນີນການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ.<br>- ສຳເລັດ, ຮັບຮອງ ແລະ ສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດ ວ່າດ້ວຍການຊ່ວຍເຫຼືອຜູ້ຖືກ ເຄາະຮ້າຍ ຈາກອຸບັດເຫດ ລບຕ, ໂດຍເອົາໃຈໃສ່ຕໍ່ ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍທີ່ເປັນອົງປະກອບໜຶ່ງ ຂອງຂະແໜງຄົນພິການ ແລະ ປະສົມປະສານກັບການ ປະຕິບັດ/ນະໂຍບາຍ ຂອງບັນດາກະຊວງທີ່ກ່ຽວຂ້ອງ ອື່ນໆ ເຊັ່ນ: ກະຊວງ ສາທາ, ກະຊວງ ສຶກສາ, ກະຊວງ ຮສສ, ກະຊວງ ການຕ່າງປະເທດ ແລະ ອື່ນໆ.<br>- ຈັດກອງປະຊຸມປະຈຳໄຕມາດ ສຳລັບກຸ່ມວິຊາການ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. | ປີ 1: 53,514 ດອນລາ<br>ປີ 2: 56,190 ດອນລາ<br>ປີ 3: 58,999 ດອນລາ |

[4]ຖານຂໍ້ມູນພື້ນຖານຈະໄດ້ສ້າງຂຶ້ນ ນຳໃຊ້ຂໍ້ມູນຈາກການສຶກສາ KAP ໃນປີ 2010

[7]ຈຳນວນສະທ້ອນໃຫ້ເຫັນວ່າ ຈຳນວນຜູ້ລອດຊີວິດ ໂດຍປະມານ ໃນປີ 2014 ເທົ່ານັ້ນ.

<table>
<tr>
<td rowspan="2">ສາດ ເສັ້ນທາງສູ່ຄວາມປອດໄພ II ແລະ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ໄດ້ຮ່າງຂຶ້ນ, ອະນຸມັດ ແລະ ຖືກຈັດຕັ້ງປະຕິບັດ (2010: ບໍ່ມີ, 2015: ມີ, ແຫຼ່ງພິສູດ: ແຜນວຽກທີ່ມີ).<br><br>• ເພີ່ມເປີເຊັນ ຂອງການປະກອບສ່ວນທີ່ບໍ່ໄດ້ຈັດສັນເຂົ້າໃນກອງທຶນພິເສດເພື່ອແກ້ໄຂບັນຫາ ລບຕ (2010: 25%, 2015: 50%, ແຫຼ່ງພິສູດ: ບົດລາຍງານຂອງກອງປະຊຸມຄະນະຊີ້ນຳກອງທຶນພິເສດ ລບຕ).<br>• ເພີ່ມການປະກອບສ່ວນຂອງລັດຖະບານ ສປປ ລາວ ເຂົ້າໃນຂະແໜງ ລບຕ (2010: ມີພຽງແຕ່ເປັນປະເພດວັດຖຸ, 2015: ຈະມີການປະກອບສ່ວນດ້ານການເງິນ ນຳດ້ວຍ.<br>ແຫຼ່ງພິສູດ: ບົດລາຍງານປະຈຳປີຂອງຂະແໜງ ລບຕ).</td>
<td rowspan="2">ມີ: 100%.<br><br>ອົງການປະຕິບັດງານ ສົ່ງລາຍງານສະບັບເອເລັກ ໂທຣນິກ ໃຫ້ແກ່ ຄຊ ກລ: 80%.<br><br>ຍຸດທະສາດການຊ່ວຍເຫຼືອຜູ້ເຄາະຮ້າຍ ໄດ້ຖືກຈັດຕັ້ງປະຕິບັດ ໂດຍເອົາໃຈໃສ່ຊ່ວຍເຫຼືອຜູ້ເຄາະຮ້າຍ ໃນຖານະທີ່ເປັນອົງປະກອບໜຶ່ງຂອງຂະແໜງຄົນພິການ ໂດຍລວມ.<br><br>ສປປ ລາວ ປະຕິບັດໄດ້ຕາມ ມາດຕາ 1, 3, 4,5, 6, 7, 9 ແລະ 11 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM).[8]<br><br>ສປປ ລາວ ສົ່ງເສີມການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານໃນເອທີສາກົນ ແລະ ປະຕິບັດໄດ້ຕາມ ມາດຕາ 21.[9]</td>
<td colspan="2">ຜົນໄດ້ຮັບຂອງກິດຈະກຳ 3:<br>ປົດປ່ອຍເນື້ອທີ່ດິນຕາມແຜນທີ່ວາງໄວ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນຂຶ້ນຕື່ມ, ປະສານງານ ແລະ ອອກລະບຽບການປະຕິບັດ ໃຫ້ສອດຄ່ອງກັບເປົ້າໝາຍ ການພັດທະນາ ຕາມບູລິມະສິດ ທີ່ຈັດລຽງໄວ້ ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ກອບນະໂຍບາຍ ແລະ ແຜນພັດທະນາແຫ່ງຊາດທີ່ກ່ຽວຂ້ອງອື່ນໆ.</td>
</tr>
<tr>
<td>ກິດຈະກຳ:<br>- ສຳເລັດການທົດລອງ ແນວທາງການສຳຫຼວດທີ່ເນັ້ນໃສ່ເມືອງເປັນຈຸດສຸມ (ດີເອຟເອ) ເພື່ອສຳຫຼວດທາງດ້ານວິຊາການ ແລະ ບໍ່ແມ່ນວິຊາການ, ປະເມີນຜົນໄດ້ຮັບຈາກການສຳຫຼວດໃນແນວທາງຕ່າງໆ ແລະ ສັງລວມເອົາ ອົງປະກອບທີ່ດີທີ່ສຸດ ເຂົ້າໃນວິທີການສຳຫຼວດ. ຮັບປະກັນໃຫ້ບັນດາອົງການປະຕິບັດງານທີ່ດຳເນີນການສຳຫຼວດ ໄດ້ດັດປັບວິທີສຳຫຼວດຂອງພວກເຂົາເຈົ້າໃຫ້ສອດຄ່ອງກັບວິທີການສຳຫຼວດທີ່ປັບປຸງໃໝ່ນີ້.<br>- ປະສານຜົນໄດ້ຮັບ ຈາກແນວທາງການສຳຫຼວດຂັ້ນເມືອງ, ລວມທັງແຜນການກວດກູ້ຂອງເມືອງ, ເຂົ້າໃນກົນໄກການວາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ລຶບລ້າງຄວາມທຸກຍາກ, ພາຍໃຕ້ທິດຊີ້ນຳຂອງຄະນະກຳມະການຊີ້ນຳແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.<br>- ກຳນົດການເຊື່ອມໂຍງກັບກະຊວງຕ່າງໆ ແລະ ບັນ</td>
<td>ປີທີ 1: 43,883 ດອນລາ<br>ປີທີ 2: 46,077 ດອນລາ<br>ປີທີ 3: 48,381 ດອນລາ</td>
</tr>
</table>

[8]ແຫຼ່ງພິສູດ: ພາບລວມຂອງປະເທດ ສປປ ລາວ ດ້ານການຕິດຕາມລະເບີດລູກຫວ່ານ: www.the-monitor.org
[9]ແຫຼ່ງພິສູດ: ພາບລວມຂອງປະເທດ ສປປ ລາວ ດ້ານການຕິດຕາມລະເບີດລູກຫວ່ານ: www.the-monitor.org

| | | | |
|---|---|---|---|
| | | ດານິຕິບຸກຄົນອື່ນໆ ເພື່ອສະໜັບສະໜູນ, ປັບປຸງ ແລະ ປະສານເຂົ້າກັບແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ບົດລາຍງານ ແລະ ແຜນການ ຂອງຂະແໜງ ລບຕ.<br>- ຮັບສະໝັກຊ່ຽວຊານດ້ານການວາງແຜນພັດທະນາ ເສດຖະກິດ-ສັງຄົມ ທີ່ເປັນຄົນລາວ ເພື່ອສາມາດປະ ສົມປະສານ ວຽກງານ ແກ້ໄຂ ລບຕ ເຂົ້າກັບແຜນພັດ ທະນາເສດຖະກິດ-ສັງຄົມ, ເພື່ອຄົ້ນຄວ້າ ແລະ ເຜີຍ ແຜ່ຂໍ້ມູນທີ່ກ່ຽວຂ້ອງໄປຍັງອົງການປະຕິບັດງານຕ່າງໆ. ບຸກຄົນດັ່ງກ່າວນີ້ ຈະທຳໜ້າທີ່ ໃນການພົວພັນກັບກະ ຊວງແຜນການ ແລະ ການລົງທຶນ.<br>- ຕິດຕາມ, ອົບຮົມ ແລະ ສະໜັບສະໜູນ ອົງການ ປະຕິບັດງານທີ່ດຳເນີນການກວດກູ້, ລວມທັງການພັດ ທະນາວິທີການ ແລະ ເຕັກໂນໂລຊີໃໝ່ໆສຳລັບ ການ ສຳຫຼວດ ແລະ ການກວດກູ້ ລບຕ.<br>- ຈັດກອງປະຊຸມປະຈຳໄຕມາດ ຂອງກຸ່ມວິຊາການ ກວດກູ້ ໃນປີ 2014: ດຳເນີນ ພາລະກິດການປະເມີນ ຜົນກະທົບຫຼັງການກວດກູ້, ລວມທັງ ທັດສະນະທາງ ດ້ານບົດບາດຍິງ-ຊາຍ. | |
| | | **ຜົນໄດ້ຮັບຂອງກິດຈະກຳ 4:** ການປະສານງານ ແລະ ການວາງລະບຽບການ ທີ່ມີປະສິດທິຜົນ ຂອງຂະແໜງການ ລບຕ. | |
| | | **ກິດຈະກຳ:**<br>- ສະໜອງນະໂຍບາຍ ແລະ ທິດທາງທີ່ຈຳເປັນ ເພື່ອ ຮັບປະກັນ ການປະສານງານທີ່ມີປະສິດທິຜົນ ແລະ ອອກລະບຽບຂະແໜງ ລບຕ ໃຫ້ສອດຄ່ອງກັບຍຸດ | |

| | | | |
|---|---|---|---|
| | | ທະສາດ ແລະ ແຜນພັດທະນາແຫ່ງຊາດ.<br>- ທົບທວນມາດຕະຖານແຫ່ງຊາດ ແລະ ດັດແປງແກ້ໄຂຕາມຄວາມຈຳເປັນ.<br>- ອອກໃບຮັບຮອງໃຫ້ບັນດາອົງການປະຕິບັດງານທັງໝົດ (ລວມທັງ ອົງການຈັດຕັ້ງສາກົນ, ອົງການປະຕິບັດງານທີ່ຫວັງຜົນກຳໄລ ແລະ ກອງເກັບກູ້ລະເບີດເພື່ອມະນຸດສະທຳຂອງກອງທັບ), ເພື່ອຮັບປະກັນໃຫ້ການປະຕິບັດວຽກງານສອດຄ່ອງກັບມາດຕະຖານແຫ່ງຊາດ.<br>- ດຳເນີນການກວດກາ ແລະ ຄວບຄຸມຄຸນນະພາບຂອງອົງການປະຕິບັດງານ ແລະ ສືບຫາຫຼັກຖານເຫດການທີ່ເກີດຂຶ້ນ, ຕາມທີ່ກຳນົດໄວ້ ຢູ່ໃນມາດຕະຖານແຫ່ງຊາດ.<br>- ທົບທວນບົດບັນທຶກຄວາມເຂົ້າໃຈ (MoU) ຂອງອົງການປະຕິບັດງານ ທີ່ເປັນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ນຳໃຊ້ MoU ເພື່ອເປັນພື້ນຖານ ໃນການຮັບປະກັນຄວາມຮັບຜິດຊອບຂອງທັງສອງຝ່າຍ ລະຫວ່າງ ຄຊກລ ແລະ ອົງການປະຕິບັດງານ ແລະພ້ອມນີ້ ອົງການປະຕິບັດງານ ຕ້ອງປະຕິບັດຕາມກົດໝາຍຂອງລາວ.<br>- ຄຸ້ມຄອງ, ຮັກສາ ແລະ ພິມເຜີຍແຜ່ຂໍ້ມູນ ຈາກຖານຂໍ້ມູນຕ່າງໆ, ລວມທັງ ຈາກຖານ ຂໍ້ມູນ IMSMA ຕາມຄວາມຈຳເປັນ.<br>- ຮັບປະກັນ ສິ່ງບົດລາຍງານປະຈຳເດືອນຂອງ ຄຊກລ ໃຫ້ແກ່ລັດຖະບານ ສປປ ລາວ.<br>- ສ້າງບົດລາຍງານ ແລະ ແຜນວຽກ ຂອງຂະແໜງ | ປີທີ 1: 552,713 ດອນລາ<br>ປີທີ 2: 580,349 ດອນລາ<br>ປີທີ 3: 609,366 ດອນລາ |

| | | | |
|---|---|---|---|
| | | ລບຕ, ດ້ວຍການເພີ່ມຄວາມເອົາໃຈໃຫ້ເຊື່ອມໂຍງເຂົ້າກັບ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ.<br>- ຈັດກອງປະຊຸມກຸ່ມຂະແໜງການ ລບຕ, ຄະນະຊີ້ນຳ ຄຊກລ, ຄະນະຊີ້ນຳໂຄງການ ແລະ ກອງປະຊຸມອື່ນໆ ຕາມຄວາມຮຽກຮ້ອງຕ້ອງການຂອງຂະແໜງແກ້ໄຂບັນຫາ ລບຕ.<br>- ຮອບຮວມຂໍ້ມູນ ຂອຂະແໜງແກ້ໄຂບັນຫາ ລບຕ ໂດຍການຮ່ວມມືກັບອົງການ ສປຊ ເພື່ອການພັດທະນາ, ເພື່ອແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ ໃນການປະກອບສ່ວນ ເຂົ້າໃນຂະບວນການຂອງກອງປະຊຸມໂຕະມົນ.<br>- ລິເລີ່ມ 4 ກອງປະຊຸມກຸ່ມວິຊາການ, ກ່ຽວກັບນະໂຍບາຍ, ການປະສານງານ ແລະ ການວາງແຜນ (ເປົ້າໝາຍຜູ້ເຂົ້າປະຊຸມແມ່ນຜູ້ບໍລິຫານໂຄງການ).<br>- ພັດທະນາຍຸດທະສາດການສື່ສານ ແລະ ສ້າງໃຫ້ການສື່ສານຂອງ ຄຊກລ ມີຄວາມເຂັ້ມແຂງ, ເຜີຍແຜ່ຄວາມອາດສາມາດ, ລວມທັງ ປັບປຸງຄຸນນະພາບ ແລະ ການນຳໃຊ້ສິ່ງພິມ ຂອງ ຄຊກລ ແລະ ເພີ່ມເຄື່ອງມືໃນການສຶກສາຊຸມຊົນ, ປັບປຸງເວັບໄຊ ຂອງ ຄຊກລ ໃຫ້ທັນສະພາບ ແລະ ອື່ນໆ.<br>- ໂດຍການຮ່ວມມືກັບອົງການ ສປຊ ເພື່ອການພັດທະນາ, ອອກກົດລະບຽບ ແລະ ຈັດຕັ້ງປະຕິບັດຍຸດທະສາດ ການສື່ສານຂອງຂະແໜງ ລບຕ, ໂດຍມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງກັບຂະແໜງການທັງໝົດ.<br>- ຄົ້ນຄວ້າ ຫາຊ່ອງທາງຕ່າງໆ ເພື່ອສ້າງກົນໄກການປະ | |

| | | | |
|---|---|---|---|
| | | ມູນທີ່ມີການແຂ່ງຂັນ.<br>- ສ້າງ ແລະ ຄຸ້ມຄອງ ທຶນຊ່ວຍເຫຼືອຈາກ ອົງການ ອົດສ໌ເອດ (AusAid) ແລະ ອົງການ ສປຊ ເພື່ອການພັດທະນາ, ຊຶ່ງເປັນທຶນຊ່ວຍເຫຼືອລ້າຂະໜາດນ້ອຍ (ໂດຍການສ້າງຕັ້ງກອງເລຂາຂຶ້ນຢູ່ ຄຊກລ) ເພື່ອສະໜັບສະໜູນກິດຈະກຳຂອງອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກໃນຂົງເຂດວຽກງານໃຫ້ການສຶກສາ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ. | |
| | | **ຜົນໄດ້ຮັບຂອງກິດຈະກຳ 5:**<br>ການຈັດຕັ້ງຂອງ ຄຊກລ ໄດ້ຮັບການປັບປຸງ ແລະ ເຊື່ອມໂຍງເຂົ້າໃນ ສາຍການຈັດຕັ້ງປົກກະຕິຂອງລັດຖະບານ. | |
| | | **ກິດຈະກຳ.**<br>- ໂດຍຮ່ວມມືກັບ ອົງການ ສປຊ ເພື່ອການພັດທະນາ, ດຳເນີນການ ປະເມີນຜົນຕົນເອງ ເພື່ອຕີລາຄາພື້ນຖານຄວາມອາດສາມາດຂອງ ຄຊກລ ໃນປະຈຸບັນ, ເພື່ອອອກຍຸດທະສາດໄລຍະ ການພັດທະນາຄວາມສາມາດ ເປັນໄລຍະເວລາ 3 ປີ, ໂດຍມີກອບການຕິດຕາມປະເມີນຜົນທີ່ເຂັ້ມແຂງ.<br>- ໃຫ້ຄວາມກະຈ່າງແຈ້ງກ່ຽວກັບໂຄງຮ່າງການຈັດຕັ້ງຂອງ ຄຊກລ ຢູ່ໃນລະດັບຫ້ອງການຍ່ອຍ ແລະ ຫ້ອງການໃຫຍ່ລະດັບຊາດ; ລວມທັງມີການທົບທວນດ້ານພາລະບົດບາດ ແລະ ຄວາມຮັບຜິດຊອບລະອຽດ.<br>- ຄຸ້ມຄອງຊັບພະຍາກອນດ້ານການເງິນ, ບໍລິຫານ | ປີທີ 1: 1,140,297 ດອນລາ<br>ປີທີ 2: 1,197,312 ດອນລາ<br>ປີທີ 3: 1,257,177 ດອນລາ |

| | | | |
|---|---|---|---|
| | | ແລະ ຊັບພະຍາກອນມະນຸດ, ໂດຍອີງໃສ່ຍຸດທະສາດການພັດທະນາຄວາມສາມາດ.<br>- ໃຫ້ຄວາມກະຈ່າງແຈ້ງກ່ຽວກັບ ຖານະຂອງ ຄຊກລ ໃນກິງຈັກຂອງລັດຖະບານ ສປປ ລາວ ແລະ ຮັບປະກັນ ໃຫ້ມີການຊ່ວຍເຫຼືອ ດ້ານຊັບພະຍາກອນຈາກລັດຖະບານລາວ ເຂົ້າໃນຂະແໜງ ລບຕ: ແນະນຳ ແລະ ຮັກສາລະບົບຄຸ້ມຄອງຊັບພະຍາກອນການເງິນຢ່າງມີປະສິດທິຜົນ.<br>- ຈັດກອງປະຊຸມທົບທວນຄືນ ການປະເມີນຜົນ ກ່ຽວກັບ ທັດສະນະດ້ານບົດບາດ ຍິງ-ຊາຍ ໃນວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ, ແລະ ສະທ້ອນໃຫ້ເຫັນການເຄື່ອນໄຫວຕິດຕາມແຜນວຽກປະຈໍາປີທີ່ເປັນໄປໄດ້.<br>-  ນໍາໃຊ້ຫົວໜ້າຊ່ຽວຊານດ້ານວິຊາການຈາກ ສປຊ ເພື່ອການພັດທະນາ.<br>- ນໍາໃຊ້ທີ່ປຶກສາດ້ານວິຊາການ ແຜນການ ແລະ ການເງິນ.<br>- ນໍາໃຊ້ຜູ້ຈັດການທີ່ຮັບຜິດຊອບວຽກງານ ລບຕ, ປະຈໍາຫ້ອງການຂອງອົງການ ສປຊ ເພື່ອການພັດທະນາຢູ່ພາຍໃນປະເທດ.<br>- ລິເລີ່ມປຶກສາຫາລື ກັບຄູ່ຮ່ວມງານທີ່ກ່ຽວຂ້ອງໃນຂະແໜງ ລບຕ, ເພື່ອສ້າງແຜນວຽກຫຼາຍປີ 2013-2020, ລວມທັງຍຸດທະສາດຂອງການຂ້າມຜ່ານ.<br>- ສ້າງຍຸດທະສາດການລະດົມຊັບພະຍາກອນໄລຍະຍາວ ເພື່ອສະໜັບສະໜູນຍຸດທະສາດການຂ້າມຜ່ານທີ່ສັງລວມໃສ່ແຜນຫຼຸດຜ່ອນຕົ້ນທຶນ ສໍາລັບການໃຊ້ | |

| | | | |
|---|---|---|---|
| | | ຈ່າຍບໍລິຫານ, ແນວໂນ້ມສຳລັບການສະໜັບສະໜູນທຶນຈາກພາຍນອກໃນອານາຄົດ ແລະ ເຂົ້າເຖິງການຈັດສັນງົບປະມານຂອງປະເທດເຂົ້າໃສ່ວຽກງານກວດກູ້ ລບຕ, ໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ, ການຊ່ວຍເຫຼືອຜູ້ເຄາະຮ້າຍ, ແລະອື່ນໆ.<br>- ດຳເນີນການປະເມີນຜົນໂຄງການຈາກພາຍນອກ ຕໍ່ຄຊກລ ໃນໄລຍະທຳອິດ ໃນປີ 2016 ແລະ ໃຫ້ຂໍ້ແນະນຳກ່ຽວກັບການປະຕິບັດໃນຕໍ່ໜ້າ. | |
| | | **ຜົນໄດ້ຮັບຂອງກິດຈະກຳ 6:**<br>ບັນລຸພັນທະຂອງສົນທິສັນຍາສາກົນ. | |
| | | **ກິດຈະກຳ:**<br>- ປັບປຸງການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານໃນແຕ່ລະປີ, ໂດຍສອດຄ່ອງກັບມາດຕາ 7 ແລະ ມາດ ຕາ 11 ຂອງສົນທິສັນຍາດັ່ງກ່າວ.<br>- ຮັບປະກັນ ລະບຽບກົດໝາຍພາຍໃນ ສອດຄ່ອງກັບມາດຕາ 9 ຂອງ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.<br>- ສຳເລັດ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນງານຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.<br>- ເຂົ້າຮ່ວມກອງປະຊຸມກາງສະໄໝ ຢູ່ທີ່ ເຈນີວາ (3 ທ່ານ ຈາກພາກລັດ). | ປີທີ 1 : 74,400 ດອນລາ<br>ປີທີ 2 : 78,120 ດອນລາ<br>ປີທີ 3 : 82,026 ດອນລາ |

| | | | |
|---|---|---|---|
| | | - ເຂົ້າຮ່ວມກອງປະຊຸມລັດພາຄີ (3 ທ່ານ ຈາກພາກລັດ). | |

ລວມຍ່ອຍ ຜົນຮັບທີ 1 (ປີ 1-3) (UNDP, ສອງຝ່າຍ ແລະ ທຶນທີ່ຍັງບໍ່ໄດ້ຮັບ): 6,406,495 ດອນລາ

ສປຊ ເພື່ອການພັດທະນາ ມີແຜນປະກອບສ່ວນ 2013-2015 (ທຶນທີ່ໄດ້ຮັບ ແລະ ທີ່ຍັງຈະໄດ້ຊອກ) 6,046,495 ດອນລາ

## 2.4. ສະໜັບສະໜູນໂຄງການເກັບກູ້ລະເບີດແຫ່ງຊາດ.

ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ເປັນໂຄງການປະຕິບັດງານ ເກັບກູ້ລະເບີດແຫ່ງຊາດ ຢູ່ ສປປ ລາວ. ໂຄງການໄດ້ປະຕິບັດວຽກງານຢູ່ໃນ 9 ແຂວງ ທີ່ໄດ້ຮັບຜົນກະທົບຈາກ ລບຕ ຮ້າຍແຮງທີ່ສຸດ. ຄກລ ກວດກູ້ເນື້ອທີ່ເພື່ອທຳການຜະລິດກະສິກຳ, ຈຸດປະສົງທາງການພັດທະນາຂອງຊຸມຊົນ (ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດ, ແລະ ໂຄງການນ້ຳສະອາດ) ແລະ ກິດຈະກຳການພັດທະນາອື່ນໆ. ຄກລ ຍັງດຳເນີນກິດຈະກຳໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ (ໂຄສະນາສຶກສາຊຸມຊົນ) ຢູ່ໃນບັນດາຊຸມຊົນທີ່ໄດ້ຮັບຜົນກະທົບອີກດ້ວຍ.

ໂຄງການເກັບກູ້ລະເບີດແຫ່ງຊາດ ຕ້ອງການຍົກລະດັບຂີດຄວາມສາມາດຂອງຕົນ ເພື່ອ:

(I). ດຳເນີນການເກັບກູ້ລະເບີດ ແລະ ດຳເນີນໂຄງການສຶກສາຄວາມສ່ຽງ ຈາກ ລບຕ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໃນຂົງເຂດທີ່ໂຄງການປະຕິບັດວຽກງານຢູ່;

(II). ດຳເນີນກິດຈະກຳຕ່າງໆ ໂດຍສອດຄ່ອງກັບບູລິມະສິດແຫ່ງຊາດ ທີ່ກຳນົດຂຶ້ນເພື່ອຈັດຕັ້ງປະຕິບັດຢູ່ໃນຂະແໜງການ;

  i. ຮັບປະກັນວ່າກິດຈະກຳທັງໝົດຂອງໂຄງການບັນລຸມາດຕະຖານແຫ່ງຊາດ;

  ii. ປະສານງານກັບອົງການປະຕິບັດງານອື່ນໆ ທີ່ດຳເນີນວຽກງານຢູ່ໃນ ສປປ ລາວ;

(III). ລາຍງານຄວາມຄືບໜ້າ ແລະ ມີຄວາມໂປ່ງໃສ ແລະ ຮັບຜິດຊອບເຕັມສ່ວນຕໍ່ຊັບພະຍາກອນດ້ານທຶນຮອນ ແລະ ວິຊາການ; ແລະ

(IV). ຮັກສາການສື່ສານທີ່ເປີດເຜີຍ ແລະ ມີປະສິດທິຜົນກັບທຸກຝ່າຍທີ່ກ່ຽວຂ້ອງ.

ໃນປັດຈຸບັນ, ໂຄງການເກັບກູ້ລະເບີດແຫ່ງຊາດປະກອບມີພະນັກງານຫຼາຍກວ່າ 1,100 ຄົນ. ໂຄງການປະຕິບັດວຽກພາຍໃຕ້ຫຼັກການທົ່ວໄປຂອງການເກັບກູ້ລະເບີດເພື່ອມະນຸດສະທຳ:

(i). ຮັບປະກັນ ສິ່ງຄືນເນື້ອທີ່ດິນທີ່ປອດໄພ ໂດຍຜ່ານການສຳຫຼວດ ແລະ ການກວດກູ້ເນື້ອທີ່;

(ii). ປະຕິບັດວຽກທຳລາຍເຄື່ອນທີ່ ດ້ວຍຄວາມຕື່ນຕົວ ແລະ ກຽມພ້ອມ (ໜ້າວຽກທຳລາຍລະເບີດສຸກເສີນ);

(iii). ກິດຈະກຳການສຳຫຼວດທົ່ວໄປ; ແລະ

(iv). ກິດຈະກຳໃຫ້ການສຶກສາເພື່ອການຫຼຸດຜ່ອນຄວາມສ່ຽງຈາກ ລບຕ.

ນັບແຕ່ປີ 2013-2015 ໂຄງການເກັບກູ້ລະເບີດແຫ່ງຊາດ ຈະບັນລຸຜົນສຳເລັດທີ່ສຳຄັນດັ່ງລຸ່ມນີ້:

- ດິນບູລິມະສິດ 9000 ເຮັກຕາ (ໂດຍປະມານ) ໄດ້ຮັບການປົດປ່ອຍ.
- ລບຕ 200,000 ໜ່ວຍ (ໂດຍປະມານ) ຖືກທຳລາຍ.
- ປະຊາຊົນ 800,000 ຄົນ (ໂດຍປະມານ) ໄດ້ຮັບການຊ່ວຍເຫຼືອ.

ນອກຈາກ ສຸມໃສ່ວຽກພາກສະໜາມ ແລະ ການດຳເນີນງານຂອງໂຄງການແລ້ວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ໃນປະຈຸບັນ, ຍັງຄຸ້ມຄອງສູນຝຶກອົບຮົມຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຊຶ່ງໄດ້ນຳໃຊ້ຢ່າງເປັນປົກກະຕິ (ໂດຍມີການຮ່ວມມື) ຈາກຄູ່ຮ່ວມມືທີ່ສຳຄັນອື່ນໆຢູ່ໃນຂະແໜງການ.

ອົງການເກັບກູ້ລະເບີດແຫ່ງຊາດ ປະຕິບັດງານເພື່ອໃຫ້ເຫັນຜົນສຳເລັດ ໂດຍຜ່ານບັນດາກິດຈະກຳ ຊຶ່ງຈະຊ່ວຍໃຫ້ມີການເຂົ້າເຖິງດິນທີ່ມີຄວາມປອດໄພ ໃນ 9 ແຂວງ; ສະໜັບສະໜູນຊຸມຊົນທີ່ມີຄວາມສ່ຽງໃຫ້ສາມາດນຳໃຊ້ທີ່ດິນເພື່ອຈຸດປະສົງທາງດ້ານເສດຖະກິດ-ສັງຄົມ ແລະ ມະນຸດສະທຳ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງຈາກອຸບັດເຫດທີ່ເກີດຈາກ ລບຕ ຂອງພົນລະເມືອງ. ບັນດາກິດຈະກຳໃນລະດັບແຂວງ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອ ຈາກຫ້ອງການໃຫຍ່ ຄກລ, ສູນຝຶກອົບຮົມຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ການຊ່ວຍເຫຼືອດ້ານວິຊາການທີ່ໄດ້ຮັບການຊີ້ນຳ.

**ຜົນໄດ້ຮັບ ທີ 2. ຄກລ ສາມາດຄຸ້ມຄອງ** ແຜນງານການເກັບກູ້ ແລະ ແຜນການໃຫ້ການສຶກສາ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ຕາມຄວາມຕ້ອງການຂອງຊຸມຊົນທີ່ຢູ່ໃນເຂດທີ່ມີຄວາມສ່ຽງ.

**ກິດຈະກໍາທີ 1**: ປົດປ່ອຍເນື້ອທີ່ດິນ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ ແລະ ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຢູ່ໃນ 9 ແຂວງ ຫຼື ຫຼາຍກວ່ານັ້ນ ເພື່ອເຂົ້າເຖິງເນື້ອທີ່ດິນ ຢູ່ໃນເຂດທີ່ມີລະເບີດຕົກຄ້າງນັ້ນໄດ້ຢ່າງປອດໄພ ເພື່ອຈຸດປະສົງທາງດ້ານການພັດທະນາເສດຖະກິດ-ສັງຄົມ ແລະ ມະນຸດສະທໍາ ແລະ ຫຼຸດຜ່ອນອຸບັດເຫດທີ່ກ່ຽວຂ້ອງກັບ ໂດຍຜ່ານໂຄງການໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ.

ໃນໄລຍະເວລາຂອງໂຄງການ ແຕ່ 2013-2015, ແຜນການປົດປ່ອຍເນື້ອທີ່ດິນບູລິມະສິດຂອງ ຄກລ ໂດຍສອດຄ່ອງກັບຍຸດທະສາດແຫ່ງຊາດ ແລະ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ສອດຄ່ອງກັບບູລິມະສິດຕ່າງໆທີ່ລັດຖະບານກໍານົດໄວ້ ເພື່ອຈັດຕັ້ງປະຕິບັດໃຫ້ມີຄວາມກ້າວໜ້າ ສໍາລັບແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ VI ຂອງລັດຖະບານ ແລະ ຍຸດທະສາດການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:

ຄກລ ຈະປະຕິບັດກິດຈະກໍາຕ່າງໆ ດັ່ງຕໍ່ໄປນີ້ ຢູ່ພາຍໃນ 9 ແຂວງ ຂອງ ສປປ ລາວ.

**ກິດຈະກໍາທີ 1. ການເກັບກູ້ລະເບີດ/ການປົດປ່ອຍເນື້ອທີ່ດິນ.**

ອີງຕາມບູລິມະສິດທີ່ໄດ້ກໍານົດໄວ້, ເປັນຕົ້ນແມ່ນ ຍຸດທະສາດພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ. ດິນທີ່ມີ ລບຕ ຕົກຄ້າງຈະຖືກປົດປ່ອຍເພື່ອນໍາໃຊ້ໃນຈຸດປະສົງຕ່າງໆ. ໂຄງການເກັບກູ້ລະເບີດແຫ່ງຊາດ ຈະສືບຕໍ່ນໍາໃຊ້ການສໍາຫຼວດທີ່ບໍ່ແມ່ນທາງດ້ານວິຊາການ ແລະ ທາງດ້ານວິຊາການ ຄຽງຄູ່ກັນໄປ ແລະ ໃນກໍລະນີ ທີ່ມີຫຼັກຖານວ່າຍັງມີການຕົກຄ້າງຂອງລະເບີດ ກໍ່ຈະມີການເກັບກູ້. ໂຄງການເກັບກູ້ລະເບີດແຫ່ງຊາດ ຈະສືບຕໍ່ຮ່ວມມື ແລະ ສຸມໃສ່ການສ້າງ ແລະ ໃຫ້ຄວາມສໍາຄັນຕໍ່ບົດບາດຍິງ-ຊາຍ ໃນບັນດາກິດຈະກໍາຂອງຕົນ.

ໂດຍສອດຄ່ອງກັບທິດຊີ້ນໍາຂອງລັດຖະບານ, ໂຄງການເກັບກູ້ລະເບີດແຫ່ງຊາດ ຈະສຸມໃສ່ເກັບກູ້ລະເບີດຢູ່ເຂດພັດທະນາຂອງເມືອງ ແລະ ຂອງກຸ່ມບ້ານບູລິມະສິດ. ໂຄງການເກັບກູ້ລະເບີດແຫ່ງຊາດ ຈະນໍາໃຊ້ເຕັກໂນໂລຊີ ແລະ ວິທີການເກັບກູ້ລະເບີດ/ປົດປ່ອຍເນື້ອທີ່ດິນແບບໃໝ່ທີ່ເໝາະສົມ ເພື່ອໃຫ້ບັນລຸຜົນໄດ້ຮັບ ແລະ ມີປະສິດທິພາບທີ່ສູງສຸດ.

**ກິດຈະກໍາທີ 2. ໜ້າວຽກທໍາລາຍເຄື່ອນທີ່.**
ການທໍາລາຍເຄື່ອນທີ່ ຈະໄດ້ຖືກດໍາເນີນໄປ ເພື່ອທໍາລາຍລະເບີດ ແຕ່ລະໜ່ວຍ ທີ່ມີຄວາມສ່ຽງຕໍ່ບັນດາຊຸມຊົນຕ່າງໆ. ບັນດາໜ້າວຽກທໍາລາຍ ລບຕ ເຄື່ອນທີ່ ຈະປະຕິບັດໂດຍສອດຄ່ອງກັບຍຸດທະສາດການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງແຂວງ, ເມືອງ ແລະ ລະດັບຊາດ. ຄວາມພະຍາຍາມ ກໍ່ຄື ປັບປຸງ ເວລາໃນການຕອບຮັບສະໜອງຕໍ່ການລາຍງານກ່ຽວກັບ ລບຕ ທີ່ເປັນອັນຕະລາຍສູງ. ວຽກນີ້ຈະສໍາເລັດໄດ້ໂດຍການເພີ່ມຈໍານວນ ແລະ ທີ່ຕັ້ງຂອງທີມທໍາລາຍເຄື່ອນທີ່ ແລະ ດ້ວຍການຮັບປະກັນວ່າ ທີມງານກວດກູ້ທັງໝົດ ສາມາດປະຕິບັດຫຼາຍໜ້າທີ່ໄປພ້ອມໆກັນ, ເຊັ່ນ: ທໍາລາຍເຄື່ອນທີ່, ສໍາຫຼວດ, ແລະ ກວດກູ້ພື້ນທີ່ (ແລະ ດ້ວຍຄວາມເປັນໄປໄດ້ ທີ່ຈະຂະຫຍາຍໄປຍັງແຂວງທີ່ ຄກລ ຍັງບໍ່ທັນໄດ້ເຂົ້າໄປສະໜັບສະໜູນໃນປະຈຸບັນ).

**ກິດຈະກໍາທີ 3. ການສໍາຫຼວດ.**
ຂັ້ນຕອນການສໍາຫຼວດຈໍາເປັນຕ້ອງມີຂໍ້ມູນພື້ນຖານກ່ຽວກັບຂອບເຂດ ແລະ ປະລິມານຂອງ ລບຕ ທີ່ຕົກຄ້າງ ຢູ່ ສປປ ລາວ ແລະ ຖານຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອຊ່ວຍໃນການຈັດລຽງບູລິມະສິດ ເພື່ອໃຫ້ສອດຄ່ອງກັບບູລິມະສິດທີ່ລັດຖະບານກໍານົດໄວ້.

ປະຈຸບັນ, ຍັງບໍ່ທັນມີຂໍ້ມູນທີ່ພຽງພໍ ກ່ຽວກັບຂອບເຂດ ແລະ ປະລິມານການຕົກຄ້າງຂອງ ລບຕ ຢູ່ ສປປ ລາວ ທີ່ຈະສາມາດຈັດລຽງບຸລິມະສິດແກ່ໜ້າວຽກເກັບກູ້ລະເບີດຢ່າງຖືກຕ້ອງ. ໂດຍປາສະຈາກຂໍ້ມູນເຫຼົ່ານີ້ແລ້ວ, ວຽກງານກວດກູ້ ລບຕ ຢູ່ໃນຫຼາຍເຂດ ແມ່ນປະຕິບັດໄປຕາມການຂໍຮ້ອງຂອງບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນ, ຊຶ່ງບັນຫານີ້ແມ່ນເປັນສິ່ງທີ່ກ່ຽວພັນກັບການຫຼຸດຜ່ອນການນຳໃຊ້ຊັບພະຍາກອນທີ່ມີປະສິດທິຜົນ.

ແນວທາງການສຳຫຼວດຂັ້ນເມືອງ (DFA), ໃນປະຈຸບັນ ໄດ້ລິເລີ່ມໂຄງການທົດລອງ ໂດຍ 3 ອົງການປະຕິບັດງານຂອງສາກົນ ແລະ ພາຍໃຕ້ການດູແລຂອງ ຄຊກລ, ທັງນີ້, ກໍ່ເພື່ອຫາທາງປັບປຸງແນວທາງການສຳຫຼວດ ທາງດ້ານວິຊາການ ແລະ ສຳຫຼວດທີ່ບໍ່ແມ່ນດ້ານວິຊາການ ເພື່ອຈັດລຽງບຸລິມະສິດພື້ນທີ່ ທີ່ຈະກວດກູ້. ພາຍຫຼັງທີ່ປະເມີນຜົນ ຂອງ 3 ແນວທາງການສຳຫຼວດທີ່ແຕກຕ່າງກັນແລ້ວ, ບັນດາອົງປະກອບທີ່ດີທີ່ສຸດ ຈາກແຕ່ລະແນວທາງການສຳຫຼວດນັ້ນ ຈະໄດ້ຖືກນຳມາລວມເຂົ້າກັນ ເພື່ອປັບປຸງໃຫ້ກາຍເປັນວິທີການສຳຫຼວດທີ່ໄດ້ມາດຕະຖານ. ໃນເວລາຕໍ່ໄປ, ທຸກໆບ້ານທີ່ມີລະເບີດບໍ່ທັນແຕກຕົກຄ້າງ ຢູ່ໃນທຸກໆເມືອງທີ່ມີຜົນກະທົບຈາກ ລບຕ ຈະຖືກສຳຫຼວດ, ເພື່ອກຳນົດພື້ນທີ່ ທີ່ສົງໄສວ່າມີລະເບີດທີ່ບໍ່ທັນແຕກຕົກຄ້າງ ແລະ ດຳເນີນການສຳຫຼວດທາງດ້ານວິຊາການ, ການເກັບກູ້ເນື້ອທີ່ ຫຼື ລາຍງານໜ້າວຽກທຳລາຍ ລບຕ ໃຫ້ແກ່ທີມງານທຳລາຍເຄື່ອນທີ່. ຄກລ, ໃນປະຈຸບັນ ດຳເນີນວຽກງານຢູ່ 9 ແຂວງ ທີ່ໄດ້ຮັບຜົນກະທົບຈາກ ລບຕ ສູງທີ່ສຸດ (ແລະ ມີແນວໂນ້ມ ທີ່ຈະຂະຫຍາຍການປະຕິບັດງານໄປຍັງແຂວງອື່ນໆທີ່ໄດ້ຮັບຜົນກະທົບຈາກ ລບຕ ຕື່ມອີກ), ຈະເປັນຜູ້ມີສ່ວນຮ່ວມທີ່ສຳຄັນໃນການປະຕິບັດ ແລະ ປຶກສາຫາລືຕໍ່ໄປກ່ຽວກັບ ເຮັດແນວໃດ ອົງປະກອບດັ່ງກ່າວນີ້ຈະໄດ້ລວມເຂົ້າຢູ່ໃນວຽກງານຂອງ ຄກລ.

ໜ້າວຽກສຳຫຼວດ ຂອງ ຄກລ ຖືກປະຕິບັດ ເພື່ອຮັບປະກັນວ່າ ໜ້າວຽກທີ່ໄດ້ຮັບການສະເໜີຈາກອຳນາດການປົກຄອງ, ແລະ ສອດຄ່ອງກັບຍຸດທະສາດແຫ່ງຊາດ, ຖືກສຸມໃສ່ໃນສະຖານທີ່ໆຖືກຕ້ອງ ແລະ ເຕັມໄປດ້ວຍຄວາມອັນຕະລາຍ ເພື່ອຮັບປະກັນວ່າແຫຼ່ງຊັບພະຍາກອນເພື່ອການເກັບກູ້ ທີ່ມີຄ່ານັ້ນ ຖືກນຳມາໃຊ້ຢູ່ໃນພື້ນທີ່ ທີ່ຈຳເປັນເທົ່ານັ້ນ.

**ກິດຈະກຳທີ 4. ກິດຈະກຳໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ.**

ກິດຈະກຳໃຫ້ການສຶກສາ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກ ລບຕ ຈະຖືກປະຕິບັດຢູ່ໃນ 9 ແຂວງ ແລະ ຍັງຈະພິຈາລະນາເຖິງບົດບາດຍິງ-ຊາຍ, ພາສາ ແລະ ວັດທະນະທຳ, ກິດຈະກຳໃນການຫາລ້ຽງຊີບ, ແລະ ບັນດາ ພຶດຕິກຳຕ່າງໆທີ່ກ່ຽວຂ້ອງກັບຄວາມສ່ຽງ. ກິດຈະກຳການໂຄສະນາສຶກສາຊຸມຊົນ ຍັງຈະກວມເອົາການວາງແຜນ ເພື່ອເບິ່ງຢ່າງໃກ້ຊິດກວ່າເກົ່າກ່ຽວກັບພຶດຕິກຳທີ່ເປັນຄວາມສ່ຽງຂອງຊາວບ້ານ ຊຶ່ງມີຄວາມເຂົ້າໃຈເຖິງຄວາມອັນຕະລາຍຂອງ ລບຕ ແຕ່ບໍ່ຄຳນຶງເຖິງຄວາມສ່ຽງທີ່ຈະເກີດຂຶ້ນ ເຊັ່ນ: ການຫຍຸ້ງກ່ຽວກັບການຄ້າຂາຍເສດເຫຼັກຕ່າງໆເປັນຕົ້ນ.

ຜົນສຳເລັດຂອງກິດຈະກຳ 1-4 ຢູ່ພາຍໃນ 9 ແຂວງຈະຖືກສະໜັບສະໜູນໂດຍຜ່ານການຄຸ້ມຄອງ ແລະ ການດູແລ ຈາກຫ້ອງການໃຫຍ່ ຄກລ ສູນກາງ ແລະ ສູນຝຶກອົບຮົມຂອງ ຄກລ ແລະ ໄດ້ສ້າງຄວາມເຂັ້ມແຂງໂດຍຜ່ານ ການຄຸ້ມຄອງ ແລະ ຮັບປະກັນຄຸນນະພາບ ແລະ ການສຳຫຼວດເທັກໂນໂລຊີໃໝ່ຢ່າງເປັນປົກກະຕິ ແລະ ການປະຕິບັດທີ່ດີທີ່ສຸດສຳລັບທີມງານຂອງອົງການ.

ແຜນການຂອງ ຄກລ ທີ່ຈະປະຕິບັດງານ ຢູ່ໃນ 9 ແຂວງ ແລະ ບັນດາເມືອງຕ່າງໆ ດັ່ງຕໍ່ໄປນີ້ ສຳລັບປີ 2013 ບັນລຸຜົນໄດ້ຮັບຕ່າງໆ.[19]

| | | |
|---|---|---|
| ໝາກຜົນກິດຈະກຳ 1 | ແຂວງຫຼວງພະບາງ | ການປະຕິບັດງານໃນ 12 ເມືອງ |
| ໝາກຜົນກິດຈະກຳ 2 | ແຂວງຫົວພັນ | ການປະຕິບັດງານໃນ 8 ເມືອງ |
| ໝາກຜົນກິດຈະກຳ 3 | ແຂວງຊຽງຂວາງ | ການປະຕິບັດງານໃນ 5 ເມືອງ |
| ໝາກຜົນກິດຈະກຳ 4 | ແຂວງຄຳມ່ວນ | ການປະຕິບັດງານໃນ 4 ເມືອງ |

| | | |
|---|---|---|
| ໝາກຜົນກິດຈະກຳ 5 | ແຂວງສະຫວັນນະເຂດ | ການປະຕິບັດງານໃນ 9 ເມືອງ |
| ໝາກຜົນກິດຈະກຳ 6 | ແຂວງສະລະວັນ | ການປະຕິບັດງານໃນ 7 ເມືອງ |
| ໝາກຜົນກິດຈະກຳ 7 | ແຂວງເຊກອງ | ການປະຕິບັດງານໃນ 4 ເມືອງ |
| ໝາກຜົນກິດຈະກຳ 8 | ແຂວງຈຳປາສັກ | ການປະຕິບັດງານໃນ 10 ເມືອງ |
| ໝາກຜົນກິດຈະກຳ 9 | ແຂວງອັດຕະປື | ການປະຕິບັດງານໃນ 5 ເມືອງ |

ຄວາມສຳເລັດຂອງໜ້າວຽກທີ່ໄດ້ຕັ້ງເປົ້າໄວ້ ຢູ່ໃນ 9 ແຂວງ ສຳລັບປີ 2013 ດ້ວຍຂີດຄວາມສາມາດທີ່ມີໃນປະຈຸບັນ ໄດ້ສະຫຼຸບໄວ້ໃນຕາຕະລາງລຸ່ມນີ້.

| ແຂວງ | ຈຳນວນເມືອງທີ່ປະຕິບັດງານ | ຈຳນວນບ້ານ | ຈຳນວນຜູ້ໄດ້ຮັບຜົນປະໂຫຍດ | ຈຳນວນຄົວເຮືອນ | ກິດຈະກຳໂຄສະນາສຶກສາຊຸມຊົນ | ໜ້າວຽກສຳຫຼວດທົ່ວໄປ (ວຽກ) | ໜ້າວຽກທຳລາຍເຄື່ອນທີ່ | ເກັບກູ້ (ຮຕ) |
|---|---|---|---|---|---|---|---|---|
| ຫຼວງພະບາງ | 12 | 176 | 8,039 | 119 | 75 | 143 | 120 | 285 |
| ຫົວພັນ | 8 | 182 | 6,231 | 72 | 65 | 150 | 110 | 285 |
| ຊຽງຂວາງ | 5 | 290 | 8,901 | 190 | 65 | 419 | 335 | 520 |
| ຄຳມ່ວນ | 4 | 154 | 1,275 | 219 | 87 | 120 | 120 | 303 |
| ສະຫວັນະເຂດ | 9 | 328 | 8,013 | 258 | 69 | 300 | 251 | 510 |
| ສະລະວັນ | 7 | 268 | 25,217 | 151 | 67 | 233 | 182 | 403 |
| ເຊກອງ | 4 | 125 | 13,705 | 160 | 66 | 132 | 132 | 275 |
| ຈຳປາສັກ | 10 | 218 | 12,137 | 146 | 63 | 205 | 185 | 295 |
| ອັດຕະປື | 5 | 127 | 24,888 | 95 | 81 | 115 | 115 | 291 |
| **ລວມ** | **64** | **1,868** | **108,406** | **1,410** | **639** | **1,817** | **1,550** | **3,167** |

**ກິດຈະກຳ 2:**

ປະເມີນຜົນ, ສ້າງຄວາມເຂັ້ມແຂງ ແລະ ປັບປຸງຄວາມອາດສາມາດໃນການຄຸ້ມຄອງ ໂຄງການ ຄກລ ໂດຍຕອບສະໜອງ ການຝຶກອົບຮົມ ແລະ ການບໍລິການໃຫ້ຄຳປຶກສາ ແລະ ປຸກລະດົມແຫຼ່ງຊັບພະຍາກອນຕ່າງໆໃຫ້ພຽງພໍ ໃຫ້ແກ່ ຄກລ ເພື່ອວ່າ ສປປ ລາວ ສາມາດກ້າວໄປຂ້າງໜ້າ ເພື່ອບັນລຸເປົ້າໝາຍພັດທະນາສະຫັດສະວັດ ອັນດັບ 9 ຂອງລັດຖະບານ ແລະ ພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

ຫ້ອງການໃຫຍ່ ໂຄງການເກັບກູ້ລະເບີດແຫ່ງຊາດ ຈະຄຸ້ມຄອງໜ້າທີ່ສຳຄັນຕ່າງໆໃນການປະຕິບັດງານ ພາຍໃນ 9 ແຂວງ ທີ່ອົງການເກັບກູ້ລະເບີດແຫ່ງຊາດປະຕິບັດງານຢູ່ ໂດຍສະເພາະແມ່ນ ໜ້າທີການວາງແຜນ, ການປະສານງານ ແລະ ການຕອບສະໜອງທາງດ້ານການຄຸ້ມຄອງ ແລະ ຮັບປະກັນຄຸນນະພາບ ຢູ່ໃນທັງໝົດ 9 ແຂວງ. ໜ້າທີ່ອື່ນໆ ແມ່ນຈະຖືກລວມສູນຢູ່ທີ່ຫ້ອງການໃຫຍ່ ຊຶ່ງປະກອບມີ ການເກັບກຳຂໍ້ມູນ ແລະ ການລອບລວມຜົນການປະຕິບັດງານໃນ ທັງໝົດ 9 ແຂວງ ເຂົ້າໃນລະບົບການຄຸ້ມຄອງຂໍ້ມູນຂ່າວສານ ຂອງການເກັບກູ້ ແລະ ທຳລາຍລະເບີດ ອິມສະມາ (IMSMA), ໜ້າທີ່ໃນການລາຍງານ ເພື່ອສົ່ງໃຫ້ແກ່ຫ້ອງການ ຄຊກລ, ໃນຖານະຄູ່ຮ່ວມຄຸ້ມຄອງ ແລະ ການລະດົມຊັບພະຍາກອນ, ການຄຸ້ມຄອງການເງິນ ແລະ ການສະໜັບສະໜູນດ້ານວຽກງານບໍລິຫານ ລວມທັງການສະໜອງຈັດຊື້.

ໂດຍການຕອບສະໜອງຫົວໜ້າທີ່ປຶກສາດ້ານວິຊາການ (CTA) ແລະ ຊ່ຽວຊານດ້ານວິຊາການ, ແລະ ການເງິນໃຫ້ແກ່ໂຄງການ, ອົງການ ສປຊ ເພື່ອການພັດທະນາ ມີແຜນທີ່ຈະສ້າງຄວາມເຂັ້ມແຂງທາງດ້ານຄວາມສາມາດໃຫ້ແກ່ສະຖາບັນໂຄງການເກັບກູ້ລະເບີດແຫ່ງຊາດ ໂດຍຜ່ານ:

1. ການຄຸ້ມຄອງການເງິນ ແລະ ການບໍລິການສະໜັບສະໜູນ ແລະ ໃຫ້ຄຳປຶກສາທາງດ້ານບໍລິຫານ,

2. ການປະຕິບັດງານດ້ານວິຊາການ ແລະ ການລິການສະໜັບສະໜູນໃຫ້ຄຳປຶກສາ ດ້ານການຄຸ້ມຄອງໂຄງການ ການຮັບປະກັນໂຄງການ ແລະ ການບໍລິການສະໜັບສະໜູນອື່ນໆ. ຜ່ານການຕອບສະໜອງທີ່ກ່າວມາຂ້າງເທິງນັ້ນ, ຄກລ ຈະໄດ້ຮັບການສ້າງຄວາມສາມາດຕາມທີ່ໄດ້ປະສານງານ ແລະ ວາງແຜນໄວ້ ແລະ ການແນະນຳທາງດ້ານວິຊາການ, ຊຶ່ງຈະຊ່ວຍໃຫ້ ຄກລ ດຳເນີນວຽກງານໄດ້ຕາມມາດຕະຖານ ແລະ ບັນທັດຖານອັນເປັນທີ່ຍອມຮັບຈາກສາກົນ, ແລະ ການລະດົມຊັບພະຍາກອນ ແລະ ການປັບປຸງຄວາມສາມາດໂດຍລວມ. ພ້ອມນີ້, ສຳລັບທີ່ປຶກສາສອງຕຳແໜ່ງທີ່ກ່າວມາຂ້າງເທິງນັ້ນ ຈະໄດ້ເລີ່ມປະຕິບັດວຽກງານຕັ້ງແຕ່ເລີ້ມຕົ້ນໂຄງການ ຈົນເຖິງສິ້ນສຸດໂຄງການ ຕາມໄລຍະຂອງສັນຍາສະບັບນີ້, ຄກລ ແລະ ອົງການ ສປຊ ເພື່ອການພັດທະນາ ຈະພິຈາລະນາໃຫ້ການຊ່ວຍເຫຼືອທາງດ້ານວິຊາການແກ່ຂົງເຂດອື່ນໆອີກບ່ອນໃດທີ່ມີຄວາມຕ້ອງການ ການສະໜັບສະໜູນໃຫ້ແກ່ອົງການຈັດຕັ້ງຂອງພວກເຂົາເຈົ້າ. ການຊ່ວຍເຫຼືອທາງວິຊາການອື່ນໆນັ້ນກໍຈະໄດ້ກຳນົດ ແລະ ຕອບສະໜອງໃຫ້ຕາມຕ້ອງການ. ລະດັບການຊ່ວຍເຫຼືອທາງດ້ານວິຊາການທີ່ໄດ້ສະໜອງໃຫ້ແກ່ ຄກລ ຈະຖືກຊີ້ທິດທາງໂດຍຜົນຮັບຈາກການປະເມີນຜົນຄວາມສາມາດຂອງອົງການຈັດຕັ້ງຕາມທີ່ມີຢູ່ໃນແຜນ. ໃນຂັ້ນຕອນນີ້, ສິ່ງດັ່ງກ່າວນີ້ ຈະລວມມີທັງຄວາມອາດສາມາດບົ່ມຊ້ອນໃນການຈັດໃຫ້ການບໍລິການໃຫ້ຄຳປຶກສາຕະຫຼອດໄລຍະເວລາ 3 ປີ.

ໃນປີ 2013, ໂຄງການວາງແຜນທີ່ຈະພັດທະນາ ແລະ ກຳນົດຄວາມສາມາດໃນປະຈຸບັນ ເພື່ອຄວາມຕ້ອງການໃນການປະເມີນຜົນຂັ້ນພື້ນຖານ ແລະ ອອກຍຸດທະສາດການພັດທະນາຄວາມສາມາດໄລຍະ 3 ປີ ພ້ອມກັບປັບປຸງກອບວຽກຕິດຕາມ ແລະ ປະເມີນຜົນ ແລະ ຍຸດທະສາດການຊ່ວຍເຫຼືອດ້ານວິຊາການທີ່ມີຢູ່. ອີງໃສ່ຄວາມຕ້ອງການທີ່ໄດ້ກຳນົດໄວ້ສຳລັບການປະເມີນຄວາມສາມາດ, ການຝຶກອົບຮົມສະຈັດສະໜອງໃຫ້ແກ່ພະນັກງານຫຼັກຂອງ ຄກລ ເພື່ອສືບຕໍ່ປັບປຸງຄວາມສາມາດ ຂອງສະຖາບັນ ຄກລ ໃຫ້ດີຂຶ້ນເລື້ອຍໆ. ສິ່ງດັ່ງກ່າວນີ້ຈະຖືກປະຕິບັດຕາມຄວາມຕ້ອງການຕະຫຼອດໄລຍະເວລາຂອງໂຄງການ, ແຕ່ ຄາດວ່າ ຢູ່ບ່ອນໃດທີ່ຈຳເປັນພະນັກງານອາວຸໂສແຕ່ລະຄົນຈະເຂົ້າຮ່ວມຝຶກອົບຮົມທີ່ເໝາະສົມ ຕໍ່ການປະຕິບັດໜ້າທີ່ຂອງພວກເຂົາເຈົ້າ.

**ກິດຈະກຳທີ 3: ການຈັດການຝຶກອົບຮົມໃຫ້ແກ່ບຸກຄະລາກອນ ເກັບກູ້ລະເບີດ ຕາມມາດຕະຖານແຫ່ງຊາດ.**

ເພື່ອເສີມສ້າງ ແລະ ປັບປຸງ ການປະຕິບັດງານຂອງ ຄກລ, ຫຼັກສູດການຝຶກອົບຮົມຈະສືບຕໍ່ ແລະ ຕອບສະໜອງໃຫ້ໂດຍສູນຝຶກອົບຮົມຂອງ ຄກລ ໃຫ້ແກ່ບຸກຄະລາກອນໃໝ່ ແລະ ບຸກຄະລາກອນເກົ່າທີ່ມີຢູ່. ມາດຕະຖານສູງສຳລັບບຸກຄະລາກອນ ແມ່ນມີຄວາມສຳຄັນຫຼາຍໃນການການພັດທະນາ ແລະ ການເສີມສ້າງຄວາມສາມາດ ເພື່ອປະຕິບັດກິດຈະກຳການປະຕິບັດວຽກງານ ຢູ່ໃນ ສປປ ລາວ ດ້ວຍຄວາມປອດໄພ, ມີປະສິດທິພາບ ແລະ ປະສິດທິຜົນ. ເພື່ອຮັບປະກັນໃຫ້ການຝຶກອົບຮົມມີມາດຕະຖານສູງ, ຄຊກລ ໄດ້ຕັ້ງມາດຕະຖານການຝຶກອົບຮົມສຳລັບຕຳແໜ່ງຕ່າງໆທີ່ສຳຄັນຢູ່ໃນຂະແໜງການ ແລະ ຊີ້ບອກເຖິງຄວາມຕ້ອງການຕ່າງໆ ສຳລັບການຄຸ້ມຄອງ ແລະ ການດຳເນີນການຝຶກອົບຮົມ. ການກວດສອບພາຍໃນສຳລັບຫຼັກສູດການຝຶກອົບຮົມທີ່ເປັນທາງການ ຖືກປະຕິບັດທັງໃນລະຫວ່າງການຝຶກອົບຮົມ ແລະ ໃນເວລາສຳເລັດການຝຶກອົບຮົມ.

ຄວາມຕ້ອງການສະເພາະ ໃນການຝຶກອົບຮົມນັ້ນ ແມ່ນຈະແຕກຕ່າງກັນໄປໃນແຕ່ລະປີ ແລະ ຈະສະທ້ອນໃຫ້ເຫັນຢູ່ໃນແຕ່ລະແຜນວຽກປະຈຳປີຕິດຕໍ່ກັນໄປ. ໃນປີ 2013, ຫຼັກສູດການຝຶກອົບຮົມດັ່ງຕໍ່ໄປນີ້ຈະໄດ້ຖືກຈັດສະໜອງໃຫ້: ຫຼັກສູດການເກັບກູ້, ຫຼັກສູດການທຳລາຍລະເບີດຂັ້ນສູງ, ຫົວໜ້າທີມ, ແພດສະໜາມ, ແລະ ສຳຫຼວດ. ຫຼັກສູດຕ່າງໆ ຈະ

ຖືກຈັດຂຶ້ນໂດຍອົງການປະຕິບັດງານອື່ນໆ ໃນຂອບເຂດທົ່ວປະເທດ, ລວມທັງກອງກຳລັງເກັບກູ້ລະເບີດເພື່ອມະນຸດສະທຳຂອງກອງທັບດ້ວຍ.

**ກິດຈະກຳທີ 4:** ທົບທວນ ແລະ ຮັບຮອງເອົາເທັກໂນໂລຢີ ທີ່ໄດ້ຮັບການປັບປຸງ ຢູ່ໃນບ່ອນທີ່ເປັນໄປໄດ້ ເພື່ອການປະຕິບັດງານທີ່ມີປະສິດທິພາບ ແລະ ປະສິດທິຜົນ (ນະວະຕະກຳໃໝ່ທາງດ້ານເທັກໂນໂລຢີ ແລະ ດ້ານວິທີການ ແລະ ການປະຕິບັດຕົວຈິງທີ່ດີທີ່ສຸດຂອງຂະແໜງການ).

ອົງການເກັບກູ້ລະເບີດແຫ່ງຊາດ ຈຳເປັນທີ່ຈະຕ້ອງໄດ້ປັບປຸງຄວາມມີປະສິດທິຜົນ ແລະ ເຮັດວຽກໃຫ້ທັນກັບວິທີການ ແລະ ເຕັກໂນໂລຊີໃໝ່ໆ ຊຶ່ງສາມາດຊ່ວຍຄວາມພະຍາຍາມນີ້ໄດ້. ຜ່ານກິດຈະກຳຕ່າງໆ ເຊັ່ນ: ການສຳຫຼວດທົ່ລະນີຟີຊິກ ແລະ ການແລກປ່ຽນຄຳຄິດເຫັນ ແລະ ປະສົບການກັບອົງການຈັດຕັ້ງອື່ນໆ - ທາງດ້ານວິຊາການ ຫຼື ການປະຕິບັດງານ. ໂຄງການຈະຮັບປະກັນວ່າ ຈະນຳໃຊ້ວິທີການເກັບກູ້ລະເບີດທີ່ໄດ້ຮັບປະສິດຜົນສູງສຸດ ພ້ອມດຽວກັນນັ້ນ ກໍ່ມີຄວາມເຂົ້າໃຈຕໍ່ສະພາບການຕົກຄ້າງຂອງ ລບຕ ຢູ່ໃນ ສປປ ລາວ ທີ່ມີລັກສະນະພິເສດ. ການຄົ້ນຄ້ວາທາງດ້ານເຕັກໂນໂລຊີໃດໜຶ່ງ ອາດມີການປ່ຽນແປງປີຕໍ່ປີ ແລະ ແນໃສ່ໃຫ້ມີຄວາມຄືບໜ້າຈາກການປະຊຸມປຶກສາຫາລືຂອງກຸ່ມວິຊາການ TWG ລະຫວ່າງບັນດາອົງການປະຕິບັດງານດ້ານລະເບີດ ຊຶ່ງເປັນປະທານໂດຍຫ້ອງການ ຄຊກລ.

ອົງການເກັບກູ້ລະເບີດແຫ່ງຊາດ ຍັງຮັກສາສາຍພົວພັນກັບບັນດາກິດຈະກຳແກ້ໄຂບັນຫາ ລບຕ ນອກ ສປປ ລາວ ແລະ ພະຍາຍາມແລກປ່ຽນຄວາມຮູ້ ແລະ ປະສົບການໂຄງການກັບບັນດາໂຄງການອື່ນໆ ເຊັ່ນ: ສູນເກັບກູ້ລະເບີດເພື່ອມະນຸດສະທຳຂອງປະເທດກຳປູເຈຍ (CMAC) ແລະ ສູນເກັບກູ້ລະເບີດ ເພື່ອມະນຸດສະທຳຫວຽດນາມ. ກິດຈະກຳການປະຕິບັດງານຂອງອົງການເກັບກູ້ລະເບີດແຫ່ງຊາດ ໃນຂັ້ນແຂວງ ແລະ ລະດັບຊາດ ແມ່ນໄດ້ຮັບການສະໜັບສະໜູນຈາກອົງການ ສປຊ ເພື່ອການພັດທະນາ ທີ່ໃຫ້ການສະໜັບສະໜູນທາງດ້ານວິຊາການ.

ມີການນຳໃຊ້ເຕັກໂນໂລຊີ ທໍລະນີຟີຊິກ ຢ່າງຫຼວງຫຼາຍໃນປະເທດອື່ນໆ ແລະ ຄວາມພະຍາຍາມຈະຖືກດຳເນີນການ ເພື່ອທົດລອງນຳໃຊ້ ຢູ່ ສປປ ລາວ ໃນປີ 2013 ເພື່ອກຳນົດວ່າ ເຕັກໂນໂລຊີດັ່ງກ່າວນັ້ນເໝາະສົມກັບສະພາບແວດລ້ອມຢູ່ໃນລາວ ຫຼື ບໍ່?.

ກອບແຫຼ່ງຊັບພະຍາກອນ ແລະ ຜົນໄດ້ຮັບຂອງ ຄກລ: ມີນາ 2013 – ທັນວາ 2015
ຊື່ໂຄງການ: ການສະໜັບສະໜູນ ໂຄງການເກັບກູ້ລະເບີດແຫ່ງຊາດ
ລະຫັດ Atlas:

| ໝາກຜົນທີ່ຄາດວ່າຈະໄດ້ຮັບ | ຄາດໝາຍຂອງໝາກຜົນ ຕໍ່ (ປີ) | ກິດຈະກຳທີ່ເປັນສິ່ງຊີ້ວັດ | ປັດໃຈນຳເຂົ້າ |
|---|---|---|---|
| ຜົນໄດ້ຮັບ 2: ໂຄງການເກັບກູ້ລະເບີດແຫ່ງຊາດ ສາມາດຄຸ້ມຄອງການເກັບກູ້ລະເບີດ ແລະ ໂຄງການສຶກສາຄວາມສ່ຽງໃຫ້ແກ່ຊຸມຊົນທີ່ມີຄວາມສ່ຽງ ໄດ້ດີກວ່າເກົ່າ.<br><br>ຕົວຊີ້ວັດຜົນໄດ້ຮັບ:<br><br>ກ). ດິນບູລິມະສິດໄດ້ຖືກປົດປ່ອຍ ຊຶ່ງສອດຄ່ອງກັບຍຸດທະສາດແຫ່ງຊາດ ແລະ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ອີງຕາມບູລິມະສິດທີ່ລັດຖະບານກຳນົດໄວ້ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດພັດທະນາຊົນນະບົດ ແລະຫຼຸດຜ່ອນຄວາມທຸກຍາກໃຫ້ມີຄວາມຄືບໜ້າ.<br><br>ຂ) ກ້າວໄປສູ່ຂີດຄວາມສາມາດໃນ ການຄຸ້ມຄອງໂຄງການແບບຍືນຍົງສຳລັບ ຄກລ. | ກິດຈະກຳ 1: ປົດປ່ອຍເນື້ອທີ່ດິນທີ່ເປັນບູລິມະສິດ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ ແລະ ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານຢູ່ໃນ 9 ແຂວງ ຫຼືຫຼາຍກວ່າເພື່ອເຂົ້າເຖິງດິນທີ່ເຄີຍມີລະເບີດຕົກຄ້າງໄດ້ຢ່າງປອດໄພ ເພື່ອວັດຖຸປະສົງ ທາງດ້ານເສດຖະກິດ-ສັງຄົມ ແລະ ມະນຸດສະທຳ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງຈາກອຸບັດເຫດທີ່ ເກີດຈາກ ລບຕ ໂດຍຜ່ານໂຄງການໃຫ້ການມີກສາເພື່ອຫຼຸດຜ່ອນຄວາມສ່ຽງ. | | |
| | ກິດຈະກຳ 1 - ເກັບກູ້ລະເບີດ / ການສຳຫຼວດດ້ານວິຊາການ 20<br>ປີ 1: 3,000 ເຮັກຕາ<br>ປີ 2: 3,000 ເຮັກຕາ<br>ປີ 3: 3,000 ເຮັກຕາ | ແຂວງຫຼວງພະບາງ | ປີ 1: 724,420 ດອນລາ<br>ປີ 2: 764,127 ດອນລາ<br>ປີ 3: 802,333 ດອນລາ |
| | | ແຂວງຫົວພັນ | ປີ 1: 642,123 ດອນລາ<br>ປີ 2: 659,041 ດອນລາ<br>ປີ 3: 691,993 ດອນລາ |
| | ກິດຈະກຳທີ 2 - ການທຳລາຍເຄື່ອນທີ່<br>ປີ 1: 1,300 ຄັ້ງ<br>ປີ 2: 1,300 ຄັ້ງ<br>ປີ 3: 1,300 ຄັ້ງ | ແຂວງຊຽງຂວາງ | ປີ 1: 959,553 ດອນລາ<br>ປີ 2: 1,020,732 ດອນລາ<br>ປີ 3: 1,071,768 ດອນລາ |
| | ກິດຈະກຳທີ 3 - ການສຳຫຼວດ<br>ປີ 1: 1,500 ຄັ້ງ<br>ປີ 2: 1,500 ຄັ້ງ | ແຂວງຄຳມ່ວນ | ປີ 1: 676,824 ດອນລາ<br>ປີ 2: 764,127 ດອນລາ<br>ປີ 3: 802,333 ດອນລາ |

| | | | |
|---|---|---|---|
| ຄ) ໂຄງການໂຄສະນາສຶກສາຊຸມຊົນ, ເຂົ້າເຖິງຊຸມຊົນ, ປະເຊີນໜ້າກັບຄວາມສ່ຽງຕ່າງໆ ຂອງແມ່ຍິງ, ຜູ້ຊາຍ, ເດັກນ້ອຍ ແລະ ກຸ່ມທີ່ມີຄວາມສ່ຽງອື່ນໆ. | ປີ 3: 1,500 ຄັ້ງ<br><br>**ກິດຈະກໍາທີ 4 - ສຶກສາຄວາມສ່ຽງ**<br>ປີ 1: ລົງຢ້ຽມຢາມບ້ານ 500 ຄັ້ງ<br>ປີ 2: ລົງຢ້ຽມຢາມບ້ານ 500 ຄັ້ງ<br>ປີ 3: ລົງຢ້ຽມຢາມບ້ານ 500 ຄັ້ງ | ແຂວງສະຫວັນນະເຂດ | ປີ 1: 1,018,910 ດອນລາ<br>ປີ 2: 1,074,502 ດອນລາ<br>ປີ 3: 1,128,227 ດອນລາ |
| | | ແຂວງສາລະວັນ | ປີ 1: 841,480 ດອນລາ<br>ປີ 2: 887,749 ດອນລາ<br>ປີ 3: 932,136 ດອນລາ |
| | | ແຂວງເຊກອງ | ປີ 1: 719,077 ດອນລາ<br>ປີ 2: 759,016 ດອນລາ<br>ປີ 3: 796,966 ດອນລາ |
| | | ແຂວງຈຳປາສັກ | ປີ 1: 567,122 ດອນລາ<br>ປີ 2: 597,645 ດອນລາ<br>ປີ 3: 627,527 ດອນລາ |
| | | ແຂວງອັດຕະປື | ປີ 1: 568,535 ດອນລາ<br>ປີ 2: 627,830 ດອນລາ<br>ປີ 3: 659,221 ດອນລາ |
| | **ກິດຈະກໍາ 2:**<br>ປະເມີນ, ສ້າງຄວາມເຂັ້ມແຂງ, ແລະ ປັບປຸງຄວາມສາມາດໃນການຄຸ້ມຄອງ ຄກລ ໂດຍຜ່ານການຕອບສະໜອງການຝຶກອົບຮົມ ແລະ ການບໍລິການໃຫ້ຄໍາແນະນໍາ ແລະ ການລະດົມແຫຼ່ງຊັບພະຍາກອນທີ່ພຽງພໍໃຫ້ແກ່ ຄກລ ເພື່ອໃຫ້ ຄກລ ຫຍັບເຂົ້າຫາ ເພື່ອບັນລຸເປົ້າໝາຍພັດທະນາສະຫັດສະວັດ ອັນດັບ 9 ຂອງລັດຖະບານ ແລະ ພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ. | | |
| | ປີ 1-3:<br>ໜ່ວຍງານຕ່າງໆ ຂອງ ຄກລ ໄດ້ປະກອບພະນັກງານເຕັມອັດຕາ ແລະ ປະຕິບັດງານຢ່າງ | ຕອບສະໜອງດ້ານທຶນຮອນ ເພື່ອຮັບປະກັນວ່າ ໜ່ວຍງານຂອງ ຄກລ ປະຈໍາຢູ່ຫ້ອງການໃຫຍ່ ດັ່ງຕໍ່ໄປນີ້ ໄດ້ປະຕິບັດງານຢ່າງເຕັມ | ປີ 1: 1,020,891 ດອນລາ<br>ປີ 2: 1,110,000 ດອນລາ<br>ປີ 3: 1,165,000 ດອນລາ |

| | | | |
|---|---|---|---|
| | ເຕັມທີ.<br><br>ປີ 1-3:<br>ໜ່ວຍງານຕ່າງໆຂອງ ຄກລ ໄດ້ຮັບການຝຶກອົບຮົມກ່ຽວກັບພາລະບົດບາດຂອງຕົນໂດຍສະເພາະ ແລະ ໄດ້ຮັບການປັບປຸງຄວາມສາມາດໃນການຄຸ້ມຄອງໜ່ວຍງານຂອງພວກຕົນ.<br><br>ປີ 1-3: ຕອບສະໜອງການບໍລິການ ສະໜັບສະໜູນ ການໃຫ້ຄຳປຶກສາໂຄງການ ແລະ ການປະຕິບັດງານດ້ານວິຊາການໃຫ້ແກ່ ຄກລ.<br><br>ປີ 1: ການປະເມີນຄວາມສາມາດຂອງ ຄກລ ໄດ້ຖືກດຳເນີນການ.<br><br>ປີ 2: ຍຸດທະສາດການພັດທະນາຄວາມສາມາດໄລຍະ 3 ປີ ໄດ້ພັດທະນາຂຶ້ນ.<br><br>ປີ 2-3: ກອບວຽກການຕິດຕາມ ແລະ ປະເມີນຜົນ ໄດ້ພັດທະນາຂຶ້ນ.<br><br>ປີ 3: ຍຸດທະສາດການຫຼຸດຜ່ອນການຊ່ວຍເຫຼືອດ້ານວິຊາການໄດ້ຖືກພັດທະນາຂຶ້ນ. | **ສ່ວນ ແລະ ຕອບສະໜອງການຝຶກອົບຮົມ ທີ່ກ່ຽວຂ້ອງສະເພາະກັບພາລະບົດບາດຂອງຕົນເພື່ອປັບປຸງຄວາມສາມາດໃນການຄຸ້ມຄອງ ຄກລ.**<br>▪ ໜ່ວຍງານຄຸ້ມຄອງໂຄງການ<br>▪ ໜ່ວຍງານຄຸ້ມຄອງການປະຕິບັດງານ<br>▪ ໜ່ວຍງານສະໜັບສະໜູນ ແລະ ຈັດສະໜອງ<br>▪ ໜ່ວຍງານຄຸ້ມຄອງການເງິນ<br>▪ ໜ່ວຍງານຄຸ້ມຄອງຖານຂໍ້ມູນ<br>▪ ໜ່ວຍງານຂໍ້ມູນສາທາລະນະ<br>▪ ໜ່ວຍງານຄຸ້ມຄອງຄຸນນະພາບ<br>▪ ປຶກສາຫາລືກັບຜູ້ມີສ່ວນຮ່ວມຕ່າງໆກ່ຽວກັບຂະບວນການພັດທະນາຄວາມສາມາດ; ການປະຕິບັດໜ້າທີ່ ແລະ ໃຫ້ຄວາມກະຈ່າງແຈ້ງດ້ານໂຄງສ້າງ ແລະ ການປະຕິບັດໜ້າທີ່ຂອງ ຄກລ;<br>ໃຫ້ຄວາມກະຈ່າງແຈ້ງກ່ຽວກັບ ການສະໜັບສະໜູນຂອງ ທີ່ປຶກສາດ້ານວິຊາການຕໍ່ໜ້າທີ່ທີ່ເປັນແກນຫຼັກໃນການຄຸ້ມຄອງ ພ້ອມກັບກອບເວລາ, ຄວາມໝາຍຄວາມສຳຄັນທີ່ເໝາະສົມ.<br>▪ ປະເມີນຄວາມສາມາດ ແລະ ອອກຍຸດທະສາດ ການພັດທະນາຄວາມສາມາດໄລ | |

| | | |
|---|---|---|
| | ຍະ 3 ປີ ພ້ອມດ້ວຍກອບຂອງການຕິດຕາມ ແລະ ປະເມີນຜົນ ອີງຕາມຂີດຄວາມສາມາດພື້ນຖານທີ່ໄດ້ບົ່ງບອກໄວ້.<br>▪ ປັບປຸງຍຸດທະສາດການຊ່ວຍເຫຼືອດ້ານວິຊາການທີ່ມີຢູ່.<br>▪ ໜ່ວຍງານປ້ອງກັນ ແລະ ຟື້ນຟູວິກິດການຂອງ ອົງການ ສປຊ ເພື່ອການພັດທະນາ ຈະໃຫ້ການສະໜັບສະໜູນຕໍ່ ຄກລ ໂດຍຜ່ານການປະສານງານກັບຜູ້ໃຫ້ທຶນ ແລະ ການຮັບປະກັນທາງດ້ານຄຸນນະພາບ. | |
| **ກິດຈະກຳ ທີ 3: ຕອບສະໜອງການຝຶກອົບຮົມ ບຸກຄະລາກອນ ດ້ານການກວດກູ້ລະເບີດທັງໝົດ ເພື່ອໃຫ້ໄດ້ຕາມມາດຕະຖານແຫ່ງຊາດ.** | | |
| ປີ 1-3:<br>ແຕ່ລະປີ, ພະນັກງານໃໝ່ 75 ຄົນໄດ້ຮັບ ການຝຶກອົບຮົມ ແລະ ມີການຈັດຝຶກອົບຮົມທົບທວນຄືນ ໃຫ້ພະນັກງານປະຈຸບັນທັງໝົດ ຢ່າງເປັນປົກກະຕິ. | **ຕອບສະໜອງການຝຶກອົບຮົມໃຫ້ແກ່ບຸກຄະລາກອນດ້ານການກວດກູ້ ໃຫ້ໄດ້ຕາມມາດຕະຖານແຫ່ງຊາດ.**<br>▪ ພະນັກງານເກັບກູ້ລະເບີດ<br>▪ ຊ່ຽວຊານດ້ານການທຳລາຍລະເບີດ<br>▪ ຫົວໜ້າທີມ<br>▪ ແພດສະໜາມ<br>▪ ພະນັກງານສຳຫຼວດ<br>▪ ການຝຶກອົບຮົມອື່ນໆ ຕາມທີ່ກຳນົດໄວ້. | ປີ 1: 314,245 ດອນລາ<br>ປີ 2: 340,000 ດອນລາ<br>ປີ 3: 345,000 ດອນລາ |

| ກິດຈະກຳ ທີ 4: ທົບທວນ ແລະ ຮັບເອົາເທັກໂນໂລຢີ ທີ່ໄດ້ຮັບການປັບປຸງແລ້ວ ເພື່ອການປະຕິບັດງານ ທີ່ມີປະສິດທິພາບ ແລະ ປະສິດທິຜົນ (ນະວັດຕະກຳເທັກໂນໂລຢີ ແລະ ວິທີການ ແລະ ການປະຕິບັດງານທີ່ດີທີ່ສຸດຂອງຂະແໜງການ). | | |
|---|---|---|
| ປີ 1-3:<br>ສຳເລັດການທົດລອງນຳໃຊ້ເທັກໂນໂລທໍລະນີຟີຊິກ ເພື່ອພິຈາລະນາວ່າ ເທັກໂນໂລຢີດັ່ງກ່າວ ເໝາະສົມ ແລະ ແທດເໝາະກັບສະພາບແວດລ້ອມຂອງລາວ ຫຼື ບໍ່.<br><br>ປີ 1-3:<br>ວິທີ ແລະ ເທັກໂນໂລຢີອື່ນໆໄດ້ຮັບການສັງເກດ ແລະ ຖ້າມີຄວາມເໝາະສົມ ກໍ່ຈະຖືກທົບທວນ ແລະ ພິຈາລະນາ ເພື່ອລວມເຂົ້າໃນການປະຕິບັດງານ. | ທົບທວນ ແລະ ປະເມີນ ການທົດລອງເທັກໂນໂລຢີ ທາງດ້ານທໍລະນີວິທະຍາ.<br><br>ທົບທວນ ແລະ ດັດປັບເທັກໂນໂລຢີ ທີ່ອື່ນໆ ທີ່ໄດ້ຮັບການປັບປຸງ ເພື່ອການປະຕິບັດງານ ທີ່ມີປະສິດທິພາບ ແລະ ປະສິດທິຜົນ. | ປີ 1 : 202,931 ດອນລາ<br>ປີ 2: 215,000 ດອນລາ<br>ປີ 3: 225,000 ດອນລາ |

ຜົນຮັບລວມຍ່ອຍ 1 (ປີ 1-3) (ອີງການ ສປຊ ເພື່ອການພັດທະນາ, ການຊ່ວຍເຫຼືອສອງຝ່າຍ ແລະ ທຶນທີ່ໄດ້ຮັບ): 26,190,931 ດອນລາ

ອີງການ ສປຊ ເພື່ອການພັດທະນາ ວາງແຜນປະກອບສ່ວນ 2013-2015 (ທຶນທີ່ໄດ້ຮັບ ແລະ ທຶນທີ່ຈະຕ້ອງລະດົມ) 20,640,292 ດອນລາ

**ພາກທີ III. ການຕິກລົງ ວ່າດ້ວຍການຄຸ້ມຄອງ ແລະ ການຮ່ວມມື.**

ໂຄງການຈະໄດ້ຮັບການຄຸ້ມຄອງໂດຍສອດຄ່ອງກັບນະໂຍບາຍ ແລະ ລະບຽບການຂອງອົງການ ສປຊ ເພື່ອການພັດທະນາ ທີ່ກຳກັບດູແລການດຳເນີນງານແຫ່ງຊາດ (NIM).




**ຄະນະກຳມະການຊີ້ນຳໂຄງການ** ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອເປັນກົນໄກປຶກສາຫາລື ແລະ ອຳນວຍຄວາມສະດວກໃນການຕັດສິນໃຈ ປະຕິບັດໂຄງການ ການຮ່ວມມືສາມປີສະບັບນີ້ ລະຫວ່າງ ຄຊກລ, ຄກລ, ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ. ຄະນະກຳມະການຊີ້ນຳໂຄງການ ມີໜ້າທີ່ຕິດຕາມກວດກາຄວາມຄືບໜ້າ, ໃຫ້ທິດຊີ້ນຳໂຄງການຕາມຄວາມຕ້ອງການ ແລະ ປະເມີນຜົນສຳເລັດຢ່າງເປັນປົກກະຕິ ແລະ ການປະກອບສ່ວນເຂົ້າໃນເປົ້າໝາຍ ແລະ ຜົນຮັບຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນປະຕິບັດງານຂອງ ອູນດາຟ. ຄະນະກຳມະການຊີ້ນຳໂຄງການ ປະກອບມີພາລະບົດບາດຕ່າງໆ (ເບິ່ງຕາມໂຄງຮ່າງການຈັດຕັ້ງຢູ່ຂ້າງເທິງ) ແລະ ຕັ້ງຂຶ້ນມາເພື່ອໃຫ້ທິດຊີ້ນຳແກ່ຫົວໜ້າຄຸ້ມຄອງໂຄງການ. ບົດບາດຂອງຫົວໜ້າບໍລິຫານໂຄງການຈະຖືກເປັນເປັນຕົວແທນໂດຍຮອງປະທານ ຄຊກລ. ບົດບາດຜູ້ສະໜອງອາວຸໂສ ຈະຖືກເປັນຕົວແທນໂດຍຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາປະຈຳປະເທດ ພ້ອມດ້ວຍຕາງໜ້າຈາກອົງການຜູ້ໃຫ້ທຶນ ຊຶ່ງເປັນຕົວແທນດ້ານຜົນປະໂຫຍດຂອງຝ່າຍທີ່ກ່ຽວຂ້ອງ ຜູ້ທີ່ໃຫ້ທຶນ ແລະ/ຫຼື ນັກຊ່ຽວຊານວິຊາການປະຈຳໂຄງການ. ໜ້າທີ່ໃນເບື້ອງຕົ້ນກໍຄື ໃຫ້ທິດຊີ້ນຳກ່ຽວກັບຄວາມເປັນໄປໄດ້ຂອງໂຄງການ. ບົດບາດຂອງຜູ້ສະໜອງອາວຸໂສຈະຖືກບັນຈຸໂດຍຕາງໜ້າຂອງກຸ່ມບຸກຄົນຕ່າງໆ ຜູ້ທີ່ໄດ້ຮັບຜົນປະໂຫຍດ ໂດຍໃນທີ່ສຸດແລ້ວ ກໍຄືຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ, ຊຶ່ງອາດຈະລວມທັງຕາງໜ້າຈາກຊຸມຊົນທ້ອງຖິ່ນ ແລະ ອຳນາດການປົກຄອງແຂວງ. ໜ້າທີ່ໃນເບື້ອງຕົ້ນຂອງພວກເຂົາເຈົ້າ ກໍຄືຮັບປະກັນຄວາມເປັນຈິງຜົນໄດ້ຮັບຂອງໂຄງການຈາກທັດສະນະຂອງບັນດາຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ.

ການທົບທວນໂຄງການ ໂດຍຄະນະຊີ້ນຳ ຈະດຳເນີນເປັນປະຈຳປີ ຫຼື ຕາມເວລາເໝາະສົມ ຫຼື ເມື່ອມີຄວາມຈຳເປັນ ໂດຍສະມາຊິກຂອງຄະນະຊີ້ນຳ ແລະ ຫົວໜ້າຄຸ້ມຄອງໂຄງການ. ກອງປະຊຸມຄະນະຊີ້ນຳໂຄງການອາດຈະຖືກດຳເນີນໄປຕາມຄວາມເປັນຈິງ ເມື່ອກອງປະຊຸມຂອງສະມາຊິກພາຍໃນຫາກເປັນໄປບໍ່ໄດ້. ບົດລາຍງານທົບທວນປະຈຳປີ ຈະລວບລວມເອົາຂໍ້ມູນລະອຽດກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງການ ແລະ ຜົນສຳເລັດຂອງໂຄງການທີ່ໄດ້ຮັບ ແລະ ຜົນທີ່ອອກມາຕາມທີ່ໄດ້ສັງລວມໄວ້ຢູ່ໃນເນື້ອໃນກ່ຽວກັບກອບຊັບພະຍາກອນ ແລະ ຜົນຮັບຂອງໂຄງການ. ບົດລາຍງານ ການໃຊ້ຈ່າຍລະອຽດຈະເປັນສິ່ງຕິດຕາມກິດຈະກຳການໃຊ້ຈ່າຍຂອງໂຄງການ ແລະ ຜົນໄດ້ຮັບຕາມແຜນວຽກປະຈຳປີຂອງ ຄຊກລ ແລະ ຄກລ.

<u>ຄະນະບໍລິຫານໂຄງການ</u> ຈະດຳເນີນໜ້າທີ່ດັ່ງຕໍ່ໄປນີ້:

1. ໃຫ້ທິດຊີ້ນຳລວມແກ່ໂຄງການ;
2. ແກ້ໄຂບັນຫາຕ່າງໆຂອງໂຄງການທີ່ຫົວໜ້າຄຸ້ມຄອງໂຄງການສະເໜີຂຶ້ນມາ;
3. ໃຫ້ທິດຊີ້ນຳ ໃນການແກ້ໄຂຄວາມສ່ຽງ ແລະ ຂໍ້ຫຍຸ້ງຍາກຕ່າງໆຂອງໂຄງການ;
4. ກວດກາບົດລາຍງານຄວາມຄືບໜ້າ ພ້ອມທັງໃຫ້ທິດຊີ້ນຳ ແລະ ໃຫ້ຄຳແນະນຳ ເພື່ອຮັບປະກັນໃຫ້ໂຄງການດຳເນີນໄປຢ່າງຖືກຕ້ອງຕາມແຜນ ເພື່ອບັນລຸຜົນຕາມເວລາທີ່ກຳນົດໄວ້;
5. ກວດກາບົດສັງລວມໂຄງການ ກ່ອນການຮັບຮອງຈາກຄູ່ຮ່ວມມືຈັດຕັ້ງປະຕິບັດ;
6. ໃຫ້ຄຳແນະນຳຕໍ່ແຜນປະຕິບັດງານປະຈຳປີຂອງໂຄງການ.

ຫົວໜ້າຂອງສອງອົງການຄູ່ຮ່ວມປະຕິບັດງານ, ຄຊກລ ແລະ ຄກລ, ແມ່ນຫົວໜ້າຄຸ້ມຄອງໂຄງການ ຢູ່ໃນອົງການຈັດຕັ້ງຂອງຕົນ. ທັງສອງອົງການຈັດຕັ້ງນີ້ດຳເນີນວຽກງານພາຍໃຕ້ການດູແລຂອງຄະນະຊີ້ນຳໂຄງການ. ການຈັດແຈງຄືດັ່ງກ່າວນີ້ ຈະປະກອບສ່ວນເຮັດໃຫ້ການຮ່ວມມື ແລະ ການຈັດສັນຊັບພະຍາກອນໄດ້ດີກວ່າ ແລະ ທັງຈະເປັນການຫຼຸດຜ່ອນຕົ້ນທຶນຂອງການປະຕິບັດງານອີກດ້ວຍ.

<u>ຫົວໜ້າຄຸ້ມຄອງໂຄງການ</u> ມີໜ້າທີ່:

1. ວາງແຜນກິດຈະກຳໂຄງການ ແລະ ຕິດຕາມກວດກາຄວາມຄືບໜ້າ;
2. ຂຽນລາຍລະອຽດໜ້າວຽກ, ຈຸດພິເສດວຽກ ແລະ ລະດົມສິ່ງອຳນວຍຄວາມສະດວກ ແລະ ການບໍລິການຕາມຄວາມເໝາະສົມ;
3. ຕິດຕາມກວດກາເຫດການຕ່າງໆທີ່ລະບຸໃນຕາຕະລາງຕິດຕາມໂຄງການ ແລະ ປັບແກ້ແຜນດັ່ງກ່າວຕາມຄວາມເໝາະສົມ;
4. ຄຸ້ມຄອງທຶນທີ່ໄດ້ຮັບຈາກ ສປຊ, ການນຳໃຊ້ທຶນລ່ວງໜ້າ, ການຈ່າຍໂດຍກົງ, ຫຼື ການຈ່າຍແທນຄືນ ໂດຍໃຊ້ແບບຟອມການອະນຸມັດທຶນ ແລະ ຢັ້ງຢືນຄ່າໃຊ້ຈ່າຍ;
5. ຕິດຕາມກວດກາ ບັນຊີ ແລະ ແຫຼ່ງທຶນ ເພື່ອຮັບປະກັນຄວາມຊັດເຈນ ແລະ ຄວາມໜ້າເຊື່ອຖືຂອງບົດລາຍງານການເງິນ;
6. ກະກຽມບົດລາຍງານການເງິນ ແລະ ບົດລາຍງານຄວາມຄືບໜ້າ ສົ່ງໃຫ້ແກ່ ສປຊ ເພື່ອການພັດທະນາທຸກໆໄຕມາດ;
7. ຄວບຄຸມ ແລະ ຕິດຕາມກວດກາ ບັນດາຄວາມສ່ຽງຂອງໂຄງການທີ່ໄດ້ລະບຸໄວ້, ແຈ້ງຄະນະກຳມະການຊີ້ນຳໂຄງການຊາບກ່ຽວກັບຄວາມສ່ຽງໃໝ່, ຂໍທິດຊີ້ນຳຕາມສົມຄວນ ແລະ ຈົດບັນທຶກລົງໃນປຶ້ມບັນທຶກຄວາມສ່ຽງຂອງໂຄງການ;
8. ຄຸ້ມຄອງບັນຫາຕ່າງໆ, ການສະເໜີ ເພື່ອປ່ຽນແປງ ແລະ ປັບປຸງ ປຶ້ມບັນທຶກບັນຫາຕ່າງໆ;
9. ເຮັດບົດລາຍງານຄວາມຄືບໜ້າປະຈຳໄຕມາດ ແລະ ປະຈຳປີ ສົ່ງໃຫ້ ຄະນະກຳມະການຊີ້ນຳໂຄງການ ແລະ

ພາກສ່ວນອື່ນໆ ລວມທັງ ສປຊ ເພື່ອການພັດທະນາ;

10. ເຮັດບົດລາຍງານປະຈຳປີ ສົ່ງໃຫ້ ຄະນະກຳມະການຊີ້ນຳໂຄງການ;
11. ສ້າງແຜນວຽກປະຈຳປີ ແລະ ແຜນປະຈຳໄຕມາດ ຕາມຄວາມເໝາະສົມ;
12. ດັດແກ້ການບັນທຶກລາຍງານການຄຸ້ມຄອງໂຄງການ, ຖ້າພາຍນອກຫາກສາມາດເຂົ້າເຖິງໄດ້.

**<u>ການຮັບປະກັນໂຄງການ.</u>**

ເປັນຄວາມຮັບຜິດຊອບຂອງສະມາຊິກຄະນະຊີ້ນຳໂຄງການແຕ່ລະຄົນ ແລະ ໜ່ວຍງານຂອງອົງການ ສປຊ ເພື່ອການພັດທະນາທີ່ຮັບຊອບວຽກງານແກ້ໄຂບັນຫາ ລບຕ. ໜ່ວຍງານຮັບຜິດຊອບຂອງ ອົງການ ສປຊ ເພື່ອການພັດທະນາ, ໃນບົດບາດຂອງການຮັບປະກັນດ້ານຄຸນນະພາບນີ້ ຈະສະໜັບສະໜູນຄະນະຊີ້ນຳໂຄງການ ດ້ວຍປະຕິບັດຕາມວັດຖຸປະສົງຕ່າງໆ ແລະ ເຮັດໜ້າທີ່ຕິດຕາມກວດກາ ແລະ ດູແລໂຄງການເອກະລາດ ເພື່ອຮັບປະກັນໃນການຄຸ້ມຄອງໂຄງການໃຫ້ມີຄວາມເໝາະສົມ ແລະ ບັນລຸຮັດໝາຍທີ່ສຳຄັນຂອງໂຄງການ.

ການຮັບປະກັນໂຄງການຈະປະຕິບັດບັນດາໜ້າທີ່ດັ່ງຕໍ່ໄປນີ້:

1. ຮັບປະກັນ ໃຫ້ມີທຶນຕອບສະໜອງໃຫ້ແກ່ໂຄງການ;
2. ຮັບປະກັນວ່າ ຄວາມສ່ຽງ ແລະ ບັນຫາຕ່າງໆຈະຖືກຈັດການຢ່າງຖືກຕ້ອງ ແລະ ບັນທຶກເຂົ້າໃສ່ປື້ມຕິດຕາມພ້ອມທັງປັບປຸງຂໍ້ມູນຢ່າງປົກກະຕິ;
3. ຮັບປະກັນວ່າຂໍ້ມູນທີ່ສຳຄັນຂອງໂຄງການໄດ້ຖືກຕິດຕາມກວດກາ ແລະ ປັບປຸງເຂົ້າໃສ່ລະບົບການບັນທຶກ ATLAS, ໂດຍນຳໃຊ້ການແນະນຳທີ່ມີຢູ່ໃນລະບົບ ATLAS ໂດຍສະເພາະ.
4. ຮັບປະກັນຄວາມຄືບໜ້າຂອງໂຄງການ ເປັນໄປຕາມຜົນທີ່ຄາດຫວັງໄວ້;
5. ຮັບປະກັນວ່າບົດລາຍງານຄວາມຄືບໜ້າຂອງໂຄງການ ໄດ້ຖືກກະກຽມ ແລະ ສົ່ງໃຫ້ທັນເວລາ, ແບບຟອມການລາຍງານ ແລະ ຄຸນນະພາບຂອງເນື້ອໃນບົດລາຍງານຕ້ອງຖືກຕ້ອງຕາມມາດຕະຖານ.
6. ຮັບປະກັນວ່າບົດລາຍງານດ້ານການເງິນໄດ້ຖືກສົ່ງໃຫ້ແກ່ ອົງການ ສປຊ ເພື່ອການພັດທະນາ ທັນຕາມເວລາ, ແລະ ຮັບປະກັນວ່າ ບົດລາຍງານກ່ຽວກັບ ຜົນໄດ້ຮັບລວມຂອງໂຄງການ (CDR) ຖືກສົ່ງໃຫ້ແກ່ຄະນະຊີ້ນຳໂຄງການໃນທຸກໆໄຕມາດຫຼັງຈາກການຈັດແຈງຕ່າງໆໄດ້ສຳເລັດ ແລະ ສົ່ງບົດລາຍງານປະຈຳປີ ເມື່ອ CDR ໄດ້ຖືກພັດທະນາເປັນສະບັບສຸດທ້າຍ.
7. ປະຕິບັດກິດຈະກຳການຊີ້ນຳດູແລ, ເຊັ່ນ: ການລົງຕິດຕາມກວດກາເປັນໄລຍະ ແລະ ການດຳເນີນການກວດສອບເປັນຈຸດ.
8. ຮັບປະກັນວ່າ ຄຸນນະພາບຖານຂໍ້ມູນຂອງໂຄງການຍັງຢູ່ໃນສະພາບ “ສີຂຽວ”, ແລະ,
9. ເກັບກຳໄດ້ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດໂຄງການ.

**ການບໍລິການໃຫ້ການສະໜັບສະໜູນຂອງ ອົງການ ສປຊ ເພື່ອການພັດທະນາ.**

ອີງຕາມໜັງສືສັນຍາ (LoA) ລະຫວ່າງລັດຖະບານ ສປປ ລາວ ແລະ ອົງການ ສປຊ ເພື່ອການພັດທະນາ ກ່ຽວກັບການຕອບສະໜອງການບໍລິການໃຫ້ການສະໜັບສະໜູນ ໂດຍຫ້ອງການ ສປຊ ເພື່ອການພັດທະນາປະຈຳລາວ ສຳລັບໂຄງການທີ່ໄດ້ຈັດຕັ້ງປະຕິບັດຢູ່ໃນລະດັບຊາດ, ອົງການ ສປຊ ເພື່ອການພັດທະນາ ອາດຈະຕອບສະໜອງຕາມການສະເໜີຂອງຄູ່ຮ່ວມປະຕິບັດງານ, ການບໍລິການສະໜັບສະໜູນດັ່ງຕໍ່ໄປນີ້ ແລະ ການລົດຕົ້ນທຶນຕົວຈິງໂດຍທາງກົງ ແລະ ທາງອ້ອມ ຈະຕ້ອງເກີດຂຶ້ນ ໂດຍຫ້ອງການອົງການ ສປຊ ເພື່ອການພັດທະນາປະຈຳລາວ ໃນການໃຫ້ການບໍລິການຕາມທີ່ກຳນົດໄວ້ຢູ່ໃນໜັງສືສັນຍາ LoA:

1. ການຈ່າຍ, ການຈ່າຍແທນຄືນ ແລະ ການເຄື່ອນໄຫວທາງດ້ານການເງິນຕ່າງໆ;
2. ການຮັບພະນັກງານ, ບຸກຄະລາກອນໂຄງການ ແລະ ທີ່ປຶກສາ;
3. ການຊື້ການບໍລິການ ແລະ ອຸປະກອນ;
4. ກິດຈະກຳການຝຶກອົບຮົມຂອງອົງການ, ກອງປະຊຸມ ແລະ ສຳມະນາ, ລວມທັງສະມາຄົມຕ່າງໆ;
5. ການອະນຸມັດການເດີນທາງ, ການຊຳລະຄ່າປີ້ ແລະ ການຈັດແຈງການເດີນທາງຕ່າງໆ; ແລະ,
6. ການຂົນສົ່ງ, ການແຈ້ງພາສີ ແລະ ການຂຶ້ນທະບຽນຍານພາຫະນະ.

**ການສະໜັບສະໜູນໂຄງການ** (ພະນັກງານ ຄຊກລ ແລະ ຄກລ) ຕອບສະໜອງການບໍລິຫານໂຄງການ, ການຄຸ້ມຄອງ ແລະ ການສະໜັບສະໜູນທາງດ້ານວິຊາການໃຫ້ແກ່ຫົວໜ້າໂຄງການ.

**ການສະໜັບສະໜູນໂຄງການຈະປະຕິບັດໜ້າທີ່ດັ່ງຕໍ່ໄປນີ້:**

1. ສ້າງ ແລະ ປັບປຸງລະບົບການຈັດມ້ຽນເອກະສານໂຄງການ.
2. ເກັບກຳຂໍ້ມູນ ແລະ ຖານຂໍ້ມູນທີ່ກ່ຽວຂ້ອງກັບໂຄງການ;
3. ຊ່ວຍໜ້າວຽກຄຸ້ມຄອງການເງິນ ພາຍໃຕ້ຄວາມຮັບຜິດຊອບຂອງຫົວໜ້າໂຄງການ;
4. ຊ່ວຍຈັດກອງປະຊຸມຄະນະຊີ້ນຳໂຄງການ ແລະ ກອງປະຊຸມ/ສຳມະນາອື່ນໆ;
5. ສ້າງລະບຽບການຄຸ້ມຄອງເອກະສານໂດຍສອດຄ່ອງກັບລະບຽບການປະຕິບັດງານ (SOP);
6. ລວບລວມ, ສຳເນົາ ແລະ ແຈກຢາຍບົດລາຍງານໂຄງການທັງໝົດ;
7. ທົບທວນບົດລາຍງານດ້ານວິຊາການ;
8. ຊ່ວຍຫົວໜ້າໂຄງການໃນການຕິດຕາມກິດຈະກຳຕ່າງໆ ທີ່ປະຕິບັດໂດຍຝ່າຍທີ່ຮັບຜິດຊອບ.

**ສະຫຼຸບສັງລວມສິ່ງທີ່ນຳເຂົ້າໃນໂຄງການ ທີ່ໄດ້ຈັດສະໜອງໃຫ້ໂດຍຄູ່ຮ່ວມປະຕິບັດງານ**

ລັດຖະບານ ສປປ ລາວ ຈະຄ່ອຍໆເພີ່ມການປະກອບສ່ວນທາງດ້ານການເງິນ ເຂົ້າໃນງົບປະມານຂອງ ຄຊກລ ແລະ ຄກລ, ເລີ່ມຕົ້ນດ້ວຍມູນຄ່າໃນການປະຕິບັດງານຂອງສອງອົງການ, ລວມທັງຢູ່ຫ້ອງການຕົວແທນຢູ່ໃນລະດັບແຂວງ ແລະ ເມືອງ. ອົງການ ສປຊ ເພື່ອການພັດທະນາ ຈະມອບໝາຍແຫຼ່ງຊັບພະຍາກອນ (ທີ່ເປັນແກນຫຼັກ) ຢ່າງເປັນປົກກະຕິ ຕໍ່ຜົນຮັບ ທີ 9 (ລະເບີດບໍ່ທັນແຕກ) ພາຍໃຕ້ແຜນປະຕິບັດງານໃນອານາຄົດຂອງ ອຸນດາຟ (4 ປີ ຕ່ຳສຸດ 1.72 ລ້ານ ດອນລາອາເມເລີກາ). ຜູ້ໃຫ້ທຶນອື່ນໆຄາດວ່າຈະສະໜອງສ່ວນທີ່ເຫຼືອ ເພື່ອສະໜັບສະໜູນຕະຫຼອດໄລຍະເວລາຂອງໂຄງການ, ໂດຍຜ່ານກອງທຶນພິເສດ, ສຳລັບບາງກໍລະນີໃນກິດຈະກຳຕ່າງໆ ແລະ ສະຖານທີ່ສະເພາະໃດໜຶ່ງ. ຄາດຄະເນວ່າ ການຈັດສັນທຶນຈະເພີ່ມຂຶ້ນຢ່າງມີຄວາມໝາຍໃນຕະຫຼອດເວລາ, ຊຶ່ງຈະເປັນການຕອບສະໜອງທາງດ້ານປະສິດທິພາບ ແລະ ການປ່ຽນແປງທີ່ດີຂຶ້ນເລື້ອຍໆ.

**ຊັບສິນ:**

ຖ້າວ່າໂຄງການບໍ່ຕ້ອງການນຳໃຊ້, ຊັບສິນອາດຈະຖືກຮັກສາໄວ້ ເພື່ອນຳໃຊ້ໃນກິດຈະກຳທີ່ກ່ຽວຂ້ອງກັບໂຄງການ ຫຼື ອາດຈະໂອນໃຫ້ລັດຖະບານເພື່ອນຳໃຊ້ຢູ່ບ່ອນອື່ນ, ຂາຍ ຫຼື ບໍລິຈາກ.

**ພາກທີ V. ກອບການຕິດຕາມກວດກາ ແລະ ປະເມີນຜົນ.**

ການປະເມີນຜົນ ຊ່ວຍໃຫ້ຜູ້ຕັດສິນໃຈ ແລະ ຄູ່ຮ່ວມມື ຕີລາຄາວັດຖຸປະສົງຂອງໂຄງການໃນການປະກອບສ່ວນຕໍ່ຜົນສຳເລັດດ້ານການພັດທະນາ ອີງຕາມບັນທັດຖານ ແລະ ຄາດໝາຍທີ່ໄດ້ຕົກລົງກັນໄວ້. ກອບວຽກຕິດຕາມກວດກາ ແລະ ປະເມີນຜົນ, ລວມມີ ການທົບທວນ, ການກວດສອບບັນຊີ, ການສືບສວນ ແລະ ຄົ້ນຄວ້າ. ຈຸດປະສົງລວມ

ແມ່ນເພື່ອປະເມີນຄວາມຄືບໜ້າຂອງໂຄງການ, ບົ່ງຊີ້ບັນຫາໃນການຈັດຕັ້ງປະຕິບັດ ແລະ ແນະນໍາໃຫ້ມີການທົບທວນຄືນໂຄງການ ຫຼື ວິທີແກ້ໄຂອື່ນໆສໍາລັບບັນຫາທີ່ເກີດຂຶ້ນໃນຂະບວນການຄຸ້ມຄອງ ແລະ ປະຕິບັດໂຄງການ ໃຫ້ສອດຄ່ອງກັບວັດຖຸປະສົງລວມ ແລະ ຜົນສໍາເລັດຕາມທີ່ຕ້ອງການ.

ກອບຕິດຕາມກວດກາ ແລະ ປະເມີນຜົນໂຄງການ ແມ່ນຈະປະຕິບັດ ໂດຍສອດຄ່ອງກັບຖະແຫຼງການວຽງຈັນ ປີ 2006 ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ, ໂດຍສະເພາະ 2 ໃນ 5 ເສົາຄໍ້າຫຼັກ ຄື:

1. ຄຸ້ມຄອງຜົນໄດ້ຮັບ ແລະ
2. ຄວາມຮັບຜິດຊອບຮ່ວມກັນ

ການຕິດຕາມ ແລະ ປະເມີນຜົນໂຄງການ ແມ່ນອົງປະກອບທີ່ສໍາຄັນຂອງການຈັດຕັ້ງປະຕິບັດໂຄງການ. ສິ່ງຕ່າງໆເຫຼົ່ານີ້, ມັນໄດ້ຕອບສະໜອງກາລະໂອກາດໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດທັງຫຼາຍ ແລະ ເປັນການສົ່ງເສີມຄວາມເປັນເຈົ້າຂອງກິດຈະກໍາ ແລະ ເປັນເຈົ້າຂອງຜົນໄດ້ຮັບ, ແລະ ເພື່ອສືບຕໍ່ບໍາລຸງຮັກສາວັດທະນະທໍາໃນການຕິດຕາມກວດກາທີ່ມີປະສິດທິຜົນ ຢູ່ພາຍໃນ ຄຊກລ ແລະ ຄກລ.

**ແຜນວຽກປະຈໍາປີ**

ມີຄວາມສໍາຄັນເພື່ອຊ່ວຍວຽກງານຕິດຕາມ ກວດກາໃຫ້ມີປະສິດທິຜົນ, ຊຶ່ງໃນແຜນປະຈໍາປີ ແມ່ນໄດ້ລະບຸລາຍລະອຽດຕ່າງໆທີ່ແຕ່ລະໂຄງການຕ້ອງການເຮັດໃຫ້ສໍາເລັດໃນແຕ່ລະປີຕາມໄລຍະເວລາຂອງໂຄງການ.

ໂດຍສອດຄ່ອງກັບນະໂຍບາຍຂອງແຜນງານ ແລະ ລະບຽບການທີ່ໄດ້ສັງລວມໄວ້ຢູ່ໃນຄູ່ມືມາດຕະຖານການປະຕິບັດງານ (NIM) ຂອງອົງການສະຫະປະຊາຊາດເພື່ອການພັດທະນາ, ໂຄງການຈະຖືກຕິດຕາມກວດກາໂດຍຜ່ານວິທີການດັ່ງຕໍ່ໄປນີ້:

<u>ພາຍໃນຮອບປີ.</u>

1. ໃນແຕ່ລະໄຕມາດ, ບົດປະເມີນຄຸນນະພາບ ຄວນຈະບັນທຶກຄວາມຄືບໜ້າ ຈົນເຖິງໄລຍະສໍາເລັດຂອງໜ້າວຽກສໍາຄັນ ອີງຕາມບັນທັດຖານດ້ານຄຸນນະພາບ ແລະ ວິທີການທີ່ລະບຸໃນ <u>ຕາຕະລາງຄຸ້ມຄອງຄຸນນະພາບ;</u>
2. ປຶ້ມບັນທຶກບັນຫາຕ້ອງໄດ້ປັບປຸງ, ບັນທຶກຂໍ້ມູນຫຼ້າສຸດໃສ່ ໂດຍຫົວໜ້າໂຄງການ ເພື່ອສະດວກໃນການຕິດຕາມ ແລະ ການແກ້ໄຂບັນຫາທີ່ອາດຈະເກີດຂຶ້ນ ຫຼື ການສະເໜີເພື່ອໃຫ້ມີການປ່ຽນແປງ;
3. ອີງຕາມບົດວິເຄາະຄວາມສ່ຽງທໍາອິດທີ່ຍື່ນໄປ, ປຶ້ມບັນທຶກຄວາມສ່ຽງ ຕ້ອງໄດ້ຂຽນຂໍ້ມູນໃໝ່ສຸດໃສ່ ຢ່າງປົກກະຕິ ໂດຍການເບິ່ງທົບທວນຄືນສະພາບແວດລ້ອມພາຍນອກ, ຊຶ່ງອາດຈະມີຜົນກະທົບຕໍ່ການຈັດຕັ້ງປະຕິບັດໂຄງການ;
4. ອີງຕາມຂໍ້ມູນທີ່ບັນທຶກລົງໃນປຶ້ມບັນທຶກທີ່ກ່າວມາຂ້າງເທິງນັ້ນ, ຫົວໜ້າໂຄງການ ຕ້ອງສົ່ງ<u>ບົດລາຍງານຄວາມຄືບໜ້າໂຄງການ</u> ປະຈໍາໄຕມາດ ໃຫ້ຄະນະກໍາມະການຊີ້ນໍາໂຄງການ ໂດຍນໍາໃຊ້ແບບຟອມລາຍງານມາດຕະຖານ ຊຶ່ງຂຽນໄວ້ໃນບົດສະຫຼຸບໂດຍສັງເຂບ.
5. <u>ປຶ້ມບັນທຶກບົດຮຽນໂຄງການ</u> ຕ້ອງຂຽນຂໍ້ມູນໃໝ່ສຸດໃສ່ຢ່າງເປັນປົກກະຕິ ເພື່ອຮັບປະກັນການຮຽນຮູ້ ແລະ ປັບຕົວຢ່າງຕໍ່ເນື່ອງ ແລະ ເພື່ອອໍານວຍຄວາມສະດວກໃຫ້ການຂຽນບົດລາຍງານໃນໄລຍະທ້າຍໂຄງການ;
6. <u>ແຜນຕາຕະລາງຕິດຕາມກວດກາ</u>ໂຄງການ ຕ້ອງຂຽນຂໍ້ມູນໃໝ່ສຸດໃສ່ໃນປຶ້ມບັນທຶກເພື່ອຕິດຕາມໜ້າວຽກ/ເຫດການຄຸ້ມຄອງທີ່ສໍາຄັນ;

ປະຈຳປີ.

- **ບົດລາຍງານທົບທວນຄືນປະຈຳປີ:**
  ບົດລາຍງາຍທົບທວນປະຈຳປີ ຈະຖືກກະກຽມໂດຍຫົວໜ້າໂຄງການ ແລະ ສົ່ງໃຫ້ຄະນະກຳມະການຊີ້ນຳໂຄງການ. ເງື່ອນໄຂຕ່ຳສຸດຂອງບົດລາຍງານທົບທວນປະຈຳປີ ຕ້ອງປະກອບດ້ວຍການລາຍງານທີ່ໄດ້ຕາມມາດຕະຖານແບບຟອມຂອງບົດບັນທຶກລາຍງານ (ATLAST) ປະຈຳໄຕມາດ, ຊຶ່ງກວມເອົາຂໍ້ມູນໃໝ່ສຸດຕະຫຼອດປີຂອງແຕ່ລະອົງປະກອບຂອງບົດລາຍງານປະຈຳໄຕມາດ ພ້ອມທັງບົດສະຫຼູບຜົນສຳເລັດເມື່ອທຽບໃສ່ເປົ້າໝາຍແຕ່ລະປີທີ່ກຳນົດໄວ້.

- **ການທົບທວນໂຄງການປະຈຳປີ:**
  ອີງຕາມບົດລາຍງານທີ່ກ່າວມາເທິງນີ້, ກອງປະຊຸມທົບທວນໂຄງການປະຈຳປີ ຈະໄດ້ຈັດຂຶ້ນໃນໄຕມາດທີ 4 ຂອງປີ ຫຼື ຊ້າກ່ວານັ້ນເລັກນ້ອຍ ເພື່ອປະເມີນຜົນງານໂຄງການ ແລະ ເພື່ອຮັບຮອງແຜນວຽກສຳລັບປີຕໍ່ໄປ. ໃນປີສຸດທ້າຍຂອງໂຄງການ, ການທົບທວນນີ້ ຈະເປັນການປະເມີນຜົນສຸດທ້າຍ ແລະ ສາມາດໃຫ້ພາກສ່ວນກ່ຽວຂ້ອງອື່ນໆເຂົ້າຮ່ວມໄດ້ ຂຶ້ນກັບການພິຈາລະນາຂອງຄະນະກຳມະການຊີ້ນຳໂຄງການ. ການທົບທວນດັ່ງກ່າວຈະສຸມໃສ່ເບິ່ງຄືນຄວາມຄືບໜ້າ ທຽບໃສ່ຜົນໄດ້ຮັບທີ່ກຳນົດໄວ້ ແລະ ປະເມີນວ່າຜົນທີ່ຕາມມາຈະມີອັນໃດ.

**ການກວດສອບບັນຊີ.**

ໂຄງການຈະໄດ້ຮັບການກວດສອບບັນຊີທຸກໆປີ ໂດຍສອດຄ່ອງກັບນະໂຍບາຍ ແລະ ຂັ້ນຕອນການກວດສອບບັນຊີການປະຕິບັດໂຄງການຂອງ ສປຊ (UNDP NIM) ທີ່ລະບຸໃນບົດແນະນຳ ວ່າດ້ວຍມາດຕະຖານການປະຕິບັດໂຄງການຂອງ ສປຊ ຢູ່ ສປປ ລາວ.

**ການຕົກລົງກ່ຽວກັບສິດທິ ຊັບສິນທາງປັນຍາ ແລະ ການນຳໃຊ້ເຄື່ອງໝາຍຂອງໂຄງການ ທີ່ສົ່ງມອບ.**

ສິດດັ່ງກ່າວຈະໄດ້ຖືກສະຫງວນໄວ້ໂດຍອົງການຈັດຕັ້ງທີ່ວ່າຈ້າງບຸກຄະລາກອນຜູ້ທີ່ສ້າງຜະລິດຕະພັນທາງດ້ານປັນຍາ; ບໍ່ວ່າຈະເປັນລັດຖະບານ ຫຼື ອົງການ ສປຊ ຫຼື ອົງການ ສປຊ ເພື່ອການພັດທະນາ ໂດຍສອດຄ່ອງກັບລະບຽບການ ແລະ ນະໂຍບາຍ ຂອງອົງການ ສປຊ ເພື່ອການພັດທະນາ ແລະ ອົງການ ສປຊ.

**ພາກທີ V - ສະພາບທາງດ້ານກົດໝາຍ.**

ເອກະສານສະບັບນີ້ ພ້ອມດ້ວຍ ແຜນປະຕິບັດງານ ອູນດາຟ ໄດ້ເຊັນໂດຍລັດຖະບານ ແລະ ລະບົບຂອງອົງການ ສປຊ ຢູ່ໃນ ສປປ ລາວ ຊຶ່ງຖືກລວມເອົາທັງ ການອ້າງອີງ, ເປັນເອກະສານໂຄງການ ຕາມທີ່ໄດ້ອ້າງອີງໄວ້ຢູ່ໃນຂໍ້ຕົກລົງວ່າດ້ວຍມາດຕະຖານຂັ້ນພື້ນຖານຂອງການຊ່ວຍເຫຼືອ (SBAA). ທີ່ປະກອບດ້ວຍ ມາດຕາ III ຂອງສັນຍາດັ່ງກ່າວ, ຄວາມຮັບຜິດຊອບຕໍ່ຄວາມໝັ້ນຄົງ ແລະ ຄວາມປອດໄພຂອງຄູ່ປະຕິບັດງານ ລວມທັງຊັບສິນ ແລະ ບຸກຄະລາກອນ ແລະ ຊັບສິນຂອງອົງການ ສປຊ ເພື່ອການພັດທະນາ, ທີ່ຢູ່ໃນຄວາມດູແລຮັກສາຂອງຄູ່ຮ່ວມປະຕະບັດງານ. ຄູ່ຮ່ວມປະຕິບັດງານຄວນຈະ:

1. ວາງແຜນຄວາມໝັ້ນຄົງທີ່ເໝາະສົມ ແລະ ຮັກປັບປຸງແຜນຄວາມໝັ້ນຄົງດັ່ງກ່າວ, ໂດຍຄຳນຶງເຖິງສະຖານະການດ້ານຄວາມໝັ້ນຄົງໃນປະເທດທີ່ໂຄງການກຳລັງຈັດຕັ້ງປະຕິບັດງານຢູ່;
2. ສັນນິຖານຄວາມສ່ຽງ ແລະ ໜີ້ສິນຕ່າງໆທີ່ພົວພັນກັບຄວາມໝັ້ນຄົງຂອງຄູ່ຮ່ວມປະຕິບັດງານ ແລະ ການຈັດຕັ້ງປະຕິບັດເຕັມສ່ວນຕໍ່ແຜນຄວາມໝັ້ນຄົງນັ້ນ.

ອົງການ ສປຊ ເພື່ອການພັດທະນາສະຫງວນສິດ ເພື່ອພິສູດວ່າແຜນດັ່ງກ່າວໄດ້ຖືກນຳມາໃຊ້ແທນທີ່, ແລະ ເພື່ອແນະນຳການປັບປຸງແກ້ໄຂແຜນດັ່ງກ່າວຖ້າມີຄວາມຈຳເປັນ. ຄວາມຫຼົ້ມເຫຼວໃນການເສີມສ້າງ ແລະ ການຈັດຕັ້ງປະຕິບັດແຜນຄວາມໝັ້ນຄົງທີ່ເໝາະສົມຕາມຄວາມຮຽກຮ້ອງຕ້ອງການ ພາຍໃຕ້ຂໍ້ຕົກລົງນີ້ຈະຖືວ່າເປັນການຝ່າຝືນຕໍ່ຂໍ້ຕົກລົງສະບັບນີ້.

ຄູ່ຮ່ວມປະຕິບັດຕົກລົງຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນທັງໝົດ ເພື່ອຮັບປະກັນວ່າ ທຶນຂອງອົງການ ສປຊ ເພື່ອການພັດທະນາ ທີ່ລະບຸຢູ່ໃນສັນຍາໂຄງການສະບັບນີ້ຈະບໍ່ຖືກໃຊ້ເຂົ້າໃນການສະໜັບສະໜູນສ່ວນບຸກຄົນ ຫຼື ນິຕິບຸກຄົນ ທີ່ກ່ຽວຂ້ອງກັບການກໍ່ການຮ້າຍ, ແລະ ຜູ້ຮັບທຶນຈຳນວນໃດຈຳນວນໜຶ່ງ ທີ່ສະໜອງໃຫ້ໂດຍ ອົງການສະຫະປະຊາຊາດ ເພື່ອການພັດທະນາ ພາຍໃຕ້ສັນຍາສະບັບນີ້ ຈະບໍ່ປາກົດຢູ່ໃນບັນຊີ ທີ່ໄດ້ປັບປຸງໂດຍ ຄະນະກຳມະການສະພາຄວາມໝັ້ນຄົງ ອົງຕາມມະຕິຕົກລົງ ສປຊ ເລກທີ 1267 (1999). ສາມາດເຂົ້າເບິ່ງບັນຊີລາຍຊື່ດັ່ງກ່າວໄດ້ທີ່ http://www.un.org/Docs/sc/committees /1267/1267 ListEng.htm. ຂໍ້ກຳນົດນີ້ຈະຕ້ອງຖືກລວມຢູ່ໃນສັນຍາຍ່ອຍ ຫຼື ຂໍ້ຕົກລົງຍ່ອຍ ທັງໝົດ ທີ່ນຳເຂົ້າມາຢູ່ໃນສັນຍາສະບັບນີ້.

**ພາກ VI - ຄວາມສ່ຽງ ແລະ ການຫຼຸດຜ່ອນຄວາມສ່ຽງ.**

**ຄວາມສ່ຽງ I.**

ການສະໜັບສະໜູນດ້ານການເງິນທີ່ບໍ່ພຽງພໍຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນວຽກງານຂອງ ຄຊກລ ແລະ ຄກລ, ເປັນຜົນເຮັດໃຫ້ ທັງສອງອົງການສືບຕໍ່ຂຶ້ນກັບການຊ່ວຍເຫຼືອຈາກຜູ້ໃຫ້ທຶນສາກົນ.

**ຍຸດທະສາດການຫຼຸດຜ່ອນຄວາມສ່ຽງ:**

ລັດຖະບານ ແຫ່ງ ສປປ ລາວ ຈຳເປັນຕ້ອງໄດ້ວາງບູລິມະສິດສູງ ຕໍ່ຂະແໜງ ແກ້ໄຂບັນຫາ ລບຕ ແລະ ເພື່ອສ້າງກິດຈະກຳການແກ້ໄຂບັນຫາ ລບຕ ເຂົ້າໃນງົບປະມານ ແລະ ແຜນພັດທະນາແຫ່ງຊາດ. ໃນເວລາດຽວກັນ, ຜູ້ໃຫ້ທຶນກໍຖືກຮຽກຮ້ອງ ເພື່ອໃຫ້ເພີ່ມການປະກອບສ່ວນຕໍ່ກິດຈະກຳຂອງໂຄງການ ເພື່ອເລັ່ງລັດອັດຕາການກວດກູ້.

**ຄວາມສ່ຽງ II.**

ຄວາມສັບຊ້ອນໃນການປະຕິບັດ ຕາມຄວາມສາມາດຂອງຫ້ອງການ ຄຊກລ ແລະ ຄກລ ສາມາດຍັບຢັ້ງຄວາມມີປະສິດທິຜົນ ໃນການບັນລຸໜ້າທີ່ ທີ່ໄດ້ຮັບມອບໝາຍຂອງພວກຕົນ.

**ຍຸດທະສາດການແກ້ໄຂ:**

ຫ້ອງການ ຄຊກລ ແລະ ຄກລ ຈະມີການປະເມີນຕົນເອງຢ່າງລະອຽດໃນປີທຳອິດຂອງໂຄງການ ແລະ ຈະພັດທະນາ ແລະ ປະຕິບັດແຜນການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອຮັບປະກັນໃຫ້ມີຄວາມສາມາດ ແລະ ເຮັດສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ຄວາມສ່ຽງ III.**

ອຳນາດການປົກຄອງ ລະດັບແຂວງ ແລະ ເມືອງ ແລະ ອົງການປະຕິບັດງານ ອາດຈະຍັງບໍ່ພ້ອມທີ່ຈະຮັບເອົາແບວທາງການວາງແຜນການ ແລະ ຈັດລຽງບູລິມະສິດ ກິດຈະກຳການກວດກູ້ ຈາກສູນກາງ ລົງສູ່ທ້ອງຖິ່ນ ໂດຍ ຄຊກລ.

**ຍຸດທະສາດການແກ້ໄຂ:**

ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຄຊກລ ລະບຸໄວ້ໃນຍຸດທະສາດ ເສັ້ນທາງສູ່ຄວາມປອດໄພ II ຈະຖືກສື່ສານຢ່າງຈະແຈ້ງ ຕໍ່ທຸກລະດັບຂອງພາກລັດ ແລະ ອົງການປະຕິບັດງານຕ່າງໆ. ນອກຈາກນັ້ນ ຄຊກລ ຈະສ້າງແຜນວຽກປະຈຳປີ ແລະ ຫຼາຍປີຈົນເຖິງປີ 2020 ໂດຍຈະຮ່ວມມືຢ່າງໃກ້ຊິດກັບພາກສ່ວນກ່ຽວຂ້ອງຕ່າງໆ ເຊັ່ນ: ອຳນາດການປົກຄອງ ເມືອງ, ແຂວງ, ກະຊວງ, ອົງການ ສປຊ ເພື່ອການພັດທະນາ ແລະ ກຸ່ມຜູ້ໃຫ້ທຶນ. ພາກສ່ວນ ຄຊກລ

ເອງ, ຈະເປີດກ້ວາງ ແລະ ປຶກສາຫາລືກັບຜູ້ມີສ່ວນຮ່ວມທັງໝົດ ແລະ ຈະພິຈາລະນາ ເຖິງໜ້າທີ່ ທີ່ໄດ້ຮັບມອບໝາຍຂອງຕົນ ໃນການຕິດຕາມກວດກາຂໍ້ຜູກພັນທາງສັນຍາ, ແລະ ຄວາມສາມາດ ຂອງອົງການປະຕິບັດງານຕ່າງໆ, ພ້ອມທັງພິຈາລະນາປັດໄຈອຳນວຍຄວາມສະດວກຕ່າງໆ ໃນເວລາໃຫ້ທິດຊີ້ນຳ ແລະ/ຫຼື ມອບໝາຍໜ້າທີ່.

ຄວາມສ່ຽງ IV.
ກິດຈະກຳເກັບກູ້ລະເບີດບາງແຫ່ງ ອາດຈະຕິດພັນກັບໂຄງການພັດທະນາ ທີ່ຈະເຮັດໃຫ້ມີການຍົກຍ້າຍປະຊາຊົນໄປຕັ້ງພູມລຳເນົາໃໝ່, ໂດຍສະເພາະແມ່ນ ກຸ່ມປະຊາຊົນຜູ້ດ້ອຍໂອກາດ, ການປະຕິບັດຕໍ່ປະຊາຊົນກຸ່ມນີ້ ອາດຈະບໍ່ບັນລຸໄດ້ຕາມມາດຕະຖານທີ່ລັດຖະບານວາງອອກ.

ຍຸດທະສາດການແກ້ໄຂ:
(i). ລັດຖະບານ ສປປ ລາວ ມີພັນທະໃນການຍົກຍ້າຍປະຊາຊົນໄປຕັ້ງພູມລຳເນົາໃໝ່ ໃຫ້ສອດຄ່ອງກັບລະບຽບກົດໝາຍ, ໂດຽສະເພາະແມ່ນດຳລັດເລກທີ່ 192/ນຍ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍໄປຕັ້ງພູມລຳເນົາໃໝ່ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ;
(ii). ອົງການ ສປຊ ເພື່ອການພັດທະນາ ມີພັນທະໃຫ້ການຊ່ວຍເຫຼືອເພີ່ມທະວີການພັດທະນາວິທີການຕິດຕາມກວດກາ ເຊັ່ນ: ການປະເມີນຜົນກະທົບຫຼັງການເກັບກູ້, ຊຶ່ງກ່ອນອື່ນໝົດ ແມ່ນສ້າງຄວາມໂປ່ງໃສຕໍ່ບັນຫາສິດນຳໃຊ້ທີ່ດິນ ແລະ ເພີ່ມຄວາມສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

ຄວາມສ່ຽງ V.
ອາດຈະບໍ່ມີໂອກາດທີ່ເໝາະສົມ ສຳລັບຜູ້ໃຫ້ທຶນ ແລະ ອົງການປະຕິບັດງານຕ່າງໆ ທີ່ຈະຍົກບັນຫາ ແລະ ສົນທະນາຄວາມສົນໃຈຕ່າງໆ ກັບພາກລັດຖະບານ ຕະຫຼອດໄລຍະເວລາຂອງໂຄງການ.

ຍຸດທະສາດການແກ້ໄຂ:
ນອກຈາກກອງປະຊຸມກຸ່ມວິຊາການ ແລະ ຂະແໜງການແລ້ວ, ຄຊກລ ຍັງຈະດຳເນີນກອງປະຊຸມປະຈຳເດືອນກັບອົງການປະຕິບັດງານ ແລະ ຈະຈັດກອງປະຊຸມ ເວທີນະໂຍບາຍ ປະຈຳເຄິ່ງປີ ຊຶ່ງຈະລວມມີທັງ ຜູ້ໃຫ້ທຶນ ແລະ ອົງການປະຕິບັດງານເຂົ້າຮ່ວມ ເພື່ອເປີດໂອກາດໃຫ້ທຸກພາກສ່ວນໄດ້ສົນທະນາບັນຫາຕ່າງໆຢ່າງກວ້າງຂວາງ ແລະ ພ້ອມທັງນຳສະເໜີບັນຫາທີ່ກ່ຽວຂ້ອງອື່ນໆ.

ຄວາມສ່ຽງ VI.
ຜູ້ໃຫ້ທຶນ ແລະ ອົງການປະຕິບັດງານ ອາດຈະບໍ່ໄດ້ຮັບໂອກາດພຽງພໍ ເພື່ອຍົກບັນຫາ ແລະ ສົນທະນາ ກ່ຽວກັບຂໍ້ກັງວົນໃຈຕ່າງໆ ນຳລັດຖະບານຕະຫຼອດໄລຍະໂຄງການ.

ວິທີແກ້ໄຂ:
ນອກຈາກກອງປະຊຸມວິຊາການ ແລະ ຂະແໜງການແລ້ວ, ຄຊກລ ຈະຈັດປະຊຸມປະຈຳເດືອນ ກັບອົງການປະຕິບັດງານຕ່າງໆ ແລະ ຈະຈັດກອງປະຊຸມດ້ານນະໂຍບາຍ ປະຈຳເຄິ່ງປີ, ຊຶ່ງຈະມີທັງຜູ້ໃຫ້ທຶນ ແລະ ອົງການປະຕິບັດງານຕ່າງໆ ເຂົ້າຮ່ວມ ເພື່ອສົນທະນາກ່ຽວກັບບັນຫາຕ່າງໆ ຢ່າງເປີດເຜີຍ ແລະ ແກ້ໄຂຂໍ້ກັງວົນໃຈ.

ຄວາມສ່ຽງ VII.
ສປປ ລາວ ບໍ່ສາມາດປະຕິບັດໄດ້ຕາມພັນທະສັນຍາທີ່ລະບຸໃນ ສົນທິສັນຍາວ່າດ້ວຍ ການເກືອດຫ້າມລະເບີດລູກຫວ່ານໄດ້ໝົດ.

**ຍຸດທະສາດການແກ້ໄຂ:**

ສປປ ລາວ ຈຳເປັນຕ້ອງພັດທະນາແຜນການ 10 ປີ ເພື່ອທຳໜ້າທີ່ເປັນ ຜູ້ວັດແທກຄວາມຄືບໜ້າໃນການຕິດຕາມການປະຕິບັດພັນທະຂອງຕົນຕໍ່ບັນດາເປົ້າໝາຍທີ່ຕັ້ງໄວ້ ແລະ ຕໍ່ພັນທະ ແລະ ຂໍ້ຜູກພັນຕ່າງໆໂດຍລັດພາຄີອື່ນໆ, ເພື່ອການພິຈາລະນາຂະຫຍາຍເວລາສິ້ນສຸດການກວດກູ້ ຊຶ່ງຈຳເປັນຕ້ອງໄດ້ຮູ້. ສປປ ລາວ ຍັງຈຳເປັນຕ້ອງໄດ້ເພີ່ມການປະກອບສ່ວນຂອງຕົນເຂົ້າໃນຂະແໜງການ ແລະ ເພື່ອດຳເນີນການປຸກລະດົມຂົນຂວາຍຊອກແຫຼ່ງທຶນຈາກພາຍນອກ ເພື່ອມາສະໜັບສະໜູນການເລັ່ງລັດ ແລະ ຂະຫຍາຍກິດຈະກຳການກວດກູ້ ເພື່ອໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້ຢູ່ໃນເສັ້ນທາງກ້າວສູ່ຄວາມປອດໄພ II. ເພື່ອຮັບປະກັນໃຫ້ສອດຄ່ອງກັບພັນທະຜູກພັນກ່ຽວກັບການກວດກູ້ ພາຍໃຕ້ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ສປປ ລາວ ແນ່ນອນຈະຕ້ອງໄດ້ຂະຫຍາຍໄລຍະເວລາຂອງການກວດກູ້ອອກໄປອີກຕາມຄວາມຈຳເປັນ ແລະ ໃນລັກສະນະທີ່ມີການກຳນົດຂອບເຂດເວລາທີ່ແນ່ນອນຈົນກວ່າໜ້າວຽກກວດກູ້ສຳເລັດ. ສປປ ລາວ ຍັງຈະຕ້ອງພະຍາຍາມໃຫ້ເຖິງທີ່ສຸດ ເພື່ອທີ່ຈະບັນລຸພັນທະທັງໝົດຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ລວມທັງການບັນລຸຄວາມຕ້ອງການຕ່າງໆຂອງຜູ້ເຄາະຮ້າຍ, ລວມມີການພັດທະນາ ແລະ ການຈັດຕັ້ງປະຕິບັດຍຸດທະສາດການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ການປັບປຸງການເກັບກຳຂໍ້ມູນ, ການນຳເຂົ້າ ແລະ ນຳໃຊ້ຖານຂໍ້ມູນ ເພື່ອຍົກສູງການປິ່ນປົວ ແລະ ການຟື້ນຟູສຸຂະພາບ ແລະ ການດຳລົງຊີວິດຂອງພວກເຂົາເຈົ້າ.

**ຄວາມສ່ຽງ VIII.**

ການປ່ຽນແປງໃນການຈັດຕັ້ງ ຫຼື ຕຳແໜ່ງສຳຄັນຂອງ ຄຊກລ ຫຼື ຄກລ ອາດເຮັດໃຫ້ການປະຕິບັດງານບໍ່ຕໍ່ເນື່ອງ.

**ຍຸດທະສາດໃນການແກ້ໄຂ:**

ລັດຖະບານ ສປປ ລາວ ຈະຮັບປະກັນການຂ້າມຜ່ານໃນການພັດທະນາປັບປຸງໂຄງຮ່າງການຈັດຕັ້ງດັ່ງກ່າວນັ້ນດ້ວຍຄວາມຮຽບຮ້ອຍ, ອີງການ ສປຊ ເພື່ອການພັດທະນາຈະອຳນວຍຄວາມສະດວກ ໃຫ້ແກ່ການປ່ຽນແປງດັ່ງກ່າວ ແລະ ສົນທະນາດ້ວຍຄວາມເປີດເຜີຍ ແລະ ປົກກະຕິ ເພື່ອນຳສະເໜີຄວາມສົນໃຈຕ່າງໆຂອງຄູ່ຮ່ວມງານກ່ຽວຂ້ອງກັບບັນຫາດັ່ງກ່າວນີ້.

(ກະລຸນາເບິ່ງເອກະສານຊ້ອນທ້າຍ I ປຶ້ມບັນທຶກຄວາມສ່ຽງສຳລັບຂໍ້ມູນເພີ່ມເຕີມ ລວມທັງການປະເມີນຈຳນວນຄວາມໜ້າຈະເປັນໄປໄດ້ສຳລັບຄວາມສ່ຽງ).

## ພາກ VII - ເອກະສານຊ້ອນທ້າຍ

*ເອກະສານຊ້ອນທ້າຍ 1: ປຶ້ມບັນທຶກຄວາມສ່ຽງ.*

*ເອກະສານຊ້ອນທ້າຍ 2: ການຄວບຄຸມຄຸນນະພາບ ເພື່ອຜົນສໍາເລັດຂອງກິດຈະກໍາໂຄງການ.*

*ເອກະສານຊ້ອນທ້າຍ 3: ແຜນວຽກປະຈໍາປີ 2013 ຂອງ ຄຊກລ.*

*ເອກະສານຊ້ອນທ້າຍ 4: ແຜນວຽກປະຈໍາປີ 2013 ຂອງ ຄກລ.*

*ເອກະສານຊ້ອນທ້າຍ 5: ສະມາຊິກຄະນະຊີ້ນໍາ ຫ້ອງການ ຄຊກລ.*

*ເອກະສານຊ້ອນທ້າຍ 6: ລັດຖະບານ ສປປ ລາວ: ວັດຖຸປະສົງຍຸດທະສາດ ສໍາລັບຂະແໜງການ ລບຕ ແລະ ບັນດາ ກິດຈະກໍາຫຼັກ.*

*ເອກະສານຊ້ອນທ້າຍ 7: ບົດປະເມີນຜົນ ຂອງ ອົງການ ສປຊ ເພື່ອການພັດທະນາ ຕໍ່ຂະແໜງການ ລບຕ ໃນ ສປປ ລາວ ປະຈໍາປີ 2003-2011: ຂໍ້ສັງເກດການ ແລະ ຂໍ້ແນະນໍາຫຼັກ.*

*ເອກະສານຊ້ອນທ້າຍ 8: ລາຍລະອຽດໜ້າວຽກ ສໍາລັບ ຫົວໜ້າຫ້ອງການ ຄຊກລ.*

*ເອກະສານຊ້ອນທ້າຍ 9: ລາຍລະອຽດໜ້າວຽກ ສໍາລັບ ຫົວໜ້າ ຄກລ.*

ເອກະສານຊ້ອນທ້າຍ 1: ປຶ້ມບັນທຶກກ່ຽວກັບຄວາມສ່ຽງ

ຄວາມອາດຈະເປັນໄປໄດ້ = P (1 ແມ່ນ ຕ່ຳ ແລະ 5 ແມ່ນ ສູງ)
ຜົນກະທົບ = I (1 ແມ່ນ ຕ່ຳ ແລະ 5 ແມ່ນ ສູງ)

| ຄຳອະທິບາຍ | ວັນທີລະບຸ | ປະເພດ | ຜົນກະທົບ ແລະ ຄວາມເປັນໄປໄດ້ | ມາດຕະການຕອບໂຕ້/ການຕອບໂຕ້ ຈາກຄະນະກຳມະການຊີ້ນຳ | ເຈົ້າຂອງ | ສິ່ງ ແກ້ ໄຂ ໂດຍ | ແກ້ໄຂ ສຸດ ທ້າຍ | ສະຖາ ນະພາບ |
|---|---|---|---|---|---|---|---|---|
| ການສະໜັບສະໜູນດ້ານການເງິນທີ່ບໍ່ ພຽງພໍ ຈາກລັດຖະບານ, ແລະ ຄຊກລ/ຄກລ ສືບຕໍ່ຂຶ້ນກັບການ ປະກອບສ່ວນຊ່ວຍເຫຼືອຈາກຜູ້ໃຫ້ ທຶນສູງ. | ມື້ເລີ່ມ ໂຄງການ | ການເງິນ | P = 4<br>I = 5 | ເພີ່ມການປະກອບສ່ວນຂອງລັດຖະບານ ລາວ ເຂົ້າໃນຂະແໜງການ ລບຕ , ພ້ອມ ທັງສືບຕໍ່ທຶນຈາກຜູ້ໃຫ້ທຶນເພື່ອສະໜັບ ສະໜູນຫຍາຍກິດຈະກຳໃນໄລຍະຕໍ່ໄປ. ຕ້ອງ ການ ການປະກອບສ່ວນເປັນໄລຍະ ເວລາຫຼາຍປີ. | ຫ້ອງການ ຄຊກລ ແລະ ຄກລ, ລັດຖະ ບານ ສປປ ລາວ | | ທັນວາ 2012 | ບໍ່ມີ |
| ຄວາມສັບຊ້ອນດ້ານວິຊາການ ຂອງ ຂະແໜງການ ຍັບຍັ້ງຄວາມມີປະ ສິດທິຜົນ ຂອງ ຄຊກລ ແລະ ຄກລ. | ມື້ເລີ່ມ ໂຄງການ | ການປະຕິບັດງານ ແລະ ການຈັດຕັ້ງ | P = 3<br>I = 3 | ດຳເນີນການປະເມີນຂີດຄວາມສາມາດ ຕົນເອງ ແລະ ໃຊ້ມາດຕະການພັດທະນາ ຂີດຄວາມສາມາດ ໂດຍຫ້ອງການ ຄຊກລ ແລະ ຄກລ ພ້ອມດ້ວຍການສະ ໜັບສະໜູນຈາກ ອົງການ ສປຊ ເພື່ອ ການພັດທະນາ. ຫຼັງຈາກນັ້ນ ປະຕິບັດ ແຜນພັດທະນາຂີດຄວາມສາມາດ. | ຫ້ອງການ ຄຊກລ ແລະ ຄກລ | | ທັນວາ 2012 | ບໍ່ມີ |

| | | | | | | | | |
|---|---|---|---|---|---|---|---|---|
| | | | | ຕິດຕາມການເຄື່ອນໄຫວດ້ານການພັດທະນາ ທາງດ້ານ ວິຊາການ ແລະ ບໍ່ແມ່ນວິຊາການ ໃນຂະແໜງການ | ອົງການ ສປຊ ເພື່ອການພັດທະນາ ພ້ອມດ້ວຍການສະໜັບສະໜູນຈາກຜູ້ໃຫ້ທຶນ | | | |
| ເຈົ້າໜ້າທີ່ ແຂວງ ແລະ ເມືອງ ບໍ່ເຕັມໃຈ ທີ່ຈະຮັບເອົາບົດບາດ ແບບບຸກທະລຸ ຂອງ ຫ້ອງການ ຄຊກລ ໃນການຈັດລຽງບູລິມະສິດ ແລະ ການວາງແຜນກິດຈະກຳ. | ມື້ເລີ່ມໂຄງການ | ການເມືອງ ການປະຕິບັດງານ | P = 3<br>I = 4 | ການມອບໝາຍໜ້າທີ່ ຂອງ ຫ້ອງການ ຄຊກລ ຕ້ອງມີການສື່ສານເປັນຢ່າງດີ ແລະ ໄດ້ຮັບການອະນຸມັດ ຈາກຂັ້ນເທິງ. ຫ້ອງ ການ ຄຊກລ ຈະພັດທະນາແຜນ ໂດຍມີ ການຮ່ວມມື ແລະ ປຶກສາຫາລືຢ່າງເປັນປົກກະຕິ. ຮັກສາຄວາມເປີດເຜີຍ ແລະ ຄວາມໂປ່ງໃສ. | ຫ້ອງການ ຄຊກລ<br><br>ລັດຖະບານ ລາວ ລະດັບການເມືອງ | | ທັນວາ 2012 | ບໍ່ມີ |
| ກິດຈະກຳເກັບກູ້ລະເບີດ ເຮັດໃຫ້ມີການຍົກຍ້າຍປະຊາຊົນໄປຕັ້ງພູມລຳເນົາໃໝ່ ໂດຍສະເພາະ ກຸ່ມດ້ອຍໂອກາດ ໃນລັກສະນະທີ່ບໍ່ສອດຄ່ອງກັບມາດຕະຖານ ທີ່ລັດຖະບານ ສປປ ລາວ ກຳນົດ. | ມື້ເລີ່ມໂຄງການ | ການເມືອງ | P- 3<br><br>I-4 | ລັດຖະບານ ສປປ ລາວ ມີພັນທະ ໃນການຍົກຍ້າຍປະຊາຊົນໄປຕັ້ງພູມລຳເນົາໃໝ່ ອີງຕາມດຳລັດເລກທີ 192/ນຍ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍໄປຕັ້ງພູມລຳເນົາໃໝ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ. ອົງການ ສປຊ ເພື່ອການພັດທະນາ ມີພັນທະສືບຕໍ່ ການສົ່ງເສີມຄວາມໂປ່ງໃສ ແລະ ຄວາມສອດຄ່ອງ | ລັດຖະບານ/ ຫ້ອງການ ຄຊກລ | | ທັນວາ 2012 | ບໍ່ມີ |

| | | | | | | | | |
|---|---|---|---|---|---|---|---|---|
| | | | | ກັບມາດຕະຖານຂອງລັດຖະບານ. | | | | |
| ເປັນຫ່ວງ ກ່ຽວກັບການມີສ່ວນຮ່ວມຫຼາຍຂຶ້ນ ຂອງກອງທັບລາວ ໃນການສຳຫຼວດ ແລະ ການເກັບກູ້ລະເບີດ. | ມື້ເລີ່ມໂຄງການ | ການເມືອງ<br>ທະຫານ | P-2<br>I- 2 | ກອງທັບຈະມີສ່ວນຮ່ວມ ພາຍໃຕ້ການດູແລທາງພົນລະເຮືອນ ແລະ ມາດຕະຖານແຫ່ງຊາດດ້ານມະນຸດສະທຳ. | | | ທັນວາ 2012 | ບໍ່ມີ |
| ໂອກາດບໍ່ພຽງພໍ ສຳລັບການປຶກສາຫາລື ລະຫວ່າງ ຄຊກລ, ຜູ້ໃຫ້ທຶນ ແລະ ອົງການປະຕິບັດງານຕ່າງໆ. | ມື້ເລີ່ມໂຄງການ | ການປະຕິບັດງານ | P-3<br>I-3 | ນອກຈາກ SWG ແລະ TWGs, ຄຊກລ ຈະຈັດກອງປະຊຸມປະຈຳເດືອນ ກັບ ອົງການປະຕິບັດງານຕ່າງໆ ແລະ ກອງປະຊຸມນະໂຍບາຍ ປະຈຳເຄິ່ງປີ ກັບ ຜູ້ໃຫ້ທຶນ, ອົງການປະຕິບັດງານຕ່າງໆ ແລະ ອື່ນໆ 2 ຄັ້ງຕໍ່ປີ. | ຫ້ອງການ ຄຊກ | | ທັນວາ 2012 | ບໍ່ມີ |
| ສປປ ລາວ ອາດຈະບໍ່ສາມາດປະຕິບັດພັນທະຕ່າງໆທີ່ລະບຸໄວ້ ໃນສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM). | ມື້ເລີ່ມໂຄງການ | ດ້ານກົດໝາຍ | P1<br>I-3 | ສປປ ລາວ ຈະເພີ່ມທະວີ ກິດຈະກຳເກັບກູ້ລະເບີດ ດ້ວຍການເພີ່ມປະສິດທິພາບ ແລະ ການຂະຫຍາຍກິດຈະກຳ ໃນບັນດາອົງການຕ່າງໆ. ຈະພະຍາຍາມຂໍຮ້ອງການຂະຫຍາຍຕໍ່ເວລາມື້ໝົດກຳນົດ ຖ້າຈຳເປັນ ເພື່ອຫຼີກເວັ້ນການຂັດຕໍ່ສົນທິສັນຍາ. ສປປ ລາວ ຍັງຈະພະຍາຍາມ ປະຕິບັດພັນທະສັນຍາອື່ນໆທັງໝົດ, ລວມເຖິງການສະໜັບສະໜູນ ຜູ້ປະສົບເຄາະ | ລັດຖະບານລາວ ຫ້ອງການ ຄຊກລ / ກະຊວງການຕ່າງປະເທດ | | ທັນວາ 2012 | ບໍ່ມີ |

| | | | | | | | | |
|---|---|---|---|---|---|---|---|---|
| | | | | ຮ້າຍ. | | | | |
| ການປ່ຽນແປງໃນການຈັດຕັ້ງ ຫຼື ຕໍາແໜ່ງສໍາຄັນໃນ ຫ້ອງການ ຄຊກລ ຫຼື ຄກລ. | ມື້ເລີ່ມໂຄງການ | ການປົກຄອງ ແລະ/ຫຼື ການຄຸ້ມຄອງ | | ລັດຖະບານ ສປປ ລາວ ຈະຮັບປະກັນຄວາມຕໍ່ເນື່ອງຂອງການປະຕິບັດງານ ເມື່ອມີການປ່ຽນແປງດັ່ງກ່າວ. | ລັດຖະບານລາວ | | ທັນວາ 2012 | ບໍ່ມີ |

**ເອະສານຊ້ອນທ້າຍ 2:**

ການຄຸ້ມຄອງຄຸນນະພາບ ສໍາລັບໝາກຜົນກິດຈະກໍາໂຄງການ.

| |
|---|
| **ຜົນໄດ້ຮັບທີ 1:**<br>ຄະນະກໍາມະການຄຸ້ມຄອງແຫ່ງຊາດ ສາມາດໃຫ້ທິດຊີ້ນໍາດ້ານນະໂຍບາຍຢ່າງມີປະສິດທິຜົນ ເພື່ອປະສານງານ, ຄຸ້ມຄອງ ແລະ ຊີ້ນໍາ ຂະແໜງການ ລບຕ ເພື່ອສະໜັບສະໜູນເປົ້າໝາຍພັດທະນາແຫ່ງຊາດ, ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດໃນຂະແໜງການ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ II" ແລະ ປະຕິບັດພັນທະສັນຍາໃນສົນທິສັນຍາສາກົນ. |

| | | |
|---|---|---|
| **ໝາກຜົນກິດຈະກໍາທີ່ 1 (ລະຫັດກິດກະກໍາ Atlas)** | ວິທີການສຶກສາຄວາມສ່ຽງ ໄດ້ຮັບການປັບປຸງ, ເສີມຂະຫຍາຍ ແລະ ເຜີຍແຜ່ດີກວ່າເກົ່າ. | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| **ຈຸດປະສົງ** | ຜົນສໍາເລັດຂອງກິດຈະກໍາ ແມ່ນການປະກອບສ່ວນໃນການຫຼຸດຜ່ອນຈໍານວນຜູ້ປະສົບເຄາະຮ້າຍຈາກ ລບຕ. ສ່ວນ ຫ້ອງການ ຄຊກລ ຈະຊ່ວຍສະໜັບສະໜູນ ໃນການດັດແກ້ນະໂຍບາຍ ແລະ ກົດລະບຽບ ເພື່ອປົກປ້ອງເປົ້າໝາຍທີ່ຕົກຢູ່ໃນຄວາມສ່ຽງ ແລະ ປັບປຸງວິທີການສຶກສາຄວາມສ່ຽງກ່ຽວກັບລະເບີດລູກຫວ່ານ ຊຶ່ງຈະສຸມໃສ່ການປ່ຽນແປງດ້ານພຶດຕິກໍາ ແລະ ບົ່ງຊີ້ກຸ່ມເປົ້າໝາຍທີ່ຕົກຢູ່ໃນຄວາມສ່ຽງ. | |
| **ຄໍາອະທິບາຍ** | • ສົ່ງເສີມການຕອບສະໜອງ ທີ່ມີການປະສານງານ ແລະ ຕາມເວລາທີ່ເໝາະສົມ ໃຫ້ດີກວ່າເກົ່າ ເພື່ອປ້ອງກັນອຸບັດເຫດ. | |

| | |
|---|---|
| | • ຕິດຕາມກວດກາກິດຈະກຳສຶກສາຄວາມສ່ຽງຈາກລະເບີດລູກຫວ່ານ ໂດຍອີງການປະຕິບັດງານຕ່າງໆ.<br>• ພັດທະນານິຕິກຳ ເພື່ອຄຸ້ມຄອງການຂາຍເສດເຫຼັກ ແລະ ກິດຈະກຳອື່ນທີ່ມີຄວາມສ່ຽງສູງ. |

| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ວັດໃດ ທີ່ວັດແທກຄຸນນະພາບຂອງຜົນສຳເລັດຂອງກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
|---|---|---|
| ຕົວຊີ້ວັດ ດ້ານຄຸນນະພາບ ແລະ ປະລິມານທີ່ຕົກລົງນຳໃຊ້ການຕິດຕາມກວດກາກິດຈະກຳສຶກສາຄວາມສ່ຽງ ຈາກລະເບີດລູກຫວ່ານ ແລະ ວັດແທກການປ່ຽນແປງທາງພຶດຕິກຳ. | ແມ່ພິມການຕິດຕາມກວດກາ ຂອງຫ້ອງການ ຄຊກລ ສຳລັບອີງການປະຕິບັດງານສຶກສາຄວາມສ່ຽງຈາກລະເບີດລູກຫວ່ານ. | |
| ການປັບປຸງຕົວຊີ້ວັດຂ້າງເທິງ ແມ່ນເພື່ອຕິດຕາມກວດກາ ກິດຈະກຳສຶກສາຄວາມສ່ຽງລະເບີດລູກຫວ່ານ | ບົດລາຍງານຕິດຕາມການກວດກາ ແລະ ບົດລາຍງານ ພາລະກິດ ຂອງ ຫ້ອງການ ຄຊກລ. | |
| ຄຸນນະພາບ ແລະ ປະສິດທິຜົນ ຂອງກົດໝາຍ/ນະໂຍບາຍ/ກົດລະບຽບ ເພື່ອປົກປ້ອງກຸ່ມເປົ້າໝາຍທີ່ຕົກຢູ່ໃນຄວາມສ່ຽງ. | | |

| | | |
|---|---|---|
| ຜົນສຳເລັດກິດຈະກຳທີ່ 2 (ລະຫັດກິດຈະກຳ Atlas) | ການຄຸ້ມຄອງຂ່າວສານ ແລະ ການກວດກາຕິດຕາມ ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການປັບປຸງ; ສ້າງຍຸດທະສາດເພື່ອຊ່ວຍ ເຫຼືອຜູ້ປະສົບເຄາະຮ້າຍ | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |

| | |
|---|---|
| ຈຸດປະສົງ | ຜົນສຳເລັດຂອງກິດຈະກຳ ແມ່ນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານການແພດ ແລະ ການຟື້ນຟູ ຜູ້ລອດຊີວິດຈາກ ລບຕ ທັງໝົດ. |
| ຄຳອະທິບາຍ | • ສ້າງ ແລະ ຮັກສາລະບົບຕິດຕາມຜູ້ລອດຊີວິດຈາກ ລບຕ.<br>• ໃຊ້ລະບົບຕິດຕາມຜູ້ລອດຊີວິດຈາກ ລບຕ, ເກັບກຳ, ວິເຄາະແຜນທີ່ ແລະ ເຜີຍແຜ່ ຂໍ້ມູນ ລາຍລະອຽດກ່ຽວກັບ ຜູ້ປະສົບເຄາະຮ້າຍຈາກ ລບຕ.<br>• ພັດທະນາຍຸດທະສາດຊ່ວຍເຫຼືອ ຜູ້ປະສົບເຄາະຮ້າຍ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ.<br>• ບົ່ງຊີ້ ແລະ ແກ້ໄຂ ຊ່ອງຫວ່າງ ໃນ 6 ເສົາຄໍ້າ ຂອງການສະໜັບສະໜູນຜູ້ປະສົບເຄາະຮ້າຍຈາກ ລບຕ. |

| ມາດຖານດ້ານຄຸນນະພາບ<br>ດ້ວຍວິທີໃດ/ມີຕົວຊີ້ວັດ ໃຊ້ວັດແທກຄຸນນະພາບຂອງຜົນສຳເລັດຂອງກິດຈະກຳ? | ວິທີການທາງຄຸນນະພາບ<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | ມື້ປະເມີນຜົນ<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
|---|---|---|
| ລະດັບຄວາມແມ່ນຢຳ ຂອງລາຍລະອຽດທີ່ຖືກ ເກັບກຳດ້ວຍລະບົບຕິດຕາມ. | ບົດລາຍງານໂຄງການ, ບົດລາຍງານທີ່ສ້າງຂຶ້ນໂດຍລະບົບຕິດຕາມ | |
| ຄວາມຖີ່ຂອງບົດລາຍງານທີ່ຕ້ອງ ແລະ ເຜີຍແຜ່ໃຫ້ ພາກສ່ວນກ່ຽວຂ້ອງ | ບົດລາຍງານໂຄງການ | ທຸກໆໄຕມາດ |
| ຄວາມຖີ່ຂອງບົດລາຍງານ ແລະ ຄຸນນະພາບຂອງການວິເຄາະການບໍລິການ ທີ່ສະໜອງໃຫ້ ຜູ້ປະສົບເຄາະຮ້າຍ ຈາກ ລບຕ | ບົດລາຍງານໂຄງການ | ທຸກໆໄຕມາດ |

| | | |
|---|---|---|
| ຜົນສຳເລັດກິດຈະກຳທີ່ 3 (ລະຫັດກິດຈະກຳ Atlas) | ການປົດປ່ອຍດິນຢ່າງມີປະສິດທິພາບ ແລະ ວາງແຜນເປັນຢ່າງດີ ໂດຍໄດ້ຮັບການປະສານງານ ແລະ ຄຸ້ມຄອງ ໂດຍອີງຕາມເປົ້າໝາຍການພັດທະນາ ທີ່ໄດ້ຮັບບຸລິມະສິດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກອບວຽກ ການວາງແຜນ | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |

| | | |
|---|---|---|
| | ແລະ ນະໂຍບາຍແຫ່ງຊາດ ອື່ນໆທີ່ກ່ຽວຂ້ອງ | |
| **ຈຸດປະສົງ** | ຜົນສໍາເລັດຂອງກິດຈະກໍາ ແມ່ນເພື່ອເກັບກູ້ ລບຕ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເພື່ອປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ. | |
| **ຄໍາອະທິບາຍ** | • ບົ່ງຊີ້ວິທີການ ເພື່ອຄວາມເຂົ້າໃຈທີ່ດີຂຶ້ນ ກ່ຽວກັບການຕົກຄ້າງຂອງ ລບຕ.<br>• ບົ່ງຊີ້ ດິນບູລິມະສິດ ອີງໃສ່ມາດຖານທີ່ຈະແຈ້ງ ແລະ ໃຫ້ຄວາມສໍາຄັນຕໍ່ແຜນພັດທະນາບ້ານ, ເມືອງ, ແຂວງ ແລະ ປະເທດ ທີ່ມີຢູ່ໃນປະຈຸບັນ.<br>• ຕິດຕາມກວດກາ ໂຄງການເກັບກູ້ລະເບີດ ແລະ ປົດປ່ອຍດິນ ໃນດ້ານຜົນກະທົບ ແລະ ຄ່າໃຊ້ຈ່າຍ.<br>• ຮັບປະກັນວ່າການປະຕິບັດງານທັງໝົດສອດຄ່ອງກັບມາດຕະຖານແຫ່ງຊາດ. | |
| **ມາດຖານດ້ານຄຸນນະພາບ.**<br>ດ້ວຍວິທີໃດ/ມີຕົວຊີ້ວັດໃດ ໃຊ້ວັດແທກຄຸນນະພາບຂອງຜົນສໍາເລັດກິດຈະກໍາ? | **ວິທີການຢັ້ງຢືນຄຸນນະພາບ.**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນໍາໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ.**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
| ທຸກໆປີ ຫ້ອງການ ຄຊກລ ມີຂໍ້ມູນກ່ຽວກັບບູລິມະສິດແຫ່ງຊາດ, ແຂວງ, ເມືອງ ແລະ ບ້ານ. | ບົດລາຍງານ IMSMA | ທຸກໆປີ |
| ອົງການປະຕິບັດງານທັງໝົດ ຈະປະຕິບັດຕາມບັນດາບູລິມະສິດ ທີ່ໄດ້ຕົກລົງກັບຫ້ອງການ ຄຊກລ | ລາຍງານຂອງອົງການປະຕິບັດງານ ສົ່ງເຖິງຫ້ອງການ ຄຊກລ | ທຸກໆປີ |
| ການເພີ່ມຂຶ້ນຂອງດິນບູລິມະສິດທີ່ໄດ້ຖືກປົດ ປ່ອຍໃນທຸກໆປີ | ລາຍງານປະຈໍາປີ ຂອງຫ້ອງການ ຄຊກລ | ທຸກໆປີ |
| ຕົວຊີ້ວັດກ່ຽວກັບຜົນກະທົບດ້ານ ເສດຖະ | ລາຍງານປະຈໍາປີ ຂອງຫ້ອງການ ຄຊກລ | ທຸກໆປີ |

| | | |
|---|---|---|
| ກິດ-ສັງຄົມ ລວມທັງເພດ ແລະ ສິ່ງ ແວດລ້ອມ ແລະ ມູນຄ່າ ຂອງການເກັບກູ້ລະເບີດທີ່ຖືກລະບຸ ແລະ ນຳໃຊ້ໂດຍ ຫ້ອງການ ຄຊກລ ເພື່ອຕິດຕາມ ກວດກາໂຄງການ | | |
| ອີງການປະຕິບັດງານທັງໝົດ ປະຕິບັດສອດຄ່ອງກັບມາດຕະຖານແຫ່ງຊາດ | ລາຍງານປະຈຳປີ ຂອງຫ້ອງການ ຄຊກລ, ລາຍງາຍຂອງທີມງ່ນບປະກັນ/ຄວບຄຸມຄຸນນະພາບ | ທຸກໆໄຕມາດ ແລະ ທຸກໆປີ |

<table>
<tr><td>ຜົນຂອງກິດຈະກຳທີ 4 (ລະຫັດກິດຈະກຳ Atlas)</td><td colspan="2">ການປະສານງານ ແລະ ຄຸ້ມຄອງຢ່າງມີປະສິດທິຜົນ ຂອງຂະແໜງການ ລບຕ</td><td>ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015</td></tr>
<tr><td>ຈຸດປະສົງ</td><td colspan="3">ກິດຈະກຳນີ້ ແມ່ນເພື່ອຮັບປະກັນວ່າ ວັດຖຸປະສົງທີ່ 4 ຂອງ ຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ II ບັນລຸຜົນຢ່າງແທ້ຈິງ. ຜົນສຳເລັດຂອງກິດຈະກຳນີ້ ແມ່ນຫົວໃຈ ຂອງການມອບໝາຍໜ້າທີ່ຂອງ ຫ້ອງການ ຄຊກລ.</td></tr>
<tr><td>ຄຳອະທິບາຍ</td><td colspan="3">• ເກັບຮັກສາຂໍ້ມູນແຫ່ງຊາດທັງໝົດທີ່ກ່ຽວຂ້ອງກັບຂະແໜງການ ລບຕ ແລະ ມີຂໍ້ມູນເຫຼົ່ານັ້ນໃຫ້ພາກສ່ວນກ່ຽວຂ້ອງທັງໝົດເຂົ້າເຖິງໄດ້.<br>• ສ້າງຄາດໝາຍງົບປະມານ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດນີ້.<br>• ສ້າງແຜນວຽກຂອງຂະແໜງການປະຈຳປີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ II ພ້ອມທັງຈັດຕັ້ງປະຕິບັດ ຄຳແນະນຳ ຂອງບົດປະເມີນຜົນປີ 2008 ກ່ຽວກັບມຸມມອງດ້ານບົດບາດ ຍິງ-ຊາຍ ໃນການປະຕິບັດງານ ລບຕ, ແຜນວຽກປະຈຳປີ ຈະລວມມີ ເປົ້າໝາຍສະເພາະຂອງຂະແໜງການ ອີງຕາມຖະແຫຼງການວຽງຈັນປີ 2006 ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ.</td></tr>
<tr><td colspan="2">ມາດຖານດ້ານຄຸນນະພາບ.<br>ດ້ວຍວິທີໃດ/ມີຕົວຊີ້ວັດໃດ ໃຊ້ວັດແທກ</td><td>ວິທີການຢັ້ງຢືນຄຸນນະພາບ.<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳ</td><td>ມື້ປະເມີນຜົນ.<br>ເມື່ອໃດຈະມີການປະເມີນຄຸນນະພາບ?</td></tr>
</table>

| | | |
|---|---|---|
| ຄຸນນະພາບຂອງຜົນກິດຈະກຳ? | ໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານ ຄຸນນະພາບ ຫຼື ບໍ່? | |
| • ພາກສ່ວນກ່ຽວຂ້ອງທັງໝົດ ໄດ້ຮັບບົດລາຍງານຈາກຂໍ້ມູນແຫ່ງຊາດ ຕາມເວລາທີ່ເໝາະສົມ | ກອງປະຊຸມປຶກສາຫາລື SWG | ສອງຄັ້ງຕໍ່ປີ |
| • ສ້າງແຜນວຽກປະຈຳປີ ພ້ອມດ້ວຍບູລິມະສິດ ແລະ ເປົ້າໝາຍປະຈຳປີ ທີ່ສອດ ຄ່ອງກັບຍຸດທະສາດເສັ້ນທາງກ້າວສູ່ຄວາມປອດໄພ II | ບົດລາຍງານໂຄງການ | ບົດລາຍງານປະຈຳໄຕມາດ ແລະ ປະຈຳປີ |

| | | |
|---|---|---|
| **ຜົນສຳເລັດຂອງກິດຈະກຳ ທີ່ 5 (ລະຫັດກິດຈະກຳ Atlas)** | **ການພັດທະນາສະຖາບັນຂອງ ຫ້ອງການ ຄຊກລ ໄດ້ຮັບການປັບປຸງ ແລະ ເຊື່ອມໂຍງເຂົ້າກັບໂຄງສ້າງທົ່ວໄປຂອງລັດຖະບານ.** | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| **ຈຸດປະສົງ** | ຜົນສຳເລັດຂອງກິດຈະກຳນີ້ ຈະຊ່ວຍບັນລຸວັດຖຸປະສົງທີ່ 5 ຂອງ ຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ II. ເພື່ອໃຫ້ໄດ້ມາຊຶ່ງຜົນສຳເລັດນີ້ ຕ້ອງການໃຫ້ມີ ວິທີການປະຕິບັດໃນແຕ່ລະ ບາດກ້າວ ຢ່າງຈະແຈ້ງ. ຜົນສຳເລັດຂອງກິດຈະກຳນີ້ ຍັງໄດ້ຮັບການອອກແບບ ເພື່ອຮັບປະກັນວ່າ ການສະໜັບສະໜູນ ເພື່ອຍົກລະດັບຫ້ອງການ ຄຊກລ, ເພື່ອປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍ ແມ່ນອີງໃສ່ການປະເມີນ ແລະ ວິເຄາະຂີດຄວາມສາມາດໃນປະຈຸບັນຢ່າງເປັນລະບົບ. ວິເຄາະໂດຍ ອ້າງອີງເຖິງ ບັນດາໜ້າທີ່ຫຼັກທີ່ຫ້ອງການ ຄຊກລ ຕ້ອງໄດ້ປະຕິບັດຢ່າງມີປະສິດທິຜົນ ເພື່ອປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍນີ້ຢ່າງເຕັມສ່ວນ. | |
| **ຄຳອະທິບາຍ** | • ດຳເນີນການປະເມີນຂີດຄວາມສາມາດຕົນເອງ ແລະ ສ້າງຍຸດທະສາດ ພັດທະນາຂີດຄວາມສາມາດ 3 ປີ ພ້ອມດ້ວຍກອບວຽກ ຕິດຕາມກວດກາ ແລະ ປະເມີນຜົນ ອີງໃສ່ຂໍ້ມູນພື້ນຖານກ່ຽວກັບຂີດຄວາມສາມາດໃນປະຈຸບັນ.<br>• ໃຫ້ຄວາມກະຈ່າງແຈ້ງກ່ຽວກັບໂຄງສ້າງ ຂອງຫ້ອງການ ຄຊກລ ແລະ ໂຄງຮ່າງການຈັດຕັ້ງ ໃນລະດັບ ຫ້ອງການໃຫຍ່ (HQ) ແລະ ລະດັບຍ່ອຍ ຢູ່ພາຍໃນປະເທດ. | |

| | |
|---|---|
| | • ອະນຸມັດການປະເມີນໂຄງການຈາກພາຍນອກ.<br>• ສະໜັບສະໜູນຍຸດທະສາດພັດທະນາຂີດຄວາມສາມາດ.<br>• ລະດົມຊັບພະຍາກອນ ຈາກລັດຖະບານ ສປປ ລາວ.<br>• ສ້າງຕັ້ງ ໜ່ວຍງານປະຕິບັດງານໂຄງການ ພາຍໃນຫ້ອງການ ຄຊກລ, ເສີມຂະຫຍາຍການຄຸ້ມຄອງຊັບພະຍາກອນດ້ານບຸກຄົນ, ເຄື່ອງມື ແລະ ການເງິນ ຂອງຫ້ອງການ ຄຊກລ.<br>• ພັດທະນາ ແລະ ຈັດຕັ້ງປະຕິບັດ ນະໂຍບາຍສະເໝີພາບທາງດ້ານບົດບາດ ຍິງ-ຊາຍ ພາຍໃນ ຫ້ອງການ ຄຊກລ. |

| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ວັດໃດ ໃຊ້ວັດແທກຄຸນນະພາບຂອງຜົນກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
|---|---|---|
| • ມີການປະເມີນຂີດຄວາມສາມາດຂອງຕົນ ແລະ ຍຸດທະສາດພັດທະນາຂີດຄວາມສາມາດ 3 ປີ ພ້ອມດ້ວຍ ກອບວຽກຕິດຕາມກວດກາ ແລະ ປະເມີນຜົນອີງໃສ່ຂໍ້ມູນພື້ນຖານກ່ຽວກັບຂີດຄວາມສາມາດ. | ລາຍງານໂຄງການ | ບົດລາຍງານປະຈຳໄຕມາດ ແລະ ປະຈຳປີ |
| • ຫ້ອງການ ຄຊກລ ໄດ້ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບໂຄງສ້າງ ແລະ ໂຄງຮ່າງການຈັດຕັ້ງ ໃນລະດັບ ຫ້ອງການໃຫຍ່ ແລະ ຫ້ອງການຍ່ອຍລະດັບຊາດ | ລາຍງານໂຄງການ | ບົດລາຍງານປະຈຳໄຕມາດ ແລະ ປະຈຳປີ |

| | | |
|---|---|---|
| • ປະຕິບັດສຳເລັດ 75% ຂອງແຜນວຽກປະຈຳປີ ຂອງຫ້ອງການ ຄຊກລ | ບົດລາຍງານທົບທວນໂຄງການປະຈຳປີ | ທຸກໆປີ |
| • ມີຊັບພະຍາກອນພຽງພໍ ທີ່ສາມາດຂົນຂວາຍໄດ້ ເພື່ອປະຕິບັດແຜນວຽກປະຈຳປີ ຂອງຫ້ອງການ ຄຊກລ ສຳລັບໂຄງການຂອງຫ້ອງການ ຄຊກລ | ບົດລາຍງານທົບທວນໂຄງການປະຈຳປີ | ທຸກໆປີ |
| • ຈຳນວນທີ່ປຶກສາດ້ານວິຊາການທີ່ສະໜັບສະໜູນ ຫ້ອງການ ຄຊກລ | | ທຸກໆປີ |
| • ຈຳນວນກິດຈະກຳພັດທະນາຂີດຄວາມສາມາດ ທີ່ໄດ້ປະຕິບັດ | ບົດລາຍງານໂຄງການ | ບົດລາຍງານປະຈຳໄຕມາດ ແລະ ປະຈຳປີ |

| | | |
|---|---|---|
| **ຜົນສຳເລັດຂອງກິດຈະກຳທີ່ 6 (ລະຫັດກິດຈະກຳ Atlas)** | **ໄດ້ປະຕິບັດສອດຄ່ອງຕາມພັນທະສັນຍາໃນສົນທິສັນຍາສາກົນ** | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| **ຈຸດປະສົງ** | ຜົນສຳເລັດຂອງກິດຈະກຳນີ້ ຕອບສະໜອງວັດຖຸປະສົງທີ່ 6 ຂອງ ເສັ້ນທາງກ້າວສູ່ຄວາມປອດໄພ 2. ສົນທິສັນຍາຕົ້ນຕໍ ທີ່ກ່ຽວຂ້ອງຕໍ່ຜົນສຳເລັດຂອງກິດຈະກຳນີ້ ແມ່ນ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM). ສົນທິສັນຍາອື່ນໆທີ່ມີຜົນປະໂຫຍດ, ລວມມີສົນທິ ສັນຍາວ່າດ້ວຍສິດທິຂອງຄົນພິການ, ສົນທິສັນຍາການເກືອດຫ້າມລະເບີດລູກຫວ່ານ ແລະ ສົນທິ ສັນຍາວ່າດ້ວຍອາວຸດທົ່ວໄປ (CCW). | |

| | |
|---|---|
| **ຄຳອະທິບາຍ** | • ສົ່ງລາຍງານປະຈຳປີໃຫ້ ເລຂາທິການໃຫຍ່ ສປຊ ພາຍໃຕ້ມາດຕາ 7 ຂອງ ສົນທິສັນຍາ CCM.<br>• ເຂົ້າຮ່ວມກອງປະຊຸມແຊກແຊງ, ກອງປະຊຸມປະເທດພາຄີ ແລະ ກອງປະຊຸມອື່ນທີ່ກ່ຽວຂ້ອງ.<br>• ດຳເນີນການຂົນຂວາຍໃນທົ່ວໂລກ.<br>• ພັດທະນາ ນິຕິກຳພາຍໃນ ໃຫ້ສອດຄ່ອງກັບ ມາດຕາ 9 ຂອງ ສົນທິສັນຍາ CCM.<br>• ເຮັດສຳເລັດ, ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດ ແຜນຈັດຕັ້ງປະຕິບັດສົນທິສັນຍາ CCM (2012-2020) ຊຶ່ງໄດ້ກຳນົດໄວ້ເພື່ອຮັບປະກັນວ່າ ສປປ ລາວ ປະຕິບັດສອດຄ່ອງຕາມສົນທິສັນຍາ ດັ່ງກ່າວ. |

| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ວັດໃດ ໃຊ້ວັດແທກຄຸນນະພາບຂອງຜົນສຳເລັດກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
|---|---|---|
| ສອດຄ່ອງກັບແຜນປະຕິບັດງານຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມ ລະເບີດລູກຫວ່ານ ແລະ ພັນທະສັນຍາ ຂອງສົນທິສັນຍາອື່ນໆ. | ບົດລາຍງານມາດຕາ 7 | ທຸກໆປີ |
| ສົ່ງບົດລາຍງານປະຈຳປີ ເຖິງ ສປຊ ພາຍໃຕ້ສົນທິສັນຍາສາກົນ ຖືກຕ້ອງຕາມເວລາ | ບົດລາຍງານ/ ເວັບໄຊທາງການ ຂອງໜ່ວຍງານຈັດຕັ້ງປະຕິບັດສົນທິສັນຍາ | ທຸກໆປີ |

**ຜົນໄດ້ຮັບ ທີ 2:**

ອົງການເກັບກູ້ລະເບີດແຫ່ງຊາດ ສາມາດຄຸ້ມຄອງການເກັບກູ້ລະເບີດ ແລະ ໂຄງການສຶກສາຄວາມສ່ຽງ ໄດ້ດີກວ່າເກົ່າ ຕາມຄວາມຕ້ອງການ ຂອງຊຸມຊົນທີ່ມີຄວາມສ່ຽງ.

| | | |
|---|---|---|
| **ຜົນສຳເລັດຂອງກິດຈະກຳທີ່ 1-9 ລະຫັດ** | **ການປະຕິບັດງານທີ່ໄດ້ປັບປຸງ ໃນ 9 ແຂວງ ເພື່ອການເຂົ້າເຖິງ ດິນທີ່ມີລະເບີດຕົກຄ້າງ ຢ່າງປອດໄພ ເພື່ອຈຸດປະສົງດ້ານເສດຖະກິດ-** | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |

| | | |
|---|---|---|
| ກິດຈະກຳ Atlas) | ສັງຄົມ ແລະ ມະນຸດສະທຳ ແລະ ຫຼຸດຜ່ອນອຸບັດເຫດທີ່ເກີດຈາກ ລບຕ | |
| ຈຸດປະສົງ | ຜົນສຳເລັດຂອງກິດຈະກຳເຫຼົ່ານີ້ ຈະປະກອບສ່ວນເຂົ້າໃນການປັບປຸງການປະຕິບັດງານ ເພື່ອການເຂົ້າເຖິງດິນທີ່ມີລະເບີດຕົກຄ້າງ ຢ່າງປອດໄພ ເພື່ອຈຸດປະສົງ ທາງດ້ານເສດຖະກິດ-ສັງຄົມ ແລະ ມະນຸດສະທຳ ແລະ ຫຼຸດຜ່ອນ ອຸບັດເຫດທີ່ເກີດຈາກ ລບຕ. | |
| ຄຳອະທິບາຍ | • ປະຕິບັດການເກັບກູ້ລະເບີດ / ການສຳຫຼວດດ້ານວິຊາການ.<br>• ດຳເນີນການທຳລາຍເຄື່ອນທີ່.<br>• ດຳເນີນການສຳຫຼວດທົ່ວໄປ.<br>• ດຳເນີນການສຶກສາຄວາມສ່ຽງ. | |

| | | |
|---|---|---|
| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ບອກໃດ ໃຊ້ວັດແທກຄຸນນະພາບຂອງຜົນສຳເລັດກິດຈະກຳ? | **ວິທີການຢັ້ງຢືນຄຸນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
| **ການເກັບກູ້ລະເບີດ:**<br>• ເປົ້າໝາຍການເກັບກູ້ລະເບີດເຮັດໄດ້ຕາມຄາດໝາຍ<br>• ໃຊ້ວິທີການທີ່ເໝາະສົມ ຈັດລຽງບູລິມະສິດດິນເພື່ອການເກັບກູ້ລະເບີດ<br>• ການຂໍຮ້ອງຈາກ ໂຄງການພັດທະນາຕ່າງໆ ເພື່ອໃຫ້ດຳເນີນການເກັບກູ້ລະເບີດແມ່ນເຮັດໄດ້ຕາມຄາດໝາຍ | ລົງຢ້ຽມຢາມພາກສະໜາມ ແລະ ບົດລາຍງານຄວາມຄືບໜ້າ. | ທຸກໆໄຕມາດ |

| | | |
|---|---|---|
| **ການສຳຫຼວດດ້ານວິຊາການ:**<br>• ເປົ້າໝາຍການສຳຫຼວດທາງດ້ານວິຊາການແມ່ນເຮັດໄດ້ຕາມຄາດໝາຍ.<br>• ການສຳຫຼວດດ້ານວິຊາການ ໄດ້ເຮັດສຳເລັດ ໂດຍສາມາດຊີ້ບອກບໍລິເວນທີ່ມີ ລບຕ. | ລົງຢ້ຽມຢາມພາກສະໜາມ ແລະ ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ການທຳລາຍເຄື່ອນທີ່:**<br>• ເປົ້າໝາຍທຳລາຍເຄື່ອນທີ່ເຮັດໄດ້ຕາມຄາດໝາຍ.<br>• ເວລາຕອບສະໜອງຫຼຸດລົງ[10]. | ລົງຢ້ຽມຢາມພາກສະໜາມ ແລະ ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ການສຳຫຼວດທົ່ວໄປ:**<br>• ເປົ້າໝາຍການສຳຫຼວດທົ່ວໄປເຮັດໄດ້ຕາມຄາດໝາຍ<br>• ມີຂໍ້ມູນກ່ຽວກັບ ລບຕ ເພື່ອການວາງແຜນ ດ້ານການພັດທະນາ ແລະ ອອກນະໂຍບາຍ.<br>• ຂີງເຂດຂໍ້ມູນເພີ່ມເຕີມ ໄດ້ບົ່ງຊີ້ ແລະ ເກັບກຳ. | ລົງຢ້ຽມຢາມພາກສະໜາມ ແລະ ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ຄວາມຮູ້ກ່ຽວກັບຊຸມຊົນ:**<br>• ກິດຈະກຳຄວາມຮູ້ກ່ຽວກັບຊຸມຊົນໃໝ່ ໄດ້ຮັບການບົ່ງຊີ້ ແລະ ພັດທະນາ ແລະ ສຸມໃສ່ເງື່ອນໄຂດ້ານບົດບາດຍິງ-ຊາຍ. | ລົງຢ້ຽມຢາມພາກສະໜາມ ແລະ ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |

[10] ຂໍ້ມູນພື້ນຖານຈະໄດ້ຮັບການຢັ້ງຢືນພິສູດ.

| | | |
|---|---|---|
| • ຈຳນວນອາສາສະໝັກຊຸມຊົນທີ່ຫ້າວຫັນເພີ່ມຂຶ້ນ, ສຸມໃສ່ຊຸມຊົນທີ່ຫ່າງໄກສອກຫຼີກ.<br>• ອຸບັດເຫດ/ການເສຍຊີວິດ ເກີດຈາກ ລບຕ ຫຼຸດລົງ. | | |

| | | |
|---|---|---|
| ຜົນສຳເລັດຂອງກິດຈະກຳທີ່ 10 (ລະຫັດກິດຈະກຳ Atlas) | ການຄຸ້ມຄອງໂຄງການ ທີ່ໄດ້ຮັບການປັບປຸງ ແລະ ມີການລະດົມຊັບພະຍາກອນຢ່າງພຽງພໍ ໂດຍ ຫ້ອງການເກັບກູ້ລະເບີດແຫ່ງຊາດ | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| ຈຸດປະສົງ | ຜົນສຳເລັດຂອງກິດຈະກຳນີ້ ຈະປະກອບສ່ວນເຂົ້າໃນການປັບປຸງການຄຸ້ມຄອງໂຄງການ ແລະ ລະດົມຊັບພະຍາກອນຢ່າງພຽງພໍ | |
| ຄຳອະທິບາຍ | • ຊີ້ນຳການວາງແຜນ, ການປະສານງານ ແລະ ສະໜອງການຮັບປະກັນຄຸນນະພາບ ທັງໝົດ 9 ແຂວງ.<br>• ຄຸ້ມຄອງການຮ່ວມມື ແລະ ລະດົມຊັບພະຍາກອນ ເພື່ອການປະຕິບັດງານ ແລະ ຄຸ້ມຄອງໂຄງການ.<br>• ສະໜັບສະໜູນການຄຸ້ມຄອງດ້ານການເງິນ ແລະ ດ້ານບໍລິຫານການປະຕິບັດງານ ເຊັ່ນ: ການຈັດຊື້.<br>• ສ້າງ ແລະ ຜະລິດ ສື່ ເພື່ອສະໜັບສະໜູນການລະດົມຊັບພະຍາກອນ.<br>• ເກັບກຳຂໍ້ມູນ ແລະ ລວບລວມຜົນສຳເລັດ ຈາກ 9 ແຂວງ ເຂົ້າໃນລະບົບ IMSMA.<br>• ວິເຄາະຂໍ້ມູນຂອງ ຂີດຄວາມສາມາດ ການປະຕິບັດງານ. | |

| | | |
|---|---|---|
| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ບອກໃດ ໃຊ້ວັດແທກຄຸນນະພາບຂອງຜົນສຳເລັດກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
| **ການຄຸ້ມຄອງໂຄງການ:**<br>• ອົງການເກັບກູ້ລະເບີດແຫ່ງຊາດ ບັນລຸເງື່ອນໄຂການລາຍງານ, ສຳລັບສັນຍາກັບຜູ້ | ກວດກາ ໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ ລະເບີດແຫ່ງຊາດ | ທຸກໆໄຕມາດ |

| | | |
|---|---|---|
| ໃຫ້ທຶນ ແລະ ການລາຍງານປະຈຳໄຕມາດ ຕໍ່ ອົງການ ສປຊ ເພື່ອການພັດທະນາ.<br>• ພັດທະນາແຜນວຽກປະຈຳປີ ຖືກຕ້ອງຕາມເວລາ | | |
| **ການຄຸ້ມຄອງການປະຕິບັດງານ:**<br>• ເປົ້າໝາຍປະຈຳປີຂອງແຂວງບັນລຸຄາດໝາຍ.<br>• ມີການເຂົ້າຮ່ວມ ແລະ ປະກອບສ່ວນເພີ່ມຂຶ້ນ ໃນໜ່ວຍປະຕິບັດງານວິຊາການຂອງຂະແໜງການ[11]. | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ສະໜັບສະໜູນດ້ານການບໍລິຫານ:**<br>• ປັບປຸງອັດຕາການເຮັດສຳເລັດ ການຂໍຈັດຊື້ເຖິງອົງການ ສປຊ ເພື່ອການພັດທະນາ[2]<br>• ສ້າງ, ປັບແກ້ ແລະ ຕິດຕາມ ແຜນຈັດຊື້.<br>• ໄດ້ຈັດຕັ້ງການລົງທະບຽນຊັບສິນຢ່າງຄົບຖ້ວນ, ແມ່ນຢຳ ແລະ ມີຂໍ້ມູນໃໝ່ຫຼ້າສຸດ. | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |
| **ການຄຸ້ມຄອງການເງິນ:**<br>• ບົດລາຍງານການເງິນ ໄດ້ສົ່ງໃຫ້ແກ່ຜູ້ໃຫ້ທຶນຖືກຕ້ອງຕາມເວລາ.<br>• ບໍ່ສົ່ງທຶນຄືນໃຫ້ຜູ້ໃຫ້ທຶນ – ອົງການເກັບກູ້ລະເບີດແຫ່ງຊາດ ປະຕິບັດສອດຄ່ອງກັບທຸກເງື່ອນໄຂຂອງຜູ້ໃຫ້ທຶນ ພ້ອມ | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |

[11] ສ້າງຂໍ້ມູນພື້ນຖານ

| | | |
|---|---|---|
| ກ້ອຍ ການອະນຸມັດໃຫ້ມີການຈັດສັນງົບປະມານໃໝ່ຕາມຄວາມເໝາະສົມ. | | |
| **ການຄຸ້ມຄອງຂໍ້ມູນ:**<br>• ມີຂໍ້ມູນທີ່ແມ່ນຍໍາ ແລະ ຖືກຕ້ອງຕາມເວລາ ທີ່ສາມາດເຂົ້າເຖິງໄດ້ ແລະ ເອົາເຂົ້າໃນລະບົບ ຖານຂໍ້ມູນ IMSMA.<br>• ຂໍ້ມູນໃນຂົງເຂດອື່ນໆໄດ້ຮັບການເກັບກໍາ. | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |
| **ຂໍ້ມູນສາທາລະນະ:**<br>• ເວັບໄຊ ມີຂໍ້ມູນໃໝ່ຫຼ້າສຸດ ແລະ ແມ່ນຍໍາ.<br>• ເພີ່ມຈໍານວນການຜະລິດສື່ເຜີຍແຜ່ ເພື່ອແບ່ງປັນຂໍ້ມູນ ແລະ ປັບແກ້ໂຄງການ[2] | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |
| **ໂຄງການຄຸ້ມຄອງຄຸນະພາບ:**<br>• ຈັດຕັ້ງປະຕິບັດຄໍາແນະນໍາ ດ້ານການກວດກາບັນຊີ ແລະ ການຄຸ້ມຄອງ.<br>• ຄໍາແນະນໍາຂອງ ອົງການ ສປຊ ເພື່ອການພັດທະນາ ກ່ຽວກັບການລົງກວດກາສະຖານທີ່ ໄດ້ຮັບການຕິດຕາມ ແລະ ຈັດຕັ້ງປະຕິບັດ.<br>• ຈັດຕັ້ງປະຕິບັດ ວຽກງານປັບປຸງຄຸນນະພາບ ອົງໃສ່ປັດໄຈນໍາເຂົ້າຂອງໜ່ວຍງານຄຸ້ມຄອງຄຸນນະພາບ. | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |
| **ທີມງານຄຸ້ມຄອງຄຸນນະພາບພາກພື້ນ:** | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |

| | | |
|---|---|---|
| ອີງການເກັບກູ້ລະເບີດແຫ່ງຊາດປະຕິບັດງານ ພາຍໃຕ້ມາດຕະຖານແຫ່ງຊາດ. | | |

| | | |
|---|---|---|
| **ຜົນສຳເລັດຂອງກິດຈະກຳທີ່ 11 (ລະຫັດກິດຈະກຳ Atlas)** | **ພະນັກງານເກັບກູ້ລະເບີດທັງໝົດ ໄດ້ຮັບການຝຶກອົບຮົມ ກ່ຽວກັບມາດຕະຖານແຫ່ງຊາດ** | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| **ຈຸດປະສົງ** | ຜົນສຳເລັດຂອງກິດຈະກຳນີ້ ຈະປະກອບສ່ວນໃນເຂົ້າໂຄງການ ໂດຍການສະໜອງສິ່ງອຳນວຍຄວາມສະດວກ ແລະ ພະນັກງານທີ່ມີຄຸນນະວຸດ, ປະສົບການ ແລະ ຜ່ານການຝຶກອົບຮົມ. | |
| **ຄຳອະທິບາຍ** | ສະໜອງການຝຶກອົບຮົມໃຫ້ແກ່ ພະນັກງານໃໝ່ ແລະ ພະນັກງານໃນປະຈຸບັນ. ການຝຶກອົບຮົມປະກອບມີ; ການເກັບກູ້ລະເບີດ, EOD ຂັ້ນສູງ, ຜູ້ນຳທີມ, ແພດ ແລະ ນັກສຳຫຼວດ. | |

| **ມາດຖານດ້ານຄຸນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ບອກໃດ ໃຊ້ວັດແທກຄຸນນະພາບຂອງຜົນກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
|---|---|---|
| ມີຈຳນວນພະນັກງານທີ່ຜ່ານການຝຶກອົບຮົມຢ່າງຖືກຕ້ອງ ທີ່ຈະເຮັດວຽກເກັບກູ້ ລບຕ ຕາມຄວາມເໝາະສົມ. | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| ພະນັກງານເກັບກູ້ ລບຕ ໄດ້ຮັບການຝຶກອົບຮົມ ໃຫ້ໄດ້ມາດຕະຖານແຫ່ງຊາດ. | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |

| | | |
|---|---|---|
| **ຜົນສຳເລັດຂອງກິດຈະກຳທີ່ 12** | **ເຕັກໂນໂລຢີ ທີ່ໄດ້ຮັບການປັບປຸງ ເພື່ອການປະຕິບັດງານ ທີ່ມີປະສິດທິພາບ ແລະ ປະສິດທິຜົນ (ນະວັດຕະກຳດ້ານເຕັກ** | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |

| | | |
|---|---|---|
| (ລະຫັດກິດຈະກຳ Atlas) | ໂນໂລຢີ ແລະ ວິທີການ ແລະ ການປະຕິບັດທີ່ດີທີ່ສຸດໃນຂະແໜງການ) | |
| **ຈຸດປະສົງ** | ຜົນສຳເລັດຂອງກິດຈະກຳນີ້ ຈະປະກອບສ່ວນເຂົ້າໃນການປັບປຸງເຕັກໂນໂລຢີ ເພື່ອການປະຕິບັດງານທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍມີການຄົ້ນຄວ້າດ້ານເຕັກໂນໂລຢີ ຢ່າງເປັນປົກກະຕິ. | |
| **ຄຳອະທິບາຍ** | • ທົດລອງໃຊ້ ເຄື່ອງກວດ<br>• ທົດລອງໃຊ້ ການສຳຫຼວດທໍລະນີຟີຊິກ<br>• ທົບທວນ ນະວັດຕະກຳໃໝ່, ບົດຮຽນ ແລະ ການປະຕິບັດທີ່ດີທີ່ສຸດ ຢ່າງເປັນປົກກະຕິ. | |
| **ມາດຖານດ້ານຄຸນນະພາບ**<br>*ດ້ວຍວິທີໃດ/ມີຕົວຊີ້ບອກໃດ ໃຊ້ວັດແທກຄຸນນະພາບຂອງຜົນກິດຈະກຳ?* | **ວິທີການຢັ້ງຢືນຄຸນນະພາບ**<br>*ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່?* | **ມື້ປະເມີນຜົນ**<br>*ເມື່ອໃດຈະມີການປະເມີນຄຸນນະພາບ?* |
| **ທົດລອງໃຊ້ເຄື່ອງກວດ:**<br>ມີການທົດລອງໃຊ້ເຄື່ອງກວດ ແລະ ບົ່ງຊີ້ຊະນິດເຄື່ອງກວດທີ່ແທດເໝາະ. | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ການສຳຫຼວດທໍລະນີຟີຊິກ:**<br>ດຳເນີນການສຳຫຼວດທໍລະນີຟີຊິກ ແລະ ນຳໃຊ້ຜົນທີ່ໄດ້ຮັບ ເຂົ້າໃນການວາງແຜນໃນອານາຄົດ. | ບົດລາຍງານຄວາມຄືບໜ້າ | ທຸກໆໄຕມາດ |
| **ໂຄງການລິເລີ່ມອື່ນໆ:**<br>ຈຳນວນການທົບທວນແຕ່ລະໄລຍະ ການປະຕິບັດທີ່ດີທີ່ສຸດ ແລະ ເຕັກໂນໂລຢີໃໝ່. | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ | ທຸກໆໄຕມາດ |

| | | |
|---|---|---|
| ຜົນສຳເລັດຂອງກິດຈະກຳທີ່ 13 (ລະຫັດກິດຈະກຳ Atlas) | ຍົກລະດັບຂີດຄວາມສາມາດສະຖາບັນຂອງອົງການເກັບກູ້ລະເບີດແຫ່ງຊາດ ໂດຍຜ່ານການບໍລິການໃຫ້ຄຳປຶກສາ ດ້ານການຄຸ້ມຄອງການເງິນ ແລະ ວິຊາການໂຄງການ ແລະ ການປະຕິບັດງານ. ການສ້າງ ແລະ ຈັດຕັ້ງປະຕິບັດ ຍຸດທະສາດພັດທະນາຂີດຄວາມສາມາດ ໃຫ້ແກ່ອົງການເກັບກູ້ລະເບີດແຫ່ງຊາດ ອີງຕາມຂີດຄວາມສາມາດ ແລະ ຄວາມຕ້ອງການທີ່ໄດ້ລະບຸ ໃນການປະເມີນຂີດຄວາມສາມາດຂອງຕົນເອງ. | ມື້ເລີ່ມ: 1 ມັງກອນ 2013<br>ມື້ສິ້ນສຸດ: 31 ທັນວາ 2015 |
| ຈຸດປະສົງ | ຜົນສຳເລັດຈະປະກອບສ່ວນເຂົ້າໃນໂຄງການ ໂດຍການສະໜອງ ການສະໜັບສະໜູນໃຫ້ຄຳປຶກສາ ດ້ານການຄຸ້ມຄອງການເງິນ ແລະ ວິຊາການ ໃຫ້ແກ່ຄະນະຊີ້ນຳອາວຸໂສ ຂອງອົງການເກັບກູ້ລະເບີດ ແຫ່ງຊາດ ແລະ ພະນັກງານທີ່ກ່ຽວຂ້ອງໃນໂຄງການ, ການປະຕິບັດງານດ້ານວິຊາການ ແລະ ຂົງເຂດການຄຸ້ມຄອງດ້ານການເງິນ. | |
| ຄຳອະທິບາຍ | • ປະສານງານ ແລະ ວາງແຜນ ການຍົກລະດັບຂີດຄວາມສາມາດ ແລະ ຄຳແນະນຳດ້ານວິຊາການ.<br>• ສະໜັບສະໜູນ ກິດຈະກຳລະດົມຊັບພະຍາກອນ.<br>• ເຮັດການປະເມີນຂີດຄວາມສາມາດໂຄງການ ອົງການເກັບກູ້ລະເບີດແຫ່ງຊາດວ ແລະ ການຄຸ້ມຄອງການເງິນ.<br>• ພັດທະນາແຜນຂີດຄວາມສາມາດ, ຄວາມຕ້ອງການດ້ານການຝຶກອົບຮົມ ແລະ ບົ່ງຊີ້ຍຸດທະສາດການຖອນຕົວອອກ.<br>• ກວດກາ/ທົບທວນ ເຕັກໂນໂລຢີ ແລະ ວິທີການປະຕິບັດງານໃໝ່. | |
| **ມາດຖານດ້ານຄຸນນະພາບ**<br>ດ້ວຍວິທີໃດ/ມີຕົວຊີ້ບອກໃດ ໃຊ້ວັດແທກຄຸນນະພາບຂອງຜົນກິດຈະກຳ? | **ວິທີການຢັ້ງຢືນຄຸນນະພາບ**<br>ເຄື່ອງມືຢັ້ງຢືນພິສູດ. ມີວິທີການໃດຈະນຳໃຊ້ ເພື່ອຢັ້ງຢືນວ່າ ໄດ້ຮັບມາດຖານດ້ານຄຸນນະພາບ ຫຼື ບໍ່? | **ມື້ປະເມີນຜົນ**<br>ເມື່ອໃດຈະມີການປະເມີນຄຸນນະພາບ? |
| **ຫົວໜ້າຊ່ຽວຊານດ້ານວິຊາການ:**<br>• ຕົວຊີ້ບອກ ແຜນວຽກປະຈຳປີ ບັນລຸຄາດໝາຍ ໂດຍ ກິດຈະກຳ ຂອງອົງການເກັບກູ້ລະເບີດແຫ່ງຊາດ. | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ລະເບີດແຫ່ງຊາດ. | ທຸກໆໄຕມາດ |

| | | |
|---|---|---|
| • ລະດົມຊັບພະຍາກອນເພີ່ມຕື່ມ ເປັນໄລຍະຫຼາຍປີ.<br>• ຈຳນວນເຕັກໂນໂລຢີໃໝ່ ທີ່ໄດ້ຄົ້ນພົບໃນແຕ່ລະປີ.<br>• ຈຳນວນຂອງບົດລາຍງານ ກ່ຽວກັບວິທີປະຕິບັດງານທີ່ດີທີ່ສຸດ/ບົດຮຽນໄດ້ຮັບການແລກປ່ຽນ ແລະ ເຜີຍແຜ່ທົ່ວໄປ. | | |
| **ທີ່ປຶກສາການຄຸ້ມຄອງດ້ານການເງິນ:**<br>• ຕົວຊີ້ບອກ ແຜນວຽກປະຈຳປີບັນລຸຄາດໝາຍ ໂດຍ ໜ່ວຍງານການເງິນ ລບຕ.<br>• ການຈັດລະດັບການກວດສອບ IM ໃຫ້ໄດ້ຢ່າງຕ່ຳ 'ພໍໃຈ'<br>ລະບົບການເງິນຂອງ ອົງການເກັບກູ້ລະເບີດແຫ່ງຊາດ ແລະ ອົງການ ສປຊ ເພື່ອການພັດທະນາ ແມ່ນ 'ກົມກຽວກັນ' | ກວດກາໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ອົງການເກັບກູ້ ລະເບີດແຫ່ງຊາດ. | ທຸກໆໄຕມາດ |

**ເອກະສານຊ້ອນທ້າຍ 5 – ສະມາຊິກຄະນະກຳມະການ ຄຊກລ**

| | |
|---|---|
| ລັດຖະມົນຕີວ່າການ ຫ້ອງການລັດຖະບານ, ປະທານຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ | ປະທານ |
| ລັດຖະມົນຕີວ່າການກະຊວງການຕ່າງປະເທດ | ຮອງປະທານ |
| ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ຮອງປະທານ |
| ຫົວໜ້າກົມວິສາວະກອນ, ກະຊວງປ້ອງກັນປະເທດ | ເປັນກຳມະການ |
| ຫົວໜ້າກົມຈັດຕັ້ງສາກົນ, ກະຊວງການຕ່າງປະເທດ | ເປັນກຳມະການ |
| ຫົວໜ້າກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ | ເປັນກຳມະການ |
| ຫົວໜ້າກົມການຢາ, ກະຊວງສາທາລະນະສຸກ | ເປັນກຳມະການ |
| ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ | ເປັນກຳມະການ |
| ຫົວໜ້າກົມງົບປະມານ, ກະຊວງການເງິນ | ເປັນກຳມະການ |
| ຫົວໜ້າກົມແຜນການ ແລະ ພັດທະນາການຮ່ວມມື, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນກຳມະການ |
| ຫົວໜ້າກົມກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| ຫົວໜ້າກົມຕຳຫຼວດປ້ອງກັນຄວາມສະຫງົບ 106, ກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| ຮອງຫົວໜ້າຫ້ອງການ, ກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ |
| ຮອງຫົວໜ້າກົມຈັດຕັ້ງ ແລະ ບຸກຄະລາກອນ, ຫ້ອງການແນວໜ້າລາວສ້າງຊາດ | ເປັນກຳມະການ |
| ຫົວໜ້າກົມເຜີຍແຜ່-ຝຶກອົບຮົມ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນກຳມະການ |
| ຮອງຫົວໜ້າຫ້ອງການ, ສູນກາງສະຫະພັນແມ່ຍິງລາວ | ເປັນກຳມະການ |
| ຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ | ເປັນກຳມະການ ແລະ ທັງເປັນຫົວໜ້າກອງເລຂາ |

ເອກະສານຊ້ອນທ້າຍ 6 – ວັດຖຸປະສົງ ແລະ ກິດຈະກຳຍຸດທະສາດ ຂອງ ລັດຖະບານ ສປປ ລາວ ທີ່ກຳນົດໃນແຜນຍຸດທະສາດແຫ່ງຊາດ ໃນຂະແໜງການ ລບຕ: ເສັ້ນທາງກ້າວສູ່ຄວາມປອດໄພ II

**ຈຸດປະສົງ 1**: ຫຼຸດຈຳນວນຜູ້ເສຍຊີວິດຈາກ ລບຕ ຈາກ 300 ຄົນໃນຊຸມປີທີ່ຜ່ານມາໃຫ້ໜ້ອຍກວ່າ 75 ຄົນ ຕໍ່ປີ

**ກິດຈະກຳຫຼັກ**

ກ. ດຳເນີນກິດຈະກຳສຶກສາຄວາມສ່ຽງ ແນໃສ່ການປ່ຽນແປງດ້ານພຶດຕິກຳໃນກຸ່ມທີ່ມີຄວາມສ່ຽງ; ຍົກລະດັບຄວາມຮັບຮູ້ກ່ຽວກັບ ອຸບັດເຫດທີ່ເກີດຈາກ ລບຕ, ແລະ ການສຶກສາໃນຫ້ອງຮຽນສຳລັບນັກຮຽນທີ່ຢູ່ໃນເຂດທີ່ມີລະເບີດຕົກຄ້າງ.

ຂ. ໃຫ້ການສະໜັບສະໜູນທີ່ເໝາະສົມແກ່ອາສາສະໝັກບ້ານທີ່ເຮັດໜ້າທີ່ເປັນສິດສອນໃຫ້ກຸ່ມທີ່ມີຄວາມສ່ຽງ.

ຄ. ຍົກລະດັບການຕອບສະໜອງທີ່ມີການປະສານງານ ແລະ ທັນເວລາ ເພື່ອປ້ອງກັນອຸບັດເຫດ ຜ່ໂດຍານການສຶກສາຄວາມສ່ຽງກ່ຽວກັບລະເບີດລູກຫວ່ານ, ການເກັບກູ້ລະເບີດ ຫຼື ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

ງ. ສ້າງ ແລະ ບັງຄັບໃຊ້ນິຕິກຳເພື່ອຄຸ້ມຄອງການຄ້າເສດເຫຼັກ ແລະ ກິດຈະກຳທີ່ມີຄວາມສ່ຽງສູງອື່ນໆ.

**ຈຸດປະສົງ 2**: ຮັບປະກັນວໃຫ້ຄວາມຕ້ອງການດ້ານການແພດ ແລະ ການຟື້ນຟູຂອງ ຜູ້ລອດຊີວິດທັງໝົດຈາກ ລບຕ ແລະ ຜູ້ປະສົບເຄາະຮ້າຍອື່ນໆ ໄດ້ຮັບການຕອບສະໜອງ ເພື່ອປະຕິບັດສອດຄ່ອງກັບ ສົນທິສັນຍາສາກົນ

**ກິດຈະກຳຫຼັກ**

ກ. ສ້າງຕັ້ງ ແລະ ຮັກສາລະບົບຕິດຕາມຜູ້ປະສົບເຄາະຮ້າຍ ຄົນລາວ.

ຂ. ເກັບກຳ, ສ້າງແຜນທີ່, ວິເຄາະ ແລະ ເຜີຍແຜ່ຂໍ້ມູນລາຍລະອຽດກ່ຽວກັບຜູ້ປະສົບເຄາະຮ້າຍຈາກ ລບຕ.

ຄ. ຕອບສະໜອງການແພດສຸກເສີນໃນຂັ້ນບ້ານ ແລະ ພັດທະນາລະບົບຂົນສົ່ງ/ລົດໂຮງໝໍ ເຖິງສະຖານທີ່ອຳນວຍຄວາມສະດວກດ້ານການແພດ ໃນຊົນນະບົດໃຫ້ມີປະສິດທິຜົນ.

ງ. ເສີມຂະຫຍາຍການໃຫ້ບໍລິການດ້ານກາຍະພາບບຳບັດ.

ຈ. ພັດທະນາການໃຫ້ບໍລິການດ້ານການບຳບັດຈິດຕະສັງຄົມ ໃນລະດັບຊຸມຊົນ ທົ່ວເຂດທີ່ມີລະເບີດຕົກຄ້າງ.

ສ. ບົ່ງຊີ້ ແລະ ແກ້ໄຂຊ່ອງວ່າງເພີ່ມເຕີມໃນ 6 ເສົາຄ້ຳ ຂອງການສະໜັບສະໜູນຜູ້ປະສົບເຄາະຮ້າຍຈາກ ລບຕ.

**ຈຸດປະສົງ 3**: ປົດປ່ອຍດິນບູລິມະສິດ ແລະ ເກັບກູ້ ລບຕ ອີງຕາມມາດຕະຖານແຫ່ງຊາດ

**ກິດຈະກຳຫຼັກ**

ກ. ບົ່ງຊີ້ດິນບູລິມະສິດເພື່ອເກັບກູ້ລະເບີດ ອີງໃສ່ມາດຖານທີ່ຈະແຈ້ງ ແລະ ໃຫ້ຄຳນຶງເຖິງແຜນພັດທະນາບ້ານ, ເມືອງ, ແຂວງ ແລະ ປະເທດໃນປະຈຸບັນ.

ຂ. ປົດປ່ອຍດິນບູລິມະສິດ ໂດຍນຳໃຊ້ ວິທີການຄວບຄຸມຄວາມສ່ຽງທີ່ມີການວິເຄາະຂໍ້ມູນທີ່ກ່ຽວຂ້ອງ, ຕາມດ້ວຍການສຳຫຼວດທົ່ວໄປ ແລະ/ຫຼື ການສຳຫຼວດທາງດ້ານວິຊາການ, ການຕອບສະໜອງຕໍ່ການທຳລາຍເຄື່ອນທີ່ ແລະ/ຫຼື ການເກັບກູ້ເຕັມສ່ວນ ຕາມຄວາມເໝາະສົມ.

ຄ. ກວດກາຕິດຕາມ ກິດຈະກຳການເກັບກູ້ ແລະ ປົດປ່ອຍດິນ, ໃຫ້ຄຳນຶງເຖິງຜົນກະທົບ ແລະ ຄ່າໃຊ້ຈ່າຍ.

ງ. ຮັບປະກັນວ່າ ການປະຕິບັດງານທັງໝົດປະຕິບັດຕາມມາດຕະຖານແຫ່ງຊາດ.

**ຈຸດປະສົງ 4**: ຮັບປະກັນການເປັນຜູ້ນຳ, ການປະສານງານ ແລະ ການຈັດຕັ້ງປະຕິບັດໂຄງການແຫ່ງຊາດ ຢ່າງມີປະສິດທິຜົນ

**ກິດຈະກຳຫຼັກ**

ກ. ເກັບຮັກສາຂໍ້ມູນແຫ່ງຊາດທັງໝົດ ທີ່ກ່ຽວຂ້ອງກັບຂະແໜງການ ລບຕ ແລະ ມີຂໍ້ມູນເຫຼົ່ານັ້ນໃຫ້ພາກສ່ວນກ່ຽວຂ້ອງ

ທັງໝົດເຂົ້າເຖິງໄດ້.

ຂ. ສ້າງຄາດໝາຍງົບປະມານ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດ ຂອງຂະແໜງການ ລບຕ.

ຄ. ສ້າງແຜນວຽກຂະແໜງການປະຈໍາປີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ II, ພ້ອມທັງຈັດຕັ້ງປະຕິບັດຄໍາແນະນໍາຂອງບົດປະເມີນຜົນປີ 2008 ກ່ຽວກັບທັດສະນະທາງດ້ານ ບົດບາດຍິງ-ຊາຍ ໃນການປະຕິບັດງານ ລບຕ. ແຜນວຽກປະຈໍາປີ ຈະລວມມີເປົ້າໝາຍສະເພາະຂອງຂະແໜງການ ບົນພື້ນຖານຖະແຫຼງການວຽງຈັນ ປີ 2006 ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ.

ງ. ບັນດາຄູ່ຮ່ວມມືພັດທະນາ ເພີ່ມການປະກອບສ່ວນທີ່ບໍ່ຜູກມັດໃນທົ່ວຂະແໜງການ.

ຈ. ບັນດາຄູ່ຮ່ວມມືພັດທະນາ ໃຫ້ພັນທະສັນຍາເປັນໄລຍະຫຼາຍປີໃນພາລະກິດ ລບຕ.

**<u>ຈຸດປະສົງ 5</u>: ສ້າງຂີດຄວາມສາມາດແຫ່ງຊາດທີ່ຍືນຍົງ ທີ່ເຊື່ອມໂຍງເຕັມສ່ວນເຂົ້າໃນໂຄງສ້າງສະຖາບັນ ແລະ ງົບປະມານຂອງລັດຖະບານ**

**ກິດຈະກໍາຫຼັກ**

ກ. ຮັບປະກັນວ່າ ຍຸດທະສາດ, ແຜນ ແລະ ໂຄງການພັດທະນາ ເສດຖະກິດ-ສັງຄົມ ໃນທຸກຂັ້ນເຫັນ ຄວາມສໍາຄັນຂອງການໃຫ້ທຶນ ແລະ ການປະຕິບັດງານ ລບຕ.

ຂ. ກະກຽມ ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດແຜນໂອນຖ່າຍກິດຈະກໍາຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ການສຶກສາຄວາມສ່ຽງລະເບີດລູກຫວ່ານ ໃຫ້ເປັນໜ່ວຍງານ ແລະ ອົງການຈັດຕັ້ງແຫ່ງຊາດ.

ຄ. ບົ່ງຊີ້ບັນດາເງື່ອນໄຂພັດທະນາຂີດຄວາມສາມາດສະຖາບັນ ເພື່ອປ້ອງກັນໄພອັນຕະລາຍໄລຍະຍາວຈາກ ລບຕ; ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນໂອນຖ່າຍແລະ ພັດທະນາຂີດຄວາມສາມາດ.

ງ. ສ້າງຕັ້ງສູນຝຶກອົບຮົມແຫ່ງຊາດ ຊຶ່ງໃນໄລຍະຍາວ ແມ່ນຈະໄດ້ຮັບທຶນຈາກພາຍໃນຢ່າງເຕັມສ່ວນທາງດ້ານຊັບພະຍາກອນຕ່າງໆ ແລະ ຮັບປະກັນວ່າພະນັກງານທັງໝົດ ໄດ້ຮັບການຝຶກອົບຮົມ ແລະ ໄດ້ຮັບໃບອະນຸຍາດຕາມມາດຕະຖານລບຕ ແຫ່ງຊາດ. ສູນຍັງຈະໄດ້ຝຶກອົບຮົມ, ໃຫ້ໃບອະນຸຍາດ ແລະ ສະໜັບສະໜູນພະນັກງານຂອງອົງການປະຕິບັດງານອິດສະລະ ບົນພື້ນຖານການກູ້ຕົ້ນທຶນຄືນໄດ້.

ຈ. ສ້າງ ແລະ ຈັດຕັ້ງປະຕິບັດແຜນໄລຍະຍາວສໍາລັບການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ຂະແໜງການ ລບຕ.

**<u>ຈຸດປະສົງ 6</u>: ບັນລຸພັນທະຂອງສົນທິສັນຍາສາກົນ**

**ກິດຈະກໍາຫຼັກ**

ກ. ສ້າງ ແລະ ບັງຄັບໃຊ້ນິຕິກໍາ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດພັນທະສັນຍາຂອງສົນທິສັນຍາ ທັງໝົດ, ລວມມີສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM).

ຂ. ສົ່ງບົດລາຍງານປະຈໍາປີ ເຖິງເລຂາທິການໃຫຍ່ ອົງການສະຫະປະຊາຊາດ, ຕາມທີ່ລະບຸໄວ້ ພາຍໃຕ້ມາດຕາ 7 ຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

ຄ. ສືບຕໍ່ກອງທຶນສາກົນ, ເປັນໜຶ່ງໃນທາງເລືອກ, ເພື່ອອໍານວຍຄວາມສະດວກໃຫ້ການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດຫວ່ານ, ເພື່ອປະຕິບັດໃຫ້ສອດຄ່ອງກັບຖະແຫຼງການວຽງຈັນ.

**ເອກະສານຊ້ອນທ້າຍ 7: ການປະເມີນຜົນຂອງອົງການ ສປຊ ເພື່ອການພັດທະນາ ໃນຂະແໜງການ ລບຕ ໃນ ສປປ ລາວ ຈາກປີ 2003 – 2011: ຂໍ້ສັງເກດ ແລະ ຂໍ້ແນະນໍາ ທີ່ສໍາຄັນ**

ບັນດາຂໍ້ສັງເກດຂອງທີມງານປະເມີນຜົນມີດັ່ງລຸ່ມນີ້:

- ຂາດຂໍ້ມູນພື້ນຖານທີ່ໜ້າເຊື່ອຖື ຢ່າງຫຼວງຫຼາຍ ກ່ຽວກັບລະດັບ ແລະ ບໍລິເວນທີ່ມີ ລບຕ ຕົກຄ້າງໃນປະເທດ ເຊິ່ງເປັນຜົນມາຈາກການສຳຫຼວດດ້ານເຕັກນິກ ແລະ ບໍ່ແມ່ນເຕັກ
  ນິກຍັງບໍ່ພຽງພໍ;
- ການບັນທຶກຂໍ້ມູນ ກ່ຽວກັບບໍລິເວນທີ່ໄດ້ຮັບການເກັບກູ້ລະເບີດຍັງບໍ່ພຽງພໍ ຫຼື ຍັງບໍ່ໄດ້ຮັບການຢັ້ງຢືນວ່າ ເປັນບໍລິເວນທີ່ບໍ່ມີການຕົກຄ້າງຂອງລະເບີດ.
- ການສື່ສານລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງສຳຄັນຍັງບໍ່ພຽງພໍ.

ບັນດາຜົນກະທົບຈາກຂໍ້ສັງເກດເຫຼົ່ານີ້ ແມ່ນການມີຂ່າວສານ ແລະ ຂໍ້ມູນບໍ່ພຽງພໍ ເພື່ອຈັດລຽງບູລິມະສິດ ບໍລິເວນທີ່ຈະມີການເກັບກູ້, ການວາງແຜນຢ່າງມີປະສິດທິພາບ ແລະ ຮັບປະກັນວ່າ ບໍ່ມີການເຮັດວຽກຊ້ຳຊ້ອນ ໂດຍສະເພາະໃນກິດຈະກຳການເກັບກູ້ລະເບີດ.

ໃນດ້ານການຈັດລຽງບູລິມະສິດ ພາຍໃນຂະແໜງການ, ການປະເມີນຜົນໄດ້ສັງເກດເຫັນການແບ່ງແຍກດ້ານວິທີການໃນການວາງແຜນປະຈຳປີ ລະຫວ່າງບັນດາອົງການປະຕິບັດງານເກັບກູ້ລະ ເບີດເພື່ອມະນຸດສະທຳ. ໃນປະຈຸບັນ, ແຕ່ລະອົງການປະຕິບັດງານ ເກັບກຳ ແລະ ຕອບສະໜອງ ຕໍ່ຄຳຂໍຮ້ອງເພື່ອເກັບກູ້ລະເບີດນັ້ນ ບາງຄັ້ງກໍ່ມີລັກສະນະສະເພາະກິດ, ປາສະຈາກການປະສານງານກັບອົງການປະຕິບັດງານອື່ນ ຫຼື ຜ່ານຫ້ອງການ ຄຊກລ.

ບາງທີ ສິ່ງທ້າທາຍໃຫຍ່ສຸດ ທີ່ຫ້ອງການ ຄຊກລ ປະເຊີນໜ້າ ແມ່ນ ການປັບປຸງການເກັບກຳຂໍ້ມູນທີ່ແມ່ນຢຳ, ການຮັກສາພະນັກງານ ແລະ ການວິເຄາະ; ການປັບປຸງການວາງແຜນປະຈຳປີ ແລະ ຫຼາຍປີ ແລະ ການຈັດລຽງບູລິມະສິດ ບັນດາກິດຈະກຳສຳຫຼວດ ແລະ ເກັບກູ້ລະເບີດ ໃນຂະແໜງການ ລບຕ ແລະ ເພີ່ມການເຊື່ອມໂຍງການວາງແຜນຂະແໜງການ ລບຕ ເຂົ້າໃນການວາງແຜນແຫ່ງຊາດ ແລະ ຂັ້ນຕອນຈັດງົບປະມານທີ່ກວ້າງຂວາງກວ່າ.

ນອກຈາກນັ້ນ, ຫ້ອງການ ຄກລຊ ຕ້ອງປັບປຸງຂີດຄວາມສາມາດຂອງຕົນຫຼາຍພໍສົມຄວນ ເພື່ອປະສານງານ ແລະ ຄຸ້ມຄອງບັນດາກິດຈະກຳໃນຂະແໜງການ ແລະ ປະຕິບັດການຄຸ້ມຄອງຄຸນນະພາບ.

ຂໍ້ແນະນຳທີ່ຄັດເລືອກ ຈາກທີມປະເມີນຜົນ ກ່ຽວກັບ ຫ້ອງການ ຄຊກລ ສະຫຼຸບໄວ້ລຸ່ມນີ້:

**ສຳລັບຫ້ອງການ ຄຊກລ**

1. ຫ້ອງການ ຄຊກລ: ຈາກການສະໜັບສະໜູນຈາກອົງການ ສປຊ ເພື່ອການພັດທະນາ, ຕ້ອງສືບຕໍ່ສະໜັບສະໜູນແນວທາງການສຳຫຼວດ ແບບສຸ່ມໃສ່ເມືອງ ເປັນຈຸກໜັກ (DFA) ເພື່ອສາມາດກຳນົດຂໍ້ມູນພື້ນຖານກ່ຽວກັບຂະໜາດ ແລະ ບໍລິເວນຂອງການຕົກຄ້າງ ລບຕ;
2. ຫ້ອງການ ຄຊກລ ຕ້ອງຂໍຮ້ອງໃຫ້ ອົງການປະຕິບັດງານທັງໝົດ ສະໜັບສະໜູນ ການສ້າງ/ປັບແກ້ແຜນທີ່ ຂອງເຂດບໍລິເວນທີ່ໄດ້ຮັບການເກັບກູ້ໃນອະດີດ ໂດຍການສ້າງຂອບເຂດອ້າງອີງຕາມພູມສາດ ຕາມຄວາມເໝາະສົມ;
3. ຫ້ອງການ ຄຊກລ ຕ້ອງພັດທະນາຂີດຄວາມສາມາດທີ່ຈຳເປັນ ເພື່ອປະຕິບັດການຮັບປະກັນຄຸນະພາບ (QA) ແລະ ການຄວບຄຸມຄຸນະພາບ (QC) ໃນວຽກພາກສະໜາມຕາມຄວາມເໝາະສົມ. (ນີ້ລວມເຖິງການພິຈາລະນາກ່ຽວກັບງົບປະມານ ເພາະວ່າອຸປະສັກດ້ານການບໍລິຫານ ແມ່ນເຫດຜົນຫຼັກ ເຮັດໃຫ້ການປະຕິບັດ QC ມີຂໍ້ຈຳກັດ);
4. ຫ້ອງການ ຄຊກລ ຕ້ອງສືບຕໍ່ປຶກສາຫາລື ດ້ານວິຊາການໃນການສຳຫຼວດ ແນໃສ່ເພີ່ມຄວາມສອດຄ່ອງ ກັບມາດຕະຖານແຫ່ງຊາດ ແລະ ປັບແກ້ມາດຕະຖານແຫ່ງຊາດຖ້າຈຳເປັນ ເພື່ອປະຕິບັດການສຳຫຼວດ ແລະ ເກັບກູ້ເຂດບໍລິເວນທີ່ເປັນເປົ້າໝາຍ;

5. ຫ້ອງການ ຄຊກລ ຕ້ອງ ສ້າງຕັ້ງລະບົບການປະສານງານ ແລະ ມອບວຽກ ທີ່ກຽມພ້ອມ ເພື່ອຮັບປະກັນວ່າ ບັນດາອົງການປະຕິບັດງານ ສາມາດເຂົ້າເຖິງຂໍ້ມູນກ່ອນໜ້ານີ້ທັງໝົດ
ກ່ຽວກັບສະຖານທີ່ ແລະ ບໍລິເວນອ້ອມຮອບ;
6. ຫ້ອງການ ຄຊກລ ຕ້ອງຮັບປະກັນວ່າ ບັນດາອົງການປະຕິບັດງານ ສາມາດຕັດສິນໃຈໃນການປະຕິບັດງານ ທີ່ນອກເໜືອຈາກການແກ້ໄຂພຽງແຕ່ບໍລິເວນເກັບກູ້ລະເບີດທີ່ລະບຸໄວ້
ເທົ່ານັ້ນ ທີ່ອີງຕາມການຂໍຮ້ອງຈາກ ຊຸມຊົນທີ່ໄດ້ຮັບຜົນກະທົບ, ເພື່ອກໍານົດວ່າ ມີຄວາມຈໍາເປັນທີ່ຈະຕ້ອງເກັບກູ້ບໍລິເວນຖັດໄປຕື່ມອີກ ຫຼື ບໍ່. ກ່ອນອື່ນໝົດ, ສິ່ງນີ້ ສາມາດເຮັດໃຫ້ປະຫຍັດທາງດ້ານຂະໜາດ ແລະ/ຫຼື ກໍານົດວ່າເຂດອ້ອມຮອບດັ່ງກ່າວ ບໍ່ມີລະເບີດຕົກຄ້າງ;
7. ຫ້ອງການ ຄຊກລ ຕ້ອງພັດທະນາ ຂັ້ນຕອນທຸລະກິດທີ່ຈະແຈ້ງ ແລະ ລະອຽດ ເພື່ອໃຫ້ການຮັບຮອງຕໍ່ບັນດາອົງການປະຕິບັດງານ ແລະ ພ້ອມດຽວກັນນັ້ນ ກໍ່ສ້າງເອກະສານແນະນໍາ ໃຫ້ແກ່ບັນດາຝ່າຍທີ່ສົນໃຈ ພ້ອມດ້ວຍຄໍາແນະນໍາ ແລະເງື່ອນໄຂປະຕິບັດ;
8. ຫ້ອງການ ຄຊກລ, ຈາກການສະໜັບສະໜູນຂອງອົງການ ສປຊ ເພື່ອການພັດທະນາ, ຕ້ອງລິເລີ່ມການປຶກສາຫາລື ກັບຝ່າຍທີ່ກ່ຽວຂ້ອງໃນຂະແໜງການ ກ່ຽວກັບບົດບາດ ແລະ ໜ້າທີ່ ຂອງຫ້ອງການ ຄຊກລ ຂັ້ນແຂວງ;
9. ຫ້ອງການ ຄຊກລ ຕ້ອງຮັບປະກັນໃຫ້ສະໜອງກ່ຽວກັບການສຶກສາຄວາມສ່ຽງຢ່າງພຽງພໍ ແລະ ເໝາະສົມ ໃນບໍລິເວນທີ່ມີຄວາມສ່ຽງສູງ ແລະ ແນໃສ່ກຸ່ມທີ່ມີຄວາມສ່ຽງສູງ;
10. ຫ້ອງການ ຄຊກລ ຕ້ອງສົ່ງເສີມໃຫ້ມີ ການປະສານງານ ແລະ ເຊື່ອມໂຍງຢ່າງໃກ້ຊິດ ລະຫວ່າງ ກິດຈະກໍາຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ ຂອງຫ້ອງການ ຄຊກລ (ແລະ ບັນດາອົງການປະຕິບັດງານ) ແລະ ອົງການປະສານງານທີ່ມີຫຼາຍພາກສ່ວນກ່ຽວຂ້ອງ ທີ່ສ້າງຕັ້ງໃໝ່ ທີ່ຊີ້ນໍາໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແນໃສ່ປະຊຸມຊຸມຜູ້ເສຍອົງຄະ ພ້ອມດ້ວຍປັດໄຈອື່ນໆທີ່ກ່ຽວຂ້ອງ ເຊັ່ນ: ກະຊວງສາທາລະນະສຸກ.

<u>ສໍາລັບ ອົງການ ສປຊ ເພື່ອການພັດທະນາ</u>

11. ອົງການ ສປຊ ເພື່ອການພັດທະນາ ຕ້ອງສະໜັບສະໜູນ ຫ້ອງການ ຄຊກລ ແລະ ຄະນະຊີ້ນໍາ ຂອງຫ້ອງການ ຄຊກລ ທີ່ຫາກໍ່ໄດ້ສ້າງຕັ້ງຂຶ້ນ ພາຍໃຕ້ຫ້ອງການລັດຖະບານ ເພື່ອເສີມຂະຫຍາຍ ການຕິດຕໍ່ ແລະ ປະສານງານ ກັບກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ທີ່ຢູ່ນອກຂະແໜງການ ເພື່ອສາມາດເຊື່ອມໂຍງ ການວາງແຜນໃນຂະແໜງການແກ້ໄຂ ບັນຫາ ລບຕ ເຂົ້າໃນ ກອບວຽກການວາງແຜນແຫ່ງຊາດ ຢ່າງເຕັມສ່ວນ;
12. ອົງການ ສປຊ ເພື່ອການພັດທະນາ ຕ້ອງສະໜັບສະໜູນ ຫ້ອງການ ຄຊກລ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດກົນໄກໜຶ່ງ ເພື່ອຮຽກຮ້ອງໃຫ້ ອົງການປະຕິບັດງານທັງໝົດ
ຍື່ນລ່ວງໜ້າ ແຜນການສໍາຫຼວດ ແລະ ກິດຈະກໍາເກັບກູ້ລະເບີດ;
13. ອົງການ ສປຊ ເພື່ອການພັດທະນາ ຕ້ອງສະໜັບສະໜູນ ກິດຈະກໍາຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຂອງ ຄຊກລ, ແຕ່ບໍ່ຈໍາກັດພຽງແຕ່ຢູ່ໃນຂົງເຂດທີ່ມີຂໍ້ໄດ້ປຽບທາງການປຽບທຽບເທົ່ານັ້ນ; ເຊັ່ນ: ການສະໜັບສະໜູນດ້ານໂຄສະນາຊວນເຊື່ອ, ເນັ້ນຢໍ້າຄວາມຈໍາເປັນໃນການສະໜັບສະໜູນ VVA ພາຍໃນກອບວຽກດ້ານຄົນພິການ. ດັ່ງນັ້ນ, ຈະບໍ່ສະໜັບສະໜູນແຕ່ຫ້ອງການ ຄຊກລ ແຕ່ຍັງສະໜັບສະໜູນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສາທາລະນະສຸກ, ການຕິດຕາມເຫດການ ແລະ ອຸບັດເຫດ ແລະ ການເກັບກໍາຂໍ້ມູນ, ການວິເຄາະ ແລະ ການແລກປ່ຽນຂໍ້ມູນ ເພື່ອຊ່ວຍເຫຼືອຜູ້ລອດຊີວິດ ແລະ ການລະດົມຊັບພະຍາກອນ ເປັນຕົ້ນແມ່ນ ຜ່ານກອງທຶນທີ່ຄຸ້ມຄອງໂດຍ ອົງການ ສປຊ ເພື່ອການພັດທະນາ.

**ຂໍ້ສັງເກດການທີ່ຄັດເລືອກ ຈາກທີມປະເມີນຜົນ ກ່ຽວກັບ <u>ອົງການເກັບກູ້ລະເບີດແຫ່ງຊາດ</u> ສະຫຼຸບໄວ້ລຸ່ມນີ້:**

ອົງການເກັບກູ້ລະເບີດແຫ່ງຊາດ ບັນລຸຄາດໝາຍ ແລະ ຄະນະບໍລິຫານງານ ໄດ້ສ້າງຈັນຍາບັນເຮັດວຽກທີ່ດີໃຫ້ກັບບັນດາພະນັກງານ ຊຶ່ງພວກເຂົາພາກພູມໃຈຕໍ່ຜົນສຳເລັດ ແລະ ການປະກອບສ່ວນເຂົ້າໃນໂຄງການ. ມີຄວາມເຂົ້າໃຈສູງ ກ່ຽວກັບໜ້າທີ່ຕ່າງໆ ແລະ ມີການປະຕິບັດວຽກຢ່າງກົມກຽວ, ມີຂັ້ນຕອນປະຕິບັດງານ ແລະ ບໍລິຫານທີ່ເຂັ້ມແຂງ ຊຶ່ງໄດ້ຮັບການປະຕິບັດ ດ້ວຍຄວາມຮອບຄອບຖີ່ຖ້ວນ ເພື່ອບັນລຸເປົ້າໝາຍ ແລະ ຈຸດປະສົງໃນແຕ່ລະປີ.

ເຖິງຢ່າງໃດກໍ່ຕາມ, ຄະນະບໍລິຫານງານ ມັກນຳໃຊ້ວິທີການ "ເຮັດວຽກຕາມປົກກະຕິ" ແລະ ເປົ້າໝາຍ ແລະ ຈຸດປະສົງ ທີ່ຕັ້ງເອົາໄວ້ ໃຫ້ໄດ້ຮັບການຍອມຮັບ ດ້ວຍການທົບທວນຄືນ ຫຼື ການປຶກສາຫາລືພຽງເລັກນ້ອຍ. ການບັນທຶກບັນດາບົດຮຽນ ແລະ ການປຶກສາຫາລື ກ່ຽວກັບວິທີການປະຕິບັດທີ່ມີທ່າແຮງ ຢ່າງຫ້າວຫັນ ແລະ ຮູ້ຈັກວິເຄາະຫຼາຍຂຶ້ນກວ່າເກົ່າ ອາດສ້າງປະໂຫຍດຕໍ່ໂຄງການ ແລະ ເພີ່ມໂອກາດທີ່ຈະປັບປຸງດ້ານປະສິດທິພາບ ແລະ ປະສິດທິຜົນ;

ວຽກສຸມໃສ່ປັບປຸງ ປະສິດທິພາບການໃຊ້ຈ່າຍ ໂດຍຜ່ານ ການກວດກາຕິດຕາມ ແລະ ປະເມີນຜົນ ໃນຂັ້ນຕອນເຮັດວຽກ ບໍ່ສາມາດນຳໃຊ້ເປັນລະບົບໄດ້;

ງົບປະມານທີ່ຈັດສັນໄວ້ຢ່າງຕາຍຕົວ ເຮັດໃຫ້ຂາດຄວາມຍືດຢຸ່ນ ເພື່ອແກ້ໄຂເຫດການທີ່ບໍ່ສາມາດຄາດເດົາໄດ້ ເປັນຕົ້ນ ເຊັ່ນ: ການກວດກາຄຸນນະພາບ ທີ່ບໍ່ໄດ້ກຽມໄວ້ກ່ອນ ຫຼື ການຮຽກເຕົ້າໂຮມສູກເສີນ;

ຜົນສຳເລັດ ແມ່ນເປັນພຽງ ການສື່ສານເປັນຈຳນວນເທົ່ານັ້ນ ໃນລະດັບກິດຈະກຳ ແລະ ໝາກຜົນ; ມີຫຼາຍຢ່າງທີ່ຕ້ອງໄດ້ເຮັດເພື່ອລາຍງານ ໃນລະດັບຜົນໄດ້ຮັບ ແລະ ຜົນກະທົບ;

ການສຶກສາຂໍ້ມູນ ໂດຍສູນສາກົນ ເຈນີວາ ສຳລັບການເກັບກູ້ລະເບີດເພື່ອມະນຸດສະທຳ (GICHD) ໃນມໍ່ໆນີ້ ໄດ້ຢັ້ງຢືນວ່າໃນລະດັບປະເທດ, ຍັງມີທ່າແຮງຫຼາຍ ເພື່ອປະສິດທິພາບທີ່ສູງຂຶ້ນ ໂດຍປັບປຸງການເລືອກເປົ້າໝາຍຊັບສິນຕ່າງໆ ແລະ ເພີ່ມປະສິດທິພາບການນຳໃຊ້ຊັບພະຍາກອນທີ່ມີຢູ່. ດ້ວຍສິ່ງເຫຼົ່ານີ້, ພວກເຂົາສາມາດມີຜົນໄດ້ຮັບຫຼາຍຂຶ້ນ ເມື່ອທຽບໃສ່ທຶນທີ່ຈ່າຍອອກໄປ.

**ຂໍ້ແນະນຳທີ່ຄັດເລືອກ ຈາກທີມປະເມີນຜົນ ກ່ຽວກັບ ອົງການເກັບກູ້ລະເບີດແຫ່ງຊາດ ສະຫຼຸບໄວ້ລຸ່ມນີ້:**

<u>ສຳລັບອົງການເກັບກູ້ລະເບີດແຫ່ງຊາດ</u>

1. ສົ່ງເສີມໃຫ້ມີການບັນທຶກ ບັນດາບົດຮຽນ ແລະ ການປຶກສາຫາລື ຢ່າງຫ້າວຫັນກ່ຽວກັບ ວິທີການປະຕິບັດທີ່ມີທ່າແຮງ ແລະ ບັນດາພະນັກງານຂອງອົງການເກັບກູ້ລະເບີດແຫ່ງຊາດຮູ້ຈັກວິເຄາະໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອປັບປຸງປະສິດທິພາບ ແລະ ປະສິດທິຜົນ;
2. ນຳໃຊ້ ແລະ ພັດທະນາ ຂີດຄວາມສາມາດສູງຂຶ້ນກ່ວາເກົ່າ ໃນການຕິດຕາມກວດກາຕົນເອງ ແລະ ການປະເມີນຜົນ;
3. ຮັບປະກັນວ່າ ພະນັກງານທີ່ກ່ຽວຂ້ອງ ໄດ້ຮັບການຝຶກອົບຮົມກ່ຽວກັບ ການຄຸ້ມຄອງການເງິນ ແລະ ການຮ່າງງົບປະມານ ເພື່ອຮັບປະກັນຄວາມສອດຄ່ອງ ລະຫວ່າງງົບປະມານ ແລະ ແຜນວຽກ ໃຫ້ດີຂຶ້ນກວ່າເກົ່າ;
4. ກວດກາຄືນ ຊັບສິນ ຍານພາຫະນະ ແລະ ເຄື່ອງມື ແລະ ຖ້າຈຳເປັນ ໃຫ້ຍົກລະດັບ ເພື່ອຂີດຄວາມສາມາດທີ່ສູງຂຶ້ນ;
5. ພິຈາລະນາທົບທວນຄືນ ຂັ້ນຕອນການວາງແຜນວຽກປະຈຳປີ ເພື່ອສາມາດກຳໄດ້ ການພັດທະນາ ການປະຕິບັດ ໃນບັນດາຂົງເຂດຂອງການສຳຫຼວດ ທີ່ບໍ່ແມ່ນດ້ານວິຊາການ ແລະ ການສຳຫຼວດດ້ານວິຊາການ ແລະ ການເກັບກູ້ລະເບີດ;

6. ພິຈາລະນາທົບທວນຄືນ ການວາງແຜນໜ້າວຽກ ແລະ ການຈັດລຽງບູລິມະສິດ ໂດຍຄຳນຶງເຖິງ ທິດຊີ້ນຳຂອງລັດຖະບານ ເພື່ອເຊື່ອມໂຍງຂະແໜງ ລບຕ ເຂົ້າໃນການວາງແຜນພັດທະນາແຫ່ງຊາດໃຫ້ກວ້າງອອກ.

<u>ສຳລັບ ອົງການ ສປຊ</u>

1. ສະໜັບສະໜູນການພັດທະນາ ແລະ ການຝຶກອົບຮົມດ້ານທັກສະການສື່ສານ ເພື່ອສາມາດນຳສະເໜີ ຜົນສຳເລັດຂອງໂຄງການໄດ້ດີຂຶ້ນ;
2. ສະໜອງແບບຟອມຕົວຢ່າງບົດລາຍງານ ທີ່ເນັ້ນໃສ່ຜົນໄດ້ຮັບອີງໃສ່ຜົນຮັບ ອີງໃສ່ຜົນສຳເລັດທີ່ໄດ້ຮັບ;
3. ສະໜອງການຝຶກອົບຮົມ  ແລະ ປະຊຸມປຶກສາຫາລືແບບສ້າງສັນ ໂດຍນຳໃຊ້ແນວຄິດ, ວິທີການ ແລະ ເຕັກນິກໃໝ່ ເພື່ອພັດທະນາ ການຄິດ ແລະ ການວິເຄາະ ແບບໄຈ້ແຍກ;
4. ປະເມີນ ຄ່າຄອງຊີບ ໃນຂົງເຂດການປະຕິບັດງານ ຂອງອົງການເກັບກູ້ລະເບີດແຫ່ງຊາດ ແລະ ຄິດໄລ່ການສູນເສຍທາງດ້ານລາຍໄດ້ ທີ່ອາດເກີດຂຶ້ນ ຍ້ອນລະດັບເງິນເດືອນທີ່ຍັງຄືເກົ່າ ແລະ ການເຂົ້າອອກຂອງພະນັກງານ ແລະ ບົ່ງຊີ້ສິ່ງຈູງໃຈ ເພື່ອຮັກສາພະນັກງານເອົາໄວ້;
5. ສະໜັບສະໜູນ ສ້າງແຜນທີ່ ຮອບບໍລິເວນ ທີ່ມີການເກັບກູ້ລະເບີດ ໃນອະດີດ ເພື່ອປະກອບສ່ວນເຂົ້າໃນການສ້າງຂໍ້ມູນພື້ນຖານ ທີ່ຈະແຈ້ງ ແລະ ຄົບຖ້ວນ ເພື່ອຫຼຸດຜ່ອນ ການນຳໃຊ້ຊັບສິນຊ້ຳຊາກ ຢູ່ໃນພື້ນທີ່ ທີ່ໄດ້ເກັບກູ້ແລ້ວ.